# ຊຽງໝ້ຽງ

## ວັນນະຄະດີຄຳກອນຊາວບ້ານ

ຮຽບຮຽງໂດຍ


## ໄຊສຸວັນ ແພງພິງ

ລາງວັນນັກກະວີຜູ້ຍິ່ງໃຫຍ່ທີ່ອະເມຣິກາ 2013

ລາງວັນຫລຽນຄຳກະວີນິພົນຍອດຢ້ຽມ 2013



**ບຸນປີໃໝ່ລາວ ປີ 2021**

ແດ່... ພີ່ນ້ອງລາວເຜົ່າຕ່າງໆ
ທີ່ກະແຈກກະຈາຍຢູ່ທົ່ວທຸກມຸມໂລກ

# ຊຽງໝັງງ

## The Cranky Guy

### A Famed Lao Folktale

edited by

**Xaysouvanh Phengphong**
*(sy-soo-vun pang-pawng)*
the bilingual poet

Copyright © 2021 Xaysouvanh Phengphong

All rights reserved, including the right of
reproduction in whole or in part in any form

ISBN 618-95284177-2

Printed in The United States of America
April 2021

ສງວນລິຂະສິດຕາມກົດໝາຍທຸກປະການ

# ຄຳນຳ

"ຊຽງໝ້ຽງ" ເອີ້ນຫຍໍ້ຈາກ ພື້ນນິທານຊຽງໝ້ຽງ ຫລື "ໜັງສືຊຽງໝ້ຽງ" ຊຶ່ງທາງກົມວັນນະຄະດີແຫ່ງພຣະຣາຊະອານາຈັກລາວໄດ້ຈັດພິມຂຶ້ນ. ສະບັບທີ່ຂ້າພະເຈົ້າໃຊ້ເປັນແມ່ແບບໃນການຮຽບຮຽງເທື່ອນີ້ແມ່ນ: ສະບັບພິມເທື່ອທີສາມ ລົງວັນທີ 1 ມີນາ 1968 ຈຳນວນ 3000 ເຫລັ້ມ. ຢູ່ປົກດ້ານໜ້າຍັງມີວັນທີ 24 ຕຸລາ 74 ແລະລາຍເຊັນເກົ່າໆຂອງຂ້າພະເຈົ້າ ສະແດງວ່າຕອນຊື້ນັ້ນຂ້າພະເຈົ້າອາຍຸ 24 ປີແລ້ວ ແລະເປັນນັກບິນຂົນສົ່ງທະຫານ ປະຈຳຢູ່ຫ້ອງການຍຸດທະສຶກສາຂອງກອງບັນຊາການກອງທັບອາກາດ ທີ່ນະຄອນຫລວງວຽງຈັນ.

ໜ້າເສັຽດາຍແຕ່ໃນສະບັບນີ້ ເພິ່ນບໍ່ໄດ້ບອກຊື່ຜູ້ແຕ່ງ ວັນເດືອນປີທີ່ແຕ່ງດັ່ງດຽວກັນກັບໜັງສືວັນນະຄະດີພື້ນເມືອງລາວຫລາຍໆເລື່ອງ ເຊັ່ນ: ກ່ຳພ້າຜີນ້ອຍ, ຈຳປາສີ່ຕົ້ນ, ສິທົນ-ມະໂນລາ, ນາງແຕງອ່ອນ, ຂຸນລູ-ນາງອົ້ວ, ຜາແດງ-ນາງໄອ່, ທ້າວກາລະເກດ, ທ້າວລິນທອງ, ທ້າວຈັນທະຄາດ, ສຽວສວາດ ແລະອື່ນໆ... ມູນມັງວັນນະຄະດີຂອງບັນພະບູຣຸດລາວທີ່ໄດ້ຈານໄວ້ໃຫ້ລູກຫລານນັ້ນ ບໍ່ສະເພາະແຕ່ບໍ່ຮູ້ຊື່ຜູ້ແຕ່ງ ແຖມຍັງສາບສູນໄປຍ້ອນ "ຫໍໄຕ" (ຫໍພຣະໄຕຣປີດົກ ດັ່ງຢູ່ໃນວັດສີສະເກດ ນະຄອນຫລວງວຽງຈັນ) ຢູ່ຕາມວັດຕ່າງໆນັ້ນ ຖືກສັດຕູຕ່າງດ້າວເຂົ້າມາຮຸກຮານແລະຈູດເຜົາຈົນຮາບກ້ຽງພ້ອມໆກັບນະຄອນຫລວງວຽງຈັນໃນຍຸກນັ້ນ. *ມູນມັງວັນນະຄະດີຂອງເຊື້ອຊາດລາວເຮົາໄດ້ສູນເສັຽໄປ ພາສາວັນນະຄະດີຖືກຍ່ຳຍີຈົນເກືອບບໍ່ເຫລືອຫຍັງໄວ້ໃຫ້ພວກເຮົານີ້* ມັນສ້າງຄວາມເຈັບປວດໜັກໜາສາຫັດກວ່າລັດທິລ້າເມືອງຂຶ້ນແບບເກົ່າແລະແບບໃໝ່ ທີ່ໄດ້ແຜ່ເຂົ້າມາທຳລາຍມູນມໍຣະດົກແລະປະເທດຊາດຂອງພວກເຮົາ. ເຖິງວ່າເຫດການໄດ້ກາຍເປັນປວັດສາດໄປແລ້ວແຕ່ມັນກໍເປັນປວັດສາດຊຶ່ງຄົນຮຸ່ນໃໝ່ຄວນຈົດຈຳໄວ້ເປັນບົດຮຽນໃນບາດກ້າວໄປສູ່ອະນາຄົດ.

ເມື່ອບໍ່ຮູ້ວັນເດືອນປີແລະຊື່ຂອງຜູ້ແຕ່ງ ຂ້າພະເຈົ້າຈຶ່ງສັນນິຖານເອົາຕາມເນື້ອໃນບົດປະພັນ ດັ່ງຈະໄດ້ສເນີໄວ້ໃນ "ບົດຄຳເຫັນ" ຢູ່ໃນໜ້າຕໍ່ໄປ. ຢູ່ໃນພາກ "ສາຣະບານ" ກໍໄດ້ແຍກຕອນຕ່າງໆ ເພື່ອຈະໃຫ້ສະດວກໃນການກັບຄືນໄປອ່ານ. ຂ້າພະເຈົ້າພະຍາຍາມຊອກ "ເຄົ້າປາລີ" ແລະ "ເຄົ້າສັນສະກຣິດ" ເຂົ້າປະກອບໄວ້ຕາມແຕ່ລະໜ້າທີ່ກ່ຽວຂ້ອງ ເພື່ອໃຫ້ຜູ້ປະສົງຢາກຮູ້ກົກເຄົ້າຂອງຄຳສັບໄດ້ເຫັນຕື່ມ.

ແຕ່ກໍຂໍຮັບວ່າ ບໍ່ອາດຈະເຮັດໄດ້ຄົບທົ່ວທຸກຄໍາສັບ ໂດຍສະເພາະຄໍາສັບທີ່ມີພະຍາງ ດຽວ ເພາະຄໍາສັບພະຍາງດຽວພວກນັ້ນ ຄົນລາວເຮົາໃຊ້ມາດົນຈົນລືມໄປວ່າເປັນຄໍາ ເຄົ້າແຕ່ບໍ່ແມ່ນຄໍາມູນ. ການຍົກຄໍາເຄົ້າມາສເນີໃນທີ່ນີ້ ກໍເພື່ອຢາກໃຫ້ເຫັນການຂຽນ ການສະກົດຕາມເຄົ້ານັ້ນ ເພິ່ນຂຽນແນວໃດ? ແລະເມື່ອກາຍມາເປັນ ”ຄໍາສັບລາວ” ແລ້ວພວກເຮົາຄວນຂຽນແນວໃດ? ເພາະຖ້າເຮົາຈະສະກົດຕາມເຄົ້າ ເຮົາກໍຄວນຈະ ສະກົດທຸກໆຄໍາ, ບໍ່ເລືອກສະກົດບາງຄໍາ ດັ່ງທີ່ພວກເຮົາເຄີຍເຫັນນໍາກັນ. ຄຣູສອນ ພາສາລາວເຄີຍເຕືອນໄວ້ວ່າ: *ຢ່າຂຽນສະກົດຕາມເຄົ້າພໍກະເທີນ!*

ໃນເມື່ອມີໂອກາດແລະເງື່ອນໄຂອໍານວຍໃນການຮຽບຮຽງ ແລະຈັດພິມຢ່າງ ຕາມໃຈມັກ ຂ້າພະເຈົ້າກໍຈະຊອກຫາ *”ພື້ນເລື່ອງ”*ຕ່າງໆ ມາສັນສ້າງໄວ້ເພື່ອສືບສານ ໃຫ້ຄົນຍຸກຕໍ່ໆໄປໄດ້ຮູ້ຈັກນໍາ. ຢ່າຊູຄຶດວ່າ ໃນອະນາຄົດພາສາລາວພວກເຮົາຈະສຸດ ສ້ວຍໄປຍ້ອນຄວາມສີວິໄລຂອງສັງຄົມມະນຸດ. ຂ້າພະເຈົ້າບໍ່ຄຶດແນວນັ້ນ! ຍ້ອນວ່າ ພາສາ-ອັກສອນທີ່ພວກເຮົາໃຊ້ຢູ່ຊູ່ມື້ນີ້ກໍເກົ່າແກ່ຫລາຍຮ້ອຍປີມາແລ້ວ ເຄີຍຜ່ານຍຸກ ບ້ານແຕກສາຍແຮກຂາດມາແລ້ວຫລາຍຍຸກ ພວກເຮົາກໍຍັງຄົງນໍາໃຊ້ຢູ່. ການຊອກ ຫາມາຮຽບຮຽງເພື່ອຈັດພິມນີ້ກໍພົບບັນຫາຫຍຸ້ງຍາກພໍສົມຄວນ ເພາະບາງຄົນຍັງເຂົ້າ ໃຈຜິດໆຖືກໆວ່າແມ່ນພິມເພື່ອຜົນປໂຍດສ່ວນຕົວ, ຜູ້ນັ້ນໆບໍ່ມອງເຫັນແກ່ນແທ້ຂອງ ເປົ້າໝາຍແລະບໍ່ມີສະຕິຄວາມເປັນຊາດສູງພໍ.

ນະທີ່ນີ້ ຂ້າພະເຈົ້າຂໍຂອບໃຈພີ່ນ້ອງເຊື້ອສາຍລາວເຜົ່າຕ່າງໆ ຊຶ່ງກະແຈກ ກະຈາຍກັນຢູ່ທົ່ວທຸກມຸມໂລກ ທີ່ໄດ້ສົ່ງກໍາລັງໃຈເພື່ອໃຫ້ແຕ່ງກອນແລະໄດ້ໃຫ້ການ ອຸປະຖໍາເພື່ອການຮຽບຮຽງ-ຈັດພິມມູນມັງວັນນະຄະດີພື້ນເມືອງລາວ. ຂໍຈົ່ງພາກພູມ ໃຈໃນຕົນເອງວ່າຕົນໄດ້ຊ່ອຍອູ້ມຊູພາສາ-ວັນນະຄະດີຂອງບັນພະບູຣຸດໄວ້ໃນໂລກ ສີຄາມໜ່ອຍນີ້.

ຂໍອວຍພອນແດ່ທ່ານຈົ່ງມີສຸຂະພາບສົມບຸນ ຢູ່ດີມີແຮງ!

ທີ່ສະຫະຣັດອະເມຣິກາ, 24 ມັງກອນ (ມົກກະຣາ) 2021

*ໄຊສຸວັນ ແພງພົງ*

# ຄຳເຫັນກ່ຽວກັບ "ນິທານຊຽງໝ້ຽງ"

ໂດຍ

ໄຊສຸວັນ ແພງພິງ

## 1. <u>ນິທານຊຽງໝ້ຽງເປັນຂອງລາວ</u>

*<u>ກອນທີ່ລຳໃສ່ແຄນໄດ້ເປັນຂອງລາວ</u>*

ພື້ນຖານຫລື"ແມ່ແບບຜັງກອນລາວ" ປະກອບດ້ວຍ 4 ວັກ ຫລື 4 ແຖວ (ສະດັບ-ຮັບ-ຮອງ-ສົ່ງ) ເວົ້າງ່າຍໆ ໃນວັກສະດັບລົງທ້າຍດ້ວຍສຽງກາງ, ວັກຮັບລົງທ້າຍດ້ວຍສຽງໂທ, ວັກຮອງລົງທ້າຍດ້ວຍສຽງເອກແລະວັກສົ່ງລົງທ້າຍດ້ວຍສຽງກາງ ຫລືວ່າ ວັກສົ່ງດ່ອຍສຽງລົງທ້າຍດ້ວຍ ໂທ-ເອກ-ກາງ. ຈະເປັນ "ກອນອ່ານ" ຫລື "ກອນລຳ" ກໍລ້ວນສາມາດແລໃສ່ແມ່ແບບຜັງກອນນີ້ທັງນັ້ນ.

ກອນອ່ານປາງຄຳ (ໃນໜັງສືສັງສິນໄຊ), ກອນອ່ານວິດຊຸມາລີ (ໃນໜັງສືທ້າວຮຸ່ງ-ທ້າວເຈືອງ ບາງຕອນ) ແລະກອນອ່ານແພງພິງ (ປະຍຸກຂຶ້ນໃນທ້າຍຂອງສະຕະວັດທີ20) ກໍລ້ວນແຕ່ສາມາດແລໃສ່ແມ່ແບບຜັງກອນໄດ້ຄືກັນ. ກອນອ່ານຕ່າງຈາກກອນລຳຢູ່ບ່ອນວ່າ ມີການ*ສຳຜັດພະຍັນຊະນະເປັນສຳຄັນ* ສ່ວນກອນລຳນັ້ນ ມີການ*ສຳຜັດສຣະ ຫລືສຳຜັດສຽງເປັນສຳຄັນ.* ການສຳຜັດສຽງນີ້ມີທັງສຳຜັດໃນ ໝາຍເຖິງສຳຜັດໃນວັກດຽວກັນ ແລະກໍມີທັງສຳຜັດນອກ ສົ່ງສຽງສຳຜັດອອກນອກວັກ ຫລືອອກນອກບາດ.

ຢູ່ໃນກອນລຳ ນອກຈາກການສຳຜັດສຽງແລ້ວ ເພິ່ນ<u>ຍັງຈຳເປັນຕ້ອງໃສ່ຄຳເພີ່ມອີກ</u> ເພື່ອໃຫ້ສອດຄ່ອງກັບທຳນອງແລະຈັງຫວະສຽງແຄນຂອງແຕ່ລະລຳທ້ອງຖິ່ນຂອງຊຸມຊົນ ຫລືທ້ອງຖິ່ນຂອງໃຜມັນ. ໃນກອນລຳນີ້ ເພິ່ນບໍ່ຄ່ອຍຈຳກັດວ່າ ໃນບາດນຶ່ງໆຕ້ອງມີເຕັມ 4 ວັກສເມີໄປ. ແຕ່ເພິ່ນຈະສາມາດແຕ່ງເອົາພຽງວັກ 1 ໃສ່ວັກ 2 ຫລືວ່າເອົາ 3 ໃສ່ 4 ຫລືເອົາ 1 ໃສ່ 1 ຫລືວ່າ 3 ໃສ່ 3 ເອົາປົນກັນໄປກໍໄດ້ ເພາະວ່າກອນຂອງໝໍລຳສ່ວນນຶ່ງເປັນ"*ກອນສົດ*", ໝາຍເຖິງແຕ່ງໄປຕາມສະພາບແວດລ້ອມ ຕາມທີ່ເພິ່ນເຫັນກັບຕາໃນເວທີນັ້ນໆ.

ດັ່ງນັ້ນວັນນະຄະດີພື້ນເມືອງທີ່ຖືກປະດິດແຕ່ງຂຶ້ນຢູ່ຕາມ*ອ່າງແມ່ນ້ຳຂອງ ແລະນ້ຳສາຂາຕ່າງໆ* ຖ້າຫາກວ່າມີ"ແມ່ແບບຜັງກອນລາວ" ຊຶ່ງສາມາດເອົາມາລຳໃສ່ສຽງແຄນໄດ້ ວັນນະຄະດີ ຫລືພື້ນເລື່ອງນັ້ນໆ ຈຶ່ງເປັນຂອງລາວຢ່າງບໍ່ຕ້ອງສົງໃສ. ຂໍຈົ່ງເຂົ້າໃຈວ່າ ວັນນະຄະດີດັ່ງເດີມມູນມັງຂອງລາວ ລ້ວນແຕ່ເປັນປະເພດຄຳກອນ (ຮວມທັງ ໂຄງ, ສານ, ຜຍາ, ບົດສູດ, ກອນຮ່າຍ...) ສ່ວນເລື່ອງສັ້ນ ແລະນິຍາຍ ຊຶ່ງຈັດເຂົ້າເປັນວັນນະຄະດີລາວນັ້ນ ແມ່ນເກີດມີຂຶ້ນໃໝ່ ພາຍຫລັງໄດ້ຮັບອິດທິພົນຈາກຊາວຕາເວັນຕົກທີ່ແຜ່ອານານິຄົມມາເຖິງອ່າງແມ່ນ້ຳຂອງທີ່ນັ້ນ, ໄລ່ມາເຖິງມື້ນີ້ ເກີດມີມາບໍ່ເຖິງ 200 ປີຊ້ຳ.

"ໜັງສືຊຽງໝ້ຽງ" ຈຶ່ງເວົ້າຢ່າງເຕັມປາກວ່າເປັນຂອງລາວ. ລາວໃນທີ່ນີ້ໝາຍເຖິງປະຊາຊົນຢູ່ພາຍໃນ ສປປ. ລາວ ແລະຄົນເຊື້ອສາຍລາວທີ່ໄດ້ກາຍເປັນພົນລະເມືອງຂອງຊາດອື່ນໄປແລ້ວ ດ້ວຍສາຍເຫດບາງປະການ.

*<u>ແກ້ຄວາມເຂົ້າໃຈຜິດໆຖືກໆຂອງມວນຊົນ</u>*

ເຄີຍມີບາງຄົນເວົ້າວ່າ *"ສີທະນົນໄຊ"* ເປັນຂອງໄທຍ(ສຍາມ) ສ່ວນເລື່ອງ *"ຊຽງໝ້ຽງ"* ເປັນຂອງລາວ. ຍ້ອນວ່າຊ່າລືກັນແບບກາເຈັດສົບ ໂດຍບໍ່ທັນໄດ້ອ່ານນິທານ, ໄດ້ຍິນແຕ່ເພິ່ນເວົ້າມາ. ສາທຸຂໍຢ່າໃຫ້ເປັນບາບ! ຂໍຍົກເອົາເງິງໃສ່ພຸດທະປະວັດເພື່ອໃຫ້ຄົນເຂົ້າໃຈງ່າຍ: ເຈົ້າຊາຍສິທັດຖະ ຫລັງຈາກຕັດສາຣູ້ແລ້ວ ກໍໄດ້ຊື່ວ່າເປັນພຣະພຸດທະເຈົ້າ.

<u>ສີທະນົນໄຊ</u>ເກີດມື້ດຽວກັນກັບລູກພຣະຍາ ໝໍທຳນາຍວ່າເຈົ້າຊາຍນ້ອຍຈະລ້ຽງຍາກ:

*ຜິຈັກ ຕາມກົງແກ້ວ ຍູກະເສີມສນຸກຍິ່ງ ຈິງແລ້ວ*
*ທີ່ວ່າ ລ້ຽງຍາກແທ້ ເຫລືອລົ້ນລື່ນປະມານ*

ເອົາຕາມໝໍທຳນາຍແນະນຳ ເສນາຈຶ່ງປ່າວປະກາດຊອກຫາແອນ້ອຍຊາຍເກີດໃນມື້ດຽວກັນມາລ້ຽງຄູ່ ກໍຈຶ່ງໄດ້ ສີທະນົນໄຊ ມາລ້ຽງພໍ່າກັນ.

ໃນຂະນະທີ່ເປັນຈົວນ້ອຍຢູ່ນັ້ນ ຈົວສີທະນົນໄຊໄປອາບຢູ່ທ່ານ້ຳ ບັງເອີນໄປພະນັນກັບ *ໄທຄັງໝ້ຽງ* (ຊາວບ້ານໆນຶ່ງມີໜ້າທີ່ເຮັດຮົ່ມໝ້ຽງສິ່ງວັງ) ສີທະນົນໄຊແພ້ກໍຈຶ່ງໄດ້ໝ້ຽງແລະເງິນຄຳຈຳນວນນຶ່ງ ຈາກເຫດການໂດງດັ່ງນີ້ ຈຶ່ງໄດ້ຊື່ວ່າເປັນ<u>ຊຽງໝ້ຽງ</u>. ຢູ່ຕໍ່ມາ ກ່ອນຊຽງໝ້ຽງຈະໂຕ້ວາທີກັບສາມມະນະຈາກນະຄອນປັດຕານີ ກໍໄດ້ບວດໃໝ່ແລະທົດໃນມື້ດຽວ ຂຶ້ນເປັນພຣະຄຣູ: <u>ຄຣູໄຊຍະສິດຕະກະຄຳພີລັງ</u>

*ຍົກຕົວຢ່າງຜັງກອນທີ່ນິຍົມຂອງໄທຍ*

ນິທານຊຽງໝ້ຽງ ເປັນຄຳກອນຊຶ່ງແຕ່ງດ້ວຍ ”ແມ່ແບບຜັງກອນລາວ”. ນະທີ່ນີ້ຂໍຍົກເອົາຜັງກອນໄທຍ ທີ່ເພິ່ນນິຍົມແຕ່ງເປັນສ່ວນຫລາຍມາໃຫ້ສຶກສາເບິ່ງ: (ຜັງກລອນສັກກະວາ ຄັດຈາກປຶ້ມ: “ກລອນແລະວິທີການຊຽນກລອນ” ໂດຍ ຊໍ່ປຣະຍົງຄ໌)

*ສັກກະວາດາວຈະຣະເຂ້ກໍເທທີກ*
*ສິສະຕົກທັບທາງຂຶ້ນກາງຫາວ*
*ເປັນວັນແຮມແຈ່ມແຈ້ງດ້ວຍແສງດາວ*
*ນ້ຳຄ້າງພຣາວປຣາຍໂປຣຍໂຮຍລະອອງ*
*ລົມເຮື່ອຍເຮື່ອຍເຊື່ອຍຊິວຕ້ອງຜິວເນື້ອ*
*ຊ່າງໜາວເຫລືອທານທົນກະມົນໝອງ*
*ສະກຸນາກາດຸເຫວ່າກໍເຮົ່າຮ້ອງ*
*ເຫັນແສງທອງສ່ອງຟ້າຂໍລາເອີຍ*

ຜັງກອນສັກກະວານີ້ ເອົາລຳໃສ່ແຄນບໍ່ໄດ້. ເພິ່ນຈະໃຊ້ເຄື່ອງເສບຊະນິດອື່ນ. ທຽບໃສ່ກັບບົດກອນອ່ານໃນນິທານຊຽງໝ້ຽງ, ແນະນຳ*ນະຄອນທະວາຣາວະດີ*

| | | |
|---|---|---|
| *ມີທັງ* | *ວັດໃຫຍ່ຕັ້ງ* | *ພະທາດກໍ່ເຈດີ* |
| | *ສໄວສູງສຸດ* | *ເຮືອຄຳແກມແກ້ວ* |
| *ຕັ້ງທາກ* | *ຮົງຮົງເຫລື້ອມ* | *ເຈດີຫລາຍຍອດ* |
| | *ສນຸກຍິ່ງລ້ຳ* | *ນະຄອນຟ້າດັ່ງດຽວ* |
| *ອັນວ່າ* | *ເມືອງຫລວງກວ້າງ* | *ພັນວາເປັນຂນາດ* |
| *ຍຸທ່າງ* | *ສັງຄະເຈົ້າ* | *ປະສົງສ້າງສູດຮຽນ* |
| *ອັນວ່າ* | *ຫໍຄຳຕັ້ງ* | *ກາງເມືອງດູອາດ* |
| | *ໂຮງທ່ານທ້າວ* | *ພັນຫ້ອງໝື່ນເສົາ* |

ເຮົາຈະເຫັນໄດ້ໂລດວ່າ ຜັງກອນແນວນີ້ ສາມາດເອົາມາລຳໃສ່ສຽງແຄນໄດ້. ດ້ວຍເຫດນີ້ຈຶ່ງຢືນຢັນໄດ້ວ່າ <u>ນິທານຊຽງໝ້ຽງເປັນຂອງລາວ</u>. ເມື່ອຮູ້ວ່າເອົາລຳໃສ່ແຄນໄດ້ ບັນຫາກໍຈຶ່ງຕັ້ງຂຶ້ນຕໍ່ໄປວ່າ: ແມ່ນກອນລຳຂອງທ້ອງຖິ່ນໃດ?

## 2. <u>ຄືນລ້ອງງື່ມແຕ່ງນິທານຊຽງໝ້ຽງ</u> ?

ການຕອບບັນຫານີ້ຈະມີສອງປະເດັນສຳຄັນໄດ້ແກ່: *1. ບົດກອນລຳ ຫລືກອນຂັບຂອງທ້ອງຖິ່ນຕ່າງໆ ມີບົດໃດແດ່<u>ໃກ້ຄຽງ</u>ກັບບົດກອນໃນນິທານຊຽງໝ້ຽງ? ແລະ 2. ຄຳສັບເດັ່ນໃນນິທານ ມີຄຳໃດແດ່ທີ່ຊ່ອຍໃນການສັນນິຖານ?*

ທວນຄືນວ່າ "ແມ່ແບບຜັງກອນລາວ" ປະກອບດ້ວຍ 4 ວັກ. ໃນທີ່ນີ້ເຮົາຈະໃສ່ໝາຍເລກວັກຕາມລຳດັບເພື່ອໃຫ້ເຂົ້າໃຈງ່າຍ: ວັກສະດັບ (1), ວັກຮັບ (2), ວັກຮອງ (3) ແລະວັກສົ່ງ (4). ຈາກນີ້ກໍເອົາບົດກອນຂອງໝໍລຳໝໍຂັບມາແລເບິ່ງ (ຄຣູສອນພາສາລາວເຄີຍສອນໄວ້ວ່າ: ຈາກວຽງຈັນຂຶ້ນເໜືອເພິ່ນເອີ້ນວ່າ "ຂັບ" ເຊັ່ນ ຂັບງື່ມ, ຂັບຊຽງຂວາງ, ຂັບຊຳເໜືອ, ຂັບທຸ້ມຫລວງພຣະບາງ, ຂັບລື້... ແລະຈາກວຽງຈັນລົງໃຕ້ເພິ່ນເອີ້ນ "ລຳ" ເຊັ່ນ ລຳມະຫາໄຊ, ລຳຜູ້ໄທ, ລຳຄອນ-ສວັນ, ລຳຕັ້ງຫວາຍ, ລຳບ້ານຊອກ, ລຳສາລະວັນ, ລຳສີພັນດອນ...ສ່ວນຢູ່ຝາກແມ່ນ້ຳຂອງກໍນິຍົມ ລຳສັ້ນ, ລຳລ່ອງ (ລ່ອງຂອງ), ລຳເຕີ້ຍ ແລະປະດິດໃໝ່ກໍມີ ລຳເດີນ, ລຳເພີນ, ລຳຊິ້ງ...)

ສຽງຂັບລຳ-ສຽງແຄນ ມີຢູ່ນຳທຸກເມືອງ ທຸກແຂວງ ແລະທຸກໆຊົນເຜົ່າ. ບັນດາໝໍຂັບໝໍລຳໄດ້ເກີດຂຶ້ນໃໝ່ເພື່ອສານຕໍ່ວັນນະຄະດີມູນມັງຂອງບັນພະບູຣຸດ. ໃນທີ່ນີ້ ຂ້າພະເຈົ້າຂໍອະນຸຍາດຍົກມາອ້າງອີງແຕ່ພຽງບາງບົດທໍ່ນັ້ນ:

<u>ກອນຂັບຊຳເໜືອ</u> (ຂັບໂດຍ ມີ່ ສາຍພູຊຳ)

*ອັນວ່າ ຄັນອ້າຍຈິງເຈີແທ້ ບອກພໍ່ແມ່ມາຂໍ ນ້ອງນາ (1)*
*ຄັນອ້າຍຈິງເຈີກັບນາງນາ ບອກພໍ່ແມ່ຊາຍມາແຕ່ງ*
*ເງິນຄ່າດອງບໍ່ແພງດອກອ້າຍ ທະແນມເວົ້າໃຫ້ຖືກກັນ ຊາຍເອີ້ຍ (4)*
*ອັນວ່າ ຊາຍຂໍເຫີ້ເປັນຊາຍແທ້ ຢ່າເຫີ້ແກມທົບແທ່ (3)*
*ຊາຍກໍເຫີ້ເປັນຊາຍແທ້ ຕົນນັ້ນຢ່າເຫີ້ມີ ເນີອ້າຍເອີ້ຍ*
*ອັນວ່າ ຢ້ານແຕ່ທາງພໍ່ແມ່ອ້າຍ ບໍ່ຢາກໄດ້ລູກສະໄພ້ທາງເໜືອ ບໍ່ເດ*
*ສາວວຽງໄຊ ແດນດອນ ຢູ່ພູພະນັງໄມ້ (2)*
*ຢ້ານແຕ່ບຸນບໍ່ເຫີ້ ສາຍແນນບໍ່ໄດ້ຮ່ວມ (3)*
*ຊາດນີ້ ບຸນບໍ່ກວ້າງ ໄດ້ຮຽງຊ້ອນໜ່ອຍມະນີ ບໍ່ອ້າຍເອີ້ຍ (4)*
*ໂອນໍ ຢ້ານແຕ່ສາຍນິ່ງນ້ອງບໍ່ແຂວນ ຢ້ານແຕ່ສາຍແນນນ້ອງບໍ່ກ້ຽວ*
*ເກາະກັນມານ້ອງບໍ່ແນ່ງ ຄັນກ້ຽວກັນມາແຕ່ພຸ້ນ ເທິງຟ້າກໍຊິໄຄ ພີ່ນ້ອງເອີ້ຍ*

ກອນຂັບຊຽງຂວາງ (ຂັບໂດຍ ພໍ່ສີທອງ)

*ໂອນໍ ມາລວມພີ່ນ້ອງເອີຍ*
*ມື້ນີ້ ມາເຫັນໜ້າ ເຫັນຕາ ຢາກຖາມຂ່າວ (3)*
*ມາພົບຊາວ ພີ່ນ້ອງ ລະທາງພີ້ຕູ່ຊູ່ຄືນ ນີ້ນາ (4)*
*ຍັງຄ່ອຍສຸກ ສີໝັ້ນ ສເມີມັນເຕືອເກົ່າ (3)*
*ຍັງຄ່ອຍສຸກ ຢູ່ລ້ອນ ສເມີດ້ານກໍດັ່ງເດີມ ນັ້ນຂ້ອຍບໍ່ (4)*
*ບາດນີ້ ອັນວ່າສາມ ສິບມື້ ຈັ່ງຫລອນມີກ້າຫຍີ່ ພໍ່ແມ່ເອີຍ*
*ອັນວ່າສາມ ສິບປີ ຈັ່ງຫລອນມີກ້າເຮົ້າ (2)*
*ນັບແຕ່ເກົ້າ ໝື່ນມື້ ຈັ່ງມີຖືມາຢາມ ພີ່ນ້ອງເອີ່ຍ*
*ມື້ນີ້ມາ ມ່ວນຫລີ້ນ ປີໂດຍດອກກັ່ນຖິນ*
*ລູກກໍຍິນ ດີດ້ວຍ ອະນຸລົມແມ່ນສຽງປາກ (3)*
*ລູກກໍມາ ມາກເວົ້າ ຈັ່ງມາເຂົ້າທີ່ມ່ວນລໍາ ມື້ນີ້ນໍ (4)*
*ເວົ້າຫລີ້ນຕາງ ເວົ້າຫົວ ຂ້ອຍກ່ອນເນີ*
*ຕົກວ່າຕາງ ອາບນໍ້າ ປໍ້າໄມ້ເຖິງ ດວງລີ້ງ*
*ປີນໄມ້ເຖິງ ດວງຕົ້ນ ຕົກຕົ້ນຂີ່ຕ່າງເລ*
*ເວົ້າພື້ນບາ ຄືນນີ້ ຂໍຊູ່ດຽວຟັງ ພໍ່ແມ່ເອີ້ຍ*

ລໍາມະຫາໄຊ (ລໍາໂດຍ ຊຽງສະຫວັນ)

*ລາເດີ້ ນ້ອງຜູ້ຟືນຊາວຫ້າ ໂອຍຂັນໜາເນື້ອຖີ່ຖີ່ (3) ຜູ້ດີຍາມມື້ແລງເອີຍ*
*ຈັກເອີຍ ໃຜມາຢືນເຈົ້າຢ່າໃຫ້ ຖ້າແພງໄວ້ໃຫ້ຕໍ່າເອງ*
*ຖ້າແພງໄວ້ໃຫ້ຕໍ່າເອີາ ເດີ (4)*
*ມື້ນີ້ ພີ່ຊິລານໍຈາກນ້ອງ ຊິໄປຫາເງິນຮ້ອຍ ເອີຍມາໃຫ້ລຸງຕາ*
*ມື້ນີ້ ພີ່ຊິລານໍຈາກນ້ອງ ຊິໄປຫາເງິນຕຣາ ເອີຍໃຫ້ນໍເຖົ້າແກ່ (3)*
*ຂໍໃຫ້ແມ່ ລະໝ່ອມນ້ອງ ອົດລໍຖ້າພີ່ຊິມາ ເດີ (4)*
*ຈັກເອີຍ ຄັນພີ່ໄລດອກລານ້ອງ ຖ້າວ່າຮອດວັນທິດ ໜ່ອຍນ້ອຍຄໍາແພງເອີຍ*
*ສົມຫວັງ ຄັນວ່າຮອດວັນທິດ ພີ່ຊິມານັ້ນຂໍໝັ້ນ (2)*
*ຄັນວ່າ ຮອດວັນຈັບ ອ້າຍຊິມາຂໍແຕ່ງ (3)*
*ບຸນຈັກ ໃຫ້ເຈົ້າປະນາແຕ່ແປ້ງ ໃຫ້ເຈົ້າແຕ່ງນໍແຕ່ໜ້າ*
*ໂອຍລໍຖ້າຜູ້ບ່າວຊຽງ ເດີ (4)*

<u>ກອນລຳຄອນສວັນ</u> (ລຳໂດຍ ບຸນຕອງ)

*ຈັ່ງໃດ ພັງແຫລະບໍບໍສຽງເວົ້າ　　ຫາກດັງມານຳມາບແມບ (3)*
*ເໝືອນດັ່ງພ້າປາດນ້ຳ　　ລະຮອຍແປ້ວອ້າຍບໍ່ເຫັນ (4)*
*ຈັ່ງໃດ ນັບແຕ່ນ້ອງວ່ານັ້ນນ້າ　　ຄັນຄວາມປາກນຳບໍ່ໄດ້ຊີ້*
*　　ຄວາມໃດຄືນ້ອງຫາໃສ່*
*ຄວາມປາກເລີຍບໍ່ລ້ອມຮົ້ວ　　ນ້ອງຕົວະຫລິ້ນຢູ່ຍັ່ງຄືນ*
*ບອກວ່າ ອ້າຍຊິບອກໃຫ້ແຈ່ມແຈ້ງ　ໃຫ້ນາງຈື່ນະຈຳເອົາ (1)*
*ນາງຢ່າເມົາມົວຫລົງ　　ໄປເຊື່ອຄວາມດອກໄທບ້ານ (2)*
*ພໍເມື່ອ ລຳຢາກບອກໃຫ້ນ້ອງ　　ຄາວແຫລະບໍກ່ອນກີ້*
*ເມັຽແຫລະບໍຂອງອ້າຍ　　ໄດ້ມີຈິງຈິງແນ່ (3)*
*ມາພົບນາດທະໜໍ່ນ້ອງ　　ດອກເລີຍຮ້າງຫ່າງເມັຽ (4)*
*ອີກດັ່ງ ຕົນລະບໍດຽວອ້າຍ　　ໃຫ້ນາງຟັງເອົາຖ້ອນ*
*　　ສາຍສມອນເນື້ອອ່ອນອ່ອນ ພິມມະສອນ (3)*
*ສ່ວນທີ່ເມັຽຂອງອ້າຍ　　ລົງເຮືອນມາເຂົາກະສັ່ງ (3)*
*ຄືນແຫລະບໍຂາວກ່ຳ　　ຄັນເມັຽອ້າຍບໍ່ໃຫ້ຈາ*
*ຄືນແຫລະບໍຂາວກາ　　ຄັນເມັຽອ້າຍບໍ່ໃຫ້ເວົ້າ*
*ຖືກແຫລະບໍຈັ່ງເຈົ້າ　　ອັນເອົາແລ້ວບໍ່ວ່າຫຍັງ (4)*

<u>ກອນລຳສີພັນດອນ</u> (ລຳໂດຍ ອິນແຕ່ງ)

*ເອີຍ...*
*ມື້ນີ້ ຂໍເປີດຫົວອີກໃຫ້　　ແມ່ຍິງໃນຄຸ້ມຄ່ອງ (3)*
*ຫາຍຈາກຄວາມໂສກງ້ວງ　　ພໍເປັນເພື້ອນຜູ້ທີ່ເຫີງາ (4)*
*ອັນນຶ່ງ ຜູ້ມີຜີວຂີ້ເຫລົ້າ　　ຄືຈັ່ງສາວໝໍລຳ (1)*
*ມີເວນກັນກວນສມອງ　　ດັ່ງອີ່ນາງລຳລ້ອງ (2)*
*ນາງນີ້ຄອງຄວາມເສົ້າ　　ເຫງົາມາຕັ້ງນານໜ່ວງ (3)*
*ເຈັບໃນຊວງໂສກງ້ວງ　　ບໍ່ມີມື້ຊີຊ່ວງເຊົາ (4)*
*ດັ່ງນັ້ນ ຂໍເລົ່າມາຕັ້ງແຕ່ເຄົ້າ　　ຄາວເອົາກັນໃໝ່ (3)*
*ວ່າຮັກສຸດຫົວໃຈ　　ຫາກກືນກິນຄືຊີໄດ້ ບໍ່ຍອມໃຫ້ຫ່າງຄີງ (4)*
*ທັງຊາຍຍິງສອງກ້ຳ　　ແພງປານຄຳ ພຸ້ນລະພໍ່*

*ຄວາມຮັກຮໍ່ ຫາບໍ່ມີບ່ອນເທົ້າ ພໍຢາກບາຍໃສ່ປັ້ນເຂົ້າ ກິນໄວ້ໃສ່ຢູ່ພຸງ*
*ຕໍ່ໆມາຜັດຍອງຫຍຸ້ງ ໄໝໃນບຸງກະບໍ່ຫໍ່ (3)*
*ໄດ້ລູກສອງສາມຄືນ ຜົວກະສືບ ລູກກະສໍ້ ມັນຈົບຈໍ້ຈົ່ມທະວີ (4)*
*ແນວວ່າ ຊໍ້າບໍ່ໜໍາ ຜົວຜັດມີເມັຽນ້ອຍ ແຮ່ງກໍາພ້ອຍອຸກອັ່ງ (3)*
*ນອນກາງຄືນນໍ້າຕາຫລັ່ງ ພິກຂ້າງຂວາຂ້າງຊ້າຍ ຄອງອ້າຍບໍ່ຕ່າວມາ (4)*
*ແຕ່ລະຄືນມີແຕ່ຖ້າ ພາງາຍກໍບໍ່ຫ່ວງ (3)*
*ເຫລືອງປານຫຍ້ານໍ້າຖ້ວມ ຄວາມເວົ້າກະບໍ່ດັງ*
*ໝົດຄວາມຫວັງເສັຽສິ້ນ ແນວຂອງຢູ່ຂອງກິນ ມື້ອີ່ມ ມື້ບໍ່ອີ່ມ (3)*
*ອຸກອັ່ງໃຈ ບໍ່ໄດ້ຍິ້ມ ຜົມກະຫຍຸ້ງຊໍ່າໄກ່ຍອງ (4)*

<u>ກອນຂັບງື່ມ</u> (ຂັບໂດຍ ໂອທອງ)

*ໂອເດ*
*ນ້ອງຜູ້ປາສະກາງກ້າງ ເປັນຫຍັງເດສັງບໍ່ໄປຄ້າງໂຕ່ງ ພີ່ຊາຍນໍ (3)*
*ໂອນໍ ມີ່ ສາຍພູຊໍາເອີຍ*
*ຄັນແມ່ນໂຕງ ດອກເຕີ້ ຄໍາຫລ້າ ເພິ່ນກໍໃສ່ລັດນ້ອງ (2)*
*ມອງອ້າຍບູບສວນ ເພິ່ນກໍໃສ່ລັດຫ້ວຍ ແມ່ນນາງເວັ້ນບ່ອນຈັ່ງໃດ (4)*
*ແມ່ນວ່າ ນ້ອງຜູ້ແກ້ວຄ່າລໍ້າ ຈັບທະຄາດຄູນເລີງ (1)*
*ນ້ອງຢ່າໄປຄູນໃຜ ໃຫ້ໝັ້ນມາຄູນອ້າຍ (2)*
*ແມ່ນວ່າ ນີ້ລະນໍ*
*ເພິ່ນວ່າ ແນວວ່າເສືອລາຍແລ້ວ ລາຍບໍ່ລາຍເພິ່ນກະຕູ່ (3)*
*ອ້າຍຊິເອົາ ຂີ້ໝໍ້ມີ້ ຊິມາແຕ້ມໃຫ້ຕື່ມລາຍ (4)*
*ໂອນໍ ຄັນແມ່ນນ້ອງບໍ່ມັກອ້າຍ*
*ອ້າຍຍັງຊິໄປນໍາເອົາຫວ້ານ ສເນຈັບມາໃສ່ (3)*
*ເອົາໃຫ້ນ້ອງຮ້ອງຮໍ່າໄຫ້ ດອກໂຕນເຕັ້ນແລ່ນນໍາ (4)*

<u>ກອນຂັບງື່ມ</u> (ຂັບໂດຍ ບົວວັນ)

*ໂອເດ ສວຍງາມຕາເອີຍ...*
*ໂອນໍ ອ້າຍອິນແປງ ວ່າຈັ່ງໃດນໍອ້າຍ ຕົນເຈົ້າວ່າຈັ່ງໃດ (4)*
*ໂອນໍ ອ້າຍຜູ້ໄຂຊໍ້າຂ່າວຂໍ້ ຊິຂ່າວຄາວຕ້ານກ່າວ (3)*
*ແມ່ນວ່າ ບັດນີ້ ອິນແປງ*

*ອ້າຍນັ້ນ ເປັນຊ້ຳຜູ້ບ່າວແກ່ແທ້ ເມັງຊ້ອນຜັດຢູ່ໄກ ວ່າຕີ (4)*

*ອິນແປງເອີຍ ແມ່ນວ່າ ອິນແປງ*

*ວ່າຈັ່ງໃດບໍອ້າຍ ຄືວ່ອ້າຍຫຍຸ້ງ ກະເພາະອ້າຍແນມຫາ ວ່າບໍ (1)*

*ໂອບໍ ອ້າຍອິນແປງ ຄັນວ່າແສງຕາລາ ເພາະພີ່ຊາຍແນມຄືນ (2)*

*ໂອບໍ ຄັນວ່າມາມື້ນີ້ ເວົ້າແທ້ບໍ້ ຊິຈິງໃຈຄືອ້າຍວ່າ ແທ້ບໍ້ ອິນແປງເອີຍ*

*ໂອບໍ ອ້າຍຜູ້ເວົ້າເນືອກີ້ ອ້າຍເວົ້າແທ້ ຫລືວ່າອ້າຍເວົ້າຫລິ້ນ*

*ຕົວະຮ້າງນ້ອງຊື່ໆ ອິນແປງເອີຍ ເພັດວິໄລເອີຍ*

*ໂອບໍ ນີ້ລະບໍອ້າຍບ່າວສີວິໄລ ຕົວະບົວວັນຊ້ຳນາດນ້ອງ ຊິເປັນບ້າຫ່ວງນຳ (4)*

*ໂອບໍ ເຫັນວ່ານ້ອງຜູ້ນ້ອຍ ອ້າຍຢ່າອ່ອຍຕານຊາຍຫລາຍເດີ ອິນແປງເດີ (1)*

*ໂອບໍ ນ້ອງນີ້ນາ ພໍໄດ້ຍິນຊາຍຈາ ຢູ່ບໍ່ເປັນໃຈເຕັ້ນ (2)*

*ວ່າຊິເປັນດອກວິນເຊີ້ ຈັບລົມສາລະບາດ (3)*

*ໂອບໍ ຄັນແມ່ນບໍ່ໄດ້ອ້າຍ ບໍ່ຫວັງວ່າຊິຍອມ ດອກເດີ*

*ໂອບໍ ຢ້ານຫລາຍເດ ຢ້ານແຕ່ກາຍເປັນຫອມ ເນືອດແກງປາຢ້າງ (2)*

*ບໍ່ໄດ້ຮ້າງ ເປັນໝ້າຍກະຊິເອົາ*

<u>ກອນອ່ານໃນນິທານຊຽງໝ້ຽງ</u> (ໃຫ້ສັງເກດເບິ່ງຄຳເພີ່ມ)

*ບັດນີ້ ກູຫາກຈັກ ເອົາຍັງໝ້ຽງ ດອມສູໜິດຄູ່ ຄືນແລ້ວ*

*ກູນີ້ ຫາກບໍ່ຫ່ອນ ເວົ້າລ່າຍຖ້ອຍ ສັດຈະແທ້ທ່ຽງຈິງ ທ່ານເຮີຍ*

....

*ຍາມເມື່ອ ກູຫາກ ມີຄວາມຫ້າມ ສູບໍ່ຍອມຍັງຫານຢູ່ ຈິງນາ*

*ບັດນີ້ ກູຫາກ ພັນແພ້ແລ້ວ ຊິເອົາໝ້ຽງແຫ່ງສູ ແທ້ແລ້ວ*

....

*ຊ້າງນີ້ ຕັ້ງວ່າມີ ທັງຫູຫາງພ້ອມ ງວງງາກໍດູອາດ ອີ່ຫລີແລ້ວ*

*ຕິແຕ່ວ່າ ຕາມັນຫາກ ມາໜ່ວຍນ້ອຍ ທຳຊ້ຳພັດບໍ່ມີ ນີ້ນາ*

....

*ອັນໃຫ້ ຄັນໃຫ້ ສົມເພດຊ້າງ ຕາຫລວງທໍ່ໝາກເຫວີ່ ນາວນັ້ນ*

*ອັນນີ້ ຕັ້ງວ່າ ຕົວຊ້າງໃຫຍ່ໂຈ້ໂກ້ ຕາສັງນ້ອຍດັ່ງໜູ ນີ້ນາ*

*ຊາດທີ່ ງົວຄວາຍຫລ້າງ ຫູຕາກໍຍັງໃຫຍ່ ອີ່ຫລີດາຍ*

*ທຳກໍຫາກ ມີໂຕ່ງໂຕ້ນ ໃນຫັ້ນຢູ່ຫວ່າງຂາ ແທ້ດາຍ*

*ອັນວ່າ  ແມ່ຜຍາແນວນີ້ງນັ້ນ        ຍັງດູນ້ອຍເຫລືອງດຳ ພໍສນ່ອຍ*
*ມັນນັ້ນ  ຍັງບໍ່ຮ້າຍ                  ພໍເບື້ອງບ່າຍເສັ່ງ ພຣະເອີຍ*
....
*ເຮົານີ້   ທີ່ວ່າເປັນນາມມະກອນເຊື້ອ ພຣະຍາເມືອງຍົດໃຫຍ່ ຈິງດາຍ*
*ກໍຈຶ່ງໄດ້ ສານກວຍພໍແປດອູ້ມ       ເອົາຫ້າງໃສ່ຜຍາ ທ່ານເອີຍ*

ກອນຂັບງຶ່ມ ມີລັກສະນະຕ່າງຈາກກອນລຳອື່ນໆ ເນື່ອງຈາກວ່າໝໍຂັບ ສາມາດໃຊ້ "ຄຳເພີ່ມ" ໄດ້ຫລາຍກວ່າ ແລ້ວສຽງແຄນກໍເຍື້ອນໄປຕາມໄດ້. ສ່ວນກອນລຳອື່ນໆ ມີຈັງຫວະສຽງແຄນກຳນົດຈຳນວນຄຳເພີ່ມໄວ້. ເຖິງບາງຄັ້ງຈະມີຄຳເພີ່ມກໍດີ ແຕ່ນັ້ນແມ່ນການ "ໂຍກກອນ" ແລະກໍຕ້ອງໄປນຳຈັງຫວະສຽງແຄນ. ເຮົາຈະເຫັນໃນ ນິທານຊຽງໝ້ຽງ ຊຶ່ງຜູ້ແຕ່ງໄດ້ໃຊ້ "ຄຳເພີ່ມ" ຕາມໃຈມັກໄວ້ຢູ່ຫລາຍຈຸດ.

<u>ຄຳເພີ່ມ:</u> ຄຳເພີ່ມແມ່ນຈຳພວກຄຳສັບທີ່ຫາມາເພີ່ມນອກຈາກຜັງກອນ. ສາມາດມີຢູ່ທາງໜ້າ ຫລື ທາງຫລັງຂອງວັກ. ຢູ່ທາງໜ້າ ແທນທີ່ຈະໃຊ້ພຽງ"ຄຳນຳໜ້າ"ຫລືຄຳບຸບພະບົດ ຊຶ່ງ "ປູ່ປາງຄຳ" ໃຊ້ສູງສຸດພຽງ 6 ພະຍາງ ແຕ່ໝໍລຳເພີ່ມຈົນເກີນ. ດັ່ງຕົວຢ່າງຂີດກ້ອງໄວ້:
*<u>ແມ່ນວ່າ ບັດນີ້ ອີນແປງ ອ້າຍນັ້ນ ເປັນຊ້ຳ</u> ຜູ້ບ່າວແກ່ແທ້ ເມັຽຊ້ອນຜັດຢູ່ໄກ ວ່າຕີ (4)*

*<u>ໂອນໍ ອ້າຍຜູ້ເວົ້າເມືອກີ້ ອ້າຍເວົ້າແທ້ ຫລືວ່າ</u>*
*ອ້າຍເວົ້າຫລິ້ນ        ຕົວະຮ້າງນ້ອງຊື່ໆ (3) <u>ອີນແປງເອີຍ ເພັດວິໄລເອີຍ</u>*

<u>ໂຍກກອນ:</u> ຄ້າຍຄື "ຄຳຊ້ຳ" ຢູ່ໃນເນື້ອເພງ ຄຳຊ້ຳແມ່ນໃຊ້ປໂຍກດຽວກັນ ສ່ວນ "ໂຍກກອນ" ແມ່ນຕ່າງປໂຍກ ແຕ່ວ່າສຽງເອກ-ສຽງໂທຍັງຕ້ອງຮັກສາໄວ້ຄືເກົ່າ. ຈຸດປະສົງ "ໂຍກກອນ" ແມ່ນເພື່ອໃຫ້ຄວາມໝາຍໜັກແໜ້ນຂຶ້ນຕື່ມ. "ໂຍກກອນ" ນີ້ ເຄີຍເວົ້າແລະໃຊ້ຢູ່ໃນວົງການ"ສະໂມສອນນັກຂຽນໜຸ່ມລາວ"ມາຕັ້ງແຕ່ປະມານປີ 1985. ດັ່ງຕົວຢ່າງ:

*ບຸນຈັກ ໃຫ້ເຈົ້າປະນາແຕ່ແປ້ງ        <u>ໃຫ້ເຈົ້າແຕ່ງບໍແຕ່ໜ້າ</u>* (ບ່ອນນີ້ແມ່ນໂຍກ)
*ໂອຍລໍຖ້າຜູ້ບ່າວຊຽງ ເດີ (4)*

*ຜົວພັດມີເມັຽນ້ອຍ　　　ແຮ່ງກຳພ້ອຍອຸກອັ່ງ (3)*

*<u>ນອນກາງຄືນນ້ຳຕາຫລັ່ງ</u>* (ບ່ອນນີ້ແມ່ນໂຍກ)

*ພິກຂ້າງຂວາຂ້າງຊ້າຍ　　　ຄອງອ້າຍບໍ່ຕ່າວມາ (4)*

<u>ນອກຈາກລີລາການແຕ່ງກອນແລ້ວ ສະຖານທີ່ແລະບາງຄຳສັບກໍພາໃຫ້ເຊື່ອ</u> ໃນນິທານ ຜູ້ແຕ່ງໄດ້ເວົ້າເຖິງລຳນ້ຳໃຫຍ່ເພື່ອສ້າງພາບມີສະເພົາຄ້າເຖິງຫ້າຮ້ອຍລຳ, ເວົ້າເຖິງລຳນ້ຳຊຶ່ງຕ້ອງພາຍເຮືອຂ້າມທ່າມກາງນ້ຳຟອງ ແລະເວົ້າເຖິງຫ້ວຍນ້ອຍຊຶ່ງ "ໄຫຄັງໝັ້ງງ"ຢັ່ງຂ້າມໄດ້. "ສະຖານທີ່"ຫລາຍບ່ອນໃນນິທານພົວພັນກັບນ້ຳ ຊຶ່ງເວົ້າໄດ້ວ່າແມ່ນຢູ່ບໍລິເວນທົ່ງຮາບກວ້າງໃຫຍ່.

*ຖັດນັ້ນ　ມີແມ່ນ້ຳ　　　　ໄຫລຜ່ານພາຣາ*

*ຍຸທ່າງ　ຫວຍສະເພົາເຂົາ　　　ຊູ່ເມືອງມາຄ້າ*

*....*

*ແຕ່ນັ້ນ　ເຂົາກໍເລົ່າຍັງດົນຕ້ານ　　ດອມຈົວຖາມສືບ ໄປນັ້ນ*

*ຕູຂ້ອຍ　ຍັງຊິໂຕນຂ້າມນ້ຳ　　　ໄປໄດ້ດັ່ງລື ນັ້ນເດ*

*....*

*ໂອນໍ　　ບັດນີ້ກູຈັກນໍຣະນາມັ້ນ　　ກາງວັງບໍ່ເຫັນແມ່ ກູແລ້ວ*

*ອັນວ່າ　ເຮືອແຮ່ງຊ້ຳເຫລັ້ມນ້ອຍ　　ຟອງພັດຖ້ວມຕື່ມເຕັງ ນີ້ເດ*

ໃນນິທານ ຜູ້ແຕ່ງໃຊ້ຄຳສັບ "ວຽງ" ຢູ່ຫລາຍບ່ອນ. ເປັນຫຍັງເພິ່ນຈຶ່ງບໍ່ໃຊ້ຄຳສັບ "ເມືອງ" ຫລື "ຊຽງ" ຊຶ່ງມີຄວາມໝາຍດຽວກັນ? ຂ້າພະເຈົ້າຍັງຈື່ຄຳເວົ້າພີ່ນ້ອງລ້ອງງື່ມໄດ້ດີ. ຍາມເວົ້າເຖິງນະຄອນຫລວງວຽງຈັນ ເພິ່ນມັກເວົ້າວ່າ: ທຽວໄປວຽງ, ມາແຕ່ວຽງ, ພີ່ນ້ອງເຮັດການຢູ່ໃນວຽງ...

ຢູ່ໃນນິທານຊຽງໝ້ຽງມີຫລາຍຕອນທີ່ເວົ້າ "ວຽງ" ເຊັ່ນວ່າ:

*ຕັ້ງຫາກ ລຸດລຸດຍ້າຍ　　　ຄືນແຫ່ແຫນນຳ*

*ທາງຫລວງຄັບ　　　<u>ອອກວຽງ</u>ລີລ້າຍ*

*....*

*ເມື່ອນັ້ນ ຊຽງຍານເຂົ້າ　　　<u>ໃນວຽງ</u>ໄປທ່ຽວ*

*ມັນກໍ　ບໍ່ຮູ້ບ່ອນຢູ່ທ້າວ　　　ຊຽງໝ້ຽງທີ່ໃດ*

....

*ແຕ່ນັ້ນ  ທັງຫລາຍທີ້ນ            ດຶງກວຍຢູ້ຊ່ອຍ*

*ກວຍຈຶ່ງ ຫລຸດອອກມົ້ນ       ປັກຕູຕ້າຍຈາກວຽງ  ແທ້ດາຍ*

....

*ແຕ່ນັ້ນ  ຊຽງກໍຝຸດລຸກແລ້ວ         ຮ້ອງຢູ່ຄາງແຄມ*

*ແລ້ວເລົ່າ ຄອນກວຍໄປ           ສູ່ປັກຕູວຽງກວ້າງ*

....

*ຄັນວ່າ  ເຖິງເມື່ອຄືນບານໄດ້       ເຈັດວັນມາຮອດ*

*ກໍຫາກ  ເປັນເຫດນີ້       ພຣະຍາເຈົ້າລຽບວຽງ  ແທ້ດາຍ*

ເມື່ອສັງເກດພາສາຂອງຄົນວຽງ, ການໃຊ້ຄຳເພີ່ມແລະການເລືອກຄຳສັບຂອງບົດກອນຢູ່ໃນນິທານຊຽງໝ້ຽງແລ້ວ ພາໃຫ້ເຊື່ອວ່າແມ່ນຄົນລ້ອງງື່ມ, ອາດແມ່ນບຸກຄົນ ຫລືອາດເປັນກຸ່ມຄົນ ທີ່ໄດ້ແຕ່ງເລື່ອງນິທານຊຽງໝ້ຽງຂຶ້ນ. ທີ່ວ່າກຸ່ມເນື່ອງຈາກວ່າບາງບ່ອນບົດກອນຄ່ອງລ່ຽນໄຫລ ຖືກກັບຜັງກອນອ່ານໄດ້ດີ ແຕ່ວ່າບາງບ່ອນຫຍຸ້ງພໍປານກັບເວົ້າເອົາ. ບາງບ່ອນກໍມີ "ຄຳເຄົ້າ" ແຕ່ບາງບ່ອນກໍໃຊ້ "ຄຳມູນ" ຈົນເຕັມໜ້າ. ຕລອດເລື່ອງບໍ່ໄດ້ເວົ້າວ່າ ຖອດອອກມາຈາກໃບລານ.

ທັງນີ້ທັງນັ້ນ ຂ້າພະເຈົ້າກໍສັນນິຖານຕາມເນື້ອໃນ ຈາກປະສົບການແຕ່ງກອນຫລາຍສິບປີ ແລະຄາວເປັນບ່າວນ້ອຍກໍເຄີຍເລາະລຽບຕາມໝູ່ບ້ານແຄມງື່ມ, ອາດວ່າການສັນນິຖານນີ້ຈະຜິດພາດກໍເປັນໄດ້. ຈຶ່ງຂໍອະໄພໄວ້ນະທີ່ນີ້ດ້ວຍ.

## 3. <u>ກອນວິຈານໃນນິທານຊຽງໝ້ຽງ</u>

ການແຕ່ງກອນຕຳນິວິຈານ ຫລືເວົ້າພາສາຊາວບ້ານ ກໍແມ່ນພວກກອນຍຸແຍ ກອນແສບ ມີມາຢູ່ໃນວັນນະຄະດີລາວເຮົາຕັ້ງດົນນານ ກ່ອນນັ້ນມີເປັນ "ຄຳຜຍາ", ແຕ່ຄຳຜຍາສັ້ນເລີຍບໍ່ໄດ້ວິຈານຢ່າງເຕັມມັກ. *"ການວິຈານ" ແມ່ນຕົບນິຂອງນິທານຊຽງໝ້ຽງ, ອາດຖືວ່າເປັນຕົວຢ່າງຂອງການແຕ່ງກອນວິຈານກໍວ່າໄດ້.*

ການວິຈານດ້ວຍຄຳກອນ ຈະບໍ່ຄືສຽງຮ້າຍດ່າ ສຽງນາບຂູ່ ຫລືວ່າ ຈະບໍ່ແມ່ນການເອົາຜິດເອົາຖືກ ຕໍ່ບຸກຄົນຢູ່ໃນສັງຄົມ. ພຽງແຕ່ວ່າຍົກປະເດັນຂຶ້ນມາເພື່ອເຕືອນສະຕິຢ່າງມ່ວນຊື່ນ ວິຈານແຕ່ກໍໃຫ້ມີຮອຍຍິ້ມ ສຽງຫົວ ຕລົກເຮຮາ ໄປນຳ. ຜູ້ແຕ່ງກອນວິຈານເຕືອນສັງຄົມດ້ວຍຮອຍຍິ້ມຢູ່ໃນຫົວໃຈ. ຜູ້ອ່ານກອນວິຈານຈະບໍ່ຄຽດ ບໍ່ຊັງ ແຕ່ກັບຍິ້ມຫົວນຳບົດກອນ, ລີລາແນວນີ້ ຢູ່ໃນລະບອບຣາຊະອານາຈັກກໍເຫັນແຕ່ນາມປາກກາ *"ປາໄນ"* ເປັນຜູ້ອອກໜ້າພາທາງດ້ານກະວີວິຈານ. ເມື່ອຕົກມາຮອດ "ສະໄໝຂ້າມຜ່ານຂອງລະບອບສາທາລະນະລັດ" ມວນຊົນກໍພົບກັບ ນາມປາກກາ *"ແພອີໂປ້"* ຊຶ່ງມັກແຕ່ງວິຈານຈຸດອ່ອນ ຄວາມບົກຜ່ອງຂອງຄົນໃນສັງຄົມ. ບົດກອນປວັດສາດຂອງທັງສອງນາມປາກການີ້ ມີຢູ່ຕາມວາລະສານແລະໜັງສືພິມເກົ່າແກ່ຂອງບ້ານເຮົາ.

ໃນນິທານຊຽງໝ້ຽງ ຜູ້ແຕ່ງສລາດຫລາຍຈຶ່ງກ້າວິຈານພຣະຍາໄດ້, ແຫລມຄົມຫລາຍຈຶ່ງວິຈານພຣະສົງໄດ້ ແລະມີຫລ່ຽມລາຍສູງ ຈຶ່ງແຕ່ງປະນາມສາວສນົມຊຶ່ງຖືເປັນຕົວແທນແຫ່ແຫນນຳສະຖາບັນກະສັດໄດ້.

ຂະນະທີ່ວິຈານ ຜູ້ແຕ່ງກໍພາໃຫ້ມວນຊົນມ່ວນຊື່ນ ຍິ້ມຫົວໄປນຳ ຍ້ອນການສ້າງຈິນຕະນາພາບ ບັນຍາຍການກະທຳ ແລະການເລືອກເຟັ້ນຄຳສັບ. ບາງບ່ອນຜູ້ແຕ່ງກໍນຳໃຊ້ຄຳສັບຊາວບ້ານທີ່ເວົ້າເຖິງອະໄວຍະວະເພດ. ເຖິງວ່າວິຈານກະສັດກໍດີແຕ່ຜູ້ແຕ່ງກໍບໍ່ໄດ້ໃຊ້ຣາຊາສັບ.

ການທີ່ເພິ່ນສ້າງຕົວລະຄອນ ພຣະຍາແລະຊຽງໝ້ຽງ ເກີດມາມື້ດຽວກັນນັ້ນບໍ່ແມ່ນໂດຍບັງເອີນ ແຕ່ຕັ້ງຢາກເວົ້າວ່າ: *ເກີດມາເປັນຄົນຄືກັນ ກໍຕ້ອງສາມາດຍົກບັນຫາຂຶ້ນໄດ້ຄືກັນ, ມີສິດສຽງທ່ຳກັນ ເພາະຄວາມສລາດບໍ່ໄດ້ມີແຕ່ຜູ້ເກີດໃນຊົນຊັ້ນສູງທ່ຳນັ້ນ.* ຄວາມສລອກກອກຂອງຊຽງໝ້ຽງ ຍັງສາມາດຊ່ອຍບ້ານເມືອງໃຫ້ພົ້ນໄພເອົາຊະນະການພະລັນກັບນະຄອນອື່ນ ໃນຂະນະທີ່ພຣະຍາບໍ່ມີປັນຍາຈະສູ້ໄດ້.

ກ່ອນພຣະຍາພໍ່ຈະເສັຽຊີວິດໄດ້ເອີ້ນ ລູກຊາຍແລະສິທະນົນໄຊ ມາພົບເພື່ອສັ່ງຄວາມໄວ້ວ່າ ໃຫ້ຮັກແພງກັນ-ຜິດພາດກໍບໍ່ໃຫ້ຂ້າກັນ. (ເປັນຄຳສັ່ງສອນຂອງພຣະເຈົ້າຟ້າງຸ່ມ) ຜູ້ແຕ່ງນິທານຊຽງໝ້ຽງຕັ້ງເຈດຕະນາເຕືອນຄົນຮຸ່ນໃໝ່. ແຕ່ດັ່ງທີ່ເຮົາຮູ້ນຳກັນ"ລາວຍັງຂ້າລາວ" ຍ້ອນວ່ານິຍົມລັດທິການເມືອງຕ່າງກັນ.

<u>ວິຈານພຣະສົງ</u>

ນັບຕັ້ງແຕ່ບວດເປັນຈົວ ຈົວສິທະນົນໄຊ ກໍຖືກຄູບາເອົາປຽບມາແລ້ວ. ຄູບາເຍົ້າໃຫ້ຈົວແບກອ້ອຍໄປປ່າຊ້າເພື່ອຈະສູດກ່ອນກິນ ເພື່ອຈະໃຫ້ມັນສມອງສລາດຫລັກແຫລມ ຄູບາບໍ່ຮູ້ເພື່ອແຜ່ ບໍ່ເຫັນໃຈຜູ້ອອກແຮງ ຈຶ່ງກິນອ້ອຍກ່ອນແລະຈຶ່ງແຕ່ຂໍ້ອ້ອຍບ່ອນແຂງໄວ້ໃຫ້ຈົວ.

*ແລ້ວເລົ່າ ພາກັນຄ້ຽວ ກິນເສັຽໝົດອ່ອຍທ່ອຍ*
*ບໍ່ໄດ້ ຄຶດຮອດນ້ອຍ ເນນເຝົ້າຕັ້ງແຕ່ແລງ*
....
*ເນນກໍ ອິດສາກັ້ນ ເກັບກິນທັງຈົ່ມ*
*ເພິ່ນທາກ ກິນແຕ່ປ້ອງ ວາງຂໍ້ແກ່ກູ*

ຈາກນັ້ນ ຊຽງໝ້ຽງໄປພົ້ພຣະອາຈານຂີ້ຖີ່ ຜູ້ຍັງຫວັງແກ່ຖານະຍົດຊັ້ນຢູ່ວັດຊານເມືອງ ໃນທີ່ສຸດຊຽງໝ້ຽງຄຽດຫລາຍກໍຈຶ່ງວາງແຜນຕັດຕົ້ນໝາກໄມ້ຢູ່ເດີ່ນວັດ.

*ຄຶດຢາກ ຂໍໝາກສົ້ມ ກິນຖ້ອນສບ່ອຍດອມ ເຈົ້າເອີຍ*
*ແຕ່ນັ້ນ ເຖນຫລວງຂຶ້ນ ເມືອກະດີລີ້ຢູ່*
*ທັງເລົ່າ ອັດປ່ອງຢ້ຽມ ປະຕູຫ້ອງບໍ່ຕິງ*
.....
*ແຕ່ນັ້ນ ຊຽງກໍອິດອິກແຄ້ນ ໃນໃຈຄຶດຄຽດ*
*ເຖນເຖົ້າ ຕັ້ງທາກມາຖ່ອຍດ້າມ ບໍ່ມີຮູ້ຮ່ອມສັງ ແທ້ນໍ*
....
*ບັດນີ້ ຣາຊາເຈົ້າ ຈອມເມືອງອິງອາດ*
*ວ່າຈັກ ທົດແຈ່ມເຈົ້າ ເຖນຂຶ້ນໃຫ້ສິ່ງສູງ ວ່າດາຍ*
....

*ມັນກໍ ພາງານແທ້ ພັນລຶງຂຶນໄຂວ່*
*ຮານລຶງ ໝົດຊູ່ຕົ້ນ ເຫລືອໄວ້ຕັ້ງແຕ່ຕໍ*
....
*ແຕ່ນັ້ນ ຊຽງບໍ່ຊ້າ ຕີນແດກມະຫາເຖນ*
*ອັນວ່າ ຫົວຊວນຖຸບ ໃສ່ຝາກະດີນັ້ນ*
*ເຖນໂວຍຮ້ອງ ໂອຍໂອຍຄາງຢູ່*
*ຊຽງກໍ ຍໍຕີນຖີບແກ່ງແກ້ ພໍໃຈແລ້ວແລ່ນໜີ*

ຜູ້ແຕ່ງຍັງສ້າງໃຫ້ເຈົ້າພຣະຍາແກ້ງດ່າພຣະສຶງວ່າບໍ່ຮຽນສູດ ຮຽນທັມມະເກີດເປັນມື້ມີແຕ່ມ່າຍສາວ ທັງຍັງເຫັນແກ່ວັດຖຸທານ.

*ຕັ້ງບໍ່ ເສັງແຮງລ້ຽງ ໂພຊະນາເຊົ້າຄ່ຳ ຈິງນໍ*
*ຢຽວວ່າ ຮູ້ແຕ່ໄປອ່ານຫລິ້ນ ໂຄງພ້າມ່າຍສາວ ນັ້ນດາຍ*
....
*ຕັ້ງວ່າ ເສັງແຮງຍໍພາເຂົ້າ ໄປເຄນດາຍດອກ ຊຽງເອີຍ*
*ເພື່ອນບໍ່ ຄຶດອາດຕູ້ມ ເມືອງບ້ານຊ່ອຍເຮົາ ແທ້ດາຍ*
*ລອນທໍ່ ແຖຫົວເຂົ້າ ເປັນສຶງດາຍດອກ*
*ກໍບໍ່ ຄຶດຮ່ຳຮູ້ ຮຽນໄວ້ໃສ່ຕົວ ນັ້ນເດ*

*ເຫັນວ່າ ເປັນສຶງແລ້ວ ຊິນອນກິນດາຍດອກ*
*ທັມບໍ່ມີ ຄ້າງທ້ອງ ທະລອນເອ້ໂອດເຊີງ ແທ້ນໍ*
*ກໍບໍ່ ມີປະສຶງດອມແທ້ ໃນທັມລຳມະສູດ ອີ່ສັງນັ້ນ*
*ກໍທໍ່ ຮູ້ແຕ່ຫລິ້ນ ໂຄງພ້າອ່ານສານ ນັ້ນເດ*

*ຍັງເລົ່າ ໂລພາລິ້ນ ວັດຖຸທານທຸກສິ່ງ ນັ້ນແລ້ວ*
*ເຫັນແກ່ ອານິດຂອງລື່ນລົ້ນ ຊິມຈື້ນຢູ່ເລີງ ແທ້ນໍ*
....
*ຕັ້ງວ່າ ພາກັນແຖຫົວໂລ້ນ ເປັນສຶງດາຍດອກ*
*ຮູ້ທໍ່ ກິນແຕ່ເຂົ້າ ຄວາມເວົ້າອວດໂຕ ແທ້ນໍ*

<u>ວິຈານພຣະຍາ</u>

ຜູ້ແຕ່ງວິຈານພຣະຍາຊຶ່ງບໍ່ໄດ້ຕັ້ງຊື່ໃຫ້, ວ່າພຣະຍາມີຄວາມເຊື່ອງົມງວາຍ ໃຊ້ຄໍາສັ່ງ ໃຊ້ອໍານາດທາຣຸນ ຂົ່ມຕີ ຂົ່ມຂ້າໄພ່ພົນ. ເມື່ອມີສັດຕູມາເຖິງນະຄອນ ກໍສັ່ງໃຫ້ຜູ້ອື່ນແກ້ຕາງ.

ຊຽງໝັ້ງຫ້ວງແກ້ມພຣະຍາ

| | |
|---|---|
| *ກໍຫາກາ ຮົງຮົງໃສ* | *ດັ່ງທໍາໝາເຖົ້າ ນັ້ນແລ້ວ* |

ຊຽງໝັ້ງຫລອກພຣະຍາເລັ່ງຂີ້ແຮ້ງ

| | |
|---|---|
| *ຍັງວ່າ ເປັນພຣະຍາລໍ້າ* | *ສເວີຍເມືອງທົ່ງແທ່ນ* |
| *ມາຄວ່າ ກິນຂີ້ແຮ້ງ* | *ຂຍອນຊໍ້າຜອກບໍ່ອາຍ ແທ້ນໍ* |
| .... | |
| *ໃຜຜູ້ ກິນຂີ້ແຮ້ງ* | *ຕົວຜ່ອນເສັ່ງສັດ ມາກແລ້ວ* |
| *ເໝືອນດັ່ງ ດຽວເດັ່ງຣະສານ* | *ບໍ່ໃຊ່ຄົນຈິງແທ້* |

ພຣະຍາເຊື່ອແບບງົມງວາຍ ເຊື່ອຟັງຄວາມໝໍດູ

| | |
|---|---|
| *ແລ້ວເລົ່າ ລັກຂະນາຕັ້ງ* | *ນັບຫາຕົວເພິ່ງ* |
| *ຕັດວ່າ ພຣະບາດເຈົ້າ* | *ປີນີ້<u>ເພິ່ງແມວ</u> ແທ້ດາຍ* |
| *ຕັ້ງວ່າ ເຄາະຮ້າຍແທ້* | *ຕົວເພິ່ງຢູ່ໃນແຈ ພຣະເອີຍ* |
| *ດີທີ່ ປະທັດເສົາໜູນ* | *ກໍບໍ່ຄວນພໍຮ້າຍ* |
| *ໃຫ້ຄ່ອຍ ທໍາພຽນແກ້* | *ບູຊາທັງ<u>ສືບຊາຕາ</u>ນັ້ນ* |

ຕອນຊຽງໝັ້ງສານກວຍ ຜູ້ແຕ່ງຢາກຫ້ວງວ່າ ເຊື້ອພຣະຍາມີສິດທລິ້ນເສັ້ນສາຍ

| | |
|---|---|
| *ຍັງວ່າ ເປັນນ້ອງແທ້* | *ສັງອອກສົງຄາມ ດັ່ງນີ້* |
| *ບໍ່ໃຊ່ ແນວບານໝາ* | *ຊິບອກໄປຕາຍແທ້* |
| .... | |
| *ຊື່ວ່າ ທັມມະດາໄດ້* | *ເປັນກະບົດຖານ້ອງພຣະຣາດ* |
| *ສານກວຍໃຫຍ່ ພໍແປດອູ້ມ* | *ປານນີ້ກໍຈຶ່ງສົມ ແທ້ດາຍ* |
| *ເຮົານີ້ ທີ່ວ່າເປັນນາມມະກອນເຊື້ອ* | *ພຣະຍາເມືອງຍິດໃຫຍ່ ຈິງດາຍ* |
| *ກໍຈຶ່ງໄດ້ ສານກວຍພໍແປດອູ້ມ* | *ເອົາຫ້າງໃສ່ຜຍາ ທ່ານເອີຍ* |

*ຜີວ່າ　ເຮົາຫາກເປັນຄົນນ້ອຍ　ຊາວເມືອງຊາດຕໍ່າ*
*ຜຍາບໍ່ດີດີ້ດີ້　ກໍກວຍນ້ອຍດັ່ງຊູ່ຄົນ ນັ້ນແລ້ວ*
*ອັນນີ້　ເຮົາຫາກເຮັດຕາມເຊື້ອ　ນາມມະກອບຜູ້ໃຫຍ່ ເຈົ້າເອີຍ*

ຜູ້ແຕ່ງ ເປີດເຜີຍເລື່ອງການໃຊ້ສິນຈ້າງຕໍ່ຄອບຄົວພຣະຍາ

*ອັນນີ້　ພໍແຕ່ເປັນສິນຈ້າງ　ຂໍດອມທານໂທດ*
*ຄັນວ່າ　ນ້ອງພຣະເຈົ້າບໍ່ລ້ຽງ　ຝູງຂ້າສ່ອນຕາຍ ແທ້ແລ້ວ*

ຜູ້ແຕ່ງສາມາດຍອກລໍ້ເຖິງຂັ້ນສ້າງໃຫ້ ຊຽງໝ້ຽງປີ່ນກົ້ນລັດທາງພຣະຍາ

*ເລີຍເລົ່າ ປີ່ນກົ້ນຂຶ້ນ　ເມືອຟ້າເງີກເງີຍ*

....

*ຕັ້ງຫາກ ກຸດຈຸດກົ້ນ　ປານດ່າງດໍາແດງ ກໍມີ*
*ອັນວ່າ　ທໍາມັນປີ້ນ　ເມືອເທິງຕາບຊາບ*
*ອັນວ່າ　ໂຄຍແບ້ນປີ້ນ　ເມືອຟ້າໂງກໂງ*

<u>ວິຈານສາວສນົມ</u> ຊຶ່ງຖືວ່າເປັນຕົວແທນຂອງພວກແທ່ແທນແລ່ນນໍາຫລັງພຣະຍາ ສາວສນົມປະຕິບັດຕາມຄໍາສັ່ງພຣະຍາ ພາກັນໄປຂີ້ໃສ່ເຮືອນຊຽງໝ້ຽງເລີຍຖືກຕີ

*ລາງຄົນ ປົບຕາຍຢ້ານ　ໂຕນເຮືອນສິ້ນຂວີ່ ກໍມີ*
*ທັງເລົ່າ ປະເຖົ້ານ້ອຍ　ດູຮ້າຍອາດແກ່ຕາ ເຈົ້າເອີຍ*

*ລາງພ່ອງ ດັ່ນກັນລົ້ມ　ເນືອງນອງຂົນໄຂວ່ ກໍມີ*
*ລາງພ່ອງ ໂຕນຈາກຢ້າວ　ເຊລົ້ມຄາບຂີ້ດິນ*
*ລາງພ່ອງ ຕີນຕໍາຕ້ອງ　ຕໍຫີນເລືອດອອກ ກໍມີ*
*ລາງພ່ອງ ປົບປ່ວງພ້າວ　ຊູນໄມ້ໜ້າຜາກໂນ*

ສາວສນົມພາກັນໄປຂໍແມ່ຜຍານໍາຊຽງໝ້ຽງຖືກແມ່ຜຍາໄລ່ຕອດ

*ລາງພ່ອງ ກະໂຍງກະແຍງເຕັ້ນ　ລາງຄົນກົ້ງເກືອກ ກໍມີ*
*ລາງພ່ອງ ປົບປ່ວງພ້າວ　ໂຕນຢ້າວແລ່ນເປືອງ*

*ລາງພ່ອງ ຊຶນຝາມ້າງ　ໂຕນເຮືອນທາງອື່ນ ກໍມີ*
*ລາງຜ່ອງ ລືມໂຕ່ງສິ້ນ　ຫລົງຮີ້ສະຫງາກຫງາຍ*

....

*ລາງພ່ອງ ປະສະໄບຜ້າ* *ຟືນແພງປົບແລ່ນ ໄປແລ້ວ*
*ລາງພ່ອງ ສິ້ນຂວີ່ແລ້ວ* *ໂຕນເຕັ້ນແລ່ນແຕ່ໂຕ*

....

*ລາງພ່ອງ ມວຍຜົມເກົ້າ* *ຫລຸດລົງກົ້ວກິ່ນ ກໍມີ*
*ປົກເກືອກກົ້ວ* *ເປັນຮ້າຍເກືອກດິນ*
*ລາງພ່ອງ ອອງເຕົ່າປີ້ນ* *ເມືອເຫິງຕາກແດດ ກໍມີ*

## 4. <u>ຜຍາຢູ່ໃນນິທານຊຽງໝັ້ງ</u>

ເຖິງວ່ານິທານຊຽງໝັ້ງເປັນເລື່ອງທີ່ແຕ່ງຂຶ້ນຕຳນິວິຈານສັງຄົມ ແຕ່ກໍມີພາສິດຈຳນວນນຶ່ງ ເພື່ອສອນຄົນໃນສັງຄົມໃຫ້ໄດ້ນຳມາຄຶດຕຶກຕອງ.

*ຄັນວ່າ ຜິດພໍຂ້າ* *ຂໍພອນໃຫ້ເຈົ້າປ່ອຍ*
*ຄັນຫາກາຜິດແຕ່ນ້ອຍ* *ຂໍເຈົ້າຢ່າໄດ້ຊາ ພໍ່ເນີ*

....

*ຄັນວ່າ ເສັງສັດຈະນີ້* *ຕົວຕາຍດີກວ່າ ຈິງແລ້ວ*

....

*ເງິນບໍ່ມີ ພໍສ້ຽວ* *ໝາຍເອົາລູກສາວເພິ່ນ ປະໂຫເດ*
*ເຂົ້າບໍ່ມີ ຢູ່ເລົ້າ* *ຊິຂັບລ້ຽງແມ່ເມັຽ*
*ເກືອບໍ່ມີ ພໍຊ້າ* *ຊິໝາຍຕຳປາແດກ*

....

*ຢາກຈຶ່ງກິນນີ້* *ກໍເປັນຢາອັນນຶ່ງ*
*ຄັນວ່າ ບໍ່ຢາກແທ້* *ກືນເຂົ້າກໍບໍ່ລົງ*

....

*ຊາດທີ່ ກຸດໂຕນີ້* *ບໍ່ມີຜົວມັນຊິໄຂ່ ເປັນລື*
*ຄັນວ່າ ໄກ່ຜູ້ຫາກບໍ່ມາໄລ່ດ້ວຍ* *ຊິມີເຊື້ອສືບມາ ນັ້ນລື*

....

*ເຮົາວ່າ ເຮົາຂນາດແທ້* *ເຂົາພັດກ້າລື່ນເຮົາ ແທ້ນໍ*

....

*ອັນວ່າ ໃຫ້ມັນສົມກະບວນໜ້າ* *ເອົາຫີນໜາແຍງຕາງແວ່ນ*

....

*ຊາດທີ່ ຄົນກິນເຂົ້າ* *ສເມີກັນບໍ່ມີຢ່ອນ ໃຜແລ້ວ*

....

ເໝືອນດັ່ງ ເມັດງາຕັ້ງ ປາຍເຫລັກຈານຈັບຢູ່ ນັ້ນແລ້ວ
ຄັນວ່າ ລົມພັດຍູ້ ປີວເປື້ອງຫລົ່ນເສັ້ງ ດອກນາ
....
ຊາດທີ່ ເກີດມາໃນກົງພື້ນ ທໍຣະນີເໜືອແຜ່ນ ດິນນີ້
ໃຜບໍ່ ມີສລາດຮູ້ ປັນຍາລ້ຳລື່ນກັນ ດອກນາ
....
ຜິວ່າ ຍັງບໍ່ມີເມັ້ຽຊ້ອນ ຢາກຂໍຊົມຈັກສນ່ອຍ ດູເດ
ຕາງໃຫ້ ໄດ້ສືບເຊື້ອ ແນວເຈົ້າຕ່າງເມືອງ ອຸ່ນເອີຍ
....
ອັນນຶ່ງ ເໝືອນດັ່ງນາຍພານເນື້ອ ສແວງຍິງສັບພະສິ່ງ ຈິງແລ້ວ
ຕັ້ງວ່າ ປືນຍັດໄວ້ ເຕັມແຫລ້ງກໍຈິ່ງໄປ ເຈົ້າເອີຍ
....
ໂອນໍ ຄຶດວ່າສຽມດວງກ້າ ຕານີຄົມບາດ ອວນເອີຍ
ຄຶດວ່າ ຄົມເຂັ່ນກ້າ ປະສົງຫ້າງແບກມາ ແທ້ດາຍ
....
ທໍ່ວ່າ ສຽມເຫລັກອ້າຍ ເມືອງຕານີຫາກຊຸບອ່ອນ ອີ່ພີ່ແລ້ວ
ເຫລັກກໍຫາກ ກ້າບໍ່ແພ້ແຫລ້ວ ພະອວນອ້າຍຊ່າງບໍ່ເຄີຍ ນ້ອງເອີຍ
....
ສາຍແລວ ລົມເປົ່າເປື້ອງ ປານແຮ້ງເວີ່ນບິນ
....
ອັນນີ້ ທຽບດັ່ງເອົາຫີນກ້ອນ ແຂວນຄໍເປັນປ່ອມ ຫອຍນັ້ນ
ຍາມເມື່ອ ຖິ້ມໃສ່ນ້ຳ ຈົມປີ້ງກໍບໍ່ເຫັນ ເຈົ້າເອີຍ
....
ຄືດັ່ງ ປຸນເປັນບ້າ ແລງງ່າຍປະເປົ່າ
ແມ່ນບໍ່ກິນ ເຂົ້ານ້ຳ ເຫັນໜ້າກໍອີ່ມເລີງ ເຈົ້າເອີຍ
....
ຊາດທີ່ ປາໃນນ້ຳ ລອຍລຳເຕັ້ນດີດ
ອາດຈັກ ຫວິດວ່າງຮ້າຍ ແຫກວ້າງວ່ານກວາມ ແທ້ດາຍ
....
ຢ້ານແຕ່ ເປັນດັ່ງປາຢູ່ນ້ຳ ລະອາຍໜ້າແມ່ນອງ ບໍ່ຮູ້
....
ອັນວ່າ ຝູງແມງວັນຂຽວຕອມ ຂີ້ໄຂ່ຂາງຂິເຕັມແຂ້ວ

## 5. <u>ນິທານບໍ່ມີຈຸດສິ້ນສຸດ</u>

ນິທານຊຽງໝ້ຽງບໍ່ມີບ່ອນສິ້ນສຸດ ເນື່ອງຈາກວ່າຜູ້ແຕ່ງລົງທ້າຍໄວ້ແນວນີ້:

*ບັດນີ້ ຍຸດຕິສ້ຽງ ນິທານຫາຍເສັ້ຽງກ່ອນ ເຈົ້າເອີຍ*
*ພື້ນຊຽງໝ້ຽງ ກໍຫາກຍັງບໍ່ແພ້ ອວນຂ້ອຍຊອກບໍ່ເຫັນ*

*ຄັນວ່າ ໃຜຜູ້ຍັງຫາໄດ້ ຈົ່ງເອົາໄຟເຍືອງຕໍ່ ກັນຖ້ອນ*
*ຕາງໃຫ້ ໄດ້ສັ່ງສອນລູກເຕົ້າ ຫລານຫລ້ອນໝູ່ເຫລັນ ເຈົ້າເອີຍ*

ໃນຊີວິດຈິງແລ້ວ ຍັງມີນິທານຊຽງໝ້ຽງອີກຫລາຍຕອນ ເພາະວ່າເຄີຍໄດ້ຍິນຜູ້ເຖົ້າຜູ້ແກ່ແຖວລ້ອງງື່ມເລົ່າຊູ່ຟັງ, ແຕ່ຕອນເພິ່ນພິມສະບັບ ປີ 1968 ນີ້ ທາງກົມວັນນະຄະດີບໍ່ໄດ້ເກັບກຳມາພິມໃສ່.

ເຄີຍໄດ້ຍິນຄວາມຊ່າເວົ້າຂອງຊາວບ້ານຈຳນວນນຶ່ງວ່າ *ພາຍຫລັງທີ່ພວກຕ່າງດ້າວໄດ້ຈູດເຜົານະຄອນຫລວງວຽງຈັນແລ້ວເຂົາໄດ້ເອົາຫົວຊຽງໝ້ຽງໄປນຳ.* ຈຶ່ງພາໃຫ້ຕັ້ງຄຳຖາມຂຶ້ນວ່າ: ຈະໄດ້ຫົວຊຽງໝ້ຽງມາແຕ່ໃສ? ຫລືວ່າຈັບເອົາໂຕຊຽງໝ້ຽງໜີໄປພ້ອມ? ຫລືວ່າ ເວົ້າເພື່ອໃຫ້ຕີຄວາມໝາຍເປັນແນວໃດແນວນຶ່ງ? ຂ້າພະເຈົ້າເຂົ້າໃຈວ່າ ການເວົ້າແນວນີ້ ເປັນພຽງເພື່ອຢາກສື່ແນວອື່ນຕ່າງຫາກ ເນື່ອງຈາກຂ້າພະເຈົ້າມີໂອກາດໄດ້ພົບພໍ້ກັບ*ທ່ານຜູ້ອະວຸໂສ* ເພິ່ນເລົ່າຊູ່ຟັງວ່າ ພາຍຫລັງທີ່ນະຄອນຫລວງວຽງຈັນຖືກເຜົາຜານແລ້ວ ຊາວນະຄອນຫລວງຈຳນວນນຶ່ງກໍແຕກສລຸຜຸພ່າຍກັນ ອອກໄປຢູ່ຕາມຊົນນະບົດ ສ່ວນນຶ່ງກໍໜີໄປລີ້ຢູ່ແຖບຕີນພູເຂົາຄວາຍ, ແມ່ນກະທັ້ງເຊື້ອສາຍຂອງເຈົ້າອະນຸວົງບາງຄົນກໍຕ້ອງປອມຕົວປົນຢູ່ນຳຊາວບ້ານ. ເມື່ອບໍ່ກ້າສະແດງຄວາມຮູ້ຄວາມຫລັກອອກເຮັດຕົນເອງຄືວ່າເປັນຄົນໂງ່ເຊື່ອຊ້າ ຍ້ອນສະພາບເປັນແນວນີ້ຈຶ່ງຄ້າຍຄືຄວາມເວົ້າວ່າ ຫົວຊຽງໝ້ຽງບໍ່ມີ ແລະຖືກຊາວຕ່າງດ້າວເອົາໄປແລ້ວ.

ມີປະເດັນນຶ່ງໃນນິທານ ທີ່ຄົນຍຸກພວກເຮົາຄວນຕັ້ງບັນຫາຂຶ້ນວ່າ: ເປັນຫຍັງຜູ້ແຕ່ງຈຶ່ງເວົ້າເຖິງນະຄອນປັດຕານີ ຊຶ່ງຢູ່ກາຍສຍາມລົງໄປທາງໃຕ້? ແລ້ວຍົກຂຶ້ນມາເປັນຄູ່ແຂ່ງທາງກຳລັງກາຍ (ເອົາຫົວລ້ານຊົນກັນ) ແລະທາງມັນສມອງ (ເອົາພະສົງມາຖາມໂຈດກັນ)? ໃນຍຸກນັ້ນຍັງມີຄວາມຂັດຂ້ອງໃຈກັນລະຫວ່າງນະຄອນຂອງລາວແລະຂອງສຍາມບໍ? ຄົງຕ້ອງຟື້ນປວັດສາດສະບັບທີ່ບໍ່ເຂົ້າຂ້າງຝ່າຍໃດຝ່າຍນຶ່ງມາຮຽນເພື່ອຕອບໂຈດ!

# ໜັງສືຊຽງໜ້ຽງ

ຂອງ

ກົມວັນນະຄະດີ

ພິມເທື່ອທີ ສາມ ໕.໐໐໐ ເຫຼັ້ມ.

ວັນທີ ໑ ມີນາ ໑໙໕໗

# ສາຣະບານ


| | | |
|---|---|---|
| >> | ນຳສເນີນະຄອນທະວາຣາວະດີ | ໜ້າ 1 |
| >> | ປ່າວຫາຜູ້ເກີດໃນມື້ດຽວກັນມາລ້ຽງຄູ່ລູກພຣະຍາ | 4 |
| >> | ສີທະນົນໄຊເບິ່ງນ້ອງຮັກ | 5 |
| >> | ສີທະນົນໄຊແລ່ນນຳຫລັງມ້າ | 8 |
| >> | ສົ່ງສີທະນົນໄຊຄືນໃຫ້ພຣະຍາ | 11 |
| >> | ພໍ່ພຣະຍາມອບເມືອງໃຫ້ລູກຊາຍຂຶ້ນຄອງ | 13 |
| >> | ຄຳສັ່ງສອນຂອງພຣະຍາກ່ອນຈະເສັຽຊີວິດ | 14 |
| >> | ຄຣູບາຊວນເນນສີທະນົນໄຊໄປສູດຢູ່ປ່າຊ້າ | 16 |
| >> | ຈົວສີທະນົນໄຊຖາມສົ້ຄູບາ | 18 |
| >> | ສີທະນົນໄຊພະນັນກັບໄທຄັງໝ້ຽງ | 20 |
| >> | ພຣະຍາໃຫ້ສິກແລ້ວໄດ້ຊື່ເປັນຊຽງໝ້ຽງ | 25 |
| >> | ຊຽງໝ້ຽງເລືອກເມັຽ-ເລືອກໄດ້ສາວສເນຫາ | 27 |
| >> | ຢາກິນເຂົ້າແຊບຂອງຊຽງໝ້ຽງ | 29 |
| >> | ຊຽງໝ້ຽງຕຳນິຊ້າງພຣະຍາ | 31 |
| >> | ຊຽງໝ້ຽງນຳພາສາວສນົມໄປໃຫ້ນຳຄືນຕາຍ | 32 |
| >> | ຊຽງໝ້ຽງຄ້ຽວໝາກນຳພຣະຍາ | 37 |
| >> | ຊຽງໝ້ຽງຊອກຄືນປາກງ່າມ | 38 |
| >> | ພຣະຍາຫລອກຊຽງໝ້ຽງກິນແກງແຮ້ງ | 40 |
| >> | ຊຽງໝ້ຽງຫລອກພຣະຍາເລັຽກິນຂີ້ແຮ້ງ | 43 |
| >> | ສາວສນົມໄປຂີ້ໃສ່ເຮືອນຊຽງໝ້ຽງ | 44 |
| >> | ພາກັນໄປຫລິ້ນບັກໄກ່ອອກໄຂ່ | 47 |
| >> | ຊຽງໝ້ຽງຊອກຫາຊີ້ສິ້ນແຕ້ມ | 50 |
| >> | ຊຽງໝ້ຽງຕັດຕົ້ນໝາກໄມ້ຢູ່ວັດ | 52 |
| >> | ແຂ່ງຂັນທົວລ້ານຊົນກັນກັບເມືອງປັດຕານີ | 62 |
| >> | ຊຽງຍານຫລົງກິນຊຽງໝ້ຽງ | 77 |
| >> | ຊຽງໝ້ຽງທຳນາຍອາການເຈັບຂອງພຣະຍາ | 81 |

>> ພຣະຍາເມືອງປັດຕານີຜີປອງແກ້ແຄ້ນ 84
>> ແຫ່ກອງບວດຊຽງໝ້ຽງ 96
>> ຊຽງໝ້ຽງໄດ້ຊື່ວ່າ ຄຣູໄຊຍະສິດຕະກະຄຳພີລັງ 98
>> ຣາຊະຄຣູຄຳພີລັງຖາມສາມມະນະເມືອງຕານີ 101
>> ຊາວສະເພົາປັດຕານີອຳລາເມືອ 105
>> ນະຄອນປັນຈາຍົກທັບມາທະວາຣາວະດີ 108
>> ຊຽງໝ້ຽງສານກວຍ 113
>> ຊຽງໝ້ຽງໄປກ່ອນໄກ່ 125
>> ຊຽງໝ້ຽງໄປເກັບໝາກເຜັດ 128
>> ຊຽງໝ້ຽງແບ່ງປັນແມ່ຜຍາ 131
>> ຊຽງໝ້ຽງເປີດກົ້ນລັດທາງພຣະຍາ 144
>> ຊຽງເຂົ້າເຝົ້າພຣະຍາຫລັງແຜ່ນດິນປີ້ນ 146
>> ຊຽງໝ້ຽງນັ່ງໄມ້ພາຍເຮືອ 148
*ຜົນງານທີ່ພິມອອກແລ້ວ* 156
*ຮູ້ຈັກກັບ ໄຊສຸວັນ ແພງພິງ* 157


## *ເອກະສານຊ່ອຍໃນການຮຽບຮຽງ*


**ໜັງສືຊຽງໝ້ຽງ** ຂອງ ກົມວັນນະຄະດີ ສະບັບວັນທີ 1 ມີນາ 1968
**ວັຈນານຸກົມພາສາລາວ** ໂດຍ ມະຫາສິລາ ວິຣະວົງສ໌ ຄ.ສ. 2006
**ພົຈນານຸກຣົມລາວ** ໂດຍ ສຸບິນ ພຣະໂກໄຊຍ໌ ຄ.ສ. 1988
**Pali-English Dictionary** by Professor of Pali Maung Tin, Rangoon 1920


## *ເຄື່ອງໝາຍສະເພາະໃນປຶ້ມຫົວນີ້*

**>>** ເຄື່ອງໝາຍເລີ່ມຕົ້ນຕອນໃໝ່
**ປລ** ຄຳສັບລາວມີເຄົ້າມາຈາກປາລີ
**ສສ** ຄຳສັບລາວມີເຄົ້າມາຈາກສັນສະກຣິດ
**ລກ** ຄຳສັບລາວເກົ່າທີ່ບໍ່ນິຍົມໃຊ້ແລ້ວ

# ນິທານຊຽງໝ້ຽງ

ຮຽບຮຽງໂດຍ

## ໄຊສຸວັນ ແພງພິງ

ບັດນີ້...

ຍັງມີ ເມືອງໃຫຍ່ກວ້າງ ຮຽກຊື່ທະວາຣາວະດີ
ໃນນະຄອນຄົນ ຂ່າວຂານເຂົາຍ້ອງ
ຕາມແຕ່ ກໍາລັງໄດ້ ສາມແສນແປດໝື່ນ
ອັນວ່າ ຊ້າງແລະມ້າ ເຫລືອລົ້ນອະເນກນອງ

ງົວຄວາຍພ້ອມ ໝູໝາເປັດໄກ່ ກໍມີ
ອັນວ່າ ໝາກແລະພ້າວ ລຽນຕົ້ນໄຂວ່ຂືນ

ອັນວ່າ *ພຶດຊະ*ຝຸງໝາກໄມ້ ມີ້ມ່ວງ*ຄັນທະຣົດ* ກໍມີ
ມີທັງ ຜູຜາງສຸກ ເວີ່ນາວແກມກ້ຽງ
ມີທັງ ເຟືອງໄຟຄໍ້ *ກຸທະລີ*ອ້ອຍແອບ
ລຽນລຽບຖ້ານ ແຖວຮົ້ວເຮື່ອສວນ

ຖັດນັ້ນ ມີແມ່ນໍ້າ ໄຫລຜ່ານ*ພາຣາ*
ຍຸທ່າງ *ທວຍສະເພົາ*ເຂົາ ຊູ່ເມືອງມາຄ້າ
ມີທັງ ກໍາແພງຕັ້ງ ປັກຕູຂົງຄຸງເມກ
ທໍຮົບຕັ້ງ ລະວັງໄວ້ຊູ່ພາຍ

ມີທັງ ວັດໃຫຍ່ຕັ້ງ ພະທາດກໍ່ເຈດີ
ສໄວສູງສຸດ ເຮື່ອຄໍາແກມແກ້ວ
ຕັ້ງຫາກ ຮົງຮົງເຫລື້ອມ ເຈດີຫລາຍຍອດ
ສນຸກຍິ່ງລໍ້າ ນະຄອນຟ້າດັ່ງດຽວ

---

ພິດຊະ, ພຶດຊະ (ປລ ພີຊະ, ພືຊະ) = ຕົ້ນໄມ້ເກີດຢູ່ຕາມດິນ, ແນວພັນ / ຄັນທະຣົດ = ໝາກໄມ້ຊື່ງກິນໄດ້ແນວນຶ່ງ (ຄັນທະ ປລ = ກິ່ນຫອມ) / ກຸທະລີ = ໝາກກ້ວຍ / ພາຣາ (ປລ ພາຣາ) = ເມືອງ / ທວຍສະເພົາ = ພວກຄ້າທາງສະເພົາ

ອັນວ່າ ເມືອງຫລວງກວ້າງ ພັນວາເປັນຂນາດ
ຍຸທ່າງ ສັງຄະເຈົ້າ ປະສົງສ້າງສູດຮຽນ
ອັນວ່າ ທໍຄຳຕັ້ງ ກາງເມືອງດູອາດ
ໂຮງທ່ານທ້າວ ພັນຫ້ອງໝື່ນເສົາ

ຍອດຊໍ່ຟ້າ ຊ້ອງຊໍ່ຫລາຍຖັນ
ລາຍເຄືອສັບ ຊູ່ພາຍປະດັບລ້ອນ
ອັນວ່າ ບົວນາງລົ້ນ ນັກສນົມຫລາຍໝື່ນ
ນາງໜຸ່ມເໜົ້າ ເທວີແກ້ວສີ່ພັນ

ເຂົາກໍ ຫຽມແທບທ້າວ ຕົນໃຫຍ່ພຣະຍາເມືອງ
ບໍ່ໄດ້ *ໄຄຄາ*ລະ ຈາກພຣະອົງພໍມື້
ຍູທ່າງ *ບົວຣະບັດ*ທ້າວ ບໍ່ເຄືອງສັງສັກສິ່ງ
ສຽງເສບ ພຣະແກ່ນໄທ້ ນັບພື້ນຮອດພົມ ແທ້ແລ້ວ

ເຈົ້າກໍ ບໍ່ຢ່ອນຢ້ານ ເມືອງອື່ນມາປະຈົບ ແທ້ດາຍ
ຍູທ່າງ ຊົມສິນທານ ແຕ່ງບຸນ*ປະສົງ*ສ້າງ
ຄັນວ່າ ເຫິງນານໄດ້ ຫລາຍປີຂ້າມລ່ວງ ໄປນັ້ນ
ອັນວ່າ ນາງເອກເຄົ້າ ເທວີເທງົ້າລວດມານ

ນາງກໍ *ທົງຄັບ*ໄດ້ ສິບເອັດເດືອນປະສູດອອກ
ອັນວ່າ ໂສມຮູບນ້ອຍ ງາມລົ້ນແມ່ນຜູ້ຊາຍ
ເຂົາຈິ່ງ ທານາມນ້ອຍ ກຸມມານບຸດຕະຣາດ
ຕາມເຜົ່າເຊື້ອ ວົງສາຊັ້ນເພິ່ງແນວ

ເພື່ອວ່າ ເຈົ້າທາກ*ທົດສຣາດ*ແທ້ ທົງແທ່ນສເວີຍເມືອງ
ບໍ່ໄດ້ ມີໃຈບຽນ ບຽດໃຜຂືນຂໍ້
ພໍ່ກໍ ຈິ່ງໃຫ້ທັນມາພ້ອມ ຫູຣາທຸກໝູ່
ເຂົາກໍ ປີບແລ່ນຟ້າວ ໂດຍເຈົ້າຮີບມາ

---

ໄຄຄາ = ຈາກໄປ / ບົວຣະບັດ, ບົວລະບັດ = ເອົາໃຈໃສ່ດູແລ / ປະສົງ (ສສ ປຣຸສັງຄ) = ຄວາມໝາຍມາດ, ການຢາກໄດ້ / ທົງຄັບ (ປລ ຄັພພ) = ຖືພາ, ມີລູກ / ທົດສະຣາດ = ຄອງເມືອງດ້ວຍທັມ 10 ປະການ (ທົດ ທົສ = 10)

| | |
|---|---|
| ເຂົາຈຶ່ງ ຍໍມືໄຫວ້ | ພຣະຍາເມືອງກົ້ມຂາບ |
| ເຂົາກໍ ປົງຮ່າງໃຫ້ | ໝໍຮູ້ຊູ່ອັນ |
| ບັດນີ້ ສູຈິ່ງເອົາກັນຕັ້ງ | ດູຊາຕາບຸດຕະຣາດ ເຮົາຖ້ອນ |
| ຕາມແຕ່ ຄຣູສັ່ງໃຫ້ | ຮຽນຮູ້ຮີບທວາຍ ທ່ານເຮີຍ |
| ອັນວ່າ *ກຸມມານ*ນ້ອຍ | ກູພຣະອົງອັນເກີດ ມານີ້ |
| ຍັງຈັກ ໄດ້ສືບສ້າງ | ເມືອງບ້ານແຫ່ງເຮົາ ບໍ່ນັ້ນ |
| ແຕ່ນັ້ນ ເຂົາກໍເອົາກັນພ້ອມ | ດູເກນ*ນັກຂັດຕະຣືກ* |
| ຕາມເສດເຄົ້າ | ຄຣູຊີ້ສັ່ງສອນ |
| ໝໍກໍ ບາຍສໍຕ້ອງ | ກະດານຫີນຂຽນຂີດ |
| ລຽນເລກໄວ້ | ເຕັມແປ້ນຊູ່ພາຍ |
| ຄັນວ່າ ໝົດຊຸມແລ້ວ | ອອກໃໝ່ເກນແຖມ |
| ແລ້ວຈຶ່ງ ເລັງດູດວງ | ເບິ່ງໄປຕາມພື້ນ |
| ໃນກົງແກ້ວ | ປີເດືອນໝົດຊູ່ບ່ອນ |
| ແລ້ວຈຶ່ງ ອອກປາກຕ້ານ | ທູນໄຫວ້ແຫ່ງພຣະຍາ |
| ຜິຈັກ ຕາມກົງແກ້ວ | ຍູກະເສີມສນຸກຍິ່ງ ຈິງແລ້ວ |
| ທີ່ວ່າ ລ້ຽງຍາກແທ້ | ເຫລືອລົ້ນລື່ນປະມານ |
| ຜິຈັກ ຕາມອຸດທັງຕັ້ງ | ປີສິບສອງພະຍາດບຽດ |
| ຍັງຈັກ ເສັ້ຽໝື່ນເບັ້ຽ | ເງິນຄຳແທ້ຈິ່ງຫາຍ |
| ຄັນວ່າ ກາຍໄປໜ້າ | ພາຍລຸນຈັກມີ*ໂຊກ* |
| ເພິ່ງທີ່ ຫາອ່ອນນ້ອຍ | ມາລ້ຽງພໍ່າກັນ ຊອບດາຍ |
| ຜິຈັກ ຕາມກົງ*ຊາຕາ*ຕັ້ງ | ຫານຄູນໄວ້ເສດສີ່ |
| ປີສິບສີ່ ຈຶ່ງໄດ້ | ສເວີຍສ້າງສືບເມືອງ ວ່ານາ |
| ຍັງຈັກ ດີເມືອໜ້າ | ຍູກະເສີມສນຸກມາກ |
| ເຈົ້າຈັກ ໄດ້ສືບສ້າງ | ເມືອງບ້ານຊຸ່ມເຢັນ ດອກແລ້ວ |

---

ກຸມມານ (ປລ ກຸມາຣ) = ເດັກນ້ອຍຜູ້ຊາຍ / ນັກຂັດຕະຣືກ = ດາວຣືກ ດາວເລີກ ມີ 27 ໝູ່ / ໂຊກ (ປລ ໂຊຄ) = ລາບ, ການໄດ້ດີ / ຊາຕາ (ປລ ຊາຕະ) = ເກີດແລ້ວ

ເມື່ອນັ້ນ ຣາຊາທ້າວ          ພຣະຍາຫລວງຕົນພໍ່
ເຈົ້າກໍ ຟັງພາກຂໍ້          ໜໍເວົ້າກາບທູນ

\>> ພຣະຈຶ່ງ ໃຫ້*ປ່າວຄ້ອງ*          ຫາທົ່ວທັງເມືອງ
ໃຜຜູ້ ມີ*ບຸດຕາ*          ປະສູດໃນວັນນີ້
ຣາຊາໃຫ້          ຕູມາຂໍເປັນລູກ ດອມແລ້ວ
ໃຜຜູ້ ເກີດແມ່ນແມ້ງ          ວັນນີ້ຈຶ່ງເອົາ ວ່າດາຍ

ເພື່ອຈັກ ເອົາພໍ່າລ້ຽງ          ເຈົ້າອ່ອນບຸດຕາ
ຫລອນວ່າ ບຸນບາຫລາຍ          ຈ່ອງຈູງກັນຂຶ້ນ ບໍ່ຮູ້
ຫລອນວ່າ ບຸນມີໄດ້          ທົ່ງເມືອງສເວີຍຣາດ
ຈັກໄດ້ ຕູ້ມໄພ່ຟ້າ          ເມືອງບ້ານໃຫ້ຊຸ່ມເຢັນ

ແຕ່ນັ້ນ ຍັງມີ*ກະກູນ*ເຊື້ອ          ຊາວເມືອງຖ້ານຕ່ຳ
ມັນກໍ ອອກລູກນ້ອຍ          ວັນນັ້ນແມ່ນຍາມ
ຊື່ວ່າ ອູດທັງຣາຊາແທ້          ວັນດີ*ອຸຕະມະ*ໂຊກ
ເຂົາກໍ ວາງລູກນ້ອຍ          ຖວາຍເຈົ້າບໍ່ຂືນ

ເອົາໃຫ້ ເມືອພໍ່າລ້ຽງ          ນາມໜໍ່ອົງກະສັດ
ຫລອນວ່າ ບຸນບາມີ          ໃຫຍ່ສູງສອນໜ້າ
ຖັດນັ້ນ ຝຸງຄົນໃຊ້          ນຳເມືອຖວາຍຣາດ
ພຣະບາດທ້າວ          ເຫັນແລ້ວຊື່ນຊົມ

ກໍຈຶ່ງ ໄດ້ລູກນ້ອຍ          ນາມໜໍ່ສອງຊາຍ
ຮອບວ່າ ບຸນຂາຫລາຍ          ຊ່ອຍຊູຄູນຄ້ຳ
ອັນວ່າ ຣາຊາທ້າວ          ພຣະຍາຫລວງຊ້ອຍຊື່ນ
ເຈົ້າກໍ ຮັກລູກນ້ອຍ          ສອງທ້າວເກົ່ງກັນ ແທ້ແລ້ວ

ແຕ່ນັ້ນ ພຣະກໍມີອາດໃຫ້          ຫາແມ່ນົມນາງ
ສົມຄວນຄື          ພາກພຽນສອງທ້າວ

---

ປ່າວຄ້ອງ = ຕີຄ້ອງປະກາດຫາ / ບຸດຕາ (ປລ ປຸຕຕ) = ລູກຊາຍ (ປລ ປຸຕຕີ = ລູກຍິງ) / ກະກູນ (ປລ ກະກູລ) = ສາຍເຊື້ອ, ໂຄດວົງ, ຕະກູນ / ອຸຕະມະ (ປລ ອຸຕຕມ) = ອຸດົມ, ເລີດ, ຍິ່ງ

ເງິນຄຳແກ້ວ ປົງປະທານບໍ່ໄດ້ຍາກ
ໃຫ້ເຂົາ ລ້ຽງອ່ອນນ້ອຍ ສອງເຈົ້າໃຫ້ໃຫຍ່ສູງ ນັ້ນເນີ

ແຕ່ນັ້ນ ຍັງມີເສນານ້ອຍ ເປັນຂຸນກວານສືບ
ເມັຽມັນ ອອກລູກນ້ອຍ ຜິວແກ້ວປິ່ນປົວ
ເມັຽກໍ ມົວນອນແທ້ ເຕັງເສັຽລູກອ່ອນ
ສອງຈຶ່ງ ເອົາທ່ອນທ້າວ ມາລ້ຽງສືບນົມ
ກໍຫາກແມ່ນ *ສິທະນົນໄຊ*ນ້ອຍ ເຜຍາດີນ້ອງພຣະບາດ
ສອງແຈ່ມເຈົ້າ ພຽນລ້ຽງໃຫຍ່ມາ

ຍາມເມື່ອ ສັງຂານຂ້າມ ສາມປີນ້ອງເກີດ ມານັ້ນ
ບາບ່າວທ້າວ ພໍໄວ້ຢູ່ເຮືອນ
ຍາມເມື່ອ ສອງຂາເຂົ້າ ໄປມາຖາງໄຮ່
ຍັງແຕ່ ສອງອ່ອນນ້ອຍ ນາງທ້າວເບິ່ງກັນ

\>> ແມ່ສັ່ງ ເຈົ້າເບິ່ງນ້ອງ ຢ່າທ່ຽວໄປໄກ ແມ່ເນີ
ຍາມເມື່ອ ລົງເຮືອນໄປ ສັ່ງຄວາມຜາຍຜ້ຽງ
ເຈົ້າຢ່າ ໜີໄກນ້ອງ ຄອຍດູດີມາກ
ຄອຍເບິ່ງນ້ອງ ນາງແກ້ວຢ່າໄລ ແມ່ເນີ

ອັນວ່າ ນົງນາງນ້ອຍ ພໍຍືນຮຽນຍ່າງ
ຄານທ່ຽວຫລິ້ນ ກາງບ້ານຢູ່ດິນ
ກໍຫາກ ໝອງມົວເປື້ອນ ເທົ້າທົ່ວທັງຄີງ
ທັງ*ອາຈົມ* ເກືອກຂີ້ດິນມຸມເມົ້າ
ມັນກໍ ໄດ້ແຕ່ຈ້ອງ ນຳເບິ່ງນາງໄປ
ຄານຕາມດິນ ຮ່າງຄີງເປີະເປື້ອນ
ແມ່ນວ່າ *ອານົງ*ນ້ອງ ໄປໃສມີແຕ່ເບິ່ງ
ແມ່ນຊິ ຂີ້ຮາດເປື້ອນ ເຕັມກົ້ນກໍຊ່າງມັນ

---

ສິທະນົນໄຊຖືກນຳມາລ້ຽງພໍ່າ (ຄູ່ກັບ) ກັບລູກພຣະຍາ ໂດຍມອບໃຫ້ຂຸນກວານນອກວັງລ້ຽງ ຂຸນກວານມີລູກນ້ອຍຊຶ່ງແມ່ນອນທັບຕາຍ ໄດ້ລູກສາວໃໝ່ກາຍມາເປັນນ້ອງຮັກຂອງສິທະນົນໄຊ / ອາຈົມ (ປລ ອາຈມ) = ຂີ້ / ອານົງ ອະນົງ ນົງ = ນາງ, ນາງງາມ, ນ້ອງສາວ

ຕົກບ່າຍ *ມານດາ*ເຈົ້າ　　ຄືນເຮືອນກັບຕ່າວ ມານັ້ນ
ເຫັນອ່ອນນ້ອຍ　　ນາງແກ້ວໝິ່ນໝອງ
ແມ່ກໍ　ຕີອົກຮ້ອງ　　ສາຍໃຈເຈົ້າແມ່ ກູເຮີຍ
ສັງວ່າ　ປະປ່ອຍນ້ອງ　　ໝອງມົ້ວທົ່ວຄີງ ນີ້ເດ

ຕັ້ງວ່າ　ຂີ້ແປດເປື້ອນ　　ເຕັມທົ່ວທັງຕົວ
ທັງຕີນຜົມ　　ເກີດເປັນຜາງຮ້າຍ
ເຈົ້າສັງ　ໄລລານ້ອງ　　ໄປມາສັງບໍ່ເບິ່ງ
ຢ້ານໝູ່　ສັດສິ່ງຊ້າງ　　ຄວາຍມ້າຢຽບຕຳ ນ້ອງແລ້ວ

ເມື່ອນັ້ນ　ທ້າວກ່າວຕ້ານ　　ຈາແມ່ຂານຄວາມ
*ເຈົ້າຫາກ ສອນເຮົາແຍງ*　　*ເບິ່ງແລແນມນ້ອງ*
*ແທນທີ່ ມານດາເຈົ້າ*　　*ຄຳຄວນບົນບອກ*
*ຂ້ອຍຊິ　ຈຳຈື່ໄວ້*　　*ຄຳໝັ້ນແມ່ສອນ ນັ້ນແລ້ວ*

ພໍເມື່ອ　ວັນຮຸ່ງເຊົ້າ　　ສອງຈັກພາກພອຍໄກ
ກໍຈຶ່ງ　ສອນບາຄານ　　ຄູ່ອັນຄຳໝັ້ນ

*ຄັນວ່າ　ນ້ອງຫາກຫລິ້ນຫລາກຮ້າຍ ກົ້ວຝຸ່ນອາຈົມ*
*ຕີນຕົວໝອງ*　　*ໃຫ້ສວ່າຍສີສົງລ້າງ ແມ່ເນີ*
*ແມ່ນວ່າ ຂີ້ແປດເປື້ອນ*　　*ໃຫ້ລ້າງສວ່າຍສີໝົດ*
*ຢ່າໃຫ້　ມີມາຕິດ*　　*ແປດຄີງຄາວເນື້ອ*

ບາກໍ　ເອີເອີເວົ້າ　　ໂດຍຄວາມພໍ່ແມ່
ຂ້ອຍຊິ　ຈຳຈື່ໄວ້　　ເມືອໜ້າບໍ່ລືມ ດອກນາ

ຄັນວ່າ　ເຈົ້າລ້າງແລ້ວ　　ໃຫ້ຕູມຫົ່ມຜືນ*ແຄງ* ແມ່ເນີ
ໄກວນາງເສັ່ງ　　ກ່ອມນອນໃນຫ້ອງ
ເຈົ້າຢ່າ　ເດີນໄປຫລິ້ນ　　ໄກເຮືອນນ້ອງຊິຕື່ນ
ໃຫ້ເຈົ້າ　ເນົາຢູ່ຫ້ອງ　　ດອມນ້ອງຢ່າໜີ ແມ່ເນີ

---

ແຄງ = ແຜ່ນແພຖື, ຜ້າຖື / ສາຍ (ລກ) = ສວາຍ, ສວຍ (ບາງທ້ອງຖິ່ນ) = ເວລາກາງເວັນ / ມານດາ (ປລ ມາຕາ) = ແມ່ (ບິດາ, ບິດອນ, ບິຕຸ ປລ ປິຕາ, ປິຕຣ, ປິຕຸ = ພໍ່)

ສອງສັ່ງແລ້ວ ລົງຈາກເຄຫັງ
ຍັງແຕ່ *ສິທະນິນໄຊ* ຢູ່ເຮືອນດູນ້ອງ
ພໍສາຍຂຶ້ນ ຕາເວັນເຖິງທ່ຽງ ມານັ້ນ
ນາງນາດນ້ອຍ ຕົນກົ້ວເກືອກດິນ

ຕົນໂຕ ຮວາດຫຍ່ຽວຂີ້ ຕິດແປດເຕັມຄີງ
ບາຄານໂຊມ ສວ່າຍສີສົງລ້າງ
ຄຳແມ່ ສອນສັ່ງໃຫ້ ລ້າງເຫື່ອສີໃຄ
ໃນພຸງນາງ ແຫກນຳແນວເປື້ອນ

ທ້າວກໍ ແຫກໃສ້ນ້ອງ ລ້າງສວ່າຍສີໝົດ
ແລ້ວຈຶ່ງ ເອົາຜືນແຄງ ຫົ່ມນາງກວມຕູ້ມ
ອັນວ່າ ນົງນາງນ້ອຍ ຕາຍໄປລົດຊົ່ວ
ເຫດວ່າ ບາບ່າວທ້າວ ໄລລ້າງຕ່າງຄົນ ແທ້ແລ້ວ

ບາກໍ ໃສ່ອູ່ແກ້ວ ແລ້ວກ່ອມນາງນອນ
*ນອນຊາເນີ ແມ່ໄປໄຮ່ ຈິ່ໄກ່ມາຫາ*
*ແມ່ໄປນາ ຈິ່ປາມາປ້ອນ*
*ແມ່ລ້ຽງມ້ອນ ເກັບມອນມາສິ່ງ*
*ເຈົ້າຢູ່ບ້ານ ນອນຖ້າແມ່ຊິມາ*

*ນອນດີເນີ ເຈົ້າຜູ້ຮູ້ ນອນອູ່ສາຍໄໝ*
*ພີ່ຊິ ເປັນຄົນໄກວ ນອນດີຢ່າໄຫ້*
*ແມ່ໄປໄຮ່ ຍັງບໍ່ທັນມາ*
*ແມ່ໄປນາ ຍັງບໍ່ທັນຮອດ*
*ອອດຫລອດເນື້ອ ນອນຫລິ້ນພີ່ຊິໄກວ*

ບາກ່ອມແລ້ວ ໄກວຢູ່ມີເຊົາ
ພໍເມື່ອ ວັນສູນແສງ ຄ່ຳແລງລົງໄມ້
ພໍ່ແມ່ ຄືນຫາຫ້ອງ ເຮືອນຕົນຟ້າວຟັ່ງ
ກໍບໍ່ ເຫັນລູກນ້ອຍ ມາຕ້ອນລັດທາງ

| | |
|---|---|
| ແຕ່ນັ້ນ ກຸມມານເຈົ້າ | ບຸດຕາຕົນພີ່ |
| ຕ້ານຕໍ່ເຈົ້າ | ສອງເຖົ້າຜໍ່ຟັງ |
| ອັນວ່າ ນ້ອງແອ່ວໄຫ້ | ຂີ້ຍ່ຽວເຕັມຕົວ |
| ຂ້ອຍກໍ ກົວມານດາ | ດ່າຕີຕົນຂ້ອຍ |
| ຂ້ອຍຈຶ່ງ ສະສວ່າຍລ້າງ | ຂີ້ຍ່ຽວຈົນໝົດ |
| ແລ້ວຈຶ່ງ ເອົານາງນອນ | ອູ່ເປໄກວໂຫຍ້ນ |
| ກໍຫາກາ ດົນນານແລ້ວ | ນາງຄານບໍ່ທັນຕື່ນ |
| ຂ້ອຍກໍ ໄກວອູ່ໄວ້ | ຊານຖ້າແມ່ມາ ນີ້ແລ້ວ |
| ແມ່ກໍ ເອີເອີເອົ້າ | ຄຳດີດອນລູກ |
| ແມ່ບອກໃຫ້ | ຍັງຮູ້ສູ່ອັນ ແມ່ນໍ |
| ແມ່ກໍ ໄປເບິ່ງນ້ອຍ | *ທາຣະກາ*ໃນອູ່ |
| ເຫັນແຕ່ ເລືອດແປດຍ້ອຍ | ທັງໃສ້ເຮັ່ງຮວຍ |
| ແມ່ກໍ ເຊທ່າວລົ້ມ | ເຕັງບ່ອນກາງສະນອນ |
| ຄອນຄອນສລົບ | ຫລູດໃຈຕາຍມ້ອຍ |
| *ຍັງເລົ່າ ກົວເກາຍ້ານ* | *ສົມພານພູວະນາດ* |
| *ຕົນຫາກາ ເປັນແມ່ລ້ຽງ* | *ພຽງຂ້າໄພ່ເມືອງ ແທ້ແລ້ວ* |
| ປາກກໍ ປາກບໍ່ໄດ້ | ແຄ້ນຢູ່ໃນໃຈ |
| ຄຶດຈັກ ທູນຣາຊາ | ບໍ່ໃຊ່ການຊິໄປໃກ້ |
| ສອງກໍ ຟາຍນ້ຳຕາໄຫ້ | ນຳນາງນ້ອຍອ່ອນ |
| ສລົບທ່າວລົ້ມ | ຫລົງເນື້ອນັ່ງຊົງ ແທ້ແລ້ວ |
| >> ແຕ່ນັ້ນ ບາຄານໄດ້ | ຫລາຍປີເຕີບໃຫຍ່ ມາແລ້ວ |
| ພໍຫລີ້ນໄດ້ | ຕີບ້າຄ່ວງຄີ |
| ບັດນີ້ ພໍ່ກ່າວຕ້ານ | ລົງຄ່ວງສນາມຫລວງ |
| ເຈົ້າຈົ່ງ ໄປນຳຕົນ | ພໍ່ຕົນວັນນີ້ |

---

ທາຣະກາ, ທາຣິກາ (ປລ ທາຣກ) = ແອນ້ອຍແມ່ຍິງ (ທາຣົກ = ແອນ້ອຍຜູ້ຊາຍ /

ສົມພານ (ປລ ສັມພາຣ) = ບຸນທີ່ໄດ້ສະສົມໄວ້ແຕ່ຊາດກ່ອນ

ລູກຈິ່ງ ຖືຕວຍຕ້ອນ ຂັນຄຳນຳພໍ່ ລູກເຮີຍ
ເມື່ອນັ້ນ ບຸດຕະຣາດນ້ອຍ ບາທ້າວແຕ່ງຕົວ

ພໍ່ກໍ ປະດັບຫ້າງມ້າ ຄາດເຄື່ອງ*ອາຊາໄນ*
ນຳທາງໄປ ຮອດສນາມເຊີາມ້າ
ຫລຽວຫາທ້າວ ບາຄານນຳພໍ່
ກໍບໍ່ ເຫັນແຈ່ມເຈົ້າ ບາທ້າວແລ່ນນຳ

ບາຄານອູ້ມ ຂັນຄຳນຳພໍ່
ເມີນຜໍ່ຢ້ຽມ ເໜືອໃຕ້ໄປ່ເປືອງ

ຍ່າງຕູ້ເຕື້ອຍ ຍາມເມື່ອວັນສາຍ
ພໍ່ກໍ ຄອງຫາຫລາຍ ບໍ່ມາເຢັນຈ້ອຍ
ພໍ່ກໍ ຫີວໝາກຄ້ຽວ ຫລຽວລ່ຳນຳທາງ
ຜໍ່ແນມ ນຳບຸດຕາ ທີໃດເຢັນຈ້ອຍ

ຈົນກວ່າ ຍາມຕູດຍ້າຍ ບາເລົ່າມາເຖິງ
ກໍຈຶ່ງ ຍໍຂັນຖວາຍ ພໍ່ຕົນມີຊ້າ
ພໍ່ກໍ ຍິນດີຄ້ຽວ ສລາຄຳໝາກອ່ອນ
ຊະຊອນໜ້າ ຊຸນທ້າວຢູ່ສະບາຍ

ພໍເມື່ອ ຈວນຄ່ຳຄ້ອຍ ຫ້າງເຄື່ອງອານຄຳ
ບາຄານນຳ ພໍ່ຕົນເມືອບ້ານ
ພໍຈຶ່ງ ຈາກ່າວຕ້ານ ຈາລູກທັງກະສັນ
ເຈົ້າຫາກ ໄປນຳທາງ ບໍ່ທັນຕີນມ້າ
ພໍ່ກໍ ຄອງຄອຍໜ້າ ນຳບາຂັນໝາກ
ກໍຫາກ ອຶດໝາກຄ້ຽວ ຈົນຄ້າຍຈຶ່ງເຖິງ
*ບັດນີ້ ເຈົ້າຢ່າຊ້າ ນຳພໍ່ເຮວພະລັນ ແທ້ເນີ*
*ໃຫ້ເຈົ້າ ໄປນຳທັນ ຢ່າວາງຕີນມ້າ*
*ບາຄານທ້າວ ຂານຄຳຮັບຮີບ*
*ຂ້ອຍຊິ ເດີນຖີບແທ້ ທັນມ້າພໍ່ຕົນ ນັ້ນແລ້ວ*

---

ອາຊາ (ປລ ອາຊາ) = ມ້າ / ອາຊາໄນ (ສສ ອາຊາເນຍຍ) = ມ້າທີ່ຝຶກແອບມາດີແລ້ວ

ພໍເມື່ອ ວັນລຸນທ້າງ ອາຊາໄນທົງເຄື່ອງ
ມ້າກໍ ເຫາະຫອບເຕັ້ນ ໄປໜ້າວ່ອງໄວ
ທ້າວກໍ ປີບປ່ວງຟ້າວ ເຕັ້ນແລ່ນນຳຫລັງ
ຕາມດັ່ງ ບິດາສອນ ເລັ່ງຕີນຕາມສິ້ນ

ມ້າແລ່ນແລ້ວ ທ້າວແລ່ນນຳຫລັງ
ຂອງພັງຕົກ ຈາກຂັນໝົດກ້ຽງ
ພູພັນໝ້ຽງ ປູນຢາໝົດທຸກສິ່ງ
ບໍ່ເຫລືອສັງ ຢູ່ຄ້າງ ຕົກຖິ້ມເຮັ່ຽຮວາຍ

ພໍໄປ ເຖິງຂ່ວງກວ້າງ ສນາມໃຫຍ່ເຊົາພັກ
ພໍ່ກໍ ດູອັນໃດ ບໍ່ມີພໍນ້ອຍ
ເຈົ້າຫາກ ເອົາໄປຖິ້ມ ທາງໃດໝົດອ່ອຍທ່ອຍ
ຫລືວ່າ ເຫຖອກຖິ້ມ ເສັຽແທ້ທີ່ໃດ ນັ້ນເດ

ບາຄານທ້າວ ຖແລງຄຳຂານຕອບ
*ຂ້ອຍກໍ ປີບແລ່ນເຕັ້ນ* *ນຳມ້າຢ້ານບໍ່ທັນ*
ກໍຫາກ ຕົກຜຍາແທ້ ຊຸນຫລວງອິດຢາກ
ອຶດໝາກຄ້ຽວ ວັນນັ້ນຄ່ຳດາຍ

ກໍບໍ່ ທັນຜຍາທ້າວ ກຸມມານນ້ອຍອ່ອນ
ຮ້າຍບໍ່ໄດ້ ກົວຢ້ານອາດຍາ

ຊຸນກໍ ອຶດເອົາໄວ້ ພໍຄ່ຳເດີນທາງ
ມາເຖິງເຮືອນ ເມື່ອຍແຄນຄາງໂອ້ຍ
ວັນນີ້ ບາຄານທ້າວ ວາງໄປເສັຽພໍ່
ກໍຫາກ ອຶດໝາກຄ້ຽວ ທັງມື້ສະແນ່ງຕາຍ ແທ້ແລ້ວ

ຂອງໝູ່ນັ້ນ ທ້າວແລ່ນຕົກເສັຽ
ບາບໍ່ ເອົາໄປນຳ ກໍບໍ່ມີສັງຄ້ຽວ
*ເຖິງເມື່ອ ວັນລຸນຊ້ຳ* *ເຕີນບານ້ອຍອ່ອນ*
*ວັນນີ້ ເຈົ້າຢ່າຊ້ຳ* *ນຳສິ້ນຢ່າວາງ ພໍ່ເນີ*

*ອັນໃດ ຕົກລົງພື້ນ ບາຄານໃຫ້ເກັບໃສ່*
*ຢ່າໄດ້ ປະລະໄວ້ ເຫັນແລ້ວໃຫ້ຮີບເອົາ ພໍ່ເນີ*

ແຕ່ນັ້ນ ພໍ່ກໍສິກຂຶ້ນມ້າ ທ້າວແລ່ນນຳຫລັງ
ພັນທະນັງນຳ ບໍ່ໜີຕີນມ້າ
ຂອງສະເດັນຟົ້ງ ຕົກລົງເກັບໃສ່
ບາບໍ່ໄວ້ ຍໍມ້ອນໃສ່ຂັນ

ພໍໄປ ຮອດຂ່ວງມ້າ ສນາມຈອດເຊົາພັກ
ບາກໍຍໍສລາ ຍື່ນໄປມີຊ້າ

ພໍ່ກໍ ເຫັນຂີ້ມ້າ ເດັ່ງຣະດາດເຕັມຂັນ
ແກມພູພັນ ໝາກຄຳເໜັນເອົ້າ
ພໍ່ກໍ ເບືອນບິດໜ້າ ຍິນອາຍພວກໝູ່
ຂຸນກໍ ເທທອດຖິ້ມ ອາຍພື້ນເພື່ອນຫົວ

ເປັນທີ່ ເຫລືອໃຈແທ້ ບາຄານເຮັດບາບ
ຂັນຂີ້ມ້າ ເໜັນເອົ້າທົ່ວສນາມ
*ທ້າວກໍ ທຳຕາມຂໍ້ ບິດາບົນບອກ*
ພໍ່ກໍ ອຶດໝາກຄ້ຽວ ວັນນັ້ນສະແມ່ງຕາຍ

ຄຶດຖີ່ແທ້ ກໍຫາກແມ່ນຄວາມບາ
ກໍບໍ່ ຄວນໂກທາ ຄຽດເຄັ້ມບາທ້າວ
ໂຕຫາກ ເຄີຍຄຳເວົ້າ ຈາໄປບໍ່ຖ້ອນຖີ່
ທ້າວກໍ ທຳຖືກແທ້ ຕາມເຈົ້າພໍ່ສອນ

>> ບັດນີ້ ບາຄານໄດ້ *ເຈັດປີ*ແຖມຖ່າຍ ມາແລ້ວ
ຄວນທີ່ ຍົກທໍ່ທ້າວ ຄືນໃຫ້ພໍ່ພຣະຍາ ແທ້ແລ້ວ

ພໍ່ຈຶ່ງ ຈາກ່າວຕ້ານ ດອມອ່ອນກຸມມານ
ພໍ່ຈັກ ເອົາບາຄານ ຂາບຖວາຍວັນນີ້
ໃຫ້ເຈົ້າ ທົ່ງຜືນຜ້າ ແປງກະບວນໃຫ້ມັນຄ່ອງ
ທັງເກດເກົ້າ ດຳກ້ຽງລູບມັນ ພໍ່ເນີ

ຄ້ອມວ່າ ບາແຕ່ງແລ້ວ    ທຸກສິ່ງບໍຣະບວນ
ຕັ້ງຫາກ ສອຍວອຍສຸດ    ດັ່ງອິນລົງແຕ້ມ
ແສນແວນໜ້າ    ແຂນແພນເນື້ອອ່ອນ
ງາມອ້ອຍຊ້ອຍ    ໂສມນ້ອຍລູກພຣະຍາ

ເອ້ອວດຍ້ອງ    ດູຄ່ອງສົມພຣະຍາ
ບິດາ ທັງມານດາ    ແທ່ເມືອໂຮງກວ້າງ
ເຖິງສະຖານຫ້ອງ    ທໍຄຳຢຳຂມ່ອມ
ພຣະບາດເຈົ້າ    ເຫັນນ້ອຍອຸ່ນໃຈ

*ພຣະກໍ ຊວງກອດອູ້ມ*    *ເອົາແທບທຸງມເພົາ*
*ແພງກຸມມານ*    *ເກິ່ງກັນສອງນ້ອຍ*
*ຕັ້ງຫາກ ກຸນເກືອເນື້ອ*    *ທັງສອງສເນີພາກ ກັນແລ້ວ*
*ພຣະກໍ ຮັກຍິ່ງພຸ້ງງ*    *ໂດຍດ້ານລູກຄີງ ແທ້ແລ້ວ*

ພຣະກໍ ຮັກອ່ອນນ້ອຍ    ປຸນເກີດກາງອົກ
ຫອມຫຸມແພງ    ເກິ່ງສເນີສອງທ້າວ
ສອຍວອຍໜ້າ    ດວງຕາໃສສ່ອງ
ສອງຝ່າຍແກ້ມ    ແດງເຂັ້ມດັ່ງຄຳ

ພຣະຈຶ່ງ *ປົງປະທານ*ໃຫ້    ຜືວເນັ່ງລັ່ງງອ່ອນ
ມີທັງ ເທທ່ອນຜ້າ    ເງິນເບັ້ງຕອບຄຸນ
ຍາມເມື່ອ ສັງຂານຂ້າມ    *ຣະດູ*ປີແຖມຖ່າຍ ມາແລ້ວ
ສອງອ່ອນນ້ອຍ    ສອນໜ້າໃຫຍ່ສູງ

*ສິບເຈັດຂວບເຂົ້າ*    ສເນີຫລໍ່ *ໂສມ*ງາມ
ຫູຕາຄົມ    ຄ່ງນສເນີຕາເນື້ອ
ສົມສີສ້ອຍ    ທັງສອງສນິດ*ຮູບ*
ພໍ່ກໍ ຄິດຕໍ່ເຈົ້າ    ຊິຍໍນ້ອຍນັ່ງເມືອງ

---

ປົງປະທານ = ຕົກລົງໃຈມອບໃຫ້ / ຣະດູ (ປລ ອຸຕຸ , ສສ ຣິດູ) = ສ່ວນນຶ່ງຂອງປີ, ສໄມ, ຄາວ, ເວລາທີ່ເໝາະ / ໂສມ ໃນທີ່ນີ້ ຮ່າງກາຍ, ຊວດຊົງ, ຮູບຮ່າງ / ຮູບ (ປລ ສສ ຮູປ) = ຕົວຢ່າງ, ເຄົ້າໂຄງ, ສິ່ງທີ່ປະກົດແກ່ຕາ

\>> ອັນວ່າ  ບຸນເຮືອງເຈົ້າ  ບິດາຕົນປະເສີດ
ກໍຫາກ  ດູແກ່ເຖົ້າ  *ຊະຣາ*ລ້ຳລ່ວງເຖິງ

ຄຶດໄຄ່  ໃຫ້ອ່ອນນ້ອຍ  ທົງແທ່ນແທນເມືອງ
ໄຄ່ຈັກ  ຍໍກຸມມານ  ສືບເມືອງແທນເຊື້ອ

ພຣະຈິ່ງ ໃຫ້ປ່າວຄ້ອງ  ເຕີນໝູ່ເສນາ
ທັງຊາວເມືອງ  ຊູ່ຄົນພຽງພ້ອມ
ທຸກທົ່ວ  ຂົງເຂດກວ້າງ  ນະຄອນຫລວງທັງເທດ
ປວງຊົນ  ພົນໄພ່ຟ້າ  ຮອມຮູ້ປ່າວເຖິງ

ແລ້ວເລົ່າ  ໃຊ້ຖືບມ້າ  ເຖິງຂອບໂຂງເມືອງ
ເຂົາກໍ  ນອງເມືອງໄຫລ  ຫລັ່ງມາເມືອງກວ້າງ

ໂຮມຂ່ວງຄຸ້ມ  ສນາມໃຫຍ່ພາຣາ
ຫລວງຫລາຍແສນ  ຄັ່ງພະລານພໍລ້ານ
ແຕ່ນັ້ນ  ພຣະຍາຕ້ານ  ເຕືອນສັ່ງເສນາ
ໃຫ້ຮີບ  ແປງລິນຄຳ  ແຕ່ງຫໍສົງນ້ຳ

ກັບທັງ  ປູກກ້ວຍອ້ອຍ  ກັ້ງຮົ່ມບັງບົດ
ຄົນຫລວງຫລາຍ  ມືດມົວມາເຝົ້າ
*ເສດຕະສັດ*ຕັ້ງ  ທຸງໄຊເດ່ງລະດາດ
ພິນພາດຄ້ອງ  ຕີຕ້ອງສນັ່ນເມືອງ

ມຽງມຽງເຫລື້ອມ  ປະຄືແກວ່ງໄກວລົມ
ໂຫມໂຫມສຽງ  ເສບງັນລະບຳຫລິ້ນ
ຍາມດີແລ້ວ  ພຣະຍາຫລວງສະເດັດດ່ວນ
ນ້ຳດອກໄມ້  ຈັນທະຄູ້ໃສ່ຂັນ

ທຽນເຍືອງໄຕ້  ແສງໃສ*ສຸຣິເຍດ*
ມະຫາຣາດເຈົ້າ  ຂັນນ້ຳໂສດສົງ

---

ຊະຣາ (ປລ ຊຣາ) = ຄວາມແກ່ເຖົ້າ / ເສດຕະສັດ (ປລ ເສຕສຕຕ) = ຄັນຮົ່ມຂາວ /
ສຸຣິເຍດ ສຸຣິຍາ ສຸຣິໂຍ ສຸຣິຍົນ ສຸຣິຍັນ ສຸຣິຍົງ (ປລ ສຸຣິຍ) = ຕາເວັນ, ດວງອາທິດ

| | | |
|---|---|---|
| | ນ້ຳດອກໄມ້ | ຫອມທົ່ວທັງເມືອງ |
| | ເສນາເມືອງ | ໂສດສົງບາທ້າວ |
| | ເປັນພຣະຍາຂຶ້ນ | ສເວີຍເມືອງແທນພໍ່ |
| | ຮ້ອຍປະເທດທ້າວ | ມາເຂົ້າສ່ວຍໄຮ |
| ບາກໍ | ທົ່ງເມືອງສ້າງ | ຕາມຄອງທົດສຣາດ |
| | ບໍ່ຂາດໄຮ້ | ຝູງຂ້າໄພ່ເມືອງ ເຈົ້າເຮີຍ |
| ບັດນີ້ | ຈັກກ່າວເຖິງຣາຊາເຈົ້າ | ພຣະຍາຫລວງຕົນພໍ່ |
| ພຣະກໍ | ເຖົ້າແກ່ແລ້ວ | ຊະຣາລ້ຳລ່ວງເຖິງ |
| | ໜັງຍານຮ້າຍ | ຫົວຂາວແຂ້ວຫລ່ອນ |
| | ຕາບໍ່ແຈ້ງ | ຫູຊ້ຳບໍ່ໄດ້ຍິນ |
| >> ພຣະຈິ່ງ | ຮຽກອ່ອນນ້ອຍ | ແກ້ວແກ່ນສອງພຣະອົງ ພໍ່ເຮີຍ |
| | ແພງເພົາກູ | ຮີບມາດຽວນີ້ |
| | ສເນຫາສ້ອຍ | ສອງພຣະອົງເຖິງພໍ່ |
| | ແປະແຜ່ນພື້ນ | ຕົນເຈົ້າໃສ່ຫົວ |
| | ນົບນອບນິ້ວ | ທູນບາດອົງກະສັດ |
| | ສອງກຸມມານ | ເນດນອງຍິ້ມຍ້ອຍ |
| ພໍ່ກໍ | ບາຍແຂນນ້ອຍ | ທັງສອງແລ້ວສັ່ງ |
| ເຈົ້າພໍ່ | ຟັງພາກພື້ນ | ກູເຖົ້າຊິສັ່ງສອນ ພໍ່ເນີ |
| ເຈົ້ານີ້ | ລ້ຽງຍາກແທ້ | ໜໍທ່ານທວາຍດູ |
| ພໍ່ຈິ່ງ | ຫາບຸດຕາ | ເກີດອັນດຽວເຈົ້າ |
| | ເອົາມາລ້ຽງ | ນຳກັນກໍຈິ່ງໃຫຍ່ |
| ພໍ່ກໍ | ຫາໄດ້ນ້ອງ | ດຽວນີ້ເກິ່ງກັນ ພໍ່ແລ້ວ |
| *ໃຫ້ຄ່ອຍ* | *ຮັກຮ່ວມນ້ອງ* | *ເທົ້າຊົ່ວຊີວັງ ພໍ່ເນີ* |
| *ຢ່າໃຫ້* | *ທຳປາປັງ* | *ຂ້າຕາຍຕົນນ້ອງ* |
| *ຄັນວ່າ* | *ຜິດພໍຂ້າ* | *ຂໍພອນໃຫ້ເຈົ້າປ່ອຍ* |
| *ຄັນຫາກາ* | *ຜິດແຕ່ນ້ອຍ* | *ຂໍເຈົ້າຢ່າໄດ້ຊາ ພໍ່ເນີ* |

*ໃຫ້ເຈົ້າ ອົດສາລ້ຽງ* *ກະນິດຖາໄວ້ເປັນໝູ່*
*ຂໍໃຫ້ ລ້ຽງນ້ອງໄວ້* *ພໍໃຊ້ຊ່ວງຕີນ ພໍ່ເນີ*

ຄ້ອນວ່າ ພໍ່ສັ່ງແລ້ວ ເລີຍເລົ່າ*ມໍຣະນາ*
ອາວອນເຖິງ ອ່ອນໃຈມໍຣະມ້ວຍ
ເປັນແຕ່ ບຸນຫລັງເຈົ້າ ນຳມາຫລາຍຊາດ
ພຣະກໍ ມໍຣະນາດມ້ຽນ ເມື່ອຟ້າສູ່ສວັນ

ອັນວ່າ ນາງສນົມໜ້າ *ຊົນລະທາ*ຫິວຫອດ
ບໍ່ອາດ ກັ້ນຢູ່ໄດ້ ຫິວໄຫ້ຫອດກະຫາຍ
ທັງເມືອງເຈົ້າ ໂສກາດອມພຣະຣາດ
ພຣະບາດເຈົ້າ ເມືອຟ້າກ່ອນເຮົາ ແລ້ວເດ

ບັດນີ້ ບາຄານທ້າວ ບຸດຕານ້ອງນາດ
ເຈົ້າກໍ ຕັດເກດເກົ້າ ທົງຜ້າແຜ່ນເຫລືອງ

ລົງສູ່ຫ້ອງ ອາຣາມໃຫຍ່ມະຫາສົມ
ໂຫມໂຫມ ຊາວນະຄອນຫລວງ ແຫ່ຈົວປະສົງເອ້
ພຣະກໍ *ເທດສນາ*ໃຫ້ ເອົາສິນອັນປະເສີດ
ງາມເລີດລ້ຳ ຈົວນ້ອຍລູກພຣະຍາ

ເຂົາກໍ ງັນຄາບເຈົ້າ ໄດ້ຂວບເຈັດເດືອນ
ແລ້ວຈຶ່ງ ປົງພຣະເມນຫລວງ ໃສ່ຟືນໄຟມ້າ
ອັກຄີກຸ້ມ ແປວໄຟເຮືອງຮຸ່ງ
ຄວັນຂ່ວຍຂຶ້ນ ເມືອຟ້າຮອດພົມ
ພໍວ່າ ມຸດມອດແລ້ວ ເປັນເຜົ່າຜົງ*ທຸລີ*
*ອັກຄີ*ດັບ ມອດເຢັນຫາຍສ້ຽງ
ບຸດຕຣາດເຈົ້າ ຈອມເກດທັງສອງ
ຮ່ຳໄຮ ໝອງຄວນຄຶດ ຫ່ວງພຣະເມືອງມິເອື້ອນ

---

ກະນິດຖາ (ປລ ກນິຕຖາ) = ນ້ອງ ນິ້ວກ້ອຍ / ມໍຣະນາ (ປລ ມຣນະ) = ຕາຍ, ຄວາມຕາຍ / ຊົນ (ປລ ຊລ, ຊເລ)= ນ້ຳ, ແມ່ນ້ຳ, ນ້ຳຕາ / ເທດສນາ (ປລ ເທສນາ)= ເທດ, ສະແດງທັມ / ອັກຄີ (ປລ ອຄຄິ ສສ ອຄນິ) = ໄຟ / ທຸລີ (ປລ ທຸລີ) ຝຸ່ນ, ໄງ່

ກໍຈຶ່ງ ຫາທາດຕັ້ງ ກວມດູກຣາຊາ
ຄໍາດີສຸກ ພອກງານເຫລືອງເຫລື້ອມ
ຈົວກໍ *ພາວະນາ*ໃຫ້ ເຖິງຄຸນມະຫາຣາດ
ບໍ່ຂາດມື້ ແລງເຊົ້າພໍ່າເພັງ ແທ້ແລ້ວ

ກໍຫາກ *ປົກກະຕິ*ແຫ້ ແທ່ນຄຸນຕົນພໍ່
ກໍບໍ່ ທັນເດືອດຮ້ອນ ພໍສ້າງສືບຮຽນ ເຈົ້າເຮີຍ

\>> ແຕ່ນັ້ນ ຍັງມີມະຫາເຖນເຈົ້າ ສາມອົງອາວາດ
ຢາກໃຫ້ ສາດຕະເພດຮູ້ ຜຍາລໍ້າເລີດດີ
ໃຫ້ໄດ້ອ້ອຍ ເຈັດລໍາມາ*ສູດ*
ໃຫ້ໄປ ສູດໃນຜີປ່າຊ້າ ຈົນແຈ້ງຈຶ່ງສັນ

ຫາກຈັກ ດີເລີດລໍ້າ ຜຍາລົ້ນລື່ນຄົນເຮົາ
ອັນແຕ່ ເຊີງໂວຫານ ບໍ່ອາດຖອງເຖິງໄດ້
*ສົມ*ກໍ ຂົນຂວາຍໃຫ້ ຫາມມາພ້ອມພໍ່າ
ເຖິງເມື່ອ ຍາມຄໍ່າແລ້ວ ສົມເຈົ້າຮຽກເນນ

ເຈົ້າຈິ່ງ ໄປນໍາຂ້ອຍ ຖືສັງໄປຊ່ອຍ ຈົວເຮີຍ
ໄປສົ່ງ ຮອດປ່າຊ້າ ຈົວເຈົ້າກໍຈຶ່ງມາ ທັ້ນຖ້ອນ

ຈົວບໍ່ ຮູ້ຮ່ອມເບື້ອງ ຟ້າຕໍ່າດິນສູງ
ທັງເບົາໜັກ ບໍ່ສ່ອງເຫັນຜຍາເຈົ້າ
ກູຈັກ ໄປນໍາເຈົ້າ ຄູບາຕາງເບິ່ງ ດູຖ້ອນ
ຕາງໃຫ້ ເຫັນເດດເຈົ້າ ຄູເຖົ້າກໍຈຶ່ງຄືນ ແທ້ແລ້ວ

ຈົວກໍ ບາຍເອົາຜ້າ ມາຄຸມຕູ້ມຫົ່ມ
ກົ້ມໜ້າເຂົ້າ ຫາເຈົ້າພໍ່ຄຣູ
ສົມກໍ ບາຍເອົາອ້ອຍ ເຈັດລໍາໃຫ້ຈົວແບກ
ອັນວ່າ ສາມແຈ່ມເຈົ້າ ຖືເຜີ້ງທູບທຽນ

---

ພາວະນາ = ສັງຮວມໃຈຕັ້ງຄວາມປາດຖນາ / ປົກກະຕິ (ປລ ປົກຕິ) = ຄວາມຢູ່ສເມີເກົ່າ /
ສູດ (ປລ ສຸຕຕ) = ກ່າວຄໍາປາລີຂຶ້ນພ້ອມກັນ / ສົມ (ປລ ສມນ) = ຜູ້ສງົບ, ນັກບວດ

ຄັນວ່າ ເຖິງປ່າຊ້າ ແລ້ວແຕ່ງ*ບໍຣະບວນ*
ຄວນຄວນເນນ ສູດ*ຄາຖາ*ໜ້ອຍ
ກໍຫາກ ດົນນານລ້ຳ ອຶດຫິວດູເມື່ອຍ
ສົມຈິ່ງ ຖາມແກ່ນແກ້ວ ຈົວນ້ອຍສິດຕົນ

ຈົວເຮີຍ ຍັງຊິພໍຢູ່ໄດ້ ຄືນຮຸ່ງອົດນອນ ໄດ້ບໍ?
ຕູຈັກ ເມືອອາຮາມ ມອບເນນພອຍເຝົ້າ
ໃຫ້ເຈົ້າ ຟັງສຽງຄ້ອງ ສຽງຣະຄັງດັງມ່ອນ
ໃຫ້ຮີບ ຖົກຖອດອ້ອຍ ເມືອຖ້ອນຢ່ານານ ທ່ຽວເຖີ້ນ

ໃຫ້ເອົາ ໄປປ່ອຍໄວ້ *ກຸດິ* ໃຫຍ່ຫລັງແຈ ນັ້ນເນີ
ຢ່າໃຫ້ ຄົນມາເຫັນ ຊິລັກກິນເສັ່ງສັ້ງ
ອັນນີ້ ເປັນຜຍາແກ້ວ ຂອງດີບັງເກີດ ຈິງແລ້ວ
ຄັນວ່າ ເນນຫາກອົດຢູ່ໄດ້ ຊິປັນໃຫ້ບໍ່ແພງ ດອກນາ

ເນນກໍ ຄຶດຢາກໄດ້ ມາຕື່ມຜຍາຕົນ
ກໍຈິ່ງ ອົດ*ຂັນຕິ* ຢູ່ເອົາຈົນໄດ້
ພໍເມື່ອ ສຸຣິໂຍຂຶ້ນ ເຂົາທອງໃກ້ຊິຮຸ່ງ
ເນນກໍ ແບກໄດ້ອ້ອຍ ເລີຍຟ້າວຕ່າວຄືນ

ຂຶ້ນສູ່ຫ້ອງ ກຸຕິໃຫຍ່ມະຫາຄຣູ
ດູດັ່ງ ສວາຍພໍງາຍ ຮີບໄປເດີເຈົ້າ
ເນນກໍ ຫິວນອນແທ້ ໝົດຄືນຈົນສວ່າງ
ພໍວ່າ ມາຮອດແລ້ວ ເນນແກ້ວກໍເລົ່ານອນ

ສົມກໍ ສວ່າຍໜ້າແລ້ວ ມ້ວນປາກສີຟັນ
ກໍຈິ່ງ ພາກັນໄປ ສູ່ອາຮາມຫາອ້ອຍ
ແລ້ວເລົ່າ ພາກັນຄ້ຽວ ກິນເສັ້ງໝົດອ່ອຍຫ່ອຍ
ບໍ່ໄດ້ ຄຶດຮອດນ້ອຍ ເນນເຝົ້າຕັ້ງແຕ່ແລງ

---

ບໍຣະບວນ (ປລ ປະຣິປຸນນ) = ເຕັມ, ຖ້ວນ, ສຳເຣັດ / ຄາຖາ (ປລ ຄາຖາ) = ເວດມົນທີ່ຖືວ່າສັກສິດ / ຂັນຕິ ຂັນຕິ (ປລ ຂນຕິ) ຄວາມອົດທົນ ອົດກັ້ນຕໍ່ສິ່ງບໍ່ພໍໃຈ

| | | |
|---|---|---|
| | ເຈັດລຳສ້ຽງ | ກິນເສັ້ງບໍ່ມີຈີ່ງ |
| | ເຫລືອແຕ່ຂີ້ | ວາງໄວ້ໃຫ້ແກ່ເນນ |
| | ຈົວຕື່ນແລ້ວ | ເລີຍເລົ່າມາຫາ |
| ກໍບໍ່ | ເຫັນທາງໃດ | ຖ່ອງລຳພໍປ້ອງ |
| ກໍຫາກ | ເຫັນແຕ່ຂີ້ | ກອງກັນຂີນໄຂວ່ |
| ເນນກໍ | ເກັບຂີ້ອ້ອຍ | ມາແລ້ວເລົ່າກິນ |
| ເນນກໍ | ເກັບເອົາຂີ້ | ກິນໄປຕາມປະເພດ |
| ເຫດວ່າ | ພຣະຫາກກິນແຕ່ປ້ອງ | ເຫລືອຂີ້ແກ່ເນນ |
| *ເນນກໍ* | *ອົດສາກັ້ນ* | *ເກັບກິນທັງຈົ່ມ* |
| *ເພິ່ນຫາກ* | *ກິນແຕ່ປ້ອງ* | *ວາງຂີ້ແກ່ກູ* |
| *ຜຍາກໍຫາກ* | *ຂັງຢູ່ຂີ້* | *ເນນກິນກໍພໍແມ່ນ ແທ້ນໍ* |
| *ສົມຫາກ* | *ກິນແຕ່ປ້ອງ* | *ວາງຂີ້ບ່ອນຜຍາ* |
| *ກໍຫາກ* | *ເສັ້ງແຮງເຈົ້າ* | *ສາມອົງໄປສູດ* |
| *ແລ້ວເລົ່າ* | *ສັນແຕ່ປ້ອງ* | *ຜຍາຊ້ຳບໍ່ມີ ແລນໍ* |
| ເນນຫາກ | ສັນຂີ້ອ້ອຍ | ຜຍາເກີດເຫລືອຫລາຍ |
| ພໍເມື່ອ | ກາຍສາມວັນ | ຈຶ່ງຖາມພຣະຄຣູເຈົ້າ |
| ຈົວກໍ | ໄປຖາມໄຫວ້ | ຄູບາກັບໂຈດ |
| ຕາມແຕ່ | ຄວາມຄຶດຮູ້ | ຜຍານ້ອຍແຫ່ງຕົນ |

**>>** ຄູບາເຮີຍ

| | | |
|---|---|---|
| ບິດວ່າ | *ເຫດັງວາ* | ແມ່ນສັງຈິງແທ້ |
| ກັບທັງ | *ຊາໂຕພ້ອມ* | *ຄຸຊະຣາ ຊີຊົ່ວ* |
| ອັນນຶ່ງ | *ສິງຄາວາ* ວ່ານີ້ | ໃຫ້ແປຖ້ອນພໍ່ຄຣູ |
| ອັນນຶ່ງ | *ຈັດຕາໝັ້ນ* | *ທຸທິຕາ*ໃຫ້ແປອອກ |
| ກັບທັງ | *ແປະແປະຊ້ອນ* | *ປະປະຫລາຍບາດ* |
| ຈັກວ່າ | ໄດ້ແມ່ນແມ້ງ | ໃຫ້ແປຖ້ອນພໍ່ຄຣູ |

ເມື່ອນັ້ນ ເຈົ້າກໍສິງລຶງໜ້າ ຄຶດຄຽດລຶງຕຶງ
ແນມຕາກັນ ຄຶດງຶງແລຈ້ອງ
ຈົວນີ້ ມາຖາມສົ້ ຄຳບໍ່ເຄີຍແປກຕ່າງ
ມັນຮ່າວຮູ້ ໄປໄດ້ແຕ່ທີ່ໃດ ນີ້ເດ

ແຕ່ນັ້ນ ຫົວຄຣູເຈົ້າ ຄະນຶງຫາອິດອ່ອນ ເສັ່ງແລ້ວ
ເລີຍເລົ່າ ໄປປືດໄງ້ ໜັງສືກ້ອມເບິ່ງດູ
ກໍບໍ່ ເຫັນໃນຫ້ອງ *ຄັມພີ* ໃດຈັກແຫ່ງ ຈິງນາ
ແລ້ວເລົ່າ ໄປປືດໄງ້ *ວິໄນ* ພ້ອມກໍບໍ່ເຫັນ

ພຣະກໍ ກັບຕ່າວຕັ້ງ ເລີຍອ່ານຄຳແປ
ກໍບໍ່ ມີຕົວອັດ ແທບຫຽມຊິແປໄດ້
ຕັ້ງຫາກ ຫລາຍວັນແທ້ ຄະນຶງຫາອິດອ່ອນ ເສັ່ງແລ້ວ
ຄຶດຖີ່ແທ້ ອີ່ດູໜ້າພໍ່ຄຣູ

ເນນຈຶ່ງ ບອກໃຫ້ຮູ້ ຕາມຮ່ອມຄຳແປ
*ບິດວ່າ ເທດັງວາ ແມ່ນດັງງວງຊ້າງ*
*ບິດວ່າ ຊາໂຕນັ້ນ ແມ່ນຕົວຄັນຄາກ ຄູບາເຮີຍ*
*ຈັກວ່າ ອັນອື່ນນັ້ນ ບໍ່ຄືແທ້ອີ່ຫລີ*

*ບິດວ່າ ຄຸຊະຣານັ້ນ ຄືຄວນຄຶດຖືກ*
*ມັນແມ່ນ ຄຸແປ່ຮ້າງ ຊະຣາຫຸ້ງບຫລີ່ນຂີ້ຊີ ແທ້ດາຍ*

*ບິດວ່າ ສິງຄາວານັ້ນ ອະຫີນາກ້າຂນາດ*
*ຕັ້ງແມ່ນ ງູພິດຮ້າຍ ສິງເສື້ອຄາວາ ດອກນາ*

*ບິດວ່າ ຈັດຕານັ້ນ ຕີຕາຫານຍາກ ເຮວແລ້ວ*
*ຄັນວ່າ ຄຶດແມ່ນແທ້ ໃນຫັ້ນຫາກຊິເຫັນ*

*ອັນນີ້ ຫາກແມ່ນເອົາສານເຂົ້າ ຕີຕາຈ້ຳຈິດ ຄູບາເຮີຍ*
*ແຂງວ່າ ຄຶດສິ່ງນີ້ ກໍແປໄດ້ງ່າຍດາຍ ດອກແລ້ວ*

---

ຄັມພີ (ປລ ຄຳພີຣ) = ໜັງສືສຳຄັນທາງສາສນາ / ວິໄນ ວິນັຍ (ປລ ວິເນຍຍ) = ຂໍ້ບັງຄັບ ຂໍ້ປະຕິບັດ / ອະຫີນາ (ປລ ອະຫີ) = ງູ / ຄຣູ (ປລ ສສ ຄຸຣຸ) = ຜູ້ສັ່ງສອນ

*ບິດວ່າ  ແປະແປະຊ້ອນ  ປະປະຫລາຍບາດ  ນັ້ນນາ*
*ອັນນີ້  ຕັ້ງຫາກາຍາກແທ້ແທ້  ແຄນຫຍຸ້ງກວ່າຫລັງ  ທ່ານເຮີຍ*
*ອັນນີ້  ຕັ້ງຫາກແມ່ນຄວາຍກິນຫຍ້າ  ເລັມກຽງກາງທົ່ງ*
*ແລ້ວຈຶ່ງ ຂີ້ຢາດໄວ້  ຫລາຍກ້ອນຖືກກັນ  ດອກນາ*

ແຕ່ນັ້ນ  ຣາຊະຄຣູເຈົ້າ  ແຂງຄຳປ້ອຍດ່າ
ອັນນີ້  ຕັ້ງຫາກຫາໃກ້ໃກ້  ກູໄດ້ຄຶດກາຍ  ດອກນາ
ຄ້ອມວ່າ ບໍຣະບວນແລ້ວ  ເລີຍເຊົາສະຖິດຢູ່
ຈິວຈຶ່ງ  ໄປອາບນ້ຳ  ເສັງຮ້ອນເທື່ອໄຄ

>> ແຕ່ນັ້ນ  ຍັງມີ*ໄທຄັງໝູ້ງ*  ມາຖວາຍພຣະບາດ
ເຂົາກໍ  ມາພົບພໍ້  ຈົວນ້ອຍເລົ່າຖາມ
ອັນວ່າ  ນະທີນ້ຳ  ວັງເວີນເປັນຫາດ
ຈັກວ່າ  ເລິກແລະຕື້ນ  ສັນໃດແທ້ບ່າວຈົວ

ແຕ່ນັ້ນ  ຈົວກໍຖາມຕອບຖ້ອຍ  ຄຳຂືນແນະບອກ
ອັນວ່າ  ເລິກແລະຕື້ນ  ສູກໍຮູ້ຊູ່ອັນ  ແລ້ວເດ

ແຕ່ນັ້ນ  ເຂົາກໍເລົ່າຍັງດົນຕ້ານ  ດອມຈົວຖາມສືບ  ໄປນັ້ນ
*ຕູຂ້ອຍ  ຍັງຊິໂຕນຂ້າມນ້ຳ  ໄປໄດ້ດັ່ງລື  ນັ້ນເດ*

ແຕ່ນັ້ນ  ຈົວຕອບຖ້ອຍ  ຂານໝູ່ໄທຄັງ
ມິໃຊ່  ອາການສູ  ຊິຂ້າມມາເຖິງພີ້
*ໃຜທ່ອນ  ເອົາຕົວຂ້າມ  ນະທີຫລວງມາຮອດ  ເຮົາພີ້*
ຍຽວວ່າ ອິນຢູ່ຟ້າ  ລົງອູ້ມຊ່ອຍຊູ  ບໍ່ຮູ້

ແຕ່ນັ້ນ  ໄທຄັງຕ້ານ  ດອມຈົວຊ້ຳກ່າວ
ຜິວ່າ  ຕູຫາກຍັງຂ້າມໄດ້  ຈົວເຈົ້າຊິໃຫ້ສັງ  ນັ້ນເດ
ເມື່ອນັ້ນ ຈົວຕອບຖ້ອຍ  ຂານບອກໄທຄັງ
ເຮົາຈັກ  ວາງຈີວອນທັງສະບົງ  ໃຫ້ສູຈິງແທ້

---

ກາຍພັນ (ປລ ກາຍພັນທ) = ຜ້າມັດແອວ / ຕູ (ລກ) = ພວກຂ້ອຍ, ໝູ່ຂ້ອຍ

ກັບທັງ ຜ້າສະໄງບພ້ອມ ທັງໝູ່ກາຍພັນ
ເຮົາບໍ່ ກິນແໜງສັງ ຊິມອບເວນວາງໃຫ້

*ຄັນວ່າ ສູຫາກຂ້າມບໍ່ໄດ້ ສູເລົ່າຊິເສັງສັງ ນັ້ນເດ*
*ແຕ່ນັ້ນ ໄທຄັງຂານ ວ່າຊິເສັງຍັງໝ້ຽງ*
ຕູຈັກ ເອົາຍັງໝ້ຽງ ວາງໄປມວນມອບ ຈົວແລ້ວ
ຕູຫາກ *ພັນບໍ່ແພ້* ຊິຍອມໃຫ້ຂູ່ຄືນ ແທ້ດາຍ

ແຕ່ນັ້ນ ຈົວກ່າວຕ້ານ ຫ້າມຢ່າພັນກັນ ເທາະນາ
ມັນຈັກ ເສັງຂອງສູ ໝ້ຽງຄັງພຣະຍາເຈົ້າ
ແຕ່ນັ້ນ ເຂົາກໍເລົ່າດົນຄຳຫ້າມ ແຂງຄວາມບໍ່ຄຶດຊອດ
*ເຂົາກໍ ວ່າເຂົາຊິຂ້າມໄດ້* ກໍເລີຍທ້າວ່າເອົາ ເທາະນາ

ເມື່ອນັ້ນ ເຂົາກໍເອົາຍັງໝ້ຽງ ລອຍໄປທັງທ່ອງ
ສຽງໂຫ່ຮ້ອງ ຫົວຈົ້ນຂູ່ຄືນ
ເຂົາກໍ ສືນສືນຂ້າມ ຊິນລະຫີລອຍຍັ່ງ ໄປແລ້ວ
ຄັນວ່າ ຮອດຝັ່ງແລ້ວ ຈາຕ້ານຕໍ່ຈົວ

ເຈົ້າຈິ່ງ ເອົາຍັງຜ້າ *ຈີວະຣັງ*ໝົດຄູ່ ຜືນນັ້ນ
ມາມອບໃຫ້ ຕູຖ້ອນຊິນຸ່ງທົງ ທ່ານເຮີຍ

ບັດນີ້ ຕູຫາກມາພັນແພ້ ລອຍນັດທີມາຮອດ
ຈົວທ່ານ ຢ່າໄດ້ໃຈະຢູ່ຊ້າ *ເປືອງ*ແກ້ອອກມາ ເທາະແມ
ຊາດທີ່ ເປັນຈົວນີ້ ຖືສິນບໍ່ທ່ອນລ່າຍ ຈົວເຮີຍ
ບໍ່ທ່ອນ ຕົວະລ່າຍຫລິ້ນ ຫລາຍລິ້ນແງ່ງອນ

*ຄັນວ່າ ເສັງສັດນີ້ ສິນຈົວບໍ່ມີແກວ່ນ ຄືງແລ້ວ*
*ມັນຈັກ ຕົກຕ່ຳໃຕ້ ສະເດັນກິ້ງຈາກຕົນ ແທ້ດາຍ*
*ເໝືອນດັ່ງ ເມັດງາຕັ້ງ ປາຍເຫລັກຈານຈັບຢູ່ ນັ້ນແລ້ວ*
*ຄັນວ່າ ລົມພັດຍູ້ ປົວເປື້ອງຫລົ່ນເສັງ ດອກນາ*

---

ພັນ = ພະນັນ ພະລັນ ພະລັນສິ່ງຂອງອັນໃດອັນນຶ່ງ / ຈີວະຣັງ, ຈີວອນ (ປລ ຈີວຣ) = ຜ້ານຸ່ງຫົ່ມຂອງພຣະສົງ / ເປືອງ (ລກ) = ແກ້ຜ້າອອກຈາກໂຕ

ແຕ່ນັ້ນ  ຈົວຈຶ່ງຕ້ານກ່າວຖ້ອຍ    ຂານຕອບໄທຄັງ
*ສູຫາກ  ເອົາກັນລອຍ    ລ່ອງມາດາຍດູ້*
*ລາງພ່ອງ ດຳລົງພື້ນ    ລາງຄືນຢືນຍ່າງ ມາດາຍ*
*ຕັ້ງບໍ່ເຫັນ ສູຂ້າມນ້ຳ    ມາແທ້ເມື່ອໃດ*

*ແຂງວ່າ ສູຫາກຍໍຂາຂ້າມ    ບັດທີຫລວງມາຮອດຝັ່ງ*
ກູຈັກ  ຍໍມອບມ້ອນ    ວາງໃຫ້ແກ່ສູ ແທ້ດາຍ
ຄັນວ່າ  ອັດຖົງຜ້າ    ກູບໍ່ພໍຊິຊີ້ຕີ່ມ ສູເຮີຍ
ອັນນີ້  ຕັ້ງຫາກຜິດຮີດເຄົ້າ    ຄອງພັນແທ້ບໍ່ຖືກຄວາມ ແທ້ດາຍ

ບັດນີ້  ກູຈັກເອົາຍັງໝ້ຽງ    ດອນສູໝົດຄູ່ ຄືນແລ້ວ
ກູນີ້  ບໍ່ຫ່ອນເວົ້າລ່າຍຖ້ອຍ    ສັດຈະແທ້ທ່ຽງຈິງ ທ່ານເຮີຍ
*ຄັນວ່າ  ເສັຽສັດຈະນີ້    ຕົວຕາຍດີກວ່າ ຈິງແລ້ວ*
*ຄວາມບູຮານ ກ່າວໄວ້    ເຮົາຮູ້ຊູ່ອັນ ນັ້ນແລ້ວ*

ບັດນີ້  ກູຫາກມາພັນແພ້    ຝູງສູໝົດໝູ່ ຈິງແລ້ວ
ສູຢ່າ  ໄດ້ຢູ່ຊ້າ    ຍໍໃຫ້ມອບກູ ເທາະແມ
ກູຫາກ  ເຕືອນກ່ອນກີ້    ຊິເສັຽສ່ວນຂອງພັນ ສູແລ້ວ
ສູຫາກ  ຝືນຄວາມກູ    ບໍ່ຮີ່ນຕອງຕາມເວົ້າ
ຍາມເມື່ອ ກູຫາກມີຄວາມຫ້າມ    ສູບໍ່ຍອມຍັງຫານຢູ່ ຈິງນາ
ບັດນີ້  ກູຫາກພັນແພ້ແລ້ວ    ຊິເອົາໝ້ຽງແຫ່ງສູ ແທ້ແລ້ວ

ຍາມເມື່ອ ໄທຄັງໝ້ຽງ    ສາມະເນນຖຽງຕອບ ກັນນັ້ນ
ຄວາມຫາກ ເລີຍຊ່າເຮື້ອງ    ເຮືອງເທົ້າທົ່ວເມືອງ
ເຂົາຈຶ່ງ ເມືອທູນໄທວ້    ພຣະຍາເມືອງບົນບອກ
ພໍໃຫ້  ຮູ້ຂ່າວຂໍ້    ຟັງແຈ້ງຊູ່ອັນ

ເຂົາກໍ  ເລົ່າແຕ່ເຄົ້າ    ເທົ້າຮອດເຖິງປາຍ
ອັນວ່າ  ຣາຊາພຣະ    ຄ່ອຍພິຈານແຈ້ງ
ກໍຫາກ  ຄືຄວາມເບື້ອງ    ສາມະເນນແກ້ກ່າວ
ເຂົາຫາກ ລອຍລ່ອງແທ້    ບໍ່ມີຂ້າມຍ່າງມາ ແທ້ດາຍ

---

ແຂງວ່າ (ລກ) = ຄັນແມ່ນວ່າ, ຖ້າວ່າ

ພຣະຈິ່ງ ຕັດຂາດມ້ຽນ ຕາມແພ່ງພິມເມືອງ
ເອົາຕາມ ຄອງບູຮານ ແຕ່ປະຖົມຈິງແທ້
*ວ່າໃຫ້ ເອົາແຕ່ສີ່ຊ້າຫ້າບາດຖ້ວນ ຖວາຍເນນຕາມຮີດ*
*ຢ່າໃຫ້ ເອົາລື່ນນັ້ນ ຄອງຫ້າມບໍ່ດີ ແທ້ເນີ*

ສູຈິ່ງ ປັນແບ່ງໃຫ້ ຕາມຮີດເຮົາ*ຕັດ*
ໃຫ້ສູ ຍໍເຄນຖວາຍ ແກ່ຈົວເສັງຖ້ອນ
ແຕ່ນັ້ນ ເຂົາກໍໂດຍຄວາມເຈົ້າ ພຣະຍາເມືອງຕຶກແຕ່ງ
ເລີຍເລົ່າແລ້ວ ມາໃຫ້ແກ່ຈົວ

ຈົວຈິ່ງ ຖາມຫາຂໍ້ ນຳເຂົາທຸກສິ່ງ
ອັນວ່າ ພຣະບາດເຈົ້າ ກູນາແທ້ດັ່ງໃດ ນັ້ນເດ
ເຂົາກ່າວເວົ້າ ຕ້ານຕໍ່ສາມະເນນ
ອັນວ່າ ຣາຊາຕັດ ແຕ່ເທິງລົງໃຕ້
ວ່າໃຫ້ ປັນເປັນສີ່ຊ້າຫ້າ*ບາດ* ນຳມາມວນມອບ ຈົວແລ້ວ
ບໍ່ໃຫ້ ເອົາລື່ນນັ້ນ ຄອງຫ້າມບໍ່ຄວນ ວ່າດາຍ

ແຕ່ນັ້ນ ຈົວກໍຟັງດູຂໍ້ ເປັນຄວາມເຫລວຫລາກາ
ຈົວຈິ່ງ ເອົາບາດໄດ້ ທັງຫ້າໜ່ວຍມາ
ກັບທັງ ເອົາໝູ່ຊ້າ ສີ່ໜ່ວຍມາຜອງ
ຈົວເລົ່າ ເອົາເຕັມໂກນ ຊູ່ອັນຈິງແທ້

ບັດນີ້ ອັນວ່າຣາຊາເຈົ້າ ເໜືອຫົວຜາຍໂຜດ ເຮົາແລ້ວ
ອັນວ່າ ເຈົ້າແລະຂ້ອຍ ກໍເຫັນພ້ອມຊູ່ອັນ ແທ້ດາຍ

ເຈົ້າຫາກ ຜາຍໂຜດໃຫ້ ດູຊອບຄອງເມືອງ ຢູ່ແລ້ວ
*ເມື່ອບໍ່ ໂດຍຄຳພຣະ ອາດຍາກໍກົວຢ້ານ*
*ເມື່ອຈັກ ກາຍຄຳເຈົ້າ ເໜືອຫົວຊິກິ້ວໂກດ ບໍ່ຮູ້*
ອັນນີ້ ເພິ່ນຫາກຕັດແຕ່ງໃຫ້ ປານນັ້ນກໍຫາກເອົາ ດອກແລ້ວ

---

ຕັດ (ຊາຣາສັບ ຕຣັສ) = ເວົ້າ, ສັ່ງການ / ບາດ (ປລ ປັຕຕ, ສສ ບາຕຣ) = ແນວໃສ່ເຂົ້າຂອງພຣະສົງ

*ອັນວ່າ ໝັ້ງສີ່ຊ້າ* *ຫ້າບາດເງິນຜອງ*
ແມ່ນວ່າ ຣາຊາຕັດ ກໍຊອບຄອງເມືອງຕັ້ງ
ເພິ່ນຫາກ ດູຕົນສູແທ້ ທັງຫລາຍຈິ່ງຕັດຜ່ອນ
ເຫດວ່າ ຄວາມພັນເຂັດຜອກພົ້ນ ປານນັ້ນກໍຫາກຍອມ ດອກແລ້ວ

ແຕ່ນັ້ນ ເຂົາກໍປາກບໍ່ໄດ້ ກັ້ນຢູ່ປານຕາຍ
ເມື່ອຈັກ ຈາໄປຫລາຍ ຫາກແມ່ນຄວາມຈົວແທ້
ແຕ່ນັ້ນ ໄທຄັງຢ້ານ ເຊັນເຊັນຟ້າວຟັ່ງ
ເຂົາກໍ ປົບແລ່ນເຕັ້ນ ໜີແທ້ຈາກຈົວ

ແຕ່ນັ້ນ ເຂົາຈົ່ມໄຫ້ ຄຶດຄຽດໃນໃຈ
ບັດນີ້ ວາຍຄົວເຮືອນ ລູກເມັງຊິເປັນຂ້ອຍ
ແຂງວ່າ ເຮົາໄດ້ເສັງແຕ່ໜ້ອຍ ພໍຂົນຂວາຍຫາໃສ່
ແມ່ນວ່າ ເຮົາຈັກຄຶດຊອກໃຊ້ ແທນນີ້ກໍຍ່ອມເບົາ

*ອັນນີ້ ຕັ້ງຫາກເງິນຄຳແທ້* *ເຫລືອຫລາຍອະນັບເນກ*
*ຫ້າບາດຕັ້ງ* *ຜອງແລ້ວລວດເຕັມ*
*ກັບທັງ ໝັ້ງສີ່ຊ້າ* *ເຫລືອທີ່ຄອງໃໝ*
*ຄຳນີ້ ຣາຊາປົງ* *ແຕ່ເທິງເປັນຫລິ້ນ*

ເຮົາກໍ ບໍ່ຫ່ອນຮູ້ ຄວາມງ່າຍເປັນໜັກ ດັ່ງນີ້
ຄຶດວ່າ ໄຂຈາສຽງ ກ່າວເປັນຄວາມຫລິ້ນ
ເຂົາກໍ ຂັງອິກແຄ້ນ ກອງມະໂນຄຶດບໍ່ອອກ
ຕັ້ງຊິ ດັບແທ້ແທ້ ວາຍຂວ້ຳລູກເມັງ ແລນໍ

ເຮົາຈັກ ມວນກັນພ້ອມ ໄປເປັນຂ້ອຍທ່ານ ແລນໍ
ບໍ່ຮ່າງວ່າ ຈັກໄດ້ຢູ່ສືບສ້າງ ການບ້ານດັ່ງຫລັງ ແລນໍ

ຄ້ອນວ່າ ເຂົາກ່າວແລ້ວ ແລ້ວເລົ່າຈາກັນ
ຄວນທີ່ ເຮົາໄປທູນຣາຊາ ເລີກລາເມືອບ້ານ
ແຕ່ນັ້ນ ເຂົາກໍເອົາຕົນຂຶ້ນ ເມືອທູນພຣະບາດ
ກົ້ມຂາບແລ້ວ ປະນົມນີ້ວນັ່ງເມືອງ

ຝູງຂ້າ ຈັກໄດ້ລາບາດເຈົ້າ   ເມືອສູ່*ຄາເມ* ກ່ອນແລ້ວ
ຄັນບໍ່ ເປັນການສັງ   ຊິຂາບລາວັນນີ້
ແຕ່ນັ້ນ ຣາຊາເຈົ້າ   ຖາມເຂົາໂດຍຮີບ
ສູກໍ ເສັຽໂທດແລ້ວ   ວາງໃຫ້ແກ່ຈົວ ແລ້ວລື

ເຂົາກໍ ຮັບພາກຖ້ອຍ   ຂານຕອບຣາຊາ
ຝູງຂາ ເສັຽເງິນຄຳ   ມາກມາຍເຫລືອລົ້ນ

ອັນວ່າ ໝັ້ງກໍໃຫ້ເຕັມສີ່ຊ້າ   ບາດຫ້າໜ່ວຍເງິນຜອງ
ຈົວຫາກ ພາງານໃໝ   ບາບຕູຝູງຂ້າ
ຕັ້ງຫາກ ເຫລືອແຮງຮ້າຍ   ໝົດຄົວເຮືອນກໍບໍ່ຖ່ອງ
ປັດຂອດ ຈົນມອດກັ້ງງ   ບໍ່ເຕັມຊ້າແຫ່ງຈົວ ພຣະເຣີຍ

ຄືຊິ ບໍ່ໄດ້ເປັນຂ້ອຍເຈົ້າ   *ຫັດຖະບາດ*ເໜືອຫົວ ພຣະເຣີຍ
ຈັກໄດ້ ເປັນທາສາ   ແຫ່ງຄົນເຂົາໃຊ້
ແຕ່ນັ້ນ ຣາຊາທ້າວ   ອີ່ດູຕົນເຂົາກ່າວ
ເຈົ້າກໍ ຄຶດຄຽດໃຫ້   ຈົວນັ້ນມາກຫລາຍ

ພຣະຈຶ່ງ *ອາບັດ*ໃຫ້   ໄຂເຍັຽເທອອກ
ນຳໃຫ້ ຈົວໂທດຮ້າຍ   ລັງລ້ຽວເຫລວຄວາມ
ກັບທັງ ເງິນຄຳພ້ອມ   ເອົາໄປມວນມອບ
>> *ພຣະຈຶ່ງ ບອກໃຫ້ສິກອອກແທ້*   *ເອົາການເຈົ້າຈຶ່ງສົມ ດອກນາ*

ມັນຜອກ ຜິດຮີດແທ້   ຄອງແຕ່ບູຮານ ແທ້ດາຍ
ຕັ້ງຫາກ ກາຍຄອງຈົວ   ບາບໃໝເຫລືອລົ້ນ
*ແຕ່ນັ້ນ ຈົວກໍໂດຍຄວາມເຈົ້າ*   *ຣາຊາສິກອອກ*
*ເຂົາຈຶ່ງ ຮຽກວ່າຊຽງໝັ້ງເຈົ້າ*   *ລືຊາເທົ້າທົ່ວເມືອງ*

*ເທດວ່າ ໄດ້ພັນເອົາໝັ້ງງ*   *ໄທຄັງສິກຄອບ ປາງນັ້ນ*
*ຄົນຈຶ່ງ ໄດ້ເຍື້ອງເຄົ້າ*   *ຄາວນັ້ນສືບມາ ເຈົ້າເຣີຍ*

---

ຄາເມ (ປລ ຄາມ) ບ້ານ ໝູ່ບ້ານ / ຫັດຖະບາດ (ປລ ຫັຕຖ ບາທ) ມື ຕີນ, ຜູ້ຮັບໃຊ້ພຣະຍາ / ອາບັດ (ປລ ອາບັຕຕິ) = ບອກ / ຫລັງຈາກສິກແລ້ວຄົນກໍເອີ້ນຊື່ວ່າ ຊຽງໝັ້ງ

แต่นั้น ຊຽງຈຶ່ງເມືອບົວຣະບັດເຈົ້າ ສເວີຍເມືອງຕີນພີ່
ພຣະກໍ ໃຊ້ຊ່ວງເຂົ້າ ໄປໄດ້ນອກໃນ
ອັນວ່າ ໂຮງຫລວງກວ້າງ ບາຄານທຽວທ່ອງ ໄປນັ້ນ
ສາວສນົມ ໝຸ່ມນ້ອຍ ເຫັນທ້າວກໍຍອກໃຍ

ແມ່ນວ່າ ຊະຊ່ອນເນື້ອ ນາງນາດເທວີ ກໍດີ
ມັນກໍ ທຽວໄປຫາ ຊູ່ຍາມມິຢ້ານ
ແຕ່ນັ້ນ ພຣະຈຶ່ງປົງຄວາມໃຫ້ ວາງສິນຕັດຂາດ
ພຣະກໍ ໄອວາດໃຫ້ ມັນແທ້ຊູ່ອັນ ວ່າດາຍ

ວັນຄືນມື້ ວັນຍາມເຊົ້າຄ່ຳ
ພຣະບາດເຈົ້າ ກໍຫາໃຊ້ແຕ່ມັນ ນັ້ນເດ

ແຕ່ນັ້ນ ພຣະກ່າວຕ້ານ ຈາຕໍ່ຊຽງຫລວງ
ສິກອອກມາ ຢ່າຢູ່ເຮືອນເສີຍລ້າ ຊຽງເຮີຍ
ມຶງຈິ່ງ ເອົາເມັຽຊ້ອນ ເປັນຝາເປັນຝັ່ງ
ເປັນຜູ່ຕູ້ມ ຄອງຢ້າວຄອບຄົວ

*ຊຽງວ່າ ເງິນບໍ່ມີ ພໍສ້ຽວ ໝາຍເອົາລູກສາວເພິ່ນ ປະໂທເດ*
*ເຂົ້າບໍ່ມີ ຢູ່ເລົ້າ ຊິຂັນລ້ຽງແມ່ເມັຽ*
*ເກືອບໍ່ມີ ພໍຊ້າ ຊິໝາຍຕໍາປາແດກ*
*ຍັງວ່າ ເປັນນ້ອງຊາຍພຣະເຈົ້າ ຊິອາຍໜ້າໄພ່ເມືອງ ພຣະເຮີຍ*

ພຣະວ່າ ມຶງປະສົງແທ້ ສາວໃນໂຮງບໍ່ໃຫ້ແຕ່ງ
ມີບໍ່ແພ້ ກູຊິໃຫ້ແກ່ມຶງ ແທ້ແລ້ວ
ຕາມສມັກໃຈຖ້ອນ ໄປຫາເລືອກເບິ່ງ ເອົາເນີ
ຄັນວ່າ ສອງຫາກເວົ້າຄ່ອງຂໍ້ ກັນແລ້ວຈຶ່ງມາ

ຊຽງຕອບຖ້ອຍ ຖວາຍຣາດບູຊາ
ຂໍໃຫ້ ພາກັນມາ ສູ່ໂຮງພຣະຍາເຈົ້າ
ຕາງໃຫ້ ມີຄວາມເວົ້າ ຫລາຍຄົນຄຶດຊ່ອຍ
ທໍ່ແຕ່ ຕົວຂ້ານ້ອຍ ບໍ່ຄວນເຂົ້າຮ່ວມນາງ ແທ້ແລ້ວ

| | |
|---|---|
| ເມື່ອນັ້ນ ຣາຊາໃຊ້ | ທັນ*ນາງຫໍ່ແຕ່ງ* |
| ໃຫ້ເຂົາ ມາພ່ຳພ້ອມ | ກັນແທ້ຊູ່ນາງ ແທ້ເນີ |
| ເຂົາກໍ ໂດຍພະລັນຟ້າວ | ນາງງາມຫໍ່ແຕ່ງ ມາແລ້ວ |
| ນົບນອບໄຫວ້ | ທູນໄທ້ນັ່ງເມືອງ |
| *ສາວກໍ ແຍງໂສມເຈົ້າ* | *ຊຽງຫລວງບຸດຕະຣາດ* |
| *ຕັ້ງຫາກ ອາດຫລາດແທ້* | *ໂສມເຈົ້າລູກພຣະຍາ ແທ້ນໍ* |
| ເມື່ອນັ້ນ ອິງກະສັດຕ້ານ | ຈາສາວສນິມນາດ |
| ໄຂເຫດໃຫ້ | ພໍຮູ້ຮ້າງກະບວນ |
| **>>** ບັດນີ້ ກູບໍ່ທັນສູແທ້ | ປະການສັງດ້ວຍເຫດ ອີ່ສັງແລ້ວ |
| ໃຜຜູ້ ຍັງຢາກໄດ້ | ຊຽງນ້ອຍໃຫ້ວ່າມາ ນັ້ນເນີ |
| ເປັນເມັຽທ້າວ | ຮຽງສອງສົມຄູ່ ກັນແລ້ວ |
| ສນຸກຢູ່ສ້າງ | ເຮືອນຢ້າວແຕ່ງແປງ |
| ເຂົາກໍ ກົ້ມຂາບໄຫວ້ | ຖວາຍຣາດຣາຊາ |
| ເອົາແຕ່ ບູຮານເຄີຍ | ແຕ່ງເຮືອນດອມທ້າວ |
| *ບັດນີ້ ໃຫ້ຊຽງກຳມືໄວ້* | *ຫາສາວທວຍເບິ່ງ ດູຖ້ອນ* |
| ຄັນແມ່ນແມ້ງ | ຊິບາຍໃຫ້ໃສ່ມື ເຈົ້າແລ້ວ |
| ເມື່ອນັ້ນ ສາວສີສູ້ | ບຸນຊູທວຍກ່ອນ |
| ເຈົ້າຫາກ ກຳໜ່ວຍແກ້ວ | ຄາໄວ້ຢູ່ມື ເຈົ້າແລ້ວ |
| ເມື່ອນັ້ນ ສາວບາງພ້ອມ | ສາວນາງສາວແກ່ນ |
| ສາວແວ່ນແກ້ວ | ສາວເບົ້າພ່ຳກັນ |
| ເຈົ້າຫາກ ກຳເງິນໄວ້ | ກຳຄຳໃຫ້ໄຂເບິ່ງ ອ້າຍເອີຍ |
| ບາບ່າວທ້າວ | ຊຽງນ້ອຍບໍ່ໄຂ ແທ້ແລ້ວ |
| ສາວສີສ້ອຍ | ສາວຄຳສາວອ່ອນ |
| ສາວຫລ້າຊ້ອຍ | ສາວນ້ອຍໃຫ້ຮີບທວຍ ພີ່ຖ້ອນ |

---

ນາງຫໍ່ແຕ່ງ = ແມ່ຄົວພວກນຶ່ງຊຳນານການເຮັດອາຫານຫໍ່

ເຈົ້າຫາກ ກຳເອົາໄມ້ ຈັບແດງທາງເທດ
ທັງດອກໄມ້ ກຳໄວ້ໃຫ້ຄ່ອຍວາງ ອ້າຍເອີຍ

ຊຽງຫົວແລ້ວ ເຕີນສາວຝູງໃໝ່
ເຊີນນາດທະນ້ອງ ດວງແກ້ວໃຫ້ຄ່ອຍທວຍ

ສາວຈັນພ້ອມ ສາວທອງສາວຜ່ອງ
ສາວສ່ອງແກ້ວ ສາວແຍ້ມໃຫ້ຄ່ອຍທວຍ ພີ່ຖ້ອນ

ປັບພະວັນດີແກ້ວ ສາວໂອສາວມ່ອນ
ສາວດອກໄມ້ ສາວນ້ອຍໃຫ້ຄ່ອຍທວຍ ພີ່ຖ້ອນ

ສາວກໍ ພາທີຕ້ານ ກັນທວຍໝົດໝູ່
ບໍ່ຖືກຕ້ອງ ບາທ້າວບໍ່ໄຂ ແທ້ແລ້ວ

ຍັງແຕ່ *ສເນຫາ*ສ້ອຍ ນາງດຽວຍັງຢູ່
ຊຽງກ່າວຕ້ານ ເຊີນນ້ອງໃຫ້ຮີບທວຍ ພີ່ຖ້ອນ

*ສເນຫາ*ໝລ້າ ສາວຮາມທວຍແມ່ນ
ເຈົ້າຫາກ ກຳແຂນສາວສ່ຳນ້ອຍ ເມັຽແກ້ວບໍ່ວາງ ໄດ້ແລ້ວ

*ເມື່ອນັ້ນ ຊຽງຫລວງເຈົ້າ ຕົບມືຟ້ອນແອ່ນ*
*ອັນນີ້ ຕັ້ງຫາກແມ່ນເມັຽແຕ່ຟ້າ ແນບກ້ຽວກ່ອນລືງ ແທ້ແລ້ວ*

ພຣະບາດເຈົ້າ ຕ້ານຕໍ່ຊຽງຫລວງ
*ບັດນີ້ ມຶງຊິເອົາຄືນດຽວ ບໍ່ເອົາສອງຊ້ຳ ນັ້ນລື*
ຄັນວ່າ ຍັງໝາຍໄວ້ ຫ້ອງຫົວໃຈພໍ່ວ່າງ
ສາວບໍ່ແພ້ ເອົາຖ້ອນບໍ່ຂືນ

ຊຽງກໍ ຂໍດອມເຈົ້າ ຫາສາວມາອີກຕື່ມ
ກັບຜູ້ເຖົ້າ ເປັນເຈົ້າແມ່ເຮືອນ

ຊຽງກໍ ເລືອກຕື່ມແລ້ວ ລາຈາກພູທອນ
ສອນລອນນົບ ຂາບລາພຣະອົງອ້າຍ

| | | |
|---|---|---|
| | ນຳທາງເທົ້າ | ເຖິງເຮືອນໂຮງແມ່ |
| | ນົບນອບໄຫວ້ | ຖວາຍໄທ້ແມ່ເມືອງ |
| ວັນນີ້ | ບຸນເຮືອງເຈົ້າ | ພຣະຍາຫລວງອົງພີ່ |
| | ທານທອດໃຫ້ | ເມັ່ງແກ້ວມັ່ງມຸນ ແມ່ເຮີຍ |
| ແມ່ວ່າ | ດີດີແທ້ | ບຸນຄຸນພູວະນາດ |
| ຊາດທີ່ | ເປັນນ້ອງແກ້ວ | ສອງເຈົ້າຄ່ອຍຖນອມ ແມ່ແລ້ວ |
| *ຊຽງກໍ* | *ເຕີນເຂົາຂ້າ* | *ປຸກໂຮງຫລັງນຶ່ງ* |
| | *ໃຫຍ່ບໍ່ນ້ອຍ* | *ສເມີດ້ານໄພ່ຊຸມ ນັ້ນແລ້ວ* |
| ກໍບໍ່ | ເຄືອງຄຳແຄ້ນ | ອັນໃດຈັກສິ່ງ |
| ເຄື່ອງກິນ ມີບໍ່ໄຮ້ | | ໄຫລເຂົ້າຊູ່ວັນ |
| >> ແຕ່ນັ້ນ | ຊຽງຫລວງຂຶ້ນ | ເມືອໂຮງຫາພີ່ |
| ພຣະກໍ | ຕ້ານໄຕ່ຖ້ອຍ | ດອມນ້ອງຊື່ນຊົມ |
| ຊຽງເອີຍ ອາຫານລົ້ນ | | ເຕັມພາກິນບໍ່ແຊບ |
| ກູກໍ | ກິນຊູ່ມື້ | ບໍ່ຄືດ້ານດັ່ງຫລັງ ແທ້ນາ |
| ອັນວ່າ | ຢາກິນເຂົ້າ | ຈະເຣີນດີມີບໍ? |
| | ຊຽງຕອບຂໍ້ | ຂານເຈົ້າວ່າມີ ພຣະເອີຍ |
| ຊຽງແນະ ມື້ອື່ນນັ້ນ | | ອົດຢູ່ຢ່າ*ສເວີຍ* |
| ອົດໃຫ້ | ຢາມາເຖິງ | ຈິ່ງສເວີຍຍາມນັ້ນ |
| | ຊຽງກ່າວແລ້ວ | ລາຈາກໂຮງຫລວງ |
| | ເມືອເຖິງເຮືອນ | ບໍ່ເຄືອງຄຳຮ້ອນ |
| ເຖິງເມື່ອ ວັນລຸນແລ້ວ | | ພຣະຍາຄອຍບໍ່ມາຮອດ |
| ພຣະກໍ | ຄອງແຕ່ເຊົ້າ | ເຖິງເທົ້າຮອດເພນ |
| ສຸດທີ່ | ຫີວແສບທ້ອງ | ພຣະເລົ່າເລີຍສເວີຍ |
| | ຊຸມຄົວສູ | ແຕ່ງຫາພາເຂົ້າ |

---

ສເວີຍ (ຣາຊາສັບ) = ກິນ

ອາຫານລົ້ນ    ເຕັມພາເກັບໃສ່
ຂົ້ວໄຂ່ມ້ວນ    ມວນເຂົ້າບໍ່ຖອຍ

ທັງກ້ວຍອ້ອຍ    ຂນົມຫໍ່ສາຄູ
*ພູທອນ*ພຣະ    ໂມ່ມເອົາມີໄວ້
ສາລີຕົ້ມ    ເຕັມໄຫທອງໃຫຍ່
ພຣະບໍ່ໄວ້    ຍໍມ້ວນຄາບດຽວ ແທ້ແລ້ວ

ດູລື່ນລົ້ນ    ກິນອີ່ມເຕັມທີ
ພຣະຈຶ່ງ ຍໍຂັນຄໍາ    ດື່ມລົງຍັງນໍ້າ
ຍັງເລົ່າ ຄອຍທາງທ້າວ    ຊຽງຫລວງບໍ່ມາຮອດ
ພໍເມື່ອ ເຖິງຕູດຍ້າຍ    ຊຽງນ້ອຍກໍຈຶ່ງມາ

ຂຶ້ນສູ່ ຜາສາດກວ້າງ    ພຣະຍາດຣາດຈອມເມືອງ
ບຸນເຮືອງຖາມ    ວ່າຢາຍັງໄດ້ ນັ້ນບໍ
ກູກໍ ຄອງທາງແທ້    ຕາເວັນກາຍທ່ຽງ
ດູທີ່ ທົນບໍ່ໄດ້    ກິນເຂົ້າລື່ນຫລັງ ແທ້ດາຍ

ເປັນທີ່ ສົງໄສແທ້    ກິນລື່ນຄາວຫລັງ
ພານພູນເຕັມ    ໂມ່ມກືນຈົນກ້ຽງ
ຜົນຜລາພ້ອມ    ສຸກຫອມກ້ວຍໄຂ່
ໝົດກ່ອງໂປ້    ປາປີ້ງມາກຫລາຍ ແທ້ດາຍ

*ຊຽງວ່າ ຢາກຈຶ່ງກິນນີ້    ກໍເປັນຢາອັນນຶ່ງ*
*ຄັນວ່າ ບໍ່ຢາກແທ້    ກືນເຂົ້າກໍບໍ່ລົງ*

ແມ່ນຊິ ເອົາໄມ້ຄ້ອນ    ມາທັ່ງລົງຄໍ
ເອົາມາຕີ    ຕອກລົງກໍຮຸນແລ້ວ
*ເປັນພຣະຍານີ້    ຄໍາກິນມາໃຫ້ບອກ*
*ເພິ່ນກໍ ຖືຖືກແທ້    ຜຍາຊໍ້າບໍ່ມີ ນັ້ນລື*

---

ພູທອນ (ປລ ພູທຣ) = ແຜ່ນດິນ, ໂລກ, ເຈົ້າແຜ່ນດິນ / ຕູດຍ້າຍ (ລກ) = ຍາມຄ້າຍແລງ
ຖືຖືກ (ລກ) = ດູຖູກ, ເບິ່ງຕໍ່າ, ຕີລາຄາຕໍ່າ

ຊຽງກໍ ວ່າທີ່ນີ້ ແລ້ວຮີບລົງໜີ
ນໍາທາງເມືອ ສູ່ເຮືອນນອນລີ້
ພຣະຍາ ກໍອິດສູຮ້າຍ ໃນໃຈແຄ້ນຄັ່ງ
ກູກໍ ຖາມຊື່ແທ້ ມາເວົ້າອວດເຊີງ ແທ້ນໍ

ກູຫາກ ເປັນພຣະຍາແທ້ ລືຊາທັງໂລກ
ບັກຖ່ອຍຮ້າຍ ຄວນຂ້າລ່ອງໄຫລ
ພຣະກໍ ຮີບເພິງໃຫ້ ສາມວັນຄຶດຢູ່
ຄຶດຮອດ ຄໍາສັ່ງເຫງົ້າ ກືລ້ານພໍ່ຕົນ

ອັນວ່າ ພໍ່ແມ່ນີ້ ຄໍາປາກແຄນໜັກ
ພໍ່ກໍ ເຄີຍຈາສອນ ສັ່ງເປັນຄໍາໝັ້ນ
ຕັ້ງແຕ່ ເອົາເສິກເຂົ້າ ມາເມືອງຊີງຍາດ ຄວນແລ້ວ
ພໍແຕ່ ໂທດທີ່ນີ້ ບໍ່ຄວນຂ້າລ່ອງໄຫລ

*ກູກໍ ແນວນາມເຊື້ອ ກະສັດຕາຍົດໃຫຍ່*
*ມັນນີ້ ລູກໄພ່ນ້ອຍ ບໍ່ມີໃຫ້ລື່ນກາຍ ແທ້ນາ*

**>>** ແຕ່ນັ້ນ ພຣະສັ່ງໃຫ້ ມວນໝູ່ເສນາ
ຫາເລືອກ ເອົາພາຍສານ ສູ່ສນາມຫລວງກວ້າງ
ເຂົາກໍ ຫາມາໄດ້ ພາຍວັນຊ້າງໃຫຍ່
ງາມດັ່ງ ອິນແຕ່ງໄວ້ ສູງລໍ້າລື່ນເຂົາ ແທ້ແລ້ວ

ຕັ້ງວ່າ ຫູຫາງພ້ອມ ງວງງາງາມຍິ່ງ ຈິງດາຍ
ອັນວ່າ ຕາເຊືອດຊ້າຍ ຫລັງຊໍ້າລ່ຽນສເມີ
ອັນນຶ່ງ ຂົນດີກາລໍ້າ ງວງງາງາມຄ່ອງ
ຍາມເມື່ອ ທົງເຄື່ອງຢ້ອງ ແຂວນແກ້ວຍິ່ງງາມ ແທ້ແລ້ວ

ຍາມເມື່ອ ແຂວນຄໍາຫ້າງ ທົວເງີຍດູອາດ
ຄວນທີ່ ຖວາຍໜໍ່ຟ້າ ພຣະອົງເຈົ້າຂີ່ທົງ ຊອບແລ້ວ
ເຂົາກໍ ນໍາເອົາຊ້າງ ເມືອຖວາຍພຣະບາດ
ຊຽງໝ້ຽງ ມັນບໍ່ຊ້າ ມາຢ້ຽມເບິ່ງດູ

มันจึ่ง ติฤแลงยั่ງม | ວຽນໄປສາມຮອບ
--- | ---

ມັນຈຶ່ງ ຕີຖແລງຢັ້ງມ   ວຽນໄປສາມຮອບ
ແລ້ວຈຶ່ງ ອອກປາກຕ້ານ   ເລີຍທ້ວງຕ່ອນບໍ່ຄື ແທ້ດາຍ

*ຊ້າງນີ້ ຕັ້ງວ່າມີທັງງູຫາງພ້ອມ   ງວງງາກໍດູອາດ ອີ່ຫລີແລ້ວ*
*ຕີແຕ່ ຕາມັນຫາກມາໜ່ອຍນ້ອຍ   ທຳຊ້ຳພັດບໍ່ມີ ນີ້ນາ*
*ຂົນກໍ ເລີຍເຫລັ້ມນ້ອຍ   ບໍ່ສົມເພດພາຍສານ ແທ້ນາ*
*ຄັນຈັກ ທຽມທຽບເໝັ້ນ   ລຳຂາພຸ້ນຈັ່ງແມ່ນ*
*ອັນໃຫ້ ສົມເພດຊ້າງ   ຕາຫລວງທໍ່ໝາກເຫວີ່ ນາວນັ້ນ*
*ອັນນີ້ ຕັ້ງວ່າຕົວຊ້າງໃຫຍ່ໂຈ້ໂກ້   ຕາສັງນ້ອຍດັ່ງໝູ ນີ້ນາ*
*ຊາດທີ່ ງົວຄວາຍຫລ້າງ   ຫູຕາກໍຍັງໃຫຍ່ ອີ່ຫລີດາຍ*
*ທຳກໍຫາກ ມີໂຕ່ງໂຕ້ນ   ໃນທັ້ນຢູ່ຫວ່າງຂາ ແທ້ດາຍ*

ແຕ່ນັ້ນ ພຣະບາດເຈົ້າ   ຫົວຢູ່ຊຸກຊຸກ
ກູກໍ ຫາກຟັງຄວາມຊຽງ   ແມ່ນຄືກະບວນເວົ້າ
ຄັນຫາກ ຄຶດຖີ່ແທ້   ກໍຄືແມ່ນຄວາມຊຽງ ຢູ່ແລ້ວ
ທໍ່ວ່າ ມັນຫາກມາລັງຄວາມ   ຢູ່ບໍ່ຄືຄົນເວົ້າ

>> ແຕ່ນັ້ນ ຍັງມີຣາຊະຄຣູເຈົ້າ   ມໍຣະນາລົດຊົ່ວ
ພຣະກໍ ເຖົ້າແກ່ແລ້ວ   ເກນສັງງຈຶ່ງສູນ
ກໍບໍ່ມີ ພະຍາດຮ້າຍ   ບັງບຽດບຽນຕົນ
ຕັ້ງຫາກ ສັງຂານໝົດ   ຈຶ່ງມໍຣະນາມ້ຽນ

ເຈົ້າກໍ ລະຄາບແລ້ວ   ເມືອສູ່ເມືອງສວັນ
ກໍບໍ່ມີ ພົງສາ   ກິ່ງແນວນາມເຊື້ອ
ບໍ່ມີ ພົງພັນເຊື້ອ   ໂສກາເສົ້າໂສກ
ບໍ່ມີ ໄວ້ທຸກຍ້ອນ   ສູນລ້າດັ່ງຂອນ

ແຕ່ນັ້ນ ຣາຊາໃຊ້   ບ່ົວນາງສນົມໝຸ່ມ
ສູກໍ ພາກັນໄປຮ່ຳໄຫ້   ນຳເຈົ້າຣາກເມືອງ ແດ່ຖ້ອນ
ເຂົາກໍ ໂດຍຄວາມເຈົ້າ   ເປັນຂະບວນເຮວຮີບ
ພຣະຈຶ່ງ ແຕ່ງໃຫ້ນ້ອງແຈ່ມເຈົ້າ   ຊຽງໝັ້ງແນບນຳ ແທ້ແລ້ວ

ເຂົາກໍ  ໄປເຖິງຫ້ອງ  ອາຣາມຫລວງຫລັງໃຫຍ່
ກໍຈຶ່ງ  ກົ້ມຂາບໄຫວ້  ສົມເຈົ້ານັ່ງປະນົມ

ແຕ່ນັ້ນ  ນາງສນົມຕ້ານ  ນໍາຊຽງຊັບຊື່ມ
ເມື່ອເຮົາ  ຈັກແກ້ງໄຫ້  ກໍອາຍໜ້າເພິ່ນຊິຫົວ  ແຫ້ນາ
ເຫດວ່າ  ບໍ່ແມ່ນແນວນາມເຊື້ອ  ວົງວານພໍ່ແມ່  ເຮົາດາຍ
ຍ້ອນວ່າ  ພຣະຫາກມີອາດໃຫ້  ເຮົານີ້ກໍຈຶ່ງມາ  ດອກນາ

ລາງພ່ອງ  ຈັດກັນໄຫ້  ລາງພ່ອງຍັງຫົວ
ເຫດວ່າ  ບໍ່ແມ່ນແນວນາມຕົວ  ບໍ່ຢາກຄົວຄໍາໄຫ້
ແຕ່ນັ້ນ  ສາວສນົມພ້ອມ  ຄວາມໂດຍກອຍກ່າວ
ບັດນີ້  ຕູຂ້ອຍເຊີນທ່ານທ້າວ  ຊຽງໄຫ້ເບິ່ງດູ  ແດ່ຖ້ອນ

ແຕ່ນັ້ນ  ຊຽງຕອບຕ້ານ  ຮັບພາກສາວສນົມ
*ພຣະກໍ  ບໍ່ໄດ້ຈໍາເຮົາມາ  ໄຫ້ດອມສູເຈົ້າ*

*ເພິ່ນຫາກ  ບອກແຕ່ເຈົ້າພີ່ນ້ອງ  ມອບໝູ່ສາວສນົມ  ນັ້ນດາຍ*
*ວ່າໃຫ້  ເອົາກັນມາ  ໄຫ້ດອມພຣະຄຣູເຈົ້າ*
ແຕ່ນັ້ນ  ເຂົາກໍວອນວານໄຫວ້  ດອມຊຽງຫລາຍເທື່ອ
ຊຽງກໍ  ບໍ່ກ່າວຕ້ານ  ຟັງຂໍ້ຢູ່ສລຶງ

ອັນວ່າ  ສາວສນົມພ້ອມ  ກັນອອຍສວ່າສວ່າ
*ຄັນວ່າ  ຊຽງໄຫ້ແລ້ວ  ຕູຂ້ອຍຊິໄຫ້ນໍາ  ດອກນາ*

ແຕ່ນັ້ນ  ມັນກໍອີ່ດູຕົນແທ້  ເຂົາວອນຫລາຍເທື່ອ
ຊຽງຈຶ່ງ  ອອກປາກຕ້ານ  ຖາມຊັ້ນໂຈດດູ
*ຜີວ່າ  ເຮົາຫາກເຮັດອັນໃດແທ້  ສູຊິໂດຍນໍາມ່ອມ  ຈິງລື*
*ຄັນວ່າ  ຮຽນໄຫ້ແລ້ວ  ສູເຈົ້າຊິໄຫ້ນໍາ  ແທ້ລື*

ເຂົາກໍ  ແຊວແຊວພ້ອມ  ຄໍາດຽວຮັບພາກ
ແມ່ນທໍ່ວ່າ  ເຈົ້າໄຫ້ຖ້ອນ  ຕູຂ້ອຍຊິໄຫ້ນໍາ  ດອກແລ້ວ

*ແຕ່ນັ້ນ ຊຽງກໍຂອດຕະນິກຕັ້ງ ເອົາຫົວລົງທາງລຸ່ມ*
*ແລ້ວເລົ່າ ກອງກົ້ນຂຶ້ນ ເມືອຟ້າປົດເສັງ*
*ອັນວ່າ ທຳຊຽງໝັ້ງງ ກໍເລີຍໄກວຢູ່ຕ່ອງແຕ່ງ*
*ມັນກໍ ເອົາມືເກົາຂູດທີ້ນ ທວງກັ້ນເກື່ອນກະທາຍ*
*ແລ້ວເລົ່າ ດັ່ນດັ່ນດີ້ນ ເຮຣັນໃຈຈັກຂາດ ຕາຍແລ້ວ*
*ປານດັ່ງ ທາງຂີ້ກຸ້ມ ສະເດັນພື້ງຂາດຈາກຫົວ*
*ມັນກໍ ອ້າປາກທັງແລບລີ້ນ ປີ້ນອອກທັງຕາ*
*ແລ້ວຈຶ່ງ ອວງປະຫວງສຽງ ໂອໂລຄຳໄຫ້*
*ບັດນີ້ ຣາຊະຄຣູເຈົ້າ ກູຕາຍມໍຣະນາດ ເສັງບໍ*
*ຕັ້ງວ່າ ບໍ່ທັນໄດ້ຈອບນາງໜຸ່ມເໜົ້າ ກໍຕາຍແລ້ວຢູ່ຜູ້ດຽວ ແລນໍ*
*ເຈົ້າຫາກ ບອດແຕ່ນ້ອຍບໍ່ທັນໄດ້ ພົບເຕົ່າຫລັງຂົນ ແລນໍ*
*ຕົວຫາກ ຕາຍຜູ້ດຽວຕົວ ກໍບໍ່ມີໃຜໄຫ້*
*ອັນວ່າ ຕົວຕາຍແລ້ວ ທຳທົດຢູ່ຍຸນຍູ່*
*ບັດນີ້ ພຣະຢູ່ເກົ້າຕາຍແລ້ວ ຊິໄກວແບ້ນຢູ່ປູ່ຣູ ແລນໍ*

*ແຕ່ນັ້ນ ສາວສນົມເຂົາກໍສວ່າສວ່າພ້ອມ ຫົວອະເຫີຍນັບເນືອງ*
ຊຽງໝັ້ງງ ກໍລວດບາຍ*ທັນດັ່ງ* ຟາດຕີຝູງຖ້ອນ
ລາງພ່ອງ ເປັນຮອຍແສ້ ໃນຄີງຊ້ຳກ່ຳ ກໍມີ
ລາງພ່ອງ ໜັງເປື່ອຍຫວິ້ນ ດູບຸ້ງວໜ້າຜາກໂນ

ແຕ່ນັ້ນ ເຂົາກັບໄຫ້ ເປັນກະດີສວ່າສວ່າ
ເພື່ອວ່າ ເຈັບປວດຄ້ອນ ບັກຊຽງໝັ້ງງໄລ່ຕີ ແທ້ແລ້ວ

ລາງພ່ອງ ເປັນຮອຍຄ້ອນ ໃນໜັງເລືອດອອກ
ລາງພ່ອງ ປິບແລ່ນຟ້າວ ຕີນຄົ້ນຄົ່ນຄອນ
ເຂົາກໍ ເມື່ອທູນໄຫວ້ ພຣະຍາເມືອງຕົນໃຫຍ່
ພຣະກໍ ມີອາດໃຫ້ຂ້ານ້ອຍ ຝູງຂ້າຊູ່ຄົນ ແທ້ດາຍ
ຝູງຂ້າ ກໍຫາກໂດຍຄວາມເຈົ້າ ຈອມຫົວປົງອາດ ຈິງແລ້ວ
ວ່າໃຫ້ ໄປຮ້ອງຮ່ຳໄຫ້ ຫາເຈົ້າຣາຊະຄຣູ ວ່າດາຍ

---

ທັນດັ່ງ = ໄມ້ຄ້ອນ

ຕູຂ້າ ກໍຫາກເອົາກັນພ້ອມ ໄປມວນໝົດໝູ່
ບັດນີ້ ຊຽງໂກດກ້າ ຕີຂ້າແຫ່ງຕູ ພຣະເອີຍ

ຕັ້ງຫາກ ເຈັບແສບຮ້ອນ ຫລັງຂາດເປັນຮອຍ ພຣະເອີຍ
ບໍ່ອາດ ແຂງໃຈອົດ ເລືອດໄຫລແຖມຍ້ອຍ
*ຕູຈຶ່ງ ເອົາກັນໄຫ້ ແຊວແຊວໝົດໝູ່ ນັ້ນແລ້ວ*
ເພື່ອວ່າ ຊຽງໝັ້ງງໃຈໂຫດຮ້າຍ ຖືຄ້ອນໄລ່ຕີ ພຣະເອີຍ

ແຕ່ນັ້ນ ຣາຊາເຈົ້າ ຈາເຂົາສນົມໜຸ່ມ
*ສູຫາກ ທຳຫລາກແທ້ ຊຽງໝັ້ງງກໍຈຶ່ງຕີ ດອກນາ*
*ແຕ່ນັ້ນ ສາວສນົມຟ້າວ ຂານຄວາມພູວະນາດ*
*ຕູຂ້າ ບໍ່ໄດ້ທຳຫລາກລ້ຽວ ຈາຕ້ານເຍື່ອງໃດ ພຣະເອີຍ*

ມັນຫາກ ຂຳເຂືອກດ້ວຍ ບັງເກີດໂກທາ ພຣະເອີຍ
ແລ້ວເລົາ ບາຍທັນດັງ ຟາດຕີຝູງຂ້າ
ເມື່ອນັ້ນ ຣາຊາເຈົ້າ ພຣະຍາຫລວງຄຶດຄຽດ
ກໍຈຶ່ງ ໃຊ້ໝູ່ຂ້າ ຄົນໃຊ້ຮີບໄປ

ເຂົາກໍ ເຣວຮີບຟ້າວ ພະລັນແລ່ນປົບໄປ
ຮອດທີ່ ເຖິງເຮືອນຊຽງ ກ່າວກອນຖແລງເວົ້າ
ບັດນີ້ ຣາຊາເຈົ້າ ຈອມເມືອງທັນຮີບ
ວ່າໃຫ້ ເມືອພໍ່າພ້ອມ ຕູຂ້ອຍຢ່ານານ ວ່າດາຍ

ແຕ່ນັ້ນ ຊຽງກໍໂດຍຄຳເຈົ້າ ພຣະຍາຫລວງເມືອຮີບ
ຊຽງກໍ ຫາກຄຶດເຫັນຮອບຮູ້ ຈິງແຈ້ງຊູ່ອັນ ຢູ່ແລ້ວ

ອັນວ່າ ອີໝູ່ນັ້ນ ເມື່ອກ່າວຄຳຍົກ ບໍ່ຢ່າແລ້ວ
ປານນີ້ ຈອມເມືອງຟັງຄວາມເຂົາ ຈຶ່ງຮີບເຣວທັນຟ້າວ
ມັນຈຶ່ງ ໄກວແຂນຂຶ້ນ ເມືອໂຮງກົ້ມຂາບ
ເມື່ອນັ້ນ ພຣະບາດເຈົ້າ ທັນອ້າງກໍລວດຖາມ

ກູກໍ ຈຳສາວສນົມໄປໄຫ້ ນຳພຣະຄຣູໄລຈາກ
ມຶງຊ້ຳ ຖືໄມ້ຄ້ອນ ລົງຊ້ຽນໄລ່ຕີ ເຂົາລີ

| | |
|---|---|
| ແມ່ນວ່າ ເປັນສັງແທ້ | ເກີນກາຍຄຳອາດ |
| ບາດແຜ ຮອຍເລືອດຫັ້ | ເຂົາໄຂອ້າງແກ່ກູ |
| ມຶງກໍ ເປັນສັນໃດແທ້ | ຈຶ່ງຕີເຂົາສນົມໜຸ່ມ ຊຽງເອີຍ |
| ຕັ້ງວ່າ ເຈັບບາດຄ້ອນ | ຮອຍແສ້ຊູ່ຄືນ ແທ້ດາຍ |
| ແຕ່ນັ້ນ ຊຽງກໍກົ້ມຂາບໄຫວ້ | ຮັບພາກພູບານ |
| ຂ້ອຍກໍ ຫາກໂດຍຄຳພຣະ | ອາດຍາເປັນເຈົ້າ |
| ວ່າໃຫ້ ພາໄປໄຫ້ | ຫາຄຣູພຣະປູ່ ພາຍພຸ້ນ |
| *ເຂົາກໍ ເຊີນຂ້ານ້ອຍ* | *ອວນໃຫ້ຊູ່ຄືນ ພຣະເອີຍ* |
| *ຂ້າກໍ ບໍ່ຂືນເຂົາແທ້* | *ໂລຫັບຕາອວນກ່ອນ* |
| *ອັນວ່າ ຝູງອີ່ນ້ອງ* | *ບໍ່ມີໃຫ້ ກໍລວດຫົວ ພຣະເອີຍ* |
| ອັນນຶ່ງ ເຂົາກໍໄປເຫັນບ່າວພີ່ນ້ອງ | ນ້ອຍໜຸ່ມຕໍ່ແຍ ພຣະເອີຍ |
| ກໍຫາກ ເລີຍ*ສອນເສັ່ງ* | ບໍ່ຫ່ວງເລີຍຄຳໄຫ້ |
| ພາກັນ ຍິນສນຸກຊູ້ | ຊາຍໂຖງຫອມອ່ອຍ ເອົານັ້ນ |
| ເຂົາກໍ ຍູທ່າງເວົ້າ | ຊິເປັນຊູ້ຊູ່ຄືນ ພຣະເອີຍ |
| ລາງພ່ອງ ຈັບຈ່ອງນິ້ວ | ຊັບສິ່ມຄວາມຣະຫັດ ກໍມີ |
| ລາງພ່ອງ ດຶງເອົາແຂນ | ກອດຄໍຊົມແກ້ມ ກໍມີ |
| ລາງພ່ອງ ກຸມກຸມຄັ້ນ | ບາຍນົມຫລາຍເທື່ອ ກໍມີ |
| ຂ້ອຍກໍ ອົດບໍ່ໄດ້ | ຈຶ່ງບາຍແສ້ໃສ່ຫລັງ ພຣະເອີຍ |
| ເຂົາຫາກ ກາຍຄຳເວົ້າ | ເໜືອຫົວມີອາດ ເສັ່ງນັ້ນ |
| ກໍຫາກ ດູທີ່ຜິດຜອກພົ້ນ | ຈຶ່ງຖືຄ້ອນໄລ່ຕີ ພຣະເອີຍ |
| *ເມື່ອນັ້ນ ພຣະຍາກໍກື້ວໂກດໃຫ້* | *ຝູງໝູ່ສາວສນົມ ມາກແລ້ວ* |
| *ດີທໍ່ວ່າ ຊຽງບໍ່ຟັນຫົວເສັ່ງ* | *ສຳແດງຊິມາໄຫ້* |
| *ອັນວ່າ ເຂົາຝູງນີ້* | *ເປັນຍິງໂຖງໂລກ ອີ່ຫລີແລ້ວ* |
| *ເຂົານີ້ ຕັ້ງວ່າມາຖ່ອຍຮ້າຍ* | *ຊິພາຜົ້ງບຜ່ອນເສັ່ງ ແທ້ດາຍ* |

---

ສອນເສັ່ງ = ຫົວຫລິ້ນ

ກູຈັກ   ຈຳໃຫ້ເຂົາເປັນຍິງຄຳຮາງ  *ໃສ່ທັນ*ຄົນຮ້າຍ
ຄ້ອມວ່າ ພຣະດ່າແລ້ວ   ແລ້ວເລົ່າກະເຈົາໃຈ
ພຣະກໍ   ບອກໃຫ້ທັນເສນາ   ຊູ່ຄົນມາພ້ອມ
ແຕ່ນັ້ນ   ເຂົາກໍໂດຍອາດເຈົ້າ   ພຣະຍາເມືອງເລີຍແລ່ນ
ເຖິງທີ່   ພຣະບາດເຈົ້າ   ປະນົມນ້ອມຊູ່ຊຸນ

ເມື່ອນັ້ນ ພຣະຍາຫລວງເຈົ້າ   ມີຄຳໂອວາດ
   ບອກສໍ່າຂ້າ   ເຕີນຕ້ານຊູ່ອັນ

ບັດນີ້   ຄວນທີ່ເຮົາແຕ່ງມ້ຽນຄາບເຈົ້າ ພຣະປູ່ຄຣູຫລວງ ກ່ອນແລ້ວ
ເຂົາກໍ   ໂດຍຣາຊາ   ລວາດໄປມວນພ້ອມ
ດີແຕ່   ສົນສົນຂ້າ   ເສນາຫລາຍໝູ່
ເຂົາກໍ   ຕົກແຕ່ງຫ້າງ   ທໍແກ້ວ*ສົ່ງສະການ*

ຄ້ອມວ່າ ບໍຣະບວນແລ້ວ   ເວນຂອງທານທອດ
ແລ້ວຈຶ່ງ ໝາຍຢາດນ້ຳ   ນຳໃຫ້ສົ່ງເຖິງ
ຄັນວ່າ   ບໍຣະບວນແລ້ວ   ເອົາກັນລາເລີກ
ໃຜກໍ   ເມືອສູ່ຫ້ອງ   ເຮືອນຢ້າວແຫ່ງຕົນ

>> ແຕ່ນັ້ນ ພຣະຍາກໍສເວີຍຍັງໝ້ຽງ   ອົມປູນແກ້ມໄບ່ ໄປນັ້ນ
ຊຽງກໍເລົ່າ ກິນພ່ຳພ້ອມ   ພຣະຍາເຈົ້າສົ່ງດຽວ ແທ້ດາຍ
ແຕ່ນັ້ນ ຊຽງກໍຈຶ່ງອົມຍັງໝ້ຽງ   ປົນປູນແກ້ມໄບ່ ໄປນັ້ນ
ແລ້ວຊຽງ ກໍຄຶດຢາກຜິດ່າແທ້   ເລີຍນ້າວສີ່ຄຳ ແທ້ດາຍ

ມັນກໍ   ເອົາຍັດໃສ່ປຸມແກ້ມ   ໃສຢູ່ຮົງຮົງ ແທ້ແລ້ວ
ທັງເລົ່າ ເອົານ້ຳໝາກມາທາ   ຕື່ມແຖມຍັງແກ້ມ
ແຕ່ນັ້ນ   ພຣະກໍຈຶ່ງຫລີງດູໜ້າ   ເຫັນຊຽງແກ້ມໄບ່ ໄປນັ້ນ
ເຈົ້າຈຶ່ງ   ມີອາດທ້ວງ   ອົມໝ້ຽງໄບ່ໃສ ແທ້ນໍ

ຕັ້ງຫາກ ຮົງຮົງເຫລື້ອມ   ຄືມະນີລູກປະເສີດ
ມຶງຈົ່ງ   ຫລີງເບິ່ງແກ້ມ   ກູນີ້ຊິເບິ່ງໃສ

---

ໃສ່ທັນ = ໃສ່ໂທດ, ລົງໂທດ / ສົ່ງສະການ (ສສ ສັງສະກາຣ) = ພິທີກ່ຽວກັບການປົງສົບ

ແຕ່ນັ້ນ ຊຽງກໍຮັບພາກຕ້ານ ຂານຕອບຣາຊາ
*ກໍຫາກາ ຮິງຮິງໃສ ດັ່ງທຳໝາເຖົ້າ ນັ້ນແລ້ວ*
ແຕ່ນັ້ນ ເຮັ້ງໂຍເຈົ້າ ຈອມເມືອງຄຶດຄຽດ
ກໍເລົ່າ ນາບເພັ້ງເພັ້ງ ຈາຂ້າຜູກຕີ

ມຶງສັງ ມາຫາຖ້ອຍ ຖຽງຄວາມຜິດ່າ ກູນີ້
ມຶງນີ້ ມັກເງື່ອນງ້າວ ບໍ່ມີມົ້ມດາບໄຊ ແທ້ດາຍ
ແຕ່ນັ້ນ ຊຽງກໍຖວາຍກອນໄຫວ້ ພູມີກົ້ນຂາບ
*ທານໂທດຖ້ອນ ໃສເຫລື້ອມດັ່ງບໍ ນັ້ນແລ້ວ*

>> ເມື່ອນັ້ນ ພຣະຍາກໍຄຶດຢາກຜູກແທ້ ມັນຜອກຫລອນຄວາມ ແທ້ດາຍ
ບັດນີ້ ກູຈັກຕິຄະນິງຫາ ເຫດຈັກມີເມືອໜ້າ
ແຕ່ນັ້ນ ຊານມົນເຈົ້າ ພຣະຍາຫລວງທັກແປ່ ເສັ່ງແລ້ວ
*ມຶງຈິ່ງ ໄປຫາປາກງ່າມຖ້ອນ ມາຄ້ຳສີກຊານ ຊຽງເອີຍ*

ແຕ່ນັ້ນ ຊຽງກໍຄຶດສລາດຮູ້ ຄຶດຢູ່ໃນໃຈ
ມັນຈິ່ງ ລາພູບານ ຮີບໄປທັງຟ້າວ
ແຍງຫົນຫ້ອງ ຄາເມບ້ານນອກ
ເລົ່າຈັດ ເອົາແຕ່ຄົນສິບແຫວ່ງຮ້າຍ ໂຮມໄວ້ອະເນກນອງ

ບັດນີ້ ອັນວ່າ ຣາຊາໃຫ້ ສູເມືອຄ້ຳຊີກ ຊານແລ້ວ
ແຕ່ນັ້ນ ເຂົາກໍເລົ່າຄຶດຄ້ອຍ ບັກຊຽງໝັ້ງບໍ່ຍອມ ງ່າຍແລ້ວ
ມັນຈິ່ງ ໄປກົດເອົາຫລາຍບ້ານ ເກນຄົນເຖິງຊາວແປດ
ຊຽງເລືອກ ເອົາແຕ່ສິບແຫວ່ງຮ້າຍ ແປນແຂ້ວຈິ່ງຖືກການ ວ່າດາຍ

ຄັນວ່າ ໝົດໝູ່ແລ້ວ ຊຽງແຕ່ງເດົາດາ
ມັນຈິ່ງ ຈຳເຂົາຖື ຫາບນຳຫລັງແທ້
ຊຽງກໍ ພາເມືອຫ້ອງ ນະຄອນຫລວງເມືອງໃຫຍ່
ເຂົາກໍ ລຸດລຸດຍ້າຍ ນຳທ້າວແທ່ຫລັງ ທັ້ນແລ້ວ

ດູທີ່ ຊຽງໝັ້ງນານມາແທ້ ຊານຫລວງກໍແລ້ວກ່ອນ
ຄອບວ່າ ຝູງໝູ່ຂຸນໃຫຍ່ທ້າວ ກະທຳສ້າງສ່ຳບວນ

พระยา ຄອງຊຽງໝັ້ງ ຫລາຍວັນມີມາກາ
ເຈົ້າກໍ ຄອງຊູ່ນີ້ ນານປີ້ງກໍບໍ່ເຫັນ ແທ້ແລ້ວ

ແຕ່ນັ້ນ ຣາຊາເຈົ້າ ຄອງນານເລີຍຈົ່ມ
ກູກໍ ໃຊ້ແຕ່ພຸ້ນ ປານນີ້ກໍຈຶ່ງມາ ແທ້ນໍ
ຮອຍທີ່ ມັນໄປຫລິ້ນ ເປັນຄວາມກັບກ່າຍ ເສັງແລ້ວ
ຄວນກູ ຈຳຈີ່ໄວ້ ຄາຊີຖິ້ມໃສ່ຄໍ ບໍ່ຢ່າແລ້ວ

ບັດນີ້ *ທູຕາ* ໝັ້ງງ ເຮວຮີບເດີນທາງ
ຝູງຄົນເຫັນ ສນັ່ນເມືອງເລີຍຫ້ອງ
ເຂົາກໍ ຫົວຂວັນເຈົ້າ ທັງເມືອງສວ່າສວ່າ
ທັງໃຫຍ່ນ້ອຍ ຫົວຈື້ນນີ້ນັນ

ຕັ້ງຫາກາ *ອັດທິຈັບ*ແທ້ ເຮົາເອີຍມາເບິ່ງ
ຊຽງໄດ້ໝູ່ ສິບແຫວ່ງຮ້າຍ ມາແທ້ມາກຫລາຍ ເຈົ້າເອີຍ
ໃຜເດ ເປັນຜູ້ຈຳມັນໃຫ້ ຈັດຫາຄົນສິບແຫວ່ງ ມານີ້
ຈັກວ່າ ເປັນເຫດດ້ວຍ ການບ້ານເຍື່ອງໃດ ນັ້ນເດ

ແຕ່ນັ້ນ ຊຽງກໍພາເຂົາຟ້າວ ເມື່ອເຖິງຄຸ້ມໃຫຍ່
ມັນຈຶ່ງ ບອກໝູ່ສິບແຫວ່ງຖ້າ ເຊົາຫັ້ນຈອດເກີຍ ກ່ອນຖ້ອນ
ເຮົາຈັກ ເມືອທູນໄຫວ້ ຈອມຫົວພໍຮູ້ຂ່າວ
ຄັນວ່າ ພຣະຫາກມີອາດໃຫ້ ສັນໃດແທ້ກໍຈຶ່ງໂດຍ

ບັດແລ້ວ ຊຽງກໍພາເຂົາຂຶ້ນ ໂຮງຫລວງກົ້ມຂາບ
ແຕ່ນັ້ນ ພຣະບາດເຈົ້າ ຫລີງຢັ້ງມຜໍ່ດູ
ກໍຈຶ່ງ ເຫັນສິບຫວິ້ນ ຝູງຄົນຊາວແປດ
ຕັ້ງວ່າ ສິບແຫວ່ງລ້ອນ ເຫັນແຂ້ວຂູ່ຄົນ ແທ້ນໍ

ພຣະຍາ ແລເບິ່ງແລ້ວ ແລ້ວເລົ່າເລີຍຫົວ
ຝູງໝູ່ ນາງສນົມເຫັນ ກໍເລົ່າຫົວເຟືອນຟື້ນ

---

ທູຕາ = ຄົນຮັບໃຊ້ພຣະຍາ / ອັດທິຈັບ (ພາສາເວົ້າທ້ອງຖິ່ນ), ອັດສະຈັນ (ປລ ອັຈສຣິຍ, ສສ ອັຈສຣຍ) = ປລາດ, ງຶດງໍ້

ຊຽງນີ້ ຕັ້ງວ່າມີຜຍາລ້າວ ລັງຄວາມກັບກ່າຍ ຈິງນໍ
*ກູບອກ ໃຫ້ໄປຫາປາກງ່ານໄມ້ ກໍມາໄດ້ປາກງ່ານຄີນ ນີ້ເດ*

ແຕ່ນັ້ນ ພຣະຍາກໍຈຶ່ງຈຳເຂົາໃຫ້ ໜີເມືອເຮືອນເຮວຣີບ
ເຂົາກໍ ໂດຍອາດເຈົ້າ ຍໍມືໄຫວ້ລວດລາ

ເຂົາເລົ່າ ເມືອສູ່ບ້ານ ເລີຍຈົ່ມນຳທາງ
ແຊວແຊວສຽງ ຈົ່ມເມືອເຟືອນພື້ນ
ຕັ້ງວ່າ ບໍ່ມີສັງແທ້ ຈອນຫົວບໍ່ປີງອາດ ເຮົາເອີຍ
ຊຽງໝັ້ງງ ຕັ້ງຫາກມາຖ່ອຍແທ້ ຈຶ່ງໃຍເວົ້າຢອກເຮົາ ດອກນາ

ມັນກໍຫາກ ຕົວະໃຫ້ມາເສັ້ຽໜ້າ ລັກອາຍຄີງເຮົາຄອບ ມັນແລ້ວ
ຕັ້ງຫາກ ມາຄຽດແທ້ ພໍຂ້າໃຫຍ່ຫລວງ ເຈົ້າເອີຍ

>> ແຕ່ນັ້ນ ພຣະຍາຫລວງເຈົ້າ ພິຈານຄືດຢູ່
ບັດນີ້ ກູຈັກຜີໃຫ້ຜຍາມັນຜ່ອນຊ້າ ເສັ້ຽຫລຸ້ຍຫລ່ອຍລົງ ແທ້ແລ້ວ
ກູຈັກ ຜອນຜີໃຫ້ ຜຍາຊຽງຕົກຕ່ຳ ເສັ້ຽແລ້ວ
ເອົາໃຫ້ມັນ ຕົກຕ່ຳປູ້ ເປັນຈ້າດັ່ງກະຕໍ ນັ້ນຖ້ອນ

*ບັດນີ້ ກູຈັກໃຫ້ເຂົາເອົາຍັງແຮ້ງ ມາແກງໃຫ້ຊຽງຖ່ອຍ ກິນຖ້ອນ*
*ມັນກໍ ຈັກຕົກຜ່ອນຊ້າ ຜຍາຫລຸ້ຍບໍ່ສົງ ແທ້ແລ້ວ*

ເຫດວ່າ ແຮ້ງເປັນສັດຖ່ອຍຮ້າຍ ກິນເໜົ່າຂອງເໝັ່ນ ມາກແລ້ວ
ກູຈັກ ເອົາໃຫ້ມັນເສັ້ຽປັນຍາ ຫລູ້ຍດູປາງນີ້
ແຕ່ນັ້ນ ພຣະຈຶ່ງຈຳເຂົາໃຫ້ ຜີເອົາແຮ້ງໃຫຍ່
ເລີຍເລົ່າໄດ້ ຖວາຍທ້າວບໍ່ນານ

ພຣະຍາ ກໍຈຶ່ງໃຫ້ເຂົາແກງຍັງແຮ້ງ ຂົນຂວາຍຫາໃສ່
ມີທັງ ໝາກພິກນ້ອຍ ເກືອພ້ອມເຄື່ອງຫອມ
ຄ້ອມວ່າ ບໍຣະບວນແລ້ວ ເອົາພາມາໃສ່
ອັນວ່າ ເຂົາເລືອກຊ້ອມ ເອົາແທ້ແຕ່ງປະສົງ ທັ້ນແລ້ວ

ແຕ່ນັ້ນ ຊຽງກໍຄືດສລາດຮູ້ ຢັ້ງມຢັ່ງໃນໃຈ
ບັດນີ້ ຄວນກູເມືອເຮືອນຫລວງ ເຝົ້າພຣະຍາເມືອງເຈົ້າ

ຄ້ອມວ່າ ມັນຄຶດແລ້ວ		ເຮວຮີບພະລັນໄປ
	ຄອນຄອນເຖິງ		ຮອດໂຮງພຣະຍາເຈົ້າ
ຊຽງກໍ ປະນົມມືໄຫວ້		ຣາຊາກົ້ມຂາບ
ແຕ່ນັ້ນ ພຣະບາດຜູ້		ທັນອ້າງກໍເລົ່າຖາມ

ມຶງກໍ ໄດ້ກິນຍັງເຂົ້າ		ແລງງາຍແລ້ວຫລືໄປ່ ຊຽງເອີຍ
	ມັນຕອບຕ້ານ		ຂານເຈົ້າວ່າຍັງ ພຣະເອີຍ

ຂ້າກໍ ມາແຕ່ເຊົ້າ		ບໍ່ທັນຢາກກິນສັງ ພຣະເອີຍ
ຫລອນວ່າ ພຣະຫາກມີອາຫານ	ຊິຢູ່ຄອງຕົວຂ້າ
ກໍຈິ່ງ ເຮວພະລັນຟ້າວ		ມາຖອງເຖິງບາດ ພາຍພີ້
	ຂໍອະນຸຍາດເຈົ້າ		ບໍ່ທັນໄດ້ຮັບປະທານ ດອກນາ

ແຕ່ນັ້ນ ຣາຊາຕ້ານ		ນໍາຊຽງບົນບອກ
ກູຫາກສເອີຍ ມາແຕ່ເຊົ້າ		ຍັງທັ້ນມາກຫລາຍ ທ່ານເອີຍ
ມຶງຈິ່ງ ໄປຫາກິນຍັງຊົ້ວ		ກຸດໂຕຕົວໃຫຍ່ ນັ້ນຖ້ອນ
ຕັ້ງວ່າ ແຊບແທ້ແທ້		ກູນີ້ຫາກອີ່ມເສັຽ ດອກນາ

ແຕ່ນັ້ນ ຊຽງໝັ້ງບໍ່ຊັກຊ້າ		ເຮວຮີບໄປກິນ
ບໍ່ຄຶດ ວ່າຊິມີໃຜ*ຫິງສາ*		ຊິບຽດຕົວລວງລ້ຽວ
ມັນກໍ ຢຽວວ່າພຣະຍາຫລວງເຈົ້າ	ຣາຊາຕົນພີ້
	ຮັກນ້ອງແກ້ວ		ສເມີດ້ານດັ່ງຕາ ນັ້ນດາຍ

ພຣະຍາ ພອຍເລົ່າຈໍາໃຫ້ມັນກິນແຮ້ງ	ຕົວຫລວງຊີ້ນຫຍາບ
ເຈົ້າຕົວະ ວ່າແມ່ນແກງໄກ່ແທ້	ບັກຊຽງໝັ້ງກໍຈິ່ງກິນ

ຕັ້ງວ່າ ຊີ້ນຫຍາບຮ້າຍ		ຄາວຍິ່ງແສນຖນັດ ມາກແລ້ວ
ອັນນີ້ ບໍ່ໃຊ່ຂອງຄົນກິນ		ເງື່ອນໝູໝາຮ້າຍ
ຫຍາບກໍຫາກ ທໍາພຽນຄ້ຽວ		ກືນລົງຫລາຍເທື່ອ ເລີງແລ້ວ
ຕັ້ງຫາກ ດູແຊບແທ້		ກໍເລີຍລ້າງສ່ວຍມື

---

ຫິງສາ (ປລ ຫິງສາ) = ຄວາມບັງບຽດ, ການທໍາຮ້າຍໃຫ້, ການຄຶດໃຫ້ເຂົາໄດ້ທຸກ

แล้วจึ่ง กินยังน้ำ　　　　สีฟันบ้วนปาก
ຊຽງຟ້າວ ຫາໝາກຄ້ຽວ　　　　ພາເຂົ້າບໍ່ເບິ່ງຫລຽວ ແທ້ແລ້ວ
ແຕ່ນັ້ນ ພຣະຍາຫລວງເຈົ້າ　　　　ຖາມດູແຊບບໍ່ ຊຽງເອີຍ
ອັນວ່າ ແກງໄກ່ເຖົ້າ　　　　ຕົວນີ້ອ່ອນນົວ ບໍ່ເດ

ແຕ່ນັ້ນ ຊຽງຕອບຖ້ອຍ　　　　ຮັບພາກຣາຊາ
ຕັ້ງຫາກ ດູເຄັມເສັງ　　　　ຫຍາບຄາວເຫລືອລົ້ນ
ຕັ້ງວ່າ ບໍ່ເປັນຕາກິນແທ້　　　　ອຶດເອົາໄປເທຖອກ ເສັງຖ້ອນ
ໄປໃຫ້ ໝາຂີ້ເຮື້ອນ　　　　ກິນແທ້ກໍຈຶ່ງສົມ ພຣະເອີຍ

ແຕ່ນັ້ນ ພຣະຍາຫລວງເຈົ້າ　　　　ຂານຄຳບົນບອກ ຈິງແລ້ວ
ອັນນີ້ ຕັ້ງວ່າແມ່ນແກງໄກ່ຜູ້　　　　ຕົວຮ້າຍເອີ່ນຢູ່ບົນ ນັ້ນແລ້ວ

*ໃນຕົວ ມັນມີງິ້ວຄວາຍພ້ອມ　　　　ໝູ່ໝາເປັດໄກ່ ຊຽງເອີຍ*
*ຝູງໝູ່ ຊາກເໜົ່າຮ້າຍ　　　　ເຂົາຊ້ຳແຮ່ງສແວງ ທ່ານເອີຍ*
*ສົມທີ່ ມັນຄາວແທ້　　　　ແນວກິນຊາກເໜົ່າ ຊຽງເອີຍ*
*ກູຈຶ່ງ ເອົາແມ່ແຮ້ງ　　　　ແກງຂ້າແມ່ຜຍາ ແທ້ແລ້ວ*

ບັດນີ້ ມຶງໄດ້ກິນແກງແຮ້ງ　　　　ຕົວຫລວງຮ້າຍຊົ່ວ ຈິງແລ້ວ
ຜຍາກໍຫາກຫລຸ້ຍ　　　　ບໍ່ແຫລມລ້ວນດັ່ງຫລັງ ທ່ານເອີຍ
ແຕ່ນັ້ນ ຊຽງໝັ້ງງອຶດຄັ່ງແຄ້ນ　　　　ຫົມມະໂນນານສວ່າງ
ມັນກໍ ຄຶດຮ່ຳໄວ້　　　　ໃຈນ້ອຍຄຽດໃນ ແທ້ແລ້ວ

ອັນວ່າ ພຣະຍາຫລວງນີ້　　　　ຊັງກູເປັນຂນາດ ແລ້ວນໍ
ບັດນີ້ ກູຈັກຂ້ຳຂາດໃຫ້　　　　ຂືນຊ້ຳສິ່ງມີ ກ່ອນແລ້ວ

ແຕ່ນັ້ນ ຊຽງເລົ່າລາລົງຫ້ອງ　　　　ໜີເມືອຟ້າວຟັ່ງ
ຮອດທີ່ຫ້ອງ　　　　ເຮືອນຢ້າວຄຽດຟູມ

ບັດນີ້ ສັງບໍ່ຄຶດເຖິງປິດຕາເຈົ້າ　　　　ມໍຣະນາຕາຍຈາກ ເສັງນັ້ນ
ພຣະກໍ ສອນສັ່ງໃຫ້　　　　ຄຳຮູ້ຕໍ່ຫູ ແທ້ດາຍ

สั่งบ่ คึดว่าสองก่ำพ้า แຂງເຂື່ອນເມືອງຫລວງ
ຄວນວ່າ ມີໃຈຮັກ ແຫ່ງກູນາມນ້ອງ
ອັນນີ້ ຕັ້ງວ່າຜອນຜີຂ້າ ຍັງກູໂດຍອາດ ຈິງນໍ
ສັງບໍ່ ຄຶດວ່າສອງກ່ຳພ້າ ເອົາລ້ຽງພໍ່ກັນ ນັ້ນເດ

ຊາດທີ່ ໝໍປົວຫລ້າງ ໃຫ້ຂືນຄຸນທັງຜອກ ຈິງດາຍ
ມັນຈຶ່ງ ຫາຍຊ່ວງໄຂ້ ໃນເນື້ອຢູ່ເຢັນ ແທ້ແລ້ວ

ຄ້ອມວ່າ ຊຽງຈົ່ມແລ້ວ ຕົ້ນສົ້ມປ່ອຍສະຫົວ
ທັງຕີນຕົວ ສວ່າຍສີສຶງລ້າງ
ພໍໃຫ້ ຫາຍໂພຍຕ້ອງ ອິນຕາຍບັງບຽດ
ຂໍໃຫ້ ມີຜຍາແກ່ກ້າ ສູງລົ້ນລື່ນຫລັງ ແທ້ແລ້ວ

>> *ແຕ່ນັ້ນ ຊຽງຈຶ່ງໄປເກັບເອົາຂີ້ແຮ້ງ ມາຕອກເປັນສໍ ແທ້ແລ້ວ*
*ຊຽງຈຶ່ງ ນຳເມືອຖວາຍ ພຣະຍອດເມືອງເປັນເຈົ້າ*
ເມື່ອນັ້ນ ພຣະຍາບາຍດູແລ້ວ ໃສງາມກ້ຽງກ່ອງ
ກໍຈຶ່ງ ຈາປາກຕ້ານ ຖາມຊັ້ນໂຈດຊຽງ

ຊຽງເອີຍ ມຶງຫາກໄປຮ່າວໄດ້ ສໍທີ່ທາງໃດ ມາເດ
ຕັ້ງຫາກ ງາມໃສສຸດ ດັ່ງໂດຍສໍແກ້ວ
ເປັນຕາໃຊ້ ຊຽນຄຳຄຶງມ່ອນ
ຍາມເມື່ອ ຊຽນຂີດຂໍ້ ຄຶງແມ້ງມ່ອນມີ ແທ້ນາ

ແຕ່ນັ້ນ ຊຽງຕອບຖ້ອຍ ຮັບພາກເຮົງໂຍ
ອັນວ່າ ຝູງໝູ່ໄທຄວາຍເກັບ ຄ່ອຍເອົາມາຕ້ອນ
ຂ້າກໍ ນຳມາໃຫ້ ຖວຍພຣະຍາຕີນພີ່
ຂໍໃຫ້ ພຣະຍ່ຳເກົ້າ ເອົາໄວ້ຂີດຊຽນ ທັ້ນຖ້ອນ

ແຕ່ນັ້ນ ພຣະຈຶ່ງບາຍສໍແຕ້ມ ດູຊຽນຂີດບໍ່ອອກ
ສໍນີ້ ຕັ້ງວ່າແຂງຜອກພົ້ນ ປະມານແທ້ກໍເລົ່າເລັຽ
ພຣະກໍ ເລັຽເລັຽແລ້ວ ເອົາມາຊຽນຍັງບໍ່ອອກ
ພຣະຈຶ່ງ ກອຍກ່າວຖ້ອຍ ຖາມຊັ້ນໂຈດຊຽງ

ອັນວ່າ ສໍມຶງນີ້ ດູຊຽນຂິດບໍ່ອອກ ຊຽງເອີຍ
ກູກໍ ຫາກບໍ່ມີທ່ອນຮູ້ ອີ່ສັງແທ້ກໍບໍ່ຄື
ແຕ່ນັ້ນ ຊຽງຕອບຕ້ານ ຮັບພາກຣາຊາ
*ຂ້າບາດ ກິນຕົວມັນ ພີ່ພຣະຍາພັດກິນຂີ້*

ຂ້າຫ່ຽວ ໄປເກັບເອົາຂີ້ແຮ້ງ ມາຕອກເປັນສໍ ພຣະເອີຍ
ແລ້ວຈິ່ງ ນໍາມາຖວາຍ ສິ່ງຄືນຄຸນໃຫ້
*ຍັງວ່າ ເປັນພຣະຍາລໍ້າ ສເວີຍເມືອງທີ່ງແທ່ນ*
*ມາຄວ່າ ກິນຂີ້ແຮ້ງ ຂຍອນຊໍ້າຜອກບໍ່ອາຍ ແທ້ນໍ*

ເພິ່ນຜູ້ ກິນຕົວນັ້ນ ພໍປະຫຽນດູກ່ອນ ພຣະເອີຍ
ອັນນີ້ ຕັ້ງວ່າເລັ່ງກິນກ້ອນຂີ້ແຮ້ງ ກິນແທ້ກໍບໍ່ຄວນ

*ໃຜຜູ້ ກິນຂີ້ແຮ້ງ ຕົວຜ່ອນເສັ່ງສັດ ມາກແລ້ວ*
*ເໝືອນດັ່ງ ດຽວເດັ່ງຣະສານ ບໍ່ໃຊ່ຄົນຈິງແທ້*
ບັດນີ້ ຢ່າໄດ້ຜອນຜີໃຫ້ ທິງສາບັງບຽດ ໃຜເນີ
ບາດວ່າ ຂືນຄາດໃຫ້ ພາເສັ່ງໜ້າຄອບເຂົາ ແທ້ແລ້ວ

ຄ້ອນວ່າ ຊຽງກ່າວແລ້ວ ມັນເລີກລາເມືອ
ເຖິງເຮືອນຕົນ ນັ່ງນອນບໍ່ມີຮ້ອນ
ຄຶດເຖິງ ກົນການແກ້ ພຣະຍາເມືອງໂດຍເລດ
ສໍຂີ້ແຮ້ງ ຄວາມແຄ້ນຈາກຊຽງ

>> ແຕ່ນັ້ນ ພຣະຍາຫລວງເຈົ້າ ຣາຊາຄຶດຄຽດ
ກໍຈິ່ງ ມີອາດໃຫ້ ສາວໃຊ້ໝູ່ສນົມ
*ບັດນີ້ ສູຈົ່ງໄປຂີ້ໃສ່ເຮືອນຊຽງໝັ້ງງ ໃຫ້ມັນເຕັມໝົດຊູ່ບ່ອນ*
*ອັນວ່າ ໝອນມ່ານມຸ້ງ ຕຽງຕູ້ຢ່າໃຫ້ເຫລືອ ແທ້ເນີ*

ມວນໝູ່ ສາວຊ່ວງໃຊ້ ໂດຍອາດພຣະຍາຫລວງ
ເຂົາເລົ່າ ພາກັນໄປ ສູ່ເຮືອນຊຽງໝັ້ງງ
ຄັນວ່າ ໄປເຖິງແລ້ວ ສາວສນົມເບີຍບອກ
ບັດນີ້ ພຣະບາດມີອາດໃຫ້ ມາຂີ້ໃສ່ເຮືອນ ວ່າເດ

ແຕ່ນັ້ນ ຊຽງຕອບຖ້ອຍ ຖາມໝູ່ສາວສນົມ
ຈອມຫົວ ມີກູນາສັນໃດ ໃຫ້ບອກມາຈິງແຈ້ງ
ເມື່ອນັ້ນ ສາວສນົມພ້ອມ ປົງຄວາມບົນບອກ
*ພຣະຫາກມີ ອາດຍາມາທີ່ນັ້ນ ຈຳໃຫ້ຂີ້ສິ່ງດຽວ ທ່ານເອີຍ*

ເມື່ອນັ້ນ ຊຽງຕອບຖ້ອຍ ເວົ້າຕໍ່ສາວສນົມ
ຂ້ອຍກໍ ໂດຍຄຳພຣະ ອາດຍາບໍ່ຂືນໄດ້
ສູຈົ່ງ ເອົາກັນຂີ້ ຕາມຄວາມພຣະຍາກ່າວ ນັ້ນຖ້ອນ
*ຖ້າວ່າ ເຮົາບໍ່ໂດຍອາດເຈົ້າ ກໍກົວຍ້ານໂທດມີ ແທ້ນາ*

*ບັດນັ້ນ ເຂົາກໍເອົາກັນຂີ້ ທັງຕົດແກມຍ່ຽວ ກໍມີ*
*ລາງຜ່ອງ ຄາກຂີ້ເຫີ່ແລ້ວ ທັງຊ້ຳຖົ່ມນ້ຳລາຍ*

ອັນນີ້ ມັນຫາກກາຍຄວາມເວົ້າ ເໜືອຫົວຍັງຂມ່ອມ ແທ້ແລ້ວ
ຊຽງກໍ ຈັບຄ້ອນໄດ້ ຕີຊ້ຽນໄລ່ລົງ ແທ້ແລ້ວ
ສູນີ້ ຕັ້ງຫາກກາຍຄວາມເຈົ້າ ເໜືອຫົວມີອາດ ມານັ້ນ
ກໍຫາກ ມາຖ່ອຍພົ້ນ ບໍ່ມີຮູ້ຮ່ອມຊຸນ ແທ້ນໍ

ແຕ່ນັ້ນ ຊຽງກໍເອົາຍັງຄ້ອນ ຕີເຂົາໝົດໝູ່
ອັນວ່າ ຫລັງແຕກຍ້ອຍ ຮອຍແສ້ເລືອດໄຫລ
ລາງຄົນ ປົບຟັ່ງຟ້າວ ໂຕນເຮືອນສິ້ນຂາດ ກໍມີ
ທັງເລົ່າ ປະໄປ່ເນື້ອ ແປນກົ້ນກໍຮີບໂຕນ

ລາງຄົນ ປົບຕາຍຢ້ານ ໂຕນເຮືອນ*ສິ້ນຂວິ່* ກໍມີ
ທັງເລົ່າ ປະເຕົ່ານ້ອຍ ດູຮ້າຍອາດແກ່ຕາ ເຈົ້າເອີຍ

ລາງພ່ອງ ດັນກັນລົ້ມ ເນືອງນອງຂືນໄຂວ່ ກໍມີ
ລາງພ່ອງ ໂຕນຈາກຢ້າວ ເຊລົ້ມຄາບຂີ້ດິນ
ລາງພ່ອງ ຕີນຕຳຕ້ອງ ຕໍ່ຫີນເລືອດອອກ ກໍມີ
ລາງພ່ອງ ປົບປ່ວງຟ້າວ ຊູນໄມ້ໜ້າຜາກໂນ

---

ສິ້ນຂວິ່ (ລກ) = ສິ້ນເຊັ່ງ, ສິ້ນຫລູດລົງ

| | | |
|---|---|---|
| ເຂົາກໍ | ຍິນກົວຢ້ານ | ຊ່ຽງຕີປີບແລ່ນ ໜີແລ້ວ |
| ອັນວ່າ | ສຽງໂຫ່ໄຫ້ | ທົ່ວພ້ອມສນັ່ນເມືອງ |
| ແຕ່ນັ້ນ | ເຂົາກໍເມື່ອກາບໄຫວ້ | ທູນບາດພຣະຍາເມືອງ |
| | ຖວາຍຄຳຄວນ | ຊູ່ອັນເອົາຕ້ານ |
| ບັດນີ້ | ຈອມຫົວໃຊ້ | ມວນຕູໝົດໝູ່ |
| ວ່າໃຫ້ | ພາໝູ່ພ້ອມ | ໄປຂີ້ໃສ່ເຮືອນ ວ່າດາຍ |
| ຝູງຂ້າ | ໂດຍອາດເຈົ້າ | ຍ່ຳຂມ່ອມບໍ່ມີຂືນ |
| ກໍຫາກາ | ພາກັນໄປ | ຂີ້ໃສ່ເຮືອນຊ່ຽງໝັ້ງງ |
| ບັດນີ້ | ຊ່ຽງໄລ່ຕີຝູງຂ້າ | ທັງຫລາຍໝົດຄູ່ ຄົນແລ້ວ |
| ຕັ້ງວ່າ | ຫລັງແຕກຍ້ອຍ | ຮອຍແສ້ເລືອດໄຫລ ພຣະເອີຍ |
| ຝູງຂ້າ | ກົວເກງຢ້ານ | ຊ່ຽງຕີປີບແລ່ນ |
| ພາກັນ | ໂຕນຈາກຍ້າວ | ມັນແທ້ແລ່ນໜີ ພຣະເອີຍ |
| ແຕ່ນັ້ນ | ຣາຊາເຈົ້າ | ພຣະຍາຫລວງກິ້ວໂກດ |
| ກໍຈິ່ງ | ຈຳຂ້າໃຊ້ | ທັນທ້າວທ່ານຊ່ຽງ |
| ເຂົາກໍ | ໂດຍຄວາມເຈົ້າ | ເຣວພະລັນເລັງແລ່ນ |
| ຮອດທີ່ | ຊ່ຽງໝັ້ງງແລ້ວ | ຂານເອົ້າຊູ່ອັນ |
| ບັດນີ້ | ເໜືອຫົວເຈົ້າ | ທັນຊ່ຽງໂດຍຮີບ |
| ວ່າໃຫ້ | ເມື່ອພໍ່າພ້ອມ | ຝູງຂ້າຢ່ານານ ທ່ານເອີຍ |
| ແຕ່ນັ້ນ | ຊ່ຽງຕອບຖ້ອຍ | ໂດຍຣາດຣາຊາ |
| ມັນກໍ | ເຣວພະລັນເມືອ | ພໍ່າໂດຍຄົນໃຊ້ |
| ຄັນວ່າ | ເຖິງໂຮງກວ້າງ | ປະນົມກອນກົ້ມຂາບ |
| ເມື່ອນັ້ນ | ພຣະບາດເຈົ້າ | ບຸນກວ້າງກ່າວຖາມ |
| ມຶງກໍ | ເປັນສັນໃດແທ້ | ຈຶ່ງຕີເຂົາສນົມໝຸ່ມ ຊ່ຽງເອີຍ |
| ກູກໍ | ມີອາດໃຫ້ | ເຂົານັ້ນກໍຈຶ່ງໄປ ແທ້ດາຍ |

ຕັ້ງວ່າ  ເປັນຮອຍແສ້    ໜັງພອງຊີ້ນຂາດ ໄປນັ້ນ
ລາງຄົນ ຫລັງບາດຫວີ້ນ    ຮອຍແສ້ເລືອດໄຫລ
*ຊຽງນີ້  ຕັ້ງຖ່ອຍແທ້    ບໍ່ຮູ້ຮ່ອມຄອງຊຸມ ແທ້ນໍ*
*ແມ່ນວ່າ ຄັນບໍ່ຈຽມຝູງເຂົາ    ແຕ່ກູກໍຄວນຢ້ານ ແດ່ຕີ້*

ແຕ່ນັ້ນ  ຊຽງກໍຮັບປາກຕ້ານ    ຂານຕອບຣາຊາ
ຂ້າຈັກ  ຖວາຍຄະດີກອນ    ໂຜດຈົ່ງຟັງດູຂໍ້
ເຂົາຫາກ ກາຍຄວາມເຈົ້າ    ເໜືອຫົວປົງອາດ ຍານັ້ນ
ພຣະຫາກ ບອກແຕ່ຂີ້    ເຂົານັ້ນຫາກລື່ນຄວາມ ແທ້ດາຍ

*ເຂົາຫາກ ພາກັນຂີ້    ຊໍ້າພັດຢຽວແກມຕົດ*
*ທັງເລົ່າ ຖິ່ມນໍ້າລາຍລົງ    ຄາກເທີ່ແກມດູຮ້າຍ ພຣະເອີຍ*
ຜີວ່າ  ເຂົາຫາກມີແຕ່ຂີ້    ຂ້າຍ່ອມໂດຍຄວາມ ຢູ່ແລ້ວ
ອັນນີ້  ເຂົາຫາກກາຍຄຳພຣະ    ບອກສອນຈຶ່ງຕີແທ້

ແຕ່ນັ້ນ ພຣະຍາກໍຫາກຊຸກໆແລ້ວ    ຈາປາກແກມຫົວ
ເຂົາຫາກ ພາກັນໄປ    ເຮັດຕາມຄວາມເວົ້າ
ແຫ່ແຫນ ກັນໄປຂີ້    ຕາມຄວາມຄຽດສັ່ງ
*ກູໄດ້  ບອກບໍ່ຜ້ຽນ    ເສັຽແລ້ວແມ່ນຄວາມ ແທ້ນາ*

ຜີວ່າ  ຄຶດຖີ່ແທ້    ກໍຄືແມ່ນຄວາມຊຽງ ຢູ່ແລ້ວ
ທໍ່ວ່າ  ກູຫາກໂກຫາຫລົງ    ບໍ່ບອກເຂົາຕົງຖ້ວນ
ແຕ່ນັ້ນ  ຊຽງກໍລາລົງຫ້ອງ    ທໍປາງຜາສາດ
ເຈົ້າກໍ  ເມືອສູ່ຫ້ອງ    ເຮືອນຢ້າວຢູ່ສະບາຍ

**>>** ແຕ່ນັ້ນ  ພຣະຍາຫລວງເຈົ້າ    ສເວີຍເມືອງຕົນພີ້
ກໍຈຶ່ງ  ອານັດໃຫ້    ຄົນໃຊ້ຊູ່ຄົນ
ບັດນີ້  ສູຈົ່ງຫາໄຂ່ໄວ້    ອັນດາຄົນລະໜ່ວຍ
ເຖິງເມື່ອ ວັນໜ້າເຊົ້າ    ຊິໄປຫລິ້ນທ່ານັດທີ ພຸ້ນດາຍ

---

ອັນດາ (ປລ ອັນທະ) = ໄຂ່, ອະໄວຍະອະເພດຊາຍ

ກູຈັກ　ອາບັດໃຫ້　　　ສູເປັນໄກ່ແມ່
ສູຈົ່ງ　ອອກກະຕາກພ້ອມ　　　ຂັນແລ້ວໄຂ່ຖວາຍ

ຄັນວ່າ　ໃຜບໍ່ມີອັນຖວາຍແທ້　　　ເຮົາພຣະອົງຈັກຈຳຜູກ
ກູຈັກ　ໃສ່ຊີກໄວ້　　　*ຄາ* ຖິ້ມໃສ່ຄໍ ມັນແລ້ວ
ທໍ່ວ່າ　ຄຳຣະຫັດນີ້　　　ໃຫ້ສູອຳຢ່າບອກ ຊຽງເນີ
ສູທໍ່　ໄປບອກໃຫ້　　　ນຳແທ້ບາດພຣະອົງ ທັ້ນຖ້ອນ

ແຕ່ນັ້ນ　ເຂົາກໍໂດຍຄວາມເຈົ້າ　　　ບໍ່ມີນານເລີຍແລ່ນ
ຮອດທີ່　ຊຽງໝັ້ຽງເຈົ້າ　　　ຜາຍຜັຽນບອກບິນ

ເຖິງເມື່ອ　ວັນລຸນເຊົ້າ　　　ພຣະຍາຫລວງຍົດໃຫຍ່
ພຣະຈັກ　ສະເດັດສູ່ຫ້ອງ　　　ນາວາກວ້າງຈຶ່ງໄປ ວ່າດາຍ

ພຣະຈຶ່ງ ມີອາດໃຫ້　　　ຊຽງໄປດອມບາດ ຈິງແລ້ວ
ເຖິງເມື່ອ　ວັນໜ້າເຊົ້າ　　　ໂຮມພ້ອມພໍ່າກັນ ແທ້ເນີ
ແຕ່ນັ້ນ　ຊຽງກໍໂດຍຄວາມເຈົ້າ　　　ບໍ່ມີຂືນຄຳພຣະບາດ
ພໍເມື່ອ　ເຖິງຮຸ່ງເຊົ້າ　　　ວັນໜ້າຫາກຊິໂດຍ ດອກນາ

ຄ້ອມວ່າ ຊຽງກ່າວແລ້ວ　　　ແລ້ວຢູ່ສະບາຍໃຈ
ອັນວ່າ　ແສງສຸຣິເລີຍ　　　ຄ່ຳຈວນນອນພ້ອມ
ເຖິງເມື່ອ　ວັນລຸນແລ້ວ　　　ຣາຊາສະເດັດອອກ
ພຣະບາດ　ທົງວ່ອນແກ້ວ　　　ເງົາເຫລື້ອມສູ່ເຮືອ

ແຕ່ນັ້ນ　ເຂົາກໍຍາບຍາບເປື້ອງ　　　ທົ້ນແກວ່ງສີພາຍ ພຸ້ນເຍີ
ນາວາ　ເຖິງດິນຊາຍ　　　ຈອດເຊົາຜາມກວ້າງ
ຜໍ່ດູ　ສິນສິນຂ້າ　　　ຊຸນຫລວງຫລາຍໝູ່
ເຂົາກໍ　ເຊົາຈອດຍັ້ງ　　　ໂຮມທັ້ນບ່ອນດຽວ

ກໍຈຶ່ງ　ເອົາກັນຫລິ້ນ　　　ໃນນັດທີວັງໃຫຍ່
　　ໝົດຊູ່ດ້າມ　　　ພໍແລ້ວອອກເຊົາ

---

ຄາ = ເຄື່ອງຈອງຈຳຢ່າງນຶ່ງ ສຳຫລັບໃສ່ຄໍຜູ້ກະທຳຜິດ

| | |
|---|---|
| ແຕ່ນັ້ນ ພຣະຈຶ່ງປົງອາດໃຫ້ | ເປັນໄກ່ໂຕນລອຍ ທ່ຽວເຖິ້ນ |
| ເຂົາກໍ ໂດຍຣາຊາ | ພຣະຍອດເມືອງເປັນເຈົ້າ |
| *ເຂົາກໍ ໂຕນລົງນ້ຳ* | *ລອຍດຳອອກກະຕາກ* |
| *ຄັນວ່າ ໄດ້ໄຂ່ແລ້ວ* | *ຖວາຍໄທ້ພຣະຍອດເມືອງ* |
| ເຂົາເລົ່າ ທຳນຽມພັ້ງງ | ເໝືອນດຽວກັນຢູ່ |
| ຄັນວ່າ ໝົດໝູ່ແລ້ວ | ຊຽງໝັ້ງງກໍຈຶ່ງໂຕນ |
| ແຕ່ນັ້ນ ເຂົາກໍຈາບອກອ້າຍ | ໃຫ້ເອົາໄຂ່ໄປຖວາຍ |
| ເປັນກຸດໂຕ | ດັ່ງກູຈິງແທ້ |
| *ຊຽງກໍ ໂຕນລົງນ້ຳ* | *ນັດທີຫລວງລອຍລ່ອງ* |
| *ຄ້ອມວ່າ ຫົວພົ້ນນ້ຳ* | *ຂັນທ້າເກີກກີ່ເດີ ແທ້ດາຍ* |
| ມັນກໍ *ກອນໄລ່ດ້ອຍ* | ຊຸມໝູ່ຊຸນຫລວງ |
| ເຂົາກໍ ແຊວແຊວປົບ | ຊູ່ຄົນເຟືອນຟື້ນ |
| ລາງຄົນນັ້ນ | ຈົມລົງໃຈຈັກຂາດ |
| ລາງພ່ອງ ນ້ຳເຂົ້າທ້ອງ | ເຊລົ້ມສະເງີບເງີຍ |
| ລາງພ່ອງ ໄດ້ກິນນ້ຳ | ເຕັມປູມທ້ອງຈັກແຕກ |
| ຕັ້ງຫາກ ສວ່າສວ່າວຸ້ນ | ເຟືອນຟື້ນສນັ່ນເມືອງ |
| ເຂົາຫາກ ກົວເກງຢ້ານ | ຊຽງກຸມກອນໄລ່ |
| ເໝືອນດັ່ງ ໄກ່ໂອກໂຈ້ນ | ນຳປ້ອງແມ່ເຊີງ ນັ້ນແລ້ວ |
| ຊຽງກໍ *ກຸມເອົາກົ້ນ* | ມວນໝູ່ເສນາ |
| ຕ່າງກໍ ພາກັນປົບ | ບໍ່ຫານທົນສູ້ |
| ໝົຕາຍເອັ້ນ | ກຸດໂຕຊຽງໄລ່ |
| ບໍ່ຍອມ ໃຫ້ໄກ່ໂຈ້ນ | ປີນຂຶ້ນຂີ່ຫລັງ ແທ້ແລ້ວ |
| ແຕ່ນັ້ນ ເຂົາກໍຈັດຊຽງໃຫ້ | ນຳມາຍັງໄຂ່ |
| ຖວາຍແກ່ ພຣະບາດເຈົ້າ | ລໍຖ້າໄຂ່ຊຽງ ແທ້ນາ |

---

ກອນໄລ່ດ້ອຍ ກຸມເອົາກົ້ນ ໃນທີ່ນີ້ແມ່ນ ໄລ່ເຊີງ

แต่นั้น ຊຽງຕອບຖ້ອຍ ຮັບພາກຝູງເຂົາ
*ກູນີ້ ກຸດໂຕຫລວງ ໄກ່ແດງຕົວກ້າ*
*ຈຶ່ງວ່າ ຫາເຊີງດ້ວຍ ຊຸມສູໄກ່ແມ່ ນັ້ນແລ້ວ*
*ສູຈຶ່ງ ມີໄຂ່ໃຫ້ ຖວາຍໃຫ້ພຣະບັ່ງເມືອງ*

*ຊາດທີ່ ກຸດໂຕນີ້ ບໍ່ມີຜືອມັນຊິໄຂ່ ເປັນລື*
*ຄັນວ່າ ໄກ່ຜູ້ຫາກບໍ່ມາໄລ່ດ້ວຍ ຊິມີເຊື້ອສືບມາ ນັ້ນລື*

ກູນີ້ ເປັນໄກ່ຜູ້ ບໍ່ຫ່ອນໄຂ່ມາຖວາຍ ແທ້ດາຍ
ມີແຕ່ ໝາກໄຂ່ຫລັງ ຢູ່ໃນເພົາຜ້າ
ບໍ່ຫ່ອນ ເອົາໄປໄດ້ ຖວາຍພຣະຍາຈັກເທື່ອ ສູເອີຍ
ຢຽວວ່າ ຕັດຂາດຂວ້ຳ ຄໍຊ້ຳກໍຈຶ່ງຫວັງ ດອກແລ້ວ

ແຕ່ນັ້ນ ຣາຊາເຈົ້າ ເລີຍຫົວອອກປາກ
ຊຽງກໍ ທູນແທບພື້ນ ພຣະເມືອງເຈົ້າຂາບຖວາຍ

>> ແຕ່ນັ້ນ ພຣະຍາກໍປີງອາດໃຫ້ ຝູງໝູ່ຄົນໃນ
ສູຈົ່ງ ນຳເງິນໄປ ໄຖ່ເອົາຜືນຜ້າ
ພຣະກໍ ປີງເງິນໃຫ້ ເຂົາເອົາໄປຈ່າຍ
*ສູຈົ່ງ ຊື້ແຜ່ນແພຜໍ່າຜ້າ ຕົບແຕ້ມເພື່ອຖວາຍ ທ່ຽວເຖີ້ນ*

ແຕ່ນັ້ນ ເຂົາກໍໂດຍອາດເຈົ້າ ໝົດຄູ່ຄົນໄປ
ຕາມຄາເມ ທ່ຽວຖາມຫາຊື້
ຊຽງກໍ ໂດຍອາດເຈົ້າ ຮັບຣາດເງິນຕຣາ
ພຽງແຕ່ ເອົາເງິນເມືອ ຮອດເຮືອນວາງໄວ້
ສ່ວນວ່າ ຝູງເຂົາຂ້າ ຄົນໃນຫັດຖະບາດ
ເຂົາກໍ ຊື້ໄດ້ແລ້ວ ຖວາຍເຈົ້າຂູ່ຄົນ ແທ້ແລ້ວ

ແຕ່ນັ້ນ ຣາຊາເຈົ້າ ຄອງຊຽງຖ້າຢູ່
ຄັນວ່າ ຊຽງຫາກຫາບໍ່ໄດ້ ກູຊິຊຸ້ງມຜູກຕີ ແທ້ດາຍ
ສ່ວນວ່າ ຊຽງເມືອເຖິງເຮືອນແລ້ວ ເນີານອນ*ນິດທະ*ເນັ່ງ
ມັນກໍ ບໍ່ລົງໜີຈາກຍ້າວ ໄປຊື້ຈ່າຍສັງ ເຈົ້າເອີຍ

---

ນິດທະ, ນິດທາ (ປລ ນິທທາ) = ນອນຫລັບ

ມີແຕ່ ເນົາໃນຫ້ອງ ເຮືອນຕົນນອນຢູ່
ເລີຍບໍ່ ຄຶດເດືອດຮ້ອນ ເຄືອງແຄ້ນເຍື່ອງໃດ ແທ້ດາຍ

ແຕ່ນັ້ນ ຣາຊາໃຊ້ ມາທັນຈັດຮີບ
ຄັນວ່າ ຊຽງຫາກຊື້ໄດ້ແລ້ວ ໃຫ້ເອົາຜ້າຍື່ນຖວາຍ ວ່າດາຍ

ອັນວ່າ ພຣະບາດເຈົ້າ ຄອງເບິ່ງດອມຊຽງ
ຈັກວ່າ ງາມປານໃດ ຊົ່ວຕາດີຮ້າຍ
ແຕ່ນັ້ນ ຊຽງກໍຈາຂານຕ້ານ ຄົນເຊັ່ງຂານຕອບ
ກໍຫາກ ທ່ຽວຫາຊື້ບໍ່ໄດ້ ພຣະຍາເຈົ້າໂຜດຜາຍ ກ່ອນເຖີ້ນ
ຄັນວ່າ ຊື້ໄດ້ແລ້ວ ແພງາມຜືນໃໝ່
ຈັກບໍ່ ລໍຊັກຊ້າ ຊິນຳຂຶ້ນຂາບຖວາຍ ດອກນາ

ແຕ່ນັ້ນ ຄົນເຊັ່ງທ້າວ ເມືອທູນພຣະຍາໃຫຍ່
ຕ້ານກ່າວຖ້ອຍ ຊຽງເວົ້າຊູ່ອັນ
ເມື່ອນັ້ນ ພຣະຍາຫລວງເຈົ້າ *ຈິນດາ*ຄຶດຮ່ຳ
ຕາມແຕ່ ມັນຈ່າຍຊື້ ຫາກໄດ້ຈຶ່ງຊິຖວາຍ ຫັ້ນຖ້ອນ

ຫລັງຈາກ ຄົນຂ້າໃຊ້ ກັບຮີບເມືອໂຮງ
ຊຽງກໍ ນອນເຊົາແຮງ ບໍ່ສົນນຳຊື້
ເຖິງເມື່ອ ຍາມກິນເຂົ້າ ກໍຍູກິນເຕັມອີ່ມ
*ຕັ້ງຫາກ ວຽກບໍ່ໄດ້ ນອນຫລິ້ນອ່ານໂຄງ*

ຊຽງບໍ່ ຄຶດເຮັ່ງຮ້ອນ ປະການສິ່ງສັນໃດ
ຍູທ່າງ *ກິນສລາ*ຫລາຍ ໝາກພູຄວນຄ້ຽວ
ເຖິງເມື່ອ ວັນຖ້ວນເຈັດແລ້ວ ມັນເມືອທູນຄອບ
ສຸດທີ່ ຂ້າບາດຫາຊອກຊື້ ທັງຄ້າຍກໍບໍ່ມີ ພຣະເອີຍ

ຕັ້ງວ່າ ບໍ່ມີໃນຫີນຫ້ອງ ເມືອງເຮົາຈັກບ່ອນ ຈິງນາ
*ອັນຈັກ ໃຫ້ເຂົາເອົາຕີນຄີບແຕ້ມ ຜືນຜ້າກໍບໍ່ມີ ພຣະເອີຍ*
ຂ້າຫາກ ຖາມຊ່າງຜ້າ ໝົດໝູ່ມາໂຮມ ຖ້ວນແລ້ວ
ເຂົາກໍ ວາຈາຂານ ວ່າບໍ່ມີຈິງແທ້

---

ຈິນດາ (ປລ ຈິນຕາ) = ຄຶດ / ກິນສລາ = ຄ້ຽວໝາກ

ກໍຫາກາ ຮຸນແຮງແລ້ວ    ຖາມຫາອິດອ່ອນ ຈິ່ງດາຍ

*ເຂົາກໍບໍ່ໄດ້ ເອົາຕີນຄີບແຕ້ນ*    *ຜືນຜ້າແຜ່ນໃດ ພຣະເອີຍ*

*ມີແຕ່ ເອົາມືແຕ້ນ*    *ທັງມວນພ້ອມຄູ່ ຄົນແລ້ວ*

ຂ້າຈຶ່ງ ບໍ່ໄດ້ຊື້    ຖວາຍເຈົ້າຄອບບໍ່ມີ ພຣະເອີຍ

ຢຽວວ່າ ເມືອງສວັນພຸ້ນ    ຍັງຈັກປຸນມີຊ່າງ ບໍ່ຮູ້

ໃຫ້ເອົາ ຕີນຄີບແຕ້ນ    ເມືອງນີ້ກໍຢ່າຫວັງ ເທາະນາ

ແຕ່ນັ້ນ ພຣະກໍສຶງລຶງໜ້າ    ເລີຍຫົວທັງຄຽດ

ຜີວ່າ ຄຶດໃຫ້ຜຽນ    ກໍຄືແທ້ຂູ່ຄວາມ ຢູ່ແລ້ວ

ກູຫາກາ ໂມໂຫແທ້    ຫລົງລືມບໍ່ຄຶດຖີ່ ສູເອີຍ

ບັດນີ້ ກໍຫາກາມາແມ່ນຂໍ້    ຊຽງເວົ້າຂູ່ອັນ ແທ້ນໍ

>> ແຕ່ນັ້ນ ຍັງມີພຣະຕາເຖົ້າ    ເຖຣະທັມອິງນິ່ງ

ວັດເຈົ້າ ມີໝາກໄມ້    *ສັບເພ* ພ້ອມຂູ່ອັນ

ມີທັງ ພ້າວມາກລົ້ນ    ຕານໄຂວ່ລຽນລຳ

ມີທັງ ຜູຜາງຫລາຍ    ໝູ່ຂນຸນແກມມີ້

ມີທັງ ເຟືອງໄຟຄໍ້    ນາວການແກມເວີ່

ມີທັງ ຟາງກອກຫວ້າ    ຂາມສົ້ມມ່ວງມັນ ກໍມີ

ມີທັງ ໝາກຊຽບກ້ຽງ    ຂາມເທດຄັນທະຣົດ

ມີທັງ ຍົມແງວດິກ    ໝາກທັນແກມຕ້ອງ

ມີທັງ ສີດາລົ້ນ    *ກຸທະລີ* ອ້ອຍແອບ

ໝາກນັດ ມີບໍ່ໄຮ້    ພິລາເຂັ້ມຂຸດເຂືອ ກໍມີ

ກັບທັງ ໝາກເດື່ອພົ້ວ    ແກມດອກລຳດວນ

ຄົນໃດ ຫຽວທາງເຫັນ    ກໍເບິ່ງດູດາຍດູ້

*ຝູງໝູ່ ຄົນຊາວບ້ານ*    *ຊາວເມືອງມາຂໍຈອດ*

*ເຂົາຂໍ ເຖນກໍບໍ່ໃຫ້*    *ຫວງໄວ້ຊອດປະມານ ແທ້ດາຍ*

---

ສັບພະ, ສັບເພ = ທັງປວງ, ໝົດທຸກຢ່າງ / ກຸທະລີ (ປລ ກະທະລີ) = ໝາກກ້ວຍ

แต่นั้น ຊຽງໝັ້ງໄປຄວ່າບ້ານ　ແວະຈອດເຊົາອາຮາມ
ຄັນເມື່ອ ເຖນຫລວງເຫັນ　ກໍເລົ່າຖາມຊຽງໝັ້ງ
ທ່ານນີ້ ລຸກທີ່ໃດມາແທ້　ເດີນດົນເຊົາຈອດ ທາງນີ້
ກໍຫາກ ເປັນເຫດດ້ວຍ　ໃດແທ້ກໍຈິ່ງມາ ນີ້ເດ

ຊຽງກໍ ຮັບພາກຕ້ານ　ຂານຕອບເຖນຫລວງ
ຂ້ອຍກໍ ເນົາໃນເມືອງ　ຢູ່ດອມພຣະຍາເຈົ້າ
ທໍວ່າ ມາຄວ່າບ້ານ　ຫລິ້ນມ່ວນແຄວນອິດ ເຈົ້າເອີຍ
ກໍຈິ່ງ ຜາຍຕີນມາ　ຈອດເຊົາທາງນີ້
ຂ້ອຍກໍ ແຄນທາງຮ້າຍ　ຕີນດຽວເຊົາຢູ່
*ຄຶດຢາກ ຂໍໝາກສົ້ມ　ກິນຖ້ອນສບ່ອຍດອມ ເຈົ້າເອີຍ*

*แต่นั้น ເຖນຫລວງຂຶ້ນ　ເມືອກະດີລີ້ຢູ່*
*ທັງເລົ່າ ອັດປ່ອງຢ້ຽມ　ປະຕູຫ້ອງບໍ່ຕີງ*

ກໍບໍ່ ກອຍກ່າວຖ້ອຍ　ຕ້ານປາກພໍຄວາມ
ເກງວ່າ ເຂົາວຽນຂໍ　ໝາກຫວານແກມສົ້ມ
ແຕ່ນັ້ນ ຊຽງກໍອິດອິກແຄ້ນ　ໃນໃຈຄຶດຄຽດ
ເຖນເຖົ້າ ຕັ້ງຫາກມາຖ່ອຍດ້າມ　ບໍ່ມີຮູ້ຮ່ອມສັງ ແທ້ນໍ

ອິດພໍ ກູມາໃຫ້　ຈັກສອງສາມໜ່ວຍ ກໍດີແມ
ພໍໃຫ້ ຮອງຢູ່ທ້ອງ　ກັນແກ້ຫອດຫິວ
ອັນນີ້ ຊ່າງວ່າຊຳງຳໜ້າ　ເມືອຄະດີຄຽດຢູ່
ໃຜຜູ້ ຕິດ່າເຈົ້າ　ເຖນເຖົ້າບ່ອນໃດ ນັ້ນເດ

ຕັ້ງວ່າ ມີບໍ່ແພ້　ມື້ມ່ວງນາວການ
ອິດພໍ ດູຕີນແມ　ເມື່ອຄາວຫິວຮ້າຍ

*ແຕ່ນັ້ນ ຊຽງກໍຄຶດຮໍ່ໄວ້　ຄະນຶງຢູ່ໃນໃຈ*
*ມຶງຈັກ ເຫັນກັນມຶງ　ຈົ່ງເບິ່ງສີມືໝັ້ງງ*
ກູຈັກ ມາບາຍແທ້　ທີ່ລຸນໄວ້ທັ້ນກ່ອນ
ໃຫ້ຮັກສາ ໜ້າຜາກລ້ານ　ຫົວເຈົ້າໃຫ້ລອດດີ ທັ້ນຖ້ອນ

ພູຈັກ ຄືນເມືອຫ້ອງ    ເຄຫາເສັງກ່ອນ
ຈຶ່ງຈັກ ຄຶດສັ່ງຂໍ້    ຂືນຊ້ຳຕອບມີ ແທ້ດາຍ

ຄ້ອມວ່າ ຊຽງຈົ່ມແລ້ວ    ລຸກເລີກໄລເມືອ
ແຍງເຄຫາ    ຄ່ອຍເນົາໃນຫ້ອງ
ພໍເມື່ອ ວັນລຸນແລ້ວ    ກໍເດົາດາຕົກແຕ່ງ
ຫ້າງຫາ ຂັນດອກໄມ້    *ນິມິນ* ພ້ອມເລົ່າໄປ

ຊຽງກໍ ແຍງຫົນຫ້ອງ    ພຣະຕາຫລວງຕົ້ນທີ່
ເລີຍເລົ່າ ເຖິງເຂດເຈົ້າ    ເຖນເຖົ້າຈອດເຊົາ
ຊຽງກໍ ຕົກແຕ່ງໄດ້    ທຸກສິ່ງມວນມີ
ແລ້ວເລົ່າ ແປງກະບວນດີ    ເພດຄືຄົນໃຊ້
ຊຽງກໍ ຍໍຂັນຂຶ້ນ    ເມື່ອກະດີ*ຍຸບນັ່ງ*
ແລ້ວຈຶ່ງ ຕ້ານຂ່າວໄຫວ້    ຖແລງເວົ້າຄ່ອງຄື

ບັດນີ້ ເໜືອຫົວເຈົ້າ    ພຣະຍາເມືອງຕົນໃຫຍ່ ພາຍພຸ້ນ
ພຣະກໍ ໃຊ້ຂ້ານ້ອຍ    ມາໄຫວ້ບາດຄຳ ວ່າດາຍ
ຂໍໃຫ້ ເໜືອຫົວເຈົ້າ    ກູນາຜາຍໂຜດ
ຮັບເອົາ ຂັນດອກໄມ້    ນິມິນຂ້ອຍຢ່ານານ

ພໍແຕ່ ໂຜດສັດໃຫ້    ເຖິງຍອດນິຣະພານ ພຸ້ນດາຍ
ຝູງຂ້າ *ປາດຖນາ*ສຸກ    ຮ່ວມບຸນຈອມເຈົ້າ
ຊຽງກໍ ຍໍຂັນເຂົ້າ    ຖວາຍຫຽນດວງດອກ
ທັງເລົ່າ ແປະໃສ່ເກົ້າ    ຄືແທ້ຊູ່ອັນ

*ບັດນີ້ ຣາຊາເຈົ້າ    ຈອມເມືອງອິງອາດ*
*ວ່າຈັກ ຫົດແຈ່ມເຈົ້າ    ເຖນຂຶ້ນໃຫ້ສິ່ງສູງ ວ່າດາຍ*
*ພຣະຈັກ ຫົດສົງໃຫ້    ເປັນຄຣູຍິດໃຫຍ່ ຈິງແລ້ວ*
*ເພື່ອໃຫ້ ທົງສືບສ້າງ    ຍູຄ້ຳສາດສນາ ແທ້ດາຍ*

---

ນິຣະມິນ, ນິມິນ (ປລ ນິມັນຕ) = ເຊີນພະສົງ / ນິຣະມົນ (ສສ ນິຣມລ) = ບໍ່ມີມົນທິນ, ສົດໃສ / ຍຸບນັ່ງ =ໂຍບນັ່ງ / ປາດຖນາ (ປລ ປຕຖນາ, ສສ ປຣາຖນາ)= ມຸ່ງໝາຍ, ຢາກໄດ້, ຕ້ອງການ

ພໍໃຫ້ ເປັນເຂື່ອນກວ້າງ ສອນໂລກທັງທັມ ພຣະເອີຍ
ຕັ້ງຫາກ ສົມຄວນເປັນຣາຊະຄຣູ ກໍຈິ່ງແຍງມາໄຫວ້

ອັນວ່າ ພຣະຍາຫລວງເຈົ້າ ໃຈໃສມີມາກ ຈິງແລ້ວ
ກໍຈິ່ງ ໃຊ້ຂ້ານ້ອຍ ມາໄຫວ້ບາດຄໍາ ນີ້ແລ້ວ

ແຕ່ນັ້ນ ພຣະຕາຕ້ານ ດອມຊຽງຄໍາມ່ອນ
*ເມື່ອວ່າ ເຮົາບໍ່ຮັບອາດຕັ້ງ ກໍກົວຢ້ານແທ່ງພຣະຍາ ທ່ານເອີຍ*
*ຢຽວທໍ່ ຣາຊາເຈົ້າ ຈອມທົວກົ້ວໂກດ ບໍ່ຮູ້*
*ພຣະຈັກ ຕຽນດ່າຊໍ້າ ກະທໍາຮ້າຍແກ່ເຮົາ ບໍ່ຮູ້*

ກໍຈັກ ຍິນອາຍໜ້າ ເປັນຊີແປນເປົ່າ ບໍ່ຮູ້
*ຄັນວ່າ ພຣະບໍ່ລ້ຽງ ຟັນຂ້າກໍສ່ວນຕາຍ ດອກແລ້ວ*

ແຕ່ນັ້ນ ເຖນທ່ານເຖົ້າ ຮັບຂັນໝາກນິຣະມົນ
ຊຽງເລົ່າ ຍໍມືນົບ ວ່າຊາຈິງແທ້
ການຖ່ອຍ ຊຽງຖວາຍໄທ້ ໃນໃຈຄຶດຄຽດ
ແນມຫາ ຕົ້ນໝາກໄມ້ ດົກດົ້ວຫລົ່ນເຕັມ

ເມື່ອນັ້ນ ຊຽງກໍຕິຖແລງເວົ້າ ໜີໄປຄວາມໃໝ່
ອັນນຶ່ງ ເຈົ້າກໍມີອາດໃຫ້ ດອມແທ້ສັ່ງມາ ເຈົ້າເອີຍ
*ວ່າໃຫ້ ແຍງກະບວນແທ້ ທາງເມັງຫາມແທ່ ມານັ້ນ*
*ຄັນວ່າ ບ່ອນໃດເປັນທີ່ຂັດອາດແທ້ ຈໍາໃຫ້ທ່ຽວຮານ ວ່າດາຍ*

ຢ້ານວ່າ ຂີດຂວາງຜາສາດຕົ້ນ ແກມຊໍ່ຫລັງທໍ ນັ້ນນາ
ຂວາງງ່ອນ ທາງທົ່ງງາມ ງ່າເທິງຊີຕຸງຂ້ອງ
ມັນຈັກ ຫັກທະລາຍມ້າງ ເສັຽຊິງບໍ່ສົມຮູບ
ທັງກິດ ທາງຣົດມ້າ ກະບວນຊ້າງແຫ່ກອງ ເຈົ້າເອີຍ
ແຕ່ນັ້ນ ພຣະຕາເຖົ້າ ກໍເລີຍທົວຊົມຊື່ນ
ຄັນວ່າ ພຣະຫາກມີອາດໃຫ້ ຊີຂືນໄດ້ຫ່ອນເປັນ ນັ້ນເດ

ເຖນຈິ່ງ ປົງຄວາມໃຫ້ ເອົາຊຽງເປັນຊ່າງ ຈິງແລ້ວ
ເຈົ້າຈິ່ງ ໄປເບິ່ງຢ້ຽມ ກະບວນແທ້ລຽບດູ ຫັ້ນຖ້ອນ

ເຈົ້າຫາກ ເປັນຜູ້ຮູ້ ສູງຕ່ຳປານໃດ ນັ້ນເດ
ມັນບໍ່ ມີໃຜເຫັນ ແຕ່ຕົນດຽວເຈົ້າ
ທ່ານຈຶ່ງ ຕວງດູຖ້ອນ ຫວນດູຄຳພໍແມ່ນ
ບ່ອນໃດ ມັນຫາກຂັດວາດພື້ນ ເຫລືອດ້ານກໍຈິ່ງຮານ ທັ້ນຖ້ອນ

ເມື່ອບໍ່ ໂດຍຄຳເຈົ້າ ກໍປຸນເປັນທຳໂທດ ຈິງນາ
ແຕ່ນັ້ນ ຊຽງກໍເຮັດຫຍຸ້ມເປີ້ຍ ຫົວແຂ້ວໄຂ່ຂາວ
ມັນຈຶ່ງ ໄປເບິ່ງຜົນໝາກໄມ້ ພິດສລາກອາການ
ຄັນເຫັນ ອັນໃດດີກ ຊິຂຶ້ນຮານຕັດມ້າງ

ມວນໝູ່ ໝາກແລະພ້າວ ມີ້ມ່ວງຄັນທະຣົດ
ລຳໄຍ ຂາມຜູຜາງ ຊຽບຍົມຂນຸນກ້ວຍ
*ມັນກໍ ພາງານແທ້ ຟັນລົງຂົນໄຂວ່*
*ຮານລົງ ໝົດຊູ່ຕົ້ນ ເຫລືອໄວ້ຕັ້ງແຕ່ຕໍ*

ເມື່ອນັ້ນ ຝູງໄທບ້ານ ເອົາກັນມາເບິ່ງ
ທັງໃຫຍ່ນ້ອຍ ຊວນເຕົ້າແລ່ນມາ
*ເຂົາກໍ ສົນສົນທ້ອນ ຂົນເອົາຫລາຍເທື່ອ*
*ຍູທ່າງ ກິນບໍ່ໄຮ້ ຂົນໄດ້ກໍບໍ່ຖອງ ແທ້ແລ້ວ*

*ຊຽງຕັ້ງ ພາງານແທ້ ຟັນລົງຂົນໄຂວ່*
*ຄຶດເມື່ອ ປາງກ່ອນກີ້ ຂໍໄດ້ບໍ່ອີ່ດູ ທັ້ນແລ້ວ*
ຊຽງກໍ ຮານພໍແລ້ວ ປຸນແປງເປັນຮາບ
ມັນກໍ ຊຸກເຊື່ອງໄວ້ ດີແລ້ວບ່ອນປະຕູ

ແລ້ວຈຶ່ງ ເມືອຂາບໄຫວ້ ເຖນໃຫຍ່ເທິງກະດີ
ບັດນີ້ ຂ້າຫາກປຸນແປງຜີ ທຽວຮານດີແລ້ວ
ດູທີ່ ຫົນທາງກວ້າງ ເມັງທໍຊີມາງ່າຍ ຈິງແລ້ວ
ຄຶດວ່າ ບໍ່ມີເກາະງ່ານ້ອຍ ທາງທົງຂ້ອງທີ່ໃດ ເຈົ້າເອີຍ

ແຕ່ນັ້ນ ຊຽງກ່າວຍ້ອງ ຍໍຮູບມະຫາເຖນ
ຕັ້ງຫາກ ສົມຄວນເປັນຣາຊະຄຣູ ອີ່ຫລີຈິງແທ້

ຜິວ່າ ຫລິງໂສມໜ້າ    ຕົນຕົວກໍເນົາຄ່ອງ ຈິງແລ້ວ
ຍາມເມື່ອ ທົງເຄື່ອງຍ້ອງ    ຄືພ້ຽງໜໍ່ພຸດໂທ ນັ້ນແລ້ວ
ບັດນີ້ ຂ້າເບິ່ງລາຍຕົວເຈົ້າ    ທັງຄີງໝົດອ່ອຍຫ່ອຍ
ພຣະຈັກ ໄດ້ສືບສ້າງ    ແທນເຊື້ອສາດສນາ ບໍ່ນັ້ນ

ແຕ່ນັ້ນ ເຖນຕາເຖົ້າ    ຍິນດີຕ້ານບອກ
ເຈົ້າຈິ່ງ ຫລິງລ່ຳຢ້ຽມ    ດູຖ້ອນສິ່ງໃດ ບໍ່ຮູ້

ເມື່ອນັ້ນ ຊຽງໝ້ຽງຢ້ຽມ    ດູເບິ່ງລັກສະນາ
ອັນວ່າ ລາຍຕີນສືບ    ເກີບປະຈີມີແທ້
ອັນວ່າ ລາຍມືນັ້ນ    ດູດີພົ້ນຂນາດ ຈິງແລ້ວ
ຈັກໄດ້ຖື ຕາຣະບັດແລະໄມ້ເທົ້າ    ຈຳນອນແທ້ຊູ່ອັນ

*ດູທີ່ ລາຍຫົວນັ້ນ    ດູດີໄດ້ຖືອ່ອນ ຈິງແລ້ວ*
*ດູທີ່ ລາຍບ່ານັ້ນ    ຄວນແທ້ຜ້າປະຈີ ແທ້ດາຍ*
*ດູທີ່ ລາຍຄີງເຈົ້າ    ຄຸມແຮຈັກໄດ້ຫົ່ມ ຈິງແລ້ວ*
*ຄຸມປະຈີ ຈັກມາທົງທ່ານແທ້    ພືຕູ້ມຫົ່ມຕົວ ແທ້ດາຍ*

*ດູທີ່ ລາຍຫລັງນັ້ນ    ບັນທົມເມັງອາດ ຈິງແລ້ວ*
*ດູທີ່ ລາຍໜ້ານັ້ນ    ຕະຣະບັດກັ້ງເບດ ຫາກມີ*
*ດູທີ່ ລາຍແອວນັ້ນ    ສະບົງໄໝຈັກໄດ້ນຸ່ງ ຈິງແລ້ວ*
ທັງເລົ່າ ຍ້ອມຄັ່ງລ້ອນ    ຊະເອັງແກ້ວຮັດເທິງ ແທ້ແລ້ວ

ຕັ້ງຫາກ ມີໂຊກແມ້ງ    ຊູ່ບ່ອນໃນຕົວ ເຈົ້າເອີຍ
ກໍບໍ່ ມີແນວຕິ    ແຕ່ງງານເລີງລ້ອນ
*ທໍ່ວ່າ ຂ້າກໍດູລາຍກົ້ນ    ສນາແຮຮອງນັ່ງ ນັ້ນນາ*
ຍັງຈັກ ຖືກໂຊກລົ້ນ    ປານໃດແທ້ກໍໃຫ້ເຫັນ ເຈົ້າເອີຍ

ຝູງນີ້ ຣາຊາເຈົ້າ    ຈອມເມືອງຮັບສັ່ງ ມາດາຍ
ຂ້າຈັກ ເມືອໄຫວ້ເຈົ້າ    ຈອມໄທ້ຊູ່ອັນ ນັ້ນແລ້ວ

*ເມື່ອນັ້ນ ພຣະຕາຕ້ານ    ຂໍນຳດອມບໍ່ໃຫ້ເບິ່ງ*
*ຂິນຫົວ ມັນຫາກລຸກເຍືອກຄ້ານ    ຢາກອາຍໜ້າບໍ່ຢາກໄຂ ບ່າວເອີຍ*

ແຕ່ນັ້ນ ຊຽງກໍຮັບພາກຕ້ານ ຂານຕອບເຖນຫລວງ
ທໍ່ແຕ່ ສອງຄົນເຮົາ ເບິ່ງກັນພາຍພຸ້ນ
ໃນທີ່ ທໍສິງນໍ້າ ປັກຕູອັດແຈບ
ຢ່າໃຫ້ ໃຜລ່ວງໄດ້ ເຫັນແທ້ເຊິ່ງເຮົາ ເຈົ້າເອີຍ

ແຕ່ນັ້ນ ເຖນຫລວງຍ້າຍ ໄປເຖິງສ້ວມອາບ ຈິງແລ້ວ
ເຖນກໍ ຈື່ງກອງກົ້ນໃຫ້ ຊຽງຢ້ຽມເບິ່ງດູ
ມີເລົ່າ ຄົວຖືກໄວ້ ດຶງສະບົງຮື້ອອກ ຈິງແລ້ວ
ຊຽງກໍ ຫລິງສອດຢ້ຽມ ທຳແຫລ້ດັ່ງຄາມ

*ແຕ່ນັ້ນ ຊຽງບໍ່ຊ້າ ຕີນແດກມະຫາເຖນ*
*ອັນວ່າ ຫົວຊວນຄຸບ ໃສ່ຝາກະດີນັ້ນ*
*ເຖນໂອຍຮ້ອງ ໂອຍໂອຍຄາງຢູ່*
*ຊຽງກໍ ຍໍຕີນຖີບແກ່ງແກ້ ພໍໃຈແລ້ວແລ່ນໜີ*

ມັນກໍ ແຍງຫົນຫ້ອງ ເຮືອນຕີນລີ້ຢູ່
ກໍບໍ່ ຄຶດຮ່ຳຮ້ອນ ສັງແທ້ທໍ່ໃຍ ນັ້ນແລ້ວ

ບັດນີ້ ຈັກກ່າວເຖິງພຣະຕາເຖົ້າ ຊຽງທຳໃນສ້ວມອາບ
ເຈົ້າກໍ ເຈັບປວດແທ້ ຄາງໄຂ້ສແມ່ງຕາຍ

ເຂົາກໍ ຫາມມາຢ້າງ ດັງໄຟທາງລຸ່ມ
ທັງເລົ່າ ຕົ້ມເປືອກໄມ້ ແດງຄັ້ນທົ່ວຄີງ
ຄັນວ່າ ພໍປະມານໄດ້ ເຈັດວັນພໍສວ່າງ ຄີງແລ້ວ
ພຣະກໍ ຕົກແຕ່ງຂອງຝາກໄວ້ ເມືອໄຫວ້ແຫ່ງພຣະຍາ

ເຈົ້າກໍ ແຍງຫົນຫ້ອງ ທໍຄຳພູວະນາດ
ຮອດບໍ່ຊ້າ ເລີຍຂຶ້ນລ່ວງໄປ
ເຈົ້າກໍ ສະຖິດຢູ່ຍັ້ງ ເທິງອາດສນາສູງ
ໃນໂຮງຄຳ ຄອຍຄອງພຣະຍາເຈົ້າ
ເຈົ້າກໍ ພູມພູມຕ້ານ ທູນອົງພູວະນາດ
ຖວາຍເຫດໃຫ້ ຖແລງເວົ້າຊູ່ອັນ

ວັນນັ້ນ ຣາຊາເຈົ້າ ປົງຄຳໂອວາດ
ບອກຄົນ ໄປບໍ່ຊ້າ ນິມົນຂ້າທ່ຽງຈິງ
ວ່າຈັກ ຫົດສົງໃຫ້ ເປັນຄຣູຍົດໃຫຍ່ ຈິງແລ້ວ
ເລີຍເລົ່າ ຕົວະຍົວະເຍົ້າ ດູລາຍກົ້ນແຫ່ງເຮົາ ພຣະເອີຍ

ມັນເລົ່າ ທຳຂ້ອຍມໍຣະນາດແທ້ ຕີບຖີບທັງແຮງ ແທ້ດາຍ
ສະແນ່ງ ເສັຽຄຶງແພງ ຄອບມັນສງົບຍ້ອນ
ດີທີ່ ບຸນຄຸນແກ້ວ ທັງສາມຍັງເຫລື່ອມ
ຂ້ອຍຈຶ່ງ ຫວີດລອດພົ້ນ ວັນນັ້ນຈຶ່ງບໍ່ຕາຍ ພຣະເອີຍ

ແຕ່ນັ້ນ ພຣະບາດເຈົ້າ ຮັບພາກມະຫາເຖນ
ຂ້ອຍບໍ່ໄດ້ ຈຳໃຜໄປ ໃສ່ນິຣະມົນເຈົ້າ
ຂ້ອຍບໍ່ໄດ້ ຄຶດຮ່ຳຮູ້ ຄຳແຫ່ງຫົດສົງ ສັງນາ
ໃຜເດ ນຳຄວາມໄປ ຂາບລວງເຖນເຈົ້າ

ເມື່ອນັ້ນ ພຣະຕາຕ້ານ ວ່າຄົນໃນຫັດຖະບາດ ນີ້ແລ້ວ
ບໍ່ໃຊ່ ຄົນນອກແທ້ ຫົນເບື້ອງຝ່າຍໃດ ພຣະເອີຍ

ແຕ່ນັ້ນ ພຣະຈຶ່ງບອກຂ້າໃຊ້ ໄປທ່ຽວທັນເປືອງ
ໃຫ້ເຂົາ ມາໂຮມກັນ ສູ່ຄົນໝົດສັ່ງງ
ພໍໃຫ້ ມະຫາເຖນຊີ້ ຫລຶງຕົວຍ້ຽມເບິ່ງ ເອົາຖ້ອນ
ຄັນວ່າ ເຫັນຜູ້ຜິດທ່ຽງແທ້ ມືຊີ້ບອກມາ ເຈົ້າເອີຍ

ແຕ່ນັ້ນ ຂຸມເຂົາຂ້າ ຄົນໃນຫັດຖະບາດ
ເຂົາກໍ ໂດຍອາດເຈົ້າ ມາພ້ອມພ່ຳກັນ
ແຕ່ນັ້ນ ພຣະຈຶ່ງຈຳເຖນເຈົ້າ ມືນຕາດູເບິ່ງ ເອົາຖ້ອນ
ຄັນວ່າ ໃຜຫາກຜິດທ່ຽງແທ້ ຂໍເຖົ້າຈົ່ງບອກມາ ທ່ຽວເຖີ້ນ

ຂ້ອຍຈັກ ຈຳຈອງໃຫ້ ທັນດະກັມສົມໂພດ ຈິງແລ້ວ
ຜູກສອກ ຕາກແດດໄວ້ ສາມມື້ຈຶ່ງຂີມາຍ ແທ້ແລ້ວ
ເມື່ອນັ້ນ ເຖນກ່າວຖ້ອຍ ຕ້ານຕອບພຣະຣາຊາ
ກໍຫາກ ເຫັນກະບວນດູ ບໍ່ຄືຈັກຄົນແທ້

ຕັ້ງບໍ່ມີ ມັນຜູ້ທຳຖີບຂ້ອຍ ໃນແຈສ້ວມອາບ ຈິງນາ
ຂໍແກ່ ມະຫາຣາດເຈົ້າ ທັນຊ້ຳບອກມາ ອີກຖ້ອນ

ແຕ່ນັ້ນ ພຣະບາດຕ້ານ ຂານຕອບມະຫາເຖນ
ດູດັ່ງ ຄົນໃນເຮົາ ກໍຫາກມາໝົດຖ້ວນ

ເມື່ອນັ້ນ ຣາຊາຕ້ານ ຖາມເອົາຂ້າມະຫາດ
ດູດັ່ງ ໝົດທໍ່ນີ້ ຈິງແທ້ຮູ້ວ່າຍັງ ນັ້ນເດ
ແຕ່ນັ້ນ ເຂົາແນະຕ້ານ ຂານຄຳບົນບອກ
ຍັງແຕ່ ຕົນທ່ານເຈົ້າ ຊຽງໝັ້ງໄປ່ມາ ພຣະເອີຍ

ເມື່ອນັ້ນ ພຣະຍາຈຶ່ງຈຳເຂົາໃຫ້ ໄປທັນມາຮີບ ເຮວເຖີ້ນ
ເຂົາກໍ ໂດຍອາດເຈົ້າ ໄປຟ້າວຮອດຊຽງ
ບັດນີ້ ຈອມຫົວເຈົ້າ ທັນຊຽງເຮວຮີບ
ຢ່າໄດ້ ລໍຊັກຊ້າ ໄປພ້ອມພວກຮຽມ ວ່າດາຍ

ຊຽງເລົ່າ ກິນໝາກຕອດຊຸລ່ວງທ້ອງ ຜອມຈ່ອຍຄືຜີ
ເຫັນແຕ່ ດັງຄອມມອມ ໜ່ວຍຕາກັບແຂ້ວ
ພໍເມື່ອ ເຫັນຄົນໃຊ້ ມາທູນທັນຮີບ
ມັນກໍ ຄ່ອຍລຸກຂຶ້ນ ເຜີຍຜ້ານັ່ງເຫງົາ

ຊຽງກໍ ໂດຍອາດເຈົ້າ ລຸກຍ່າງເຊໄປ
ສອງມືຈັບ ຂົ່ມຍັນຖືເທົ້າ
ຊຽງກໍ ເມືອເຖິງຫ້ອງ ທໍໂຮງຍຸບນັ່ງ
*ແຕ່ນັ້ນ ເຖນກໍຫລິງລ່ຳຢ້ຽມ ຄືແທ້ຮູບດຽວ ນີ້ແລ້ວ*

*ທໍ່ວ່າ ດູຜອມຮ້າຍ ຕາຂາວໜ້າຫລ່າ ເຮວນີ້*
*ຄືດັ່ງ ຜີກອງກ່ອຍຮ້າຍ ເຂົາເອີ້ນສະມ່ອຍດິງ*

ແຕ່ນັ້ນ ຊຽງຖແລງຕ້ານ ບໍ່ສະບາຍເທິງເຕີບ
ຕັ້ງວ່າ ໄຂ້ຊູ່ມື້ ມາໄດ້ແປດວັນ ນີ້ແລ້ວ
ມະຫາເຖນ ກໍມາສິງກາແທ້ ຈັກແນເດົາຢ້ານບໍ່ແມ່ນ
ດູທີ່ ມັນຫາກຜອມຜອກພົ້ນ ໂສມຮ້າຍບໍ່ຄື ແທ້ນາ

ແຕ່ນັ້ນ ເຖນຈຶ່ງລົງລາຫ້ອງ    ຫໍຄຳພູວະນາດ
ເລີຍເລົ່າ ໜີຟັ່ງຟ້າວ    ບໍ່ມີເອື້ອອ່າວເຖິງ
ກູຫາກ ຫາໝົດຫ້ອງ    ຄືນໃນບໍ່ມີຈອບ ມັນນໍ
ເຖນກໍ ໄດ້ແຕ່ຈົ່ມໃຈ້ໃຈ້    ທັງໄຫ້ຮ່ຳໄຮ

ໂອນໍ ມາເສັຽດາຍໝາກພ້າວ    ມື້ມ່ວງຜູຜາງ ແທ້ເດ
ທັງໝູ່ ເຟືອງໄຟຂນຸນ    ຊຽບຍົມລຳໄຍກ້ຽງ
ກັບທັງ ສັບພະສັນພ້ອມ    ຜາລາຫລາຍສ່ຳ
ຄຶດເມື່ອ ຍາມມັນສຸກແກ່ຖ້ອນ    ລານກວ້າງວັດຫລວງ

ກໍຫາກ ມີມາກລົ້ນ    ຈົນງ່າກ່ອງເອນລົງ
ກິ່ນຫອມ ຜົນຜາລາ    ໝູ່ແມງວິນກ້ຽວ
ເຖິງຍາມ ສຸກເຕັມຕົ້ນ    ສແວງກິນຕາມຊອບ
ໃຜເຫັນ ກໍກ່າວທ້ວງ    ປານດົງໄມ້ຫລາກຜົນ ນັ້ນນາ

*ແມ່ນວ່າ ຄືນໃດເຂົ້າ    ມາຂໍນ້ອມໝຽວ ກໍດີນາ*
*ກູກໍ ບໍ່ໄດ້ອອກປາກຕ້ານ    ວາງໃຫ້ແກ່ໃຜ ແທ້ນາ*
*ເພື່ອວ່າ ເສັຽດາຍແທ້    ເຂົາຂໍກໍຍ້ານແກ່ນ*
*ບັດນີ້ ບັກຂີ້ຮ້າຍ    ພາງລ້ຽວລ່າຍກູ ແທ້ນາ*

*ມັນຫາກ ພາງານແທ້    ຮານລົງໝົດອ່ອຍທ່ອຍ*
*ຈົນບໍ່ ມີໜ່ວຍຄ້າງ    ເຫລືອຕັ້ງແຕ່ຕໍ*
*ມັນຫາກ ຕົວະລວງລໍ້    ຍໍສັກດາແຖມຕື່ມ*
*ວ່າໃຫ້ ຍົດໃຫຍ່ຂຶ້ນ    ເປັນຄຣູແທ້ທ່ຽງຈິງ ແທ້ນາ*

ມັນເລົ່າ ທຳກູຊ້ຳ    ຫົວຕຳເສົາເລືອດອອກ
ຊາດທີ່ ໜ້າຜາກລ້ານ    ຊິນໄມ້ກໍເລີກໜັງ ແທ້ນາ

ຈົນວ່າ ເລືອດຢາດຍ້ອຍ    ທັງທົ່ວເລົາຄີງ
ຕີນຕົວເຈັບ    ຄອບມັນຄືນຮ້າຍ
ຄັນວ່າ ໄປຫາໄທ້    ຮາຊາທູນຄອບ
ພຣະກໍ ຜາຍໂຜດໃຫ້    ທັນໃຊ້ທ່ຽວຖາມ ແທ້ດາຍ

เล่าบ่ เห็นสักคนแท้ ถืมันอ้ายถ่อย จิງนา
ภูจัก ຂຳຂາດໃຫ້ ຂືນຊ້ຳສິ່ງມີ ວ່າດາຍ

ເລົ່າບໍ່ ເຫັນສັກຄົນແທ້ ຄືມັນອ້າຍຖ່ອຍ ຈິງນາ
ກູຈັກ ຂຳຂາດໃຫ້ ຂືນຊ້ຳສິ່ງມີ ວ່າດາຍ
ວ່າຈັກ *ທໍຣະມານ*ໃຫ້ ມັນຕາຍດັບຊາດ ຈິງນາ
ວ່າຈັກ ຜູກສອກຕາກແດດໄວ້ ຫງອຊ້ຽນຮອດພັນ ພຸ້ນດາຍ
ອັນຈັກ ໃຫ້ສົມກຳໃຈແທ້ ຟັນເສັ້ຽສົມໂທດ ຈິງແລ້ວ
ຕັດຕ່ອນໄວ້ ໃຫ້ກາແຮ້ງຕອດກິນ ພຸ້ນແລ້ວ
ຄ້ອມວ່າ ເຖນຈົ່ມແລ້ວ ນິດທະເນັ່ງເນົານອນ
ໃນໃຈຄຶດ ມືດມົວບໍ່ມີແລ້ວ

>> ບັດນີ້ ຈັກກ່າວເຖິງພຣະບາດໄທ້ ເມືອງໃຫຍ່*ປັດຕານີ* ກ່ອນແລ້ວ
ເຈົ້າກໍ ສເວີຍເມືອງສຸກ ຢູ່ເຢັນຫາຍຮ້ອນ
ຝູງໝູ່ ໂຍທາທ້າວ ເສນາມີມາກ
ເຂົາຫາກ ລືຊ່າເຮື້ອງ ເມືອງນັ້ນວ່າງາມ ຍິ່ງແລ້ວ

ພຣະກໍ ຍູສນຸກຫລິ້ນ ກິນທານທຸກເມື່ອ
ມວນໝູ່ ສົງຄະເຈົ້າ ປະສົງສ້າງສູດຮຽນ
*ຈົບຍິ່ງພຽງ* *ໄຕຍະເພດທັງສາມ*
*ຝູງໝູ່ ວິໄນຈົບ* *ອອກມາແປໄດ້*
*ກັບທັງ ອະພິທັມມາໄດ້* *ແປໄປກັບປາກ*
ບໍ່ໄດ້ ຄຶດຍ່ອນຍ້ານ ເຄືອງແຄ້ນຢ່າງໃດ ແທ້ແລ້ວ

ເຈົ້າກໍ ບໍ່ຍ່ອນຍ້ານ ເມືອງອື່ນມາປະຈົບ
ແມ່ນວ່າ ເຊີງໜັງສື ໂຈດແປບໍ່ມີຍ້ານ
ພຣະກໍ ສງວນຄວາມຫລິ້ນ ເຊີງພັນທຸກເຍື່ອງ
ໃຜຫາກ ພັນແພ້ແລ້ວ ເອົາຊ້າງສ່ວຍສົມ ແທ້ດາຍ

ແຕ່ນັ້ນ ພຣະຍາກໍມີຫົວລ້ານ ຣິດທີແຮງຕົວນຶ່ງ
ຄັນວ່າ ຊົນຕົ້ນພ້າວ ເຟືອນຂວ້ຳຂາດສະເດັນ
ພຣະກໍ ເອົາຫົວລ້ານ ໃນເມືອງມາຊົນຄູ່ ຄົນແລ້ວ
ໃຜບໍ່ ມີຕໍ່ໄດ້ ຫົວມ້ວນແຕກທະລາຍ ແທ້ດາຍ

---

ທໍຣະມານ (ປລ, ສສ ທໍຣມານ) = ຂົ່ມເຫັງ, ແອບໃຫ້ດີ / ຕານີ = ເມືອງປັດຕານີ

| | |
|---|---|
| ເມື່ອນັ້ນ ພຣະຍາກໍຕົກແຕ່ງໃຫ້ | ໄປທ່ຽວຫາຊົນ |
| ເອົາສິບພັນ | ຕ່າງເມືອງຖວາຍເຈົ້າ |
| ເຂົາເລົ່າ ເດີນເຖິງເທົ້າ | ທະວາຣາວະດີເມືອງເອກ |
| ສະເພົາຫ້າຮ້ອຍ | ເຂົາຢັ້ງທ່າເມືອງ |
| ແລ້ວຈິ່ງ ໃຊ້ຖືບຖ້ອຍ | ເຖິງທ່ານ*ນາຍແສງ* |
| ເຂົາກໍ ຖແລງຄຳຄວນ | ຄູ່ອັນເອົາຕ້ານ |
| ເມື່ອນັ້ນ ລ່າມກໍນຳຄວາມຂຶ້ນ | ເມືອທູນພຣະບາດ |
| ທູນເຫດຖ້ອຍ | ເມືອງຕານີໃຊ້ຂ່າວສານ |
| ແຕ່ນັ້ນ ພຣະບາດເຈົ້າ | ຊົມຊື່ນຍິນດີ |
| ກໍຈິ່ງ ປົງອາດຍາ | ໃສ່ຫົວຄົນໃຊ້ |
| ອັນວ່າ ມື້ອື່ນນີ້ | ສວາຍແກ່ພໍ່ງາຍ |
| ໃຫ້ສູ ທັນນາຍສະເພົາ | ຮີບພະລັນມາເຝົ້າ |
| ແຕ່ນັ້ນ ລ່າມກໍລາລົງຫ້ອງ | ຫໍຄຳພູວະນາດ |
| ເລີຍເລົ່າ ເມືອສູ່ຫ້ອງ | ເຮືອນຢ້າວແຫ່ງຕົນ |
| ເຖິງເມື່ອ ວັນຮຸ່ງແລ້ວ | ນາຍລ່າມເລີຍໄປ |
| ແຍງທີ່ ສະເພົາຫລວງພັກ | ບອກນາຍສະເພົາຄ້າ |
| ບັດນີ້ ຣາຊາໃຫ້ | ມາທັນທູນແຂກ |
| ຈິ່ງຮີບຟ້າວ | ເມືອເຝົ້າຢ່ານານ ວ່ານາ |
| ແຕ່ນັ້ນ ເຂົາກໍຕົກແຕ່ງພ້ອມ | ທຸກສິ່ງ*ບັນນາການ* |
| ກໍຈິ່ງ ນຳເມືອຖວາຍ | ພຣະຍອດເມືອງເປັນເຈົ້າ |
| ເມື່ອນັ້ນ ຣາຊາທ້າວ | ທະວາຣາວະດີກອຍກ່າວ |
| ຍາມເມື່ອ ສູລ່ອງມາພາກບ້ານ | ສະຫາຍພຸ້ນຄ່ອຍສຳຣານ ແດ່ລື |
| ແຕ່ນັ້ນ ເຂົາກໍຮັບພາກຕ້ານ | ຖວາຍບາດບັງຄົມ |
| ຄາວເມື່ອ ຕູຂ້າ ລົງສະເພົາມາ | ຈອດເມືອງວັນນີ້ |

---

ນາຍແສງ = ນາຍພາສາ, ລ່າມແປພາສາ (ຊາວເມືອງຕານີເວົ້າພາສາອື່ນຊຶ່ງຕ້ອງໃຊ້ນັກແປ )

ບັນນາການ (ປລ ປັນນາການ) = ຂອງຕ້ອນໃຫ້ດ້ວຍຄວາມເຄົາຣົບ ຫລື ດ້ວຍໄມຕີ

ອັນວ່າ ພຣະສະຫາຍເຈົ້າ ເຫັງຣະຄາສນຸກຍິ່ງ ຈິງແລ້ວ
ເຈົ້າກໍ ບໍ່ເດືອດຮ້ອນ ເຄືອງແຄ້ນເຍື່ອງໃດ ພຣະເອີຍ

ທີ່ວ່າ ຍັງເລົ່າເຄືອງໃຈເຈົ້າ ພຣະສະຫາຍມະຫາຣາດ ພາຍພຸ້ນ
ກໍຈິ່ງ ໃຊ້ໄພ່ນ້ອຍ ຝູງຂ້າດ່ວນມາ ພຣະເອີຍ
*ວ່າໃຫ້ ເອົາຫົວລ້ານ* *ມາຊົນດອມພຣະບາດ*
*ຄັນວ່າ ໃຜຫາກມີໂຊກແພ້* *ຊິເອົາຊ້າງສ່ວຍສິບ ວ່າດາຍ*

ເມື່ອນັ້ນ ພຣະບາດຕ້ານ ວ່າບໍ່ເປັນສັງ ດອກແລ້ວ
ຕາງໃຫ້ ເຫັນຣິດທີເຂົາ ຊື່ນຊົມຕາງຫລີ້ນ
ແຕ່ນັ້ນ ທູຕາໃຊ້ ລາລົງຖອຍເລີກ
ເຂົາກໍ ເມືອສູ່ຫ້ອງ ສະເພີາແລ້ວແຕ່ງດາ

ເຂົາກໍ ເອົາກັນພ້ອມ ຄວາມດຽວທຸກປາກ
ເລີຍເລົ່າ ຕຶກແຕ່ງໄວ້ ດາຫ້າງວ່າຊິພັນ ຢູ່ແລ້ວ
*ຊາດທີ່ ເຊີງຫົວລ້ານ* *ຊົນກັນບໍ່ມີລື່ນ ເຮົາແລ້ວ*
*ກໍຫາກ ເຄີຍຜາບແພ້* *ເອົາໄດ້ຊູ່ເມືອງ ແລ້ວເດ*

ເມື່ອນັ້ນ ຈອມກະສັດໄທ້ ທະວາຣາວະດີກອຍກ່າວ
ບອກໃຫ້ ເສເນດເຕົ້າ ຊຸມນຸມພ້ອມຂ່ວງສນາມ
ແລ້ວຈິ່ງ ທັນເອົາຄົນຫົວລ້ານ ມາໂຮມໝົດທຸກແຫ່ງ
ພຣະຈິ່ງ ຕ້ານໄຕ່ຖ້ອຍ ຖາມຊັ້ນຊູ່ອັນ

ບັດນີ້ ໃຜຈັກເອົາການເຈົ້າ ເຊີຍຊົນໃຫ້ແພ້ເພື່ອນ ໄດ້ບໍ?
ສູຢ່າ ໄດ້ຢູ່ຊ້າ ຂານຖ້ອຍບອກມາ ທ່ຽວຖ້ອນ
ຄັນວ່າ ໃຜຜູ້ເອົາການໄດ້ ສົມບັດຊິທານທອດ ຈິງແລ້ວ
*ຈັກບໍ່ໃຫ້ ຖືກວຽກບ້ານ* *ການເມືອງແທ້ເຍື່ອງໃດ*

ແຕ່ນັ້ນ ສະເພືອກພ້ອມ ຝູງໝູ່ອະເກສາ
ເຂົາກໍ ເອົາກັນ *ໂຍມ* ວ່າກົວເກງຢ້ານ
ແລ້ວຈິ່ງ ເອົາກັນເຂົ້າ ໄປທູນພຣະບາດ
ໃຜບໍ່ ອາດຕັ້ງຕໍ່ໄດ້ ກົວຢ້ານອ່ອນໂຍມ ພຣະເອີຍ

---

ອະເກສາ = ຄົນຫົວລ້ານ, ຫົວບໍ່ມີຜົມ / ໂຍມ (ລກ) = ຍອມ

ລືວ່າ ຈັກໃຫ້ເສັງຍົດກວ້າງ ເມືອງໃຫຍ່ທະວາຣາ
ສິ້ນຊາຍ ຄົນເຊັ່ງຫານ ແຫ່ງເຮົາເສັງແລ້ວ
ສູຈິ່ງ ໄປທັນທ້າວ ກະນິດຖານ້ອງນາດ ເຮົາຖ້ອນ
ບອກໃຫ້ ມາພ່ຳພ້ອມ ຄົນໃຊ້ຢ່ານານ ວ່າເນີ

ເມື່ອນັ້ນ ເຂົາກໍໂດຍຄຳເຈົ້າ ຈອມເມືອງເລີຍແລ່ນ
ຮອດທີ່ ຊຽງໝັ້ງງແລ້ວ ຖແລງຖ້ອຍກ່າວກອນ
ບັດນີ້ ພຣະບາດໄທ້ ຍັງຂມ່ອມເໜືອຫົວ
ຈຳໃຫ້ ຕູມາທັນ ທ່ານເມືອດຽວນີ້
ຕັ້ງຫາກ ເຄືອງພຣະໄທເຈົ້າ ຈອມເມືອງມີມາກ ຈິງແລ້ວ
ຕູຂ້ອຍ ກໍຈິ່ງມາຮີບຮ້ອນ ທັນຟ້າວຟັ່ງເປືອງ ນີ້ແລ້ວ

ແຕ່ນັ້ນ ຊຽງກໍໂດຍຄຳເຈົ້າ ບໍ່ມີນານເລີຍແລ່ນ
ໄປຮອດ ພຣະບາດເຈົ້າ ຕົນອ້າຍກໍຮີບຖາມ
ອັນວ່າ ເໜືອຫົວເຈົ້າ ທັນເປືອງໂດຍຮີບ ອີ່ສັງເດ
ຂ້ານ້ອຍ ມາຮອດແລ້ວ ຈອມເຈົ້າຊິວ່າສັງ ນັ້ນເດ

ເມື່ອນັ້ນ ພຣະຍາຫລວງເຈົ້າ *ຈາຣະຈາ*ບົນບອກ
ພຣະກໍ ເລົ່າເຫດໃຫ້ ຊຽງແຈ້ງຊູ່ອັນ
ບັດນີ້ ເພື່ອນກໍເອົາຫົວລ້ານ ມາຊິນພັນຮັບຕໍ່ ເຮົາແລ້ວ
ໃຜຜູ້ ມີໄຊກແພ້ ຊິເອົາຊ້າງສ່ວຍສິນ ວ່າດາຍ

ບັດນີ້ ເຮົາຈັກໄປຫາໄດ້ ຜູ້ໃດມາຮັບຕໍ່ ເຂົານັ້ນ
ເຈົ້າຈິ່ງ ຄຶດຮ່ຳຮູ້ ຄະນິງຜຽນຊູ່ອັນ ພີ່ຖ້ອນ
ຢ່າໃຫ້ ອັບປະມານເບື້ອງ ເມືອງເຮົາຕົກຜ່ອນ ເຂົາເນີ
ຄັນວ່າ ເຂົາຫາກແພ້ ຊິຈຳໃຫ້ສ່ວຍສິນ ບໍ່ຢ່າແລ້ວ

ແຕ່ນັ້ນ ຊຽງຕອບຖ້ອຍ ຮັບພາກພູບານ
ຂ້ອຍບໍ່ ກົວເກງເຂົາ ທໍ່ໃຍຍອງນ້ອຍ
*ເຂົານັ້ນ ມີຫົວລ້ານ* *ຕົວດຽວດູປ່ຽວ ຈິງນາ*
*ເຮົານີ້ ມີບໍ່ແພ້* *ທັງຄ້າຍທົ່ວເມືອງ ເຈົ້າເອີຍ*

---

ຈາຣະຈາ (ສສ ຈຣຈາ) = ເວົ້າກັນໄປມາ, ສົນທະນາ

ຂ້າຈັກ ອາສາແທ້ ບໍ່ມີເຄືອງຈັກສິ່ງ
ກະກຸນວ່າ ການທີ່ນີ້ ຊິມາຮ້ອນຮ່ອມໃດ ນັ້ນເດ
*ແມ່ນວ່າ ເຂົາຫາກມີຣິດທີກ້າ ແຮງຫລາຍເຫລືອມາກ ກໍຕາມຖ້ອນ*
*ຂ້າຈັກ ເອົາຜຍາຂິ່ນແພ້ ບໍ່ມີຢ້ານຍ່ອນເຂົາ ພຣະເອີຍ*

ແຕ່ນັ້ນ ຊຽງກໍຊຽນສລາກແລ້ວ ຢາຍໝູ່ອະເກສາ
ທັນມາ ໂຮມໃນນະຄອນ ອະເນການອງຫົວລ້ານ
ຕາມແຕ່ ໃນເມືອງໄດ້ ສາມພັນທັດທ່ຽງ ຈິງແລ້ວ
ອັນວ່າ ບ້ານນອກພຸ້ນ ເຫລືອລົ້ນໃໝ່ມາ ເຈົ້າເອີຍ

ເຂົາກໍ ມາໂຮມເຮືອນຊຽງໝັ້ງງ ເນືອງນອງຂີນໄຂວ່
ບໍ່ອາດ ຈັກຂີ້ໄຮ້ ຫົວລ້ານກິ່ງກອງ ແທ້ແລ້ວ
ຊຽງຈຶ່ງ ບອກໃຫ້ *ໄທຄັງເຈັ້ງ* ປຸນແປງຕົກແຕ່ງ
ຫາໝູ່ເຈັ້ງ ມາໃຫ້ມາກຫລາຍ

*ແລ້ວຈຶ່ງ ບອກເຂົາຝັ້ນເຊືອກເຈັ້ງ ກິ້ງກ່ອມສາມແກວ*
*ແລ້ວໃຫ້ ເອົາຂົນຄວາຍ ທັງເປືອກດໍາໂລມໄວ້*
*ໃຫ້ໄດ້ ເຊືອກສີ່ເສັ້ນ ຍາວຊົ່ວຊາວວາ ແທ້ເນີ*
*ໃຫ້ສູ ທໍາກະບວນເໝືອນ ດັ່ງດຽວໜັງຄ້ອງ*
ສູຈົ່ງ ເດົາດາແທ້ ປຸນແປງຕົກແຕ່ງ
ຢ່າໃຫ້ຊ້າ ນານແທ້ຮີບໂຮມ ແທ້ເນີ

ແລ້ວເລົ່າ ປີງອາດໃຫ້ ຝູງໝູ່ຊາວເມືອງ
*ສູຈົ່ງ ໄປເອົາສະໂນມາ ຕາກປຸນເປັນຄ້ອນ*
*ອັນວ່າ ລວງຍາວໄດ້ ສາມວາເປັນຂນາດ*
*ລວງໃຫຍ່ດ້າມ ຫົວຂວານແທ້ທີ່ສາກມື ນັ້ນເນີ*

ແລ້ວເອົາ ນໍ້າຫາງແຕ້ມ ທາໄປໝົດຊົ່ວ
ໃຫ້ມັນ ຄືແກ່ນໄມ້ ກະຍຸງແທ້ຈຶ່ງເອົາ ນັ້ນເນີ
ສູຈົ່ງ ເອົາກັນພ້ອມ ປຸນແປງໂດຍຮີບ
ຢ່າໃຫ້ຊ້າ ນານແທ້ທ່ຽວໂຮມ ທ່ານເອີຍ

ແຕ່ນັ້ນ ຝູງໝູ່ອະເກສາພ້ອມ ມາມວນຫລາຍໝູ່
ເຂົ້າມາ ໂຮມຢູ່ເຮືອນທ່ານເຈົ້າ ຊຽງໝ້ຽງອະເນກນອງ
ລາງພ່ອງ ຂອງຝາກລົ້ນ ເດ້ຽງຣະດາດຍໍຖວາຍ
ລາງພ່ອງ ເອົາເງິນຄຳ ມອບເວນຊຽງໝ້ຽງ
*ອັນນີ້ ພໍແຕ່ເປັນສິນຈ້າງ ຂໍດອມທານໂທດ*
*ຄັນວ່າ ນ້ອງພຣະເຈົ້າບໍ່ລ້ຽງ ຝູງຂ້າສ່ວນຕາຍ ແທ້ແລ້ວ*

ເຂົາກໍ ຂົນຂອງຕ້ອນ ມາທອມວາງມອບ
ຝູງຂ້າ ຫາກແມ່ນຫລານແຈ່ມເຈົ້າ ຕົວເຖົ້າບໍ່ແຮງ ພຣະເອີຍ

*ບັດນີ້ ຝູງຂ້າຂໍດອມຖ້ອນ ບໍ່ເຄີຍຊິນດອມເພື່ອນ ຈິງນາ*
*ເກີດມາ ຕັ້ງແຕ່ນ້ອຍ ຈົນເຖົ້າບໍ່ທ່ອນເຫັນ ເຈົ້າເອີຍ*
ເຂົາກໍ ວອນຂາບໄຫວ້ ດອມບາຫລາຍເທື່ອ ເລີງແລ້ວ
ອັນວ່າ ຊຽງໝ້ຽງເຈົ້າ ໃຈກ້າບໍ່ຍອມ

ເມື່ອນັ້ນ ຊຽງກ່າວຕ້ານ ບອກໝູ່ອະເກສາ
ສູຈົ່ງ ເອົາກັນໂຮມ ທີ່ທໍສນາມກວ້າງ
ກູຈັກ ໄປເລືອກເລັ້ມ ຕົວດີຄັດເລືອກ
ຕົວໃດ ຫານກ່າວກ້າ ແຂງເຂັ້ມຈຶ່ງຊິເອົາ

ຍັງຈັກ ເອົາການໄດ້ ຊິນພັນແພ້ເພື່ອນ ດັ່ງນັ້ນ
ພຣະບາດເຈົ້າ ຈັກປົງໃຫ້ຣາດຊະທານ ແທ້ດາຍ

ແຕ່ນັ້ນ ເຂົາກໍກົວຕາຍແທ້ ໃນໃຈແຄ້ນຄັ່ງ
ທໍ່ວ່າ ຂືນບໍ່ໄດ້ ທະລອນເຍື້ອນວ່າໂດຍ ດອກແລ້ວ

ເຂົາກໍ ລຸດລຸດຍ້າຍ ໄປຈອດເຊົາສນາມ
ຊາວອະເກສາໝົດ ໝູ່ມວນມາພ້ອມ
ແຕ່ນັ້ນ ກະນິດຖານ້ອຍ ໄປດູເລືອກເບິ່ງ
ຕົວໃດ ຍັງລື່ນລົ້ນ ດີແທ້ກໍຈຶ່ງເອົາ ວ່າດາຍ
ບາງພ່ອງ *ເສີກເສີຍລ້ານ* *ທາງຫລັງກະດົ້ນງ່ອນ*
ໜ້າຜາກ ດົກບໍ່ແພ້ ດຳປີ້ຍືດຍາວ

ຕົວນີ້ ຊື່ວ່າ*ລ້ານສະເນີ້ງເຄີ້ງ* ບໍ່ຄວນຖືກຮາຊະການ
ເປັນທໍ່ ເນົາໃນເຮືອນ ໃຫ້ລູກເມັຽເຂົາໃຊ້

ລາງພ່ອງ *ລ້ານແອດລ້ອມ* *ເປັນຍ່ອມຢູ່ຈອມຂວັນ* ກໍມີ
ຄືດັ່ງ ຈອມໂພນພຽງ ຝຸ່ມແກມກໍຫຍ້າ
ເປັນທີ່ ເຫົາຫິວໄຫ້ ຫາກັນເອີ້ນກູກາ
ເພາະເພື່ອ ພັດພີ່ນ້ອງ ທັງເຊື້ອຍ່ານາຍ ແທ້ແລ້ວ

ຕົວນີ້ ຊື່ວ່າ*ລ້ານອ້ອມແກ້ວ* ຮັກຊັບສິ່ງຂອງເຮືອນ
ບໍ່ຄວນ ເອົາການພຣະ ທໍ່ຢູ່ດອມເມັຽແກ້ວ

*ລາງພ່ອງລ້ານ* *ໜ້າຜາກອ່າວເນົາເຂີນ*
ເປັນເດີ່ນ ຄືໂນນນາ ບ່ອນສະຫາຍເຄີຍຄຸ້ນ
ຕົວນີ້ ຊື່ວ່າ*ສແນແຂລ້ານ* ການບໍ່ມີຈັກສິ່ງ
ດີທໍ່ ເຊີງຫລິ້ນຖ້ອຍ ພາງລິນແງ່ງອນ ແທ້ແລ້ວ

ຕັ້ງຫາກ ແບະແຮະແທ້ ກັບກ່າຍລວງພາງ ເຈົ້າເອີຍ
ມັນກໍ ຕົວະວ່າຕົວຊະຣາ ພະຍາດມີໃນເນື້ອ
*ລາງພ່ອງ ຜົມບໍ່ມີຈັກເສັ້ນ* *ຫົວມົນຄືບາດ*
ຕົວນີ້ ຊື່ວ່າໝາກນໍ້າເຕົ້າແລ້ງ ແຮງນ້ອຍບໍ່ຖືກການ ແທ້ດາຍ

ລາງພ່ອງ *ໜ້າຜາກລ້ານ* *ເທົ້າຮອດຈອມຂວັນ*
ຜິຈັກ ແຍງກະບວນດູ ຖ່ອງຫົວຈິງແທ້
ຍັງແຕ່ ວຽນໄປອ້ອມ ກົກຫູສອງຝ່າຍ
ຕັ້ງຫາກ ຄືຄົນປອກໄຂ່ຕົ້ມ ໃສເຫລື້ອມດັ່ງດຽວ

ຕົວນີ້ ຊື່ວ່າ*ຕະໂໝກໄຂກລ້ານ* ທຳມາໂອດແຮງຝຸນ
ກໍທໍ່ ແຮງຫຼຽງຄວາມ ຄຽດເລີງບໍ່ມີແລ້ວ
ຄັນວ່າ ເພື່ອນຫາກຈາຣະຈາເວົ້າ ຫົວຂວັນຊີຊວ່າ ເມື່ອໃດນັ້ນ
ມັນກໍ ຮີບຄຽດຕ້ອນ ຂຶມໜ້າຢູ່ເລີງ ດອກແລ້ວ

*ຕົວນຶ່ງ ຜົມບໍ່ມີຈັກເສັ້ນ* *ຕົນຕົວສູງໃຫຍ່*
*ຂົນມາກລິ້ນ* *ສເນີດ້າຍດັ່ງໝີ ນັ້ນແລ້ວ*

ຕົວນີ້ ຊື່ວ່າ*ລ້ານຈີ້ຄີ້* ເຮັດໄຮ່ກາງດົງ
ມັນນີ້ ສີພາວດຳ ໃຫຍ່ແຮງຄົນກ້ານ

ຕົວນີ້ ຄວນທີ່ເອົາການເຈົ້າ ເໜືອຫົວຍັງຂມ່ອມ ເຮົາແລ້ວ
ມັນນີ້ ຄົນຖືກດ້ານ ບູຮານແທ້ຄ່ອງຄື ເຈົ້າເອີຍ

ຊຽງກໍ ຕົກແຕ່ງພ້ອມ ປົງຣາດຮາງວັນ
ເອົາຄຳແສນ ມອບເວນວາງໃຫ້
ກັບທັງ ອາພອນຜ້າ ຜືນດີທາງເທດ
ຊຽງກໍ ຍໍມອບມ້ອນ ວາງໃຫ້ແກ່ກັນ ແທ້ແລ້ວ

ຊຽງຈິ່ງ ອານັດໃຫ້ ສອນມັນທຸກສິ່ງ
ອັນວ່າ ເຊື້ອກຫລາກລ້າວ ຄົນແກ້ວາດຜຍາ
ມັນກໍ ຮຽນເອົາໄວ້ ທຸກອັນຈຳທ່ຽງ
ຊຽງຈິ່ງ ບອກແກ່ຂຸນອື່ນນັ້ນ ຫົວລ້ານເລີກເມືອ

ຕັ້ງຫາກ ຫລາຍເຫລືອລົ້ນ ອະເກສາພໍໝື່ນ
*ລ້ານກໍຫາກ ລ້ານບໍ່ແພ້* *ຫົວຫລ້ອນບໍ່ຖືກການ ເຈົ້າເອີຍ*

ບໍ່ອາດຈັກ *ຄະນະນາ*ໄດ້ ອະເກສານັບບໍ່ຄູ່
ຕັ້ງຫາກ ຫລາຍຫລາກແທ້ ຫົວລ້ານຕ່າງແຊງ ເຈົ້າເອີຍ
ກໍບໍ່ໄດ້ ຄະນະນາໃຫ້ ຈາໄປໝົດຊູ່ວາດ ເສັ່ງແລ້ວ
ເມື່ອຈັກ ເວົ້າຢູ່ຊ້າ ກໍຍັງກວ້າງຍືດຍາວ

ອັນນີ້ ພໍແຕ່ແໜະປະຫຽນໃຫ້ ຄຽງໄຂພໍສນ່ອຍ
ໃຫ້ຄ່ອຍ ຄຶດອ່າວເອື້ອ ນຳຂໍ້ຮ່ຳໄປ ນັ້ນຖ້ອນ
ແຕ່ນັ້ນ ເຂົາກໍເອົາກັນພ້ອມ ລາໜີທຸກໝູ່
ເຂົາກໍ ເລີຍເລົ່າຍ້ອງ ຊຽງໝັ້ງງວ່າດີ

ບັດນີ້ ບຸນຄຸນສ້າງ ພາຍຫລັງນຳສິ່ງ ເຮົາແລ້ວ
ຢຽວວ່າ ຊິບໍ່ມົ້ມ ການເຈົ້າແຜ່ນດິນ ແທ້ດາຍ

---

ອາພອນຜ້າ ຜືນດີທາງເທດ = ແຜ່ນແພງາມຈາກຕ່າງປະເທດ / ຄະນະນາ (ປລ ຄນນາ) = ການນັບ, ການຄຶດເລກ, ຄຳນວນ

| | |
|---|---|
| ສຳນົວ ເຮົາທັງຫລາຍພ້ອມ | ກັນຕາຍຫົວແຕກາ |
| ອັນວ່າ ເມັຽແລະລູກເຕົ້າ | ຊິເປັນໝ້າຍເພື່ອນຫຍັນ ແທ້ດາຍ |
| ບັດນີ້ ບຸນຫລາຍລົ້ນ | ຊາຕາເຮົາຍັງຢູ່ |
| ຈຶ່ງໄດ້ ມາຮອດບ້ານ | ເຫັນໜ້າລູກເມັຽ ດອກແລ້ວ |
| ຄ້ອນວ່າ ເຂົາກ່າວແລ້ວ | ແລ້ວຢູ່ເຢັນໃຈ |
| ຊຽງກໍ ແຈນແຈນສຽງ | ແຕ່ງແປງຕາງເຈົ້າ |
| ນັບແຕ່ ອະເກສາເຂົ້າ | ມາໂຮມພໍໝື່ນ |
| ຊຽງກໍ ໄປເລືອກໄດ້ | ຫົວລ້ານຜູ້ດຽວ |
| ຄືຈັກ ມີໄຊແພ້ | ສິອັນກໍຍັງຕ່າງ |
| ອັນວ່າ ລ້ານໝູ່ນັ້ນ | ໂສມໜ້າຜອກບໍ່ຄື |
| ແຕ່ນັ້ນ ຊຽງບອກໃຫ້ທັນເຊືອກເຈັ້ຽ | ເຮງຮີບນຳມາ ທ່ຽວເຖີ້ນ |
| ເຮົາຈັກ ປຸນດາດີ | ແຕ່ງແປງທຳໄວ້ |
| ແຕ່ນັ້ນ *ໄທຄັງເຈັ້ຽ* | ເຮວພະລັນຟ້າວຟັ່ງ |
| ເລີຍເລົ່າແລ້ວ | ນຳໃຫ້ທ່ຽວຖວາຍ |
| ແລ້ວເລົ່າ ບອກໝູ່*ໄທຄັງຄ້ອນ* | ຈັດຮີບເຮວພະລັນ |
| ເຂົາກໍ ໂດຍຄຳພຣະ | ອາດຍາຊຽງໝັ້ງ |
| ເລີຍເລົ່າ ບໍຣະບວນແລ້ວ | ນຳໄປມວນມອບ |
| ຖວາຍແດ່ເຈົ້າ | ກະນິດຖານ້ອຍຊູ່ອັນ |
| ເຖິງເມື່ອ ວັນດີແລ້ວ | ຊຽງປຸນຕົກແຕ່ງ |
| ແລ້ວເລົ່າ ອານັດໃຫ້ | ຊາວບ້ານຊູ່ຄົນ |
| ຊຽງກໍ ສອນເຂົາໃຫ້ | ຟັງດູທຸກໝູ່ |
| ເຂົາກໍ ໂດຍອາດເຈົ້າ | ຈຳແຈ້ງຈື່ຄຳ |
| ແລ້ວຈຶ່ງ ເອົາເຊືອກເຈັ້ຽ | ຮີງຜູກຍັງແອວ |
| ທັງມວນເປັນ | ສີ່ອັນພໍເສັ້ນ |
| ແລ້ວເລົ່າ ບິດສະພັນເຂົ້າ | ດອມກັນກຸມຜູກ |
| ອັນວ່າ ຄົນສີ່ຮ້ອຍ | ໄປໄວ້ເງື່ອນຫລັງ |

ຝູງໝູ່ ໄທຄ້ອນໂປ້ງ ໄປກ່ອນນຳຫລັງ ກໍມີ
ອັນວ່າ ໄທຊາວເມືອງ ຫລັ່ງນຳເຫລືອລົ້ນ
*ຊຽງກໍ ທຳກະບວນໃຫ້ ຊາວສະເພົາຍ້ານຍ່ອນ*
ຈຳໃຫ້ ເຂົາໄປຕີປ່າວຄ້ອງ ກອງເອີ້ນທົ່ວເມືອງ

ວັນນີ້ ເຮືອນໃຜໃຫ້ ອັດປັກຕູລີ້ຢູ່ ຈິງເນີ
ເພິ່ນຈັກ ເອົາ*ລ້ານສິນບັດ*ໄປອາບນ້ຳ ໃຜຢ່າໄດ້ຜ່ານທາງ ແທ້ເນີ
ອັນວ່າ ປັກຕູບ້ານ ທາງຫລວງໃຫ້ອັດ*ທີ່* ດີເນີ
ຫລອນວ່າ ມັນຫາກພາລູ່ເຂົ້າ ເຮືອນຊິມ້າງມຸ່ນກະຈວນ ແທ້ດາຍ

ອັນວ່າ *ອັກຄີ* ໃຫ້ ປົກຖົມມຸດມອດ ເສັ່ງເນີ
ຫລອນວ່າ ມັນແປ່ມ້າງ ເຮືອນຢ້າວທັບເຕັງ ບໍ່ຮູ້
ໄຟຈັກ ລົນລາມໄໝ້ ທັງເມືອງເຊັ່ງຊ່າ
ມັນຈັກ ດັບທ່ຽງແທ້ ວາຍບ້ານຄອບໄຟ ແທ້ດາຍ

ແລ້ວເລົ່າ ເຕີນທັງໄທສະເພົາໃຫ້ ເອົາ*ເພຕາ*ຍ້າຍອອກ
ໄປຢູ່ຍັ້ງ ກາງນ້ຳແມ່ນັດທີ ພຸ້ນຖ້ອນ
ແລ້ວໃຫ້ ເອົາຫົວລ້ານ ໃນສະເພົາຊຸກເຊື່ອງ ເສັ່ງເນີ
ມັນນີ້ ຮົນຂນາດແທ້ ພານໜ້າບໍ່ເປັນ ເຈົ້າເອີຍ
ຢ່າໄດ້ ແປນຕົວໄວ້ ລົມເຕັງຈັກຖືກກິ່ນ ບໍ່ຮູ້
ຫລອນວ່າ ມັນລູ່ເຂົ້າ ຊາວຄ້າຊິແຕກແຜນ ແທ້ດາຍ

ແຕ່ນັ້ນ ຊາວສະເພົາຍ້າຍ ເພຕາຊຸກອອກ
ໄປຈອດຍັ້ງ ກາງນ້ຳແມ່ນັດທີ ແທ້ແລ້ວ
ແລ້ວຈຶ່ງ ເອົາຫົວລ້ານ ອະເກສາປົກທີ່
ບໍ່ໃຫ້ ຊອດຜີວໄດ້ ເອົາໄວ້ລຸ່ມສະເພົາ ພຸ້ນດາຍ

ແຕ່ນັ້ນ ເຂົາກໍຄອຍຢູ່ຖ້າ ຄອງເບິ່ງອະເກສາ
ຈັກວ່າ ດີປານໃດ ໂອດຄວາມມະຫາແງ້ນ
ແຕ່ນັ້ນ ຝູງຊາວບ້ານ ໂດຍຄຳເຈົ້າກ່າວ
ເຂົາກໍ ອັດທີ່ໄວ້ ປັກຕູບ້ານບໍ່ໄຂ

---

ອັກຄີ (ປລ ອັຄຄີ) = ໄຟ / ເພຕາ (ສສ) = ແພ, ເຮືອສະເພົາ / ທີ່ (ລກ) = ປົກຫຸ້ມດ້ວຍຜ້າ

ອັນວ່າ ເຮືອນຊານມຸ້ງມ ພື້ນໄພປີກເທົ່າ
ປັກຕູ ແລະປ່ອງຢຸ້ງມ ອັດໄວ້ຊູ່ພາຍ
ອັນວ່າ ໄທເຮືອນນັ້ນ ກັນເສັ້ງບໍ່ໃຫ້ອອກ
ອັນວ່າ ຄົນນອກບ້ານ ກັນໄວ້ບໍ່ໃຫ້ຫຼຽວ
ເຮືອນໃຜແທ້ ເຮືອນມັນລີ້ຢູ່
ເມື່ອບໍ່ ໂດຍອາດເຈົ້າ ກົວຢ້ານໂທດມີ ແທ້ດາຍ
ແຕ່ນັ້ນ ຕາເວັນຄ້າຍ ພໍແລງລໍ້າບ່ຽງ ມາແລ້ວ
ຊຽງກໍ ບອກແກ່ຄົນສີ່ຮ້ອຍ ຖືເສັ້ນເຊືອກໜັງ

ເສັ້ນນຶ່ງ ດຶງເມືອໜ້າ ຫາງຫລັງສເມີພາກ ກັນແລ້ວ
ເສັ້ນນຶ່ງ ດຶງແຍກຊ້າຍ ຂວາພຸ້ນກໍດັ່ງດຽວ

ອັນວ່າ ເຊືອກສີ່ເສັ້ນ ດຶງເຄັ່ງສເມີກັນ
ຢ່າໃຫ້ ຍານທາງໃດ ໂທດຊິມີທາງນັ້ນ
ເສັ້ນໃດ ມີຄົນຮ້ອຍ ຮັກສາດີໃຫ້ເຊືອກເຄັ່ງ
ເປັນປະທັດ ຊູ່ເສັ້ນ ເຂົາພ້ອມເຄື່ອນທາງ

ຝູງໝູ່ ໄທຄ້ອນໃຫ້ ໄປກ່ອນນຳຫລັງ ກໍມີ
ຄັນວ່າ ມັນລັງຮຸດ ກໍຈິ່ງຕິຕາມນັ້ນ
ຄ້ອມວ່າ ບໍຣະບວນແລ້ວ ເອົາກັນຍ້າຍອອກ
ອັນວ່າ ຄົນສີ່ຮ້ອຍ ໂຮມຫຸ້ມແຫ່ໄປ

ເຂົາກໍ ແຍ່ງຫົນຫ້ອງ ຊາວສະເພົາເຊົາຈອດ
ແຄມທ່ານໍ້າ ພາຍພຸ້ນຊື່ວໄກ
ຕັ້ງຫາກ ລຸດລຸດຍ້າຍ ຄົນແຫ່ແຫນນຳ
ທາງຫລວງຄັບ *ອອກວຽງ*ລີລາຍ
ຟັງຍິນ ສຽງກອງຄ້ອງ ຄົນນັນພືດພື້
ອັນວ່າ ສຽງລັ່ນຄ້ອງ ຄືຟ້າເກື່ອນທະລາຍ

ລາງຄົນຟ້າວ ປີບໄປນຳເພິ່ນ ກໍມີ
ລາງພ່ອງຍ້ານ ຄອຍຢຸ້ງມແຕ່ໄກ

ລາງພ່ອງ ປີນປ່າຍຮົ້ວ ໜາມແໜງເກາະຂີດ ກໍມີ
ລາງພ່ອງ ຂຶ້ນຕົ້ນໄມ້ ສູງພົ້ນເບິ່ງນຳ

ຊາວເມືອງ ຊວ່າຊວ່າລົ້ນ ຊອກບ່ອນຢືນແນມ
ຕາມທາງໄປ ອັ່ງເຕັມຕາຈໍ້
ຕັ້ງວ່າ ສອນລອນຢຸ້ມ ແຄມທາງສອງຟາກ
ດີແຕ່ ສາວບ່າວຈ້ອງ ຊໍຊ້ອງແລ່ນນຳ ແທ້ແລ້ວ

ແຕ່ນັ້ນ ເຂົາກໍເອົາຫົວລ້ານ ໄປເຖິງແຄມທ່າ
ບ່ອນສະເພົາ ຫ້າຮ້ອຍ ຊຸມຄ້າຢູ່ເຊົາ
ແຕ່ນັ້ນ ຊາວສະເພົາຄ້າ ສອນລອນຢືນເບິ່ງ
ຫົວລ້ານ ກໍເລີຍຮຸດແກ່ງແກ້ ໜັງເຈັ້ງຂາດກະເດນ

*ອັນວ່າ ເຊືອກສີ່ເສັ້ນ ຂາດມຸ່ນເປັນຜົງ*
*ຄືດັ່ງ ພາຍສານຊັກ ຂາດໄປເປັນບັ້ນ*
*ຝູງຄົນລົ້ນ ໂຄມກັນຂົບໄຂວ່*
*ອັນວ່າ ຄົນສີ່ຮ້ອຍ ຫົວເທົ້າແທບດິນ ແທ້ແລ້ວ*

ແຕ່ນັ້ນ ໄຫຄ້ອນປີ້ງ ເຂົາເລົ່າທຸບຕີ
ຝູງໝູ່ ທັນຕາຫັກ ມຸ່ນກະຈອນເສັ້ງສ້ຽງ
ມັນກໍ ຂະໂຍງຂະເຍງຮ້າຍ ໄປມາເຕັ້ນຕື່ມ
ບໍ່ໄດ້ ຄຶດຍ່ອນຍ້ານ ທຸລິນ້ອຍນິ່ງສັງ ແທ້ດາຍ

*ແມ່ນວ່າ ເຂົາຫາກກຸມເອົາຄ້ອນ ສະໂບຕີຮ້ອຍໝູ່ ກໍດີແລ້ວ*
*ຄ້ອນຫາກ ຫັກຮ້ອຍບັ້ນ ເສັ້ງສຽງບໍ່ຖອງ ແທ້ແລ້ວ*
ມັນກໍ ປົບເມືອບ້ານ ທະວາຣາວະດີເມືອງເອກ
ຝູງໝູ່ ແສນສໍ່າທ້າວ ເຟືອນຟື້ນໄລ່ນຳ ແທ້ແລ້ວ

ເມື່ອນັ້ນ ຊາວສະເພົາຄ້າ ຈາກັນຊຸບຊິ່ມ
ຫົວລ້ານເພິ່ນ ກໍຫາກແຮງມາກລົ້ນ ເຫລືອແທ້ກວ່າເຮົາ ແທ້ດາຍ
*ຕັ້ງວ່າ ໜັງສີ່ເສັ້ນ ຂາດມຸ່ນເປັນກະຈອນ*
*ອັນວ່າ ຄົນພໍພັນ ໄຂວ່ຂົບເຂົາລົ້ນ*

*ທັງເລົ່າ ເອົາໄມ້ຄ້ອນ          ໂຕແກ່ນກະຍຸງແດງ*
*ຕັ້ງວ່າ ຍາວສາມວາ          ທີ່ຂາຍັງທັກກຸ້ນ*
*ຄືນຕ່າງ ຕີຫົວລ້ານ          ໂຮມກັບພໍໜື່ນ*
*ຄ້ອນກໍ ຫັກມຸ່ນແທ້          ແສນປັ້ນບໍ່ຖອງ ເຈົ້າເອີຍ*

ແຕ່ນັ້ນ ຊາວສະເພົາຄ້າ          ເມືອງຕານີຢ້ານຢ່ອນ
ກໍຈຶ່ງ ຖາມໄຖ່ຖ້ອຍ          ຫົວລ້ານແຫ່ງເຂົາ
ທ່ານຈັກ ອາສາໄດ້          ພັນຊິນແພ້ເພື່ອນ ຈິງລື
ຍັງຈັກ ຄ້ຳເພື່ອນໄດ້          ຈິງແທ້ດັ່ງໃດ ນັ້ນເດ

*ແຕ່ນັ້ນ ອະເກສາລ້ານ          ໃນສະເພົາຢ້ານສັ່ນ*
*ມັນກໍ ອອກປາກຕ້ານ          ຂານຖ້ອຍວ່າໂຍມ ດອກແລ້ວ*
*ດູດັ່ງ ຣິດທີເຂົາພຸ້ນ          ແຮງເຫລືອສຸດຂນາດ ເຮວແລ້ວ*
*ຢ້ານທີ່ ຄ້ຳບໍ່ໄດ້          ຕົວຂ້າເລົ່າຊິຕາຍ ບໍ່ຮູ້*

ເມື່ອນັ້ນ ຊາວສະເພົາຄ້າ          ເມືອງຕານີຟັງຢູ່
ເຫັນທີ່ ຫົວລ້ານເຈົ້າ          ຄວາມຢ້ານວ່າຍອມ ດັ່ງນັ້ນ
ເຂົາກໍ ຕົກໃຈແຄ້ນ          ຂລັງທອງເລີຍຈົ່ມ
*ເຮົາວ່າ ເຮົາຂນາດແທ້          ເຂົາພັດກ້າລື່ນເຮົາ ແທ້ບໍ*

ອັນວ່າ ໃນຫົນຫ້ອງ          ເມືອງໄກປະເທດອື່ນ ພາຍພຸ້ນ
ເຮົາກໍ ໄປຜາບແພ້          ເອົາໄດ້ຊູ່ເມືອງ ແລ້ວເດ
ກໍຫາກ ເອົາຫົວລ້ານ          ພັນຊິນຫລາຍຊ່ຳ ມາແລ້ວ
ໃຜບໍ່ ຕັ້ງຕໍ່ໄດ້          ຫົວປີ້ນວບຕາຍ ແທ້ນາ
ອັນນີ້ ອະເກສາລ້ານ          ເມືອງທະວາພັດແຮງກວ່າ
ເຮົາກໍ ຕົກຖ່ອຍຊ້າ          ອາຍໜ້າເມື່ອຊິຄືນ ນັ້ນເດ

ເຂົາກໍ ຈົ່ມໃຈ້ໃຈ້          ທຸກປາກໃນສະເພົາ
ຕັ້ງວ່າ ເສັງແຮງມາ          ໃຫ້ເພິ່ນຫົວຂວັນໜ້າ
ບັດນີ້ ທະວາຣາວະດີຫ້າວ          ຍໍມື້ຊີ້ງ່ອນ ຕາຍແລ້ວ
ບໍ່ອາດ ຫອກພຣະເນດຢ້ຽມ          ຫລຽວໜ້າເບິ່ງໃຜ ໄດ້ແລ້ວ

| | | |
|---|---|---|
| ເມື່ອນັ້ນ | ນາມສະເພົາຄ້າ | ຊຸມກັນທຸກໝູ່ |
| ບັດນີ້ | ເຮົາຢ່າຊ້າ | ເມືອເຝົ້າພຣະຍອດເມືອງ ທ່ຽວເຖີ້ນ |
| ແລ້ວເລົ່າ | ລາບາດເຈົ້າ | ເມືອສູ່ເມືອງເຮົາ ຊອບດາຍ |
| ມາບໍ່ | ເປັນຜົນຫຍັງ | ຮີບຄືນເມືອຖ້ອນ |
| ເມື່ອນັ້ນ | ເຈົ້າກໍຕົກແຕ່ງຫ້າງ | ຍັງເຄື່ອງບັນນາການ |
| | ທັງສິນພັນ | ຄູ່ອັນໄປພ້ອມ |
| ກໍຈິ່ງ | ນຳເມືອໄຫວ້ | ຖວາຍພຣະຍາເມືອງເທດ |
| | ບົນບອກໃຫ້ | ຈອມເຈົ້າຊູ່ອັນ |
| ອັນນີ້ | ບັນນາການໃຫ້ | ສິນພັນມວນມອບ ຈິງແລ້ວ |
| ຫາກບໍ່ | ເປັນໂຊກແທ້ | ຂໍເຈົ້າໂຜດຜາຍ ແດ່ຖ້ອນ |
| *ອັນວ່າ* | *ອະເກສາລ້ານ* | *ໃນສະເພົາເຈັບປ່ວຍ ເສັຽບາ* |
| *ຜິບໍ່* | *ເປັນດັ່ງນັ້ນ* | *ກໍພໍຫລີ້ນຕໍ່ກັນ ດອກແລ້ວ* |
| ບັດນີ້ | ຝູງຂ້າລາບາດເຈົ້າ | ເມືອສູ່ປັດຕານີ ກ່ອນແລ້ວ |
| ຝູງຂ້າ | ຈັກຄ່ອຍນຳຄຳຄືນ | ຄອບພຣະຍາເມືອງພຸ້ນ |
| ພຣະຈິ່ງ | ຍືນຍາວໝັ້ນ | ພັນປີຮ້ອຍຂວບ |
| ຂໍຢ່າ | ມີໂສກຮ້ອນ | ສັງແທ້ທໍ່ໃຍ ພຣະເອີຍ |
| ຈິ່ງໃຫ້ | ສວັດສະດີແທ້ | ຫລາຍເມືອງມາສ່ວຍ |
| ຝູງຂ້າ | ຈັກຂໍຄືນຄອບທ້າວ | ສະຫາຍພຸ້ນຊົ່ວໄກ ກ່ອນແລ້ວ |
| ແຕ່ນັ້ນ | ທະວາຣາວະດີທ້າວ | ຈາດອມຊຸນແຂກ |
| ຂໍຝາກ | ຖາມຂ່າວເຈົ້າ | ສະຫາຍພຸ້ນໝື່ນທີ ແດ່ຖ້ອນ |
| ເຂົາກໍ | *ພາງພຣະຍາ*ແລ້ວ | ລາລົງຜາສາດ |
| | ເຂົ້າສູ່ທ້ອງ | ສະເພົາແລ້ວເບີກໜີ |
| ດີແຕ່ | ລົມເປົ່າເປື້ອງ | ເສົາກະໂດງກວດແກວ່ງ |
| | ສະເພົາຫ້າຮ້ອຍ | ເມືອພ້ອມພໍ່າກັນ |
| ຜໍ່ດູ | ຍືດຍືດຍ້າຍ | ສະເພົາອອກຕາມລົມ ພຸ້ນເຢີ |
| ດີແຕ່ | ເພຕາໄຫລ | ລ່ວງໄປຕາມນ້ຳ |

---

ພາງພຣະຍາ = ເວົ້າຕົວະພຣະຍາ

ຫລາຍວັນໄດ້ ຫລາຍເດືອນຄາວຖືບ
ກໍຈຶ່ງ ໄປຮອດຫ້ອງ ເມືອງກວ້າງແຫ່ງຕົນ
ເຂົາກໍ ຂຶ້ນຂາບໄຫວ້ ພຣະຍາໃຫຍ່ຕານີ
ເທື່ອນີ້ ເສັ່ງໃຈເຮົາ ເພື່ອນແຂງເຂົາແພ້
ເພື່ອນຫາກ ມີຫົວລ້ານ ຣິດທິແຮງສຸດຂນາດ ຈິງແລ້ວ
ກໍຫາກ ດູຍິ່ງພົ້ງ ເຫລືອລົ້ນກວ່າເຮົາ ພຣະເອີຍ

*ອັນວ່າ ໜັງສີເສັ້ນ ຂາດມຸ່ນເປັນຝຶງ ແທ້ນາ*
*ຄືນພໍພັນ ກື່ງກອງກັນລົ້ນ*
*ທັງເລົ່າ ເອົາຄ້ອນປີ້ງ ພໍໝື່ນບໍາຕີ*
*ກໍຫາກ ເພພັງທະລາຍ ມຸ່ນຝຶງຫາຍສ້ຽງ*
*ຕັ້ງວ່າ ເຫລືອແຮງແທ້ ອະເກສາຢ້ານສັ່ນ*
*ເປັນທີ່ ຄໍ້າບໍ່ໄດ້ ຝູງຂ້າກໍຈຶ່ງມາ ພຣະເອີຍ*

ເຮົາຫາກ ເຄີຍພັນແພ້ ອະເກສາຫລາຍເທື່ອ ເລີງແລ້ວ
ຫາກບໍ່ ເປັນດັ່ງນີ້ ຝູງຂ້າບໍ່ທ່ອນເຫັນ ພຣະເອີຍ
ເມື່ອນັ້ນ ຣາຊາເຈົ້າ ປັດຕານີກອຍກ່າວ
ຈາປາກຕ້ານ ຖແລງຖ້ອຍຕໍ່ຊຸນ

*ເຮົາຫາກ ມີສິນຈ້າງ ຫລາຍເມືອງມາສ່ວຍ ຈິງແລ້ວ*
*ດ້ານແຕ່ ເສັ່ງທໍ່ນັ້ນ ຊິມາຮ້ອນຮ່ອນໃດ ນີ້ເດ*

ຫຽມດັ່ງ ຝູງຫວຍຄ້າ ໄປທ່ຽວຫລາຍເມືອງ
ຄັນວ່າ ເສັ່ງຫິນເຂົາ ກໍເລົ່າຫາເອົາໜ້າ
ຄັນວ່າ ຫາເອົາໄດ້ ເປັນຫິນສືບຕໍ່ ໄປນັ້ນ
ບໍ່ທ່ອນ ຄຶດຫລາບໃບ້ ກົວຢ້ານຢ່ອນຍອມ ແທ້ດາຍ

ຄ້ອມວ່າ ພຣະກ່າວແລ້ວ ເຂົາເລີກລາເມືອ
ແຍງເຕຫັງ ຢູ່ຊິມເມັ່ງແກ້ວ
ກໍບໍ່ ຄຶດເດືອດຮ້ອນ ຈັກສິ່ງປະການໃດ
ຍູທ່າງ ຫຽວຂາຍຂອງ ຈ່າຍກິນເຫລືອລົ້ນ

---

ຣິດທິ (ປລ, ສສ ຣິທທິ) = ຄວາມເກັ່ງກ້າ, ອໍານາດ

>> ບັດນີ້

ຈັກກ່າວເຖິງຊຽງຍານຜູ້ ຜຍາດີແດນຕ່າງ ກ່ອນແລ້ວ
ມັນກໍ ເປັນລູກເຈົ້າ ເມືອງກວ້າງຊື່ວໄກ
ທີ່ວ່າ ຢູ່ຝ່າຍກໍ້າ ນໍ້າໃຫຍ່ຄຸງຄາ ພຸ້ນແລ້ວ
ກໍຫາກ ເປັນປາຍເມືອງ ແຫ່ງທະວາຣີທ້າວ
ເຂົາກໍ ລືຊາທ້າວ ຊຽງຍານຜຍາມາກ
ຂົງເຂດ ເມືອງນອກພຸ້ນ ໃຜຊິແກ້ຕໍ່ມັນ ໄດ້ເດ

ກໍຫາກ ເຊັງຊ່າແທ້ ເຈົ້າບ່າວຊຽງຍານ
ຄຶດວ່າ ບໍ່ມີໃຜແຜວ ທີ່ໃຍຍອງນ້ອຍ
ຊາດທີ່ ເຊີງຜຍານີ້ ໃນເມືອງຄົນບໍ່ໃຫ້ລື່ນ
ຢຽວວ່າ ອິນຢູ່ຟ້າ ລົງແກ້ຊ່ອຍເຂົາ ບໍ່ຮູ້

ແຕ່ນັ້ນ ຊຽງຍານໄດ້ ຍິນຄໍາລືກ່າວ
ຂ່າວວ່າ ຊຽງໝັ້ງງເຈົ້າ ຜຍາລໍ້າລື່ນຄົນ ແທ້ດາຍ
ຜັດແຕ່ ຊົມພູພື້ນ ເມືອງຄົນໝົດທີບ ເຮົານີ້
ບໍ່ອາດ ມີຜູ້ແພ້ ຊຽງໝັ້ງງທີ່ໃຍ ເຈົ້າເອີຍ

*ແຕ່ນັ້ນ ຊຽງຍານຄຶດຄຽດແທ້ ອ້າງໂອດຄໍາສະຫາວ*
*ຕັ້ງບໍ່ມີ ປານຜຍາກູ ຈ່າຍເສັຽປາຍລື້ນ*
*ໃຜທ່ອນ ທຽມທັນເທົ້າ ຜຍາຍານປຸນປຽບ ໄດ້ນໍ*
*ໃຕ້ລຸ່ມຟ້າ ກູລໍ້າລື່ນກາຍ ແທ້ແລ້ວ*

*ແຕ່ນັ້ນ ມັນກໍຕົດໃສ່ບັ້ງ ຫລາຍເທື່ອໂຮມກັນ*
*ແລ້ວເລົ່າ ແປງໄລອັດ ບີບສະໂນຕັນໄວ້*
ມັນກໍ ທໍາພຽນແທ້ ຕົດຂັງຫລາຍເທື່ອ ເລີງແລ້ວ
ຄຽດວ່າ ເຂົາກ່າວເວົ້າ ວ່າຊຽງໝັ້ງງລື່ນຕົວ ນັ້ນແລ້ວ

ບັດນີ້ ກູຈັກໄປລອງຫລິ້ນ ຜຍາຊຽງດູກ່ອນ
ຕາງໃຫ້ ເຫັນບ່ອນເບື້ອງ ຜຍາກວ້າງແຫ່ງມັນ ແທ້ດາຍ
ຕັ້ງແຕ່ ກົງແດນດ້າວ ຄາເມບ້ານນອກ ເຮົານີ້
ໃຜໄປ່ ທັນລື່ນຖ້ອຍ ຜຍາກວ້າງແຫ່ງກູ ດອກນາ

ບັດນີ້ ກູຈັກເອົາຍັງບັ້ງ ຕິດເປັນຂອງຝາກ ຈິງດາຍ
ຮອດທີ່ ຊຽງໝັ້ງແລ້ວ ຊິເອົາໃຫ້ທ່ານດົມ ແທ້ດາຍ

ແຕ່ນັ້ນ ຊຽງຍານພາຍເອົາບັ້ງ ຕິດໄປເຮວຮີບ
ຄາວຂວບມື້ ໄປຟ້າວຮອດເມືອງ

ເມື່ອນັ້ນ ຊຽງຍານເຂົ້າ *ໃນວຽງໄປທ່ຽວ*
ມັນກໍ ບໍ່ຮູ້ບ່ອນຢູ່ທ້າວ ຊຽງໝັ້ງທີ່ໃດ
ມັນຈິ່ງ ຖາມເມືອໃຕ້ ເມືອເໜືອໝົດທົ່ວ ເມືອງແລ້ວ
ຊຽງຍານ ຈິ່ງພົບພໍ້ ຊຽງໝັ້ງຢູ່ເຮືອນ

ເມື່ອນັ້ນ ຊຽງຍານຕ້ານ ຖແລງຄຳກອຍກ່າວ
ເຈົ້າກໍ ຍັງຮູ້ບ້ານ ຊຽງໝັ້ງບ່ອນໃດ ນັ້ນເດ
ອິດບອກໃຫ້ ເຍືອງທາງຊີ້ບອກ ຮຽມແມ
ອັນວ່າ ຄຸນແຈ່ມເຈົ້າ ຕົວຂ້ອຍບໍ່ລືມ ດອກນາ

ເມື່ອນັ້ນ ຊຽງໝັ້ງຮັບພາກຕ້ານ ຂານຕອບຊຽງຍານ
ຈັກວ່າ ເຕືອງໃຈສັງ ຈິ່ງຖາມຫາທ້າວ ນັ້ນເດ
ແຕ່ນັ້ນ ຊຽງຍານຕ້ານ ຖແລງກອນຊ້ຳກ່າວ
ເພິ່ນວ່າ ມັນມີຜຍາເລີດລ້ຳ ດີແທ້ຈິ່ງຢາກເຫັນ ເຈົ້າເອີຍ

ຂ້ອຍກໍ ຕິດໃສ່ບັ້ງ ມາແຕ່ຄາເມ ພຸ້ນດາຍ
*ຄັນວ່າ ໄປເຫັນຊຽງ ຊິໃຫ້ດົມຕົດແທ້*
*ຄັນໄດ້ ດົມຕົດແລ້ວ ຜຍາມັນຊິຕົກຜ່ອນ*
ຄືນຫາກ ລືຊ່າຍ້ອງ ເມືອງພຸ້ນປະເທດໄກ ເຈົ້າເອີຍ

ຂ້ອຍຈິ່ງ ເອົາຍັງບັ້ງ ຕິດມາເຮວຮີບ
ຄັນວ່າ ເຫັນໜ້າທ້າວ ຊຽງໝັ້ງຊິໃຫ້ດົມ ແທ້ດາຍ
ຄັນມັນ ດົມຕິດແລ້ວ ຜຍາມັນຊິຍຸດຍ່ອນ
ມັນຈັກ ຕົກບາດຊ້າ ເສັຽໜ້າຄອບເຮົາ ບໍ່ຢ່າແລ້ວ
ມັນຈັກ ຍິນອາຍໜ້າ ພາລາໃບ້ຊື່ວ
ເປັນດັ່ງ ໝາຂີ້ເຮື້ອນ ຊະເວຄວ້າງຢູ່ດົນ ນັ້ນແລ້ວ

ຄວນທີ່  ເອົາມັນໃຫ້ ມີສັກສິດອມເພື່ອນ
ເພື່ອວ່າ ຄົນຂີ້ຮ້າຍ ຜຍາຫລຸ້ມຫລ່ອຍເສັຽ  ເຈົ້າເອີຍ

ແຕ່ນັ້ນ  ຊຽງໝ້ຽງຕ້ານຕອບຖ້ອຍ ຮັບພາກຊຽງຍານ
ອັນວ່າ  ເຮືອນຊຽງຢູ່ໃນເມືອງ ຊີ່ມີເຮົານີ້
ຜັດແຕ່  ເຈົ້າຈາກບ້ານ ເຫີນຫ່າງມາໄກ
ນານປານໃດ ຈຶ່ງມາເຖິງ ຮອດເຮົາພາຍພີ້

ແຕ່ນັ້ນ  ຊຽງຍານໄດ້ ຍິນຄຳຊຽງກ່າວ
ມັນຈຶ່ງ  ຕ້ານຕອບຖ້ອຍ ປະມານໄດ້ແປດຄືນ  ເຈົ້າເອີຍ
*ປານນີ້  ຕົດຢູ່ບັ້ງ  ມັນຄົງເຫີຍຫາຍກິ່ນ  ເສັຽແລ້ວ*
*ຄັນວ່າ  ມັນຫາກເຫີຍກິ່ນແທ້  ຊິຕົດຊ້ຳຕື່ມແຖມ*

*ເອົາໃຫ້ ມັນຂີວຂື່ນກົ້ວ  ໄປໃຫ້ແກ່ມັນດົມ*
*ໃຫ້ຜຍາຂອງມັນ  ຫລ່ອຍລົງສູນປູ້*
*ແຕ່ນັ້ນ  ຊຽວຍານຟ້າວ  ໄຂດົມດູກິ່ນ  ຕົດນັ້ນ*
*ຕົດຍັງ  ຂີວຂື່ນກົ້ວ  ເຕັມບັ້ງບໍ່ເຫີຍ  ເຈົ້າເອີຍ*

ຊຽງຍານ ຫົບດັງແລ້ວ ຈຶ່ງອັດດີຄືເກົ່າ
ຢ້ານມັນ ເຫີຍກິ່ນແຫ້ງ ຊິເສັຽຖ້ຽວທ່ອງທາງ

ແຕ່ນັ້ນ  ຊຽງໝ້ຽງມັນບໍ່ຊ້າ ເລີຍດ່າທັງຫຍັນ
ທັງເລົ່າ ຫົວຂວັນຂຳ ຍົກຍໍມີຊີ້
*ມຶງນີ້    ເປັນຄືດ້ານ  ສັດສາແສນຊົ່ວ*
*ເໝືອນດັ່ງ  ໂຕຖ່ອຍຮ້າຍ  ນາມເຊື້ອຊາດໝາ  ແທ້ນໍ*

ອວດວ່າ ຜຍາດີລ້ຳ ສັງມາດົມຕົດເກົ່າ  ມຶງເດ
ຄຶດຈັກ  ຕົດມາຕ້ອນທ່ານທ້າວ ຊຽງໝ້ຽງເພື່ອໃຫ້ດົມ  ວ່າລີ
ອັດສະຈັນ  ໃຈໂອ້ ໂຕເລີຍດົມເສັຽກ່ອນ  ມຶງເອີຍ
ສັງມາ  ຮີບຟັ່ງຟ້າວ ດົມແທ້ກ່ອນທ່ານຊຽງ  ໝ້ຽງນໍ
ບັດນີ້    ຜຍາມຶງສູນສັ້ຽງ ດົມຕົດໂຕຂີວຂື່ນ
ພາຍບັ້ງຕົດ  ເລາະບ້ານ ເລີຍເໝັນກ້ຽວໃສ່ດັງ  ມຶງເອີຍ

ກູນີ້ ຊື່ວ່າ ຄົນດີຊັ້ນ ເມືອງທະວາລີລັ່ນ
ນ້ອງຊາຍ ພຣະບາດເຈົ້າ ຄືຊຽງໝັ້ງຍອດພຍາ ແທ້ແລ້ວ

ເຂົາກໍ ຮຽກຊື່ຊຽງໝັ້ງແທ້ ລ້ຳໂລກພຍາຄົນ ທັ້ນແລ້ວ
ຄັນວ່າ ໃຜຫລຽວເຫັນ ຍົກຍໍຊູໜ້າ
ເຂົາຈັກ ຂານໄຂຍ້ອງ ຍໍມືສຸດສອກ
ທັງເລົ່າ ແປະແຜ່ນພື້ນ ຕີນຂ້ອຍໃສ່ຫົວ ແທ້ເນີ

ຢ່າໄດ້ ມາອວດອ້າງ ລອງເບິ່ງພຍາກູ ເທາະນໍ
ແມ່ນຈັກ ມາພໍແສນ ໝື່ນຄົນກໍຕາມຖ້ອນ
ແມ່ນຈັກ ໄປວານໄຫວ້ ເກນມາໝົດທົບ ກໍດີຖ້ອນ
ໃຫ້ມາ ພັນຕໍ່ຕັ້ງ ກູກໍແພ້ດັ່ງດຽວ ນັ້ນແລ້ວ

ອັນແຕ່ ໃນຊຸມພື້ນ ເມືອງຄົນໂລກລຸ່ມ ເຮົານີ້
ຢ່າໄດ້ ມາກ່າວອ້າງ ຂາຍໜ້າແຫ່ງກູ ເທາະນໍ
ຢຽວວ່າ ອິນພົມພຸ້ນ ລົງມາຜາຍໂຜດ ສູນັ້ນ
ສູຈິ່ງ ຫວັງຈັກໄດ້ຜາບແພ້ ພຍານ້ອຍແຫ່ງກູ ທ່ານເອີຍ

*ແຕ່ວ່າ ມຶງຫາກຕົດໃສ່ບັ້ງ ເປັນຂອງຝາກພາຍມາ*
*ມຶງກໍ ດົນຕົດມຶງ ຄອບມີພຍາຕື້ນ*
*ໃຫ້ຮີບ ຄືນເມືອບ້ານ ຖານເດີມແດນເກົ່າ*
*ພາຍເອົາ ຄວາມໂງ່ຈ້າ ໃນບັ້ງຕ່າວເຮືອນ ມຶງຖ້ອນ*

ກູນີ້ ຕັ້ງຫາກແມ່ນຊຽງໝັ້ງ ໃຜຢ່າມາລວນ ເທາະນໍ
ສູນີ້ ຕັ້ງແມ່ນຊາວຄາເມ ນອກນາພາຍພຸ້ນ
ແສນວ່າ ພຍາດີລົ້ນ ມີເຕັມສາມທົ່ງ ກໍດີຖ້ອນ
ຕັ້ງວ່າ ບໍ່ອາດພໍຖ່ອງສ້ຽວ ພຍານ້ອຍແຫ່ງກູ ດອກນາ

*ອັນວ່າ ໃຫ້ມັນສົມກະບວນໜ້າ ເອົາຫີນໜາແຍງຕາງແວ່ນ*
ສັງວ່າ ມາກ່າວອ້າງ ວ່າຕົວຮູ້ອວດເຊີງ ນີ້ເດ
ແຕ່ນັ້ນ ຊຽງຍານວາງຍັງບັ້ງ ຕົດເສັ້ງປີບແລ່ນ ໜີແລ້ວ
ມັນບໍ່ ຢຸດຢູ່ຍັ້ງ ເຖິງບ້ານກໍຈິ່ງເຊົາ ແທ້ນາ

ຄັນວ່າ ຊຽງຍານເມືອຮອດບ້ານ ກໍລີ້ຢູ່ປານຕາຍ
ເພາະວ່າ ຄຳອາຍເຫລືອ ແຜ່ນດິນຄຸງຟ້າ
ມັນຫາກ ເສັຽໄຊອ້າຍ ຊຽງຍານໜ້າຫລ່າ ເສັຽແລ້ວ
ຝູງໝູ່ ສາວສ່ຳຊູ້ ໂຮມເຣື້ອງກ່າວໃຍ

ຝູງໝູ່ ມິດສະຫາຍພ້ອມ ກັນມາໂຮມວ່າ
ຕັ້ງວ່າ ເພິ່ນບໍ່ມີທ່າສູ້ ເຊີງຊັ້ນຈຶ່ງແລ່ນມາ ນີ້ເດ
ມັນທໍ່ ຊຳງຳກົ້ມ ບໍ່ຈາດອມລີ້ຢູ່
ບໍ່ກ້າ ຫລຽວຜໍ່ໜ້າ ໃຜໄດ້ເພາະອາຍ ແທ້ດາຍ

**>>** ບັດນີ້ ຈັກກ່າວເຖິງຣາຊາທ້າວ ພຣະຍາຫລວງທົງພະຍາດ
ເຈົ້າກໍ ເຈັບແສບທ້ອງ ທັງໄຂ້ສັ່ນສາຍ
ແຕ່ນັ້ນ ເທວີພ້ອມ ນາງສນົມຟ້າວຟັ່ງ
*ເຂົາກໍ ໄຫວ້ສັງຄະເຈົ້າ ບູຊາເຂົ້າປິ່ນປົວ*

ທັງເລົ່າ ໝໍຢາໃຫ້ ຫາມາແກ້ພະຍາດ
ເຂົາກໍ ໂດຍອາດເຈົ້າ ຫາໄດ້ຮີບມາ
*ກັບທັງ ໝໍທວາຍໃຫ້ ມາດູພົນມະຊາດ*
ເຂົາເລົ່າ ເອົາແຜ່ນຜ້າ ທັງແປ້ນຮີບມາ

ໝໍທວາຍ ດູຮີກຕັ້ງ ປີເກີດສັງຂານ
ອັນວ່າ ຣາຊາພຣະ ເກີດປີເມີງເປົ້າ
ຜິຈັກ ນັບຕາມຖ້ານ ຫົວຕາໂລງຢູ່ ຈິງແລ້ວ
ກາດມາ ໃນແຜ່ນຜ້າ ປີນີ້ເຄາະມີ ເຈົ້າເອີຍ

*ແລ້ວເລົ່າ ລັກຂະນາຕັ້ງ ນັບຫາຕົວເພິ່ງ*
*ຕັດວ່າ ພຣະບາດເຈົ້າ ປີນີ້ເພິ່ງແມວ ແທ້ດາຍ*
ຕັ້ງວ່າ ເຄາະຮ້າຍແທ້ ຕົວເພິ່ງຢູ່ໃນແຈ ພຣະເອີຍ
ດີທໍ່ *ປະທັດ*ເສົາໝູນ ກໍບໍ່ຄວນພໍຮ້າຍ
*ໃຫ້ຄ່ອຍ ທຳພຽນແກ້ ບູຊາທັງສືບ ຊາຕານັ້ນ*
*ອັນວ່າ ພຣະບາດເຈົ້າ ບຸນກ້ວາງຫາກຊິຫາຍ ບໍ່ຢ່າແລ້ວ*

---

ເມີງເປົ້າ = ຊື່ປີນຶ່ງ / ລັກຂະນາ ໃນທີ່ນີ້ ຊອກຫາແນວມາປຽບທຽບໃສ່ກັນ / ປະທັດ = ພະທັດ

แต่นั้น ຊຽງໝ້ຽງເຂົ້າເບິ່ງຢ້ຽມ ຫລີງລໍ່າດູພຣະຍາ
ກໍເລົ່າ ຄໍາຄີງພຣະ ກ່າວຮຽງທາງຂ້າງ
*ອັນວ່າ ຣາຊາເຈົ້າ ຈັກຕາຍບໍ່ມີຄາດ ຄາແລ້ວ*
*ໃນເຈັດມື້ ແນ່ແທ້ ບໍ່ມີມື້ທ່ຽງຈີງ ເຈົ້າເອີຍ*

ແຕ່ນັ້ນ ທັງຫລາຍໄດ້ ຍິນຄໍາຊຽງກ່າວ
ເຂົາຈີງ ເມືອຄອບເຈົ້າ ເທວີແກ້ວແມ່ເມືອງ ແທ້ແລ້ວ
ບັດນີ້ ຈອມຫົວເຈົ້າ ທີງເມືອງຍັງຂມ່ອມ ເຮົານັ້ນ
ຊຽງໝ້ຽງ ກໍຫາກໄປເບິ່ງຢ້ຽມ ເຫັນແລ້ວຈື່ງທວາຍ ເຈົ້າເອີຍ

ແມ່ນວ່າ ຣາຊາເຈົ້າ ຈັກຕາຍບໍ່ມີຄາດ ຄາແລ້ວ
ໃນທີ່ ເຈັດຂວບມື້ ວັນແທ້ທ່ຽງຈີງ ວ່າດາຍ
ເມື່ອນັ້ນ ເທວີເທງົາ ຕົກໃຈຟ້າວຟັ່ງ
ຢ້ານວ່າ ພຣະບາດເຈົ້າ ຕາຍແທ້ຈາກຕົວ ນັ້ນແລ້ວ

ທັງເລົ່າ ຈິດຈອດຟື້ງ ບ້າວັ່ງເວຣົນ ແທ້ແລ້ວ
ກັງວົນນໍາ ຢູ່ກິນກາຍເວັ້ນ
ນາງກໍ ຣົມມະໂນຮ້ອນ ເຮຣົນໄຫ້ຮຸ່ງ
ເລື່ອນເລື່ອນນໍ້າ ຕາຍ້ອຍຢູ່ເລີງ ຫັ້ນແລ້ວ

ກັບທັງ ສາວສນົມລ້ວນ ຊົນລະຫານອງເນດ
ເຂົາກໍ ຍ່າວຍ່າວໄຫ້ ດອມເຈົ້າຊູ່ຄົນ
*ເຂົາກໍ ຂົນຂອງເຈົ້າ ໃນເຍັ້ງເທອອກ*
*ທານໃຫ້ສັງຄະເຈົ້າ ເວນໃຫ້ຊູ່ຄົນ*

*ຂໍໃຫ້ ບຸນສົ່ງຄໍ້າ ພຣະບາດຣາຊາ ທ່ຽວເຖີ້ນ*
ນາງກໍ ວອນທັງທໍຣະນີ ຊ່ອຍຊູຜົວແກ້ວ
ຂໍໃຫ້ ຍືນຍາວໝັ້ນ ພັນປີເປັນເຂດ ຈີງເຖີ້ນ
ກໍຈື່ງ ລົດຊົ່ວມ້ຽນ ລາງແລ້ວບໍ່ວ່າສັງ ດອກນາ

ແຕ່ນັ້ນ ຣາຊາເຈົ້າ ເລີຍຫາຍເສັ້ຽສວ່າງ
ພຣະກໍ ລຸກຍ່າງໄດ້ ສະບາຍເນື້ອລວດດີ

---

ເມື່ອເຫັນວ່າຈະຕາຍ ພຣະຍາຈື່ງທານຢ່າງໃຫຍ່ ຫວັງໃຫ້ບຸນຊູຄໍ້າ

ແຕ່ນັ້ນ ພຣະຈຶ່ງປົງອາດໃຫ້ ຝູງໝູ່ພາຍໃນ
ສູຣິບ ໄປທັນຊຽງ ສັ່ງມາດຽວນີ້
ເຮົາຈັກ ຖາມດູແທ້ ດອມມັນຄວາມນິ່ງ
ຊຽງກໍ ໄປອາດຮູ້ ຮຽນໄດ້ແຕ່ທີ່ໃດ ນັ້ນເດ

ເມື່ອນັ້ນ ເຂົາກໍໂດຍຄວາມເຈົ້າ ເລີຍໄປເຮວຣິບ
ເຖິງທີ່ ຊຽງໝັ້ງແລ້ວ ຈາແຈ້ງຊູ່ອັນ
ບັດນີ້ ຈອມຫົວເຈົ້າ ທັນຊຽງເມືອຣິບ
ວ່າໃຫ້ ໄປພ່ຳພ້ອມ ຝູງຂ້າຍ່ານານ ແທ້ດາຍ

ແຕ່ນັ້ນ ຊຽງຣິບຟ້າວ ໂດຍອາດເມືອພະລັນ
ເຖິງທີ່ ຣາຊາພຣະ ຍອດເມືອງທູນໄຫວ້
ອັນວ່າ ຈອມຫົວໃຊ້ ຄືນໄປທັນຣິບ ພາຍພຸ້ນ
ບັດນີ້ ຂ້າບາດມາຮອດແລ້ວ ຊິຈາຖ້ອຍເຍື່ອງໃດ ພຣະເອີຍ

ເມື່ອນັ້ນ ຣາຊາທ້າວ ຖາມຊຽງທັງໂຈດ
ຈັດຖີ່ຖ້ອຍ ຖາມແຈ້ງຊູ່ອັນ
ສັນໃດແທ້ ຍາມເຮົາພຣະອົງປ່ວຍ
ວັນນັ້ນ ວ່າຈັກຕາຍຈາກບ້ານ ເມືອງກວ້າງບໍ່ສົງ ວ່າດາຍ

ທ່ານຫາກາ ພັດໝາຍໄວ້ ເຈັດວັນທັດທ່ຽງ ຈິງແລ້ວ
*ບັດນີ້ ເຈັດວັນກາຍຜ່ານພົ້ນ ສາມເດືອນແລ້ວລ່ວງເລີຍ*

ເຮົາກໍ ຍູທ່າງທົງແທ່ນແກ້ວ ສເວີຍຣາດເມືອງຂວາງ
ກໍບໍ່ ເຫັນເຮົາຕາຍ ດັ່ງຊຽງທວາຍໄວ້
ທ່ານນີ້ ຕັ້ງວ່າຫາຄຳຮ້າຍ ທວາຍເຊັ່ນບັກໃສ່ ເຮົານໍ
ມຶງນີ້ ຄືນຖ່ອຍຮ້າຍ ບໍ່ມີຮູ້ຮ່ອມຄຸນ ແທ້ດາຍ

ແຕ່ນັ້ນ ຊຽງໝັ້ງຕ້ານຕອບຖ້ອຍ ຮັບພາກເຮັ່ງໂຍ
*ຊາດທີ່ ເປັນຄົນໃນສົງສານ ບໍ່ທ່ອນກາຍໜີໄດ້*
*ນັບຈາກ ວັນທິດເທົ້າ ຄຸງຮອດວັນເສົາ ເຈັດວັນນີ້*
*ອັນວ່າ ແປດແລະເກົ້າ ເມືອໜ້າແມ່ນບໍ່ມີ ເຈົ້າເອີຍ*

*ໃຜຈັກ ກາຍເຈັດວັນໄດ້* *ທາງໃດໜີຫລີກ ເປັນເດ*
ແມ່ນວ່າ ອິນຢູ່ຟ້າ ກໍຕາຍແລ້ວດັ່ງດຽວ ພຣະເອີຍ
ແມ່ນວ່າ ສັບພັນຍູເຈົ້າ ນິຣະພານເມືອກ່ອນ ກໍດາຍຖ້ອນ
ເຈົ້າກໍ ຫລີກບໍ່ເວັ້ນ *ເຈັດວັນ* ແທ້ທ່ຽງຈິງ ພຣະເອີຍ

ກໍຫາກ ວັນທິດແລ້ວ ຊ້ຳພັດແມ່ນວັນຈັນ
ວັນອັງຄານ ພຸດໂທເມືອໜ້າ
ວັນພະຫັດແລ້ວ ສຸກເສົາສຸດຮອບ
ກໍຫາກ ວຽນບໍ່ສິ້ນ ຕາມຫັ້ນຢູ່ເລິງ ຫັ້ນແລ້ວ

ໃຜບໍ່ ທ່ອນຈັກຈາໄປໜ້າ ພໍພັນເຖິງໝື່ນ ພຣະເອີຍ
ຮີດຫາກ ຕັ້ງແຕ່ງໄວ້ *ເຈັດວັນ*ແທ້ຢ່າລືມ ຫັ້ນຖ້ອນ
ຄວນຮ່ຳ ຈຳຈື່ໄວ້ ບູຮານສອນສັ່ງ
ຢ່າຫ່ອນ ກາຍຮີດບ້ານ ປະຖິ້ມເຖົ້າຊົ່ວລາງ ພຣະເອີຍ

ແຕ່ນັ້ນ ພຣະຍາຄຶດຄຽດພົ້ນ ແລ້ວເລົ່າເລີຍຫົວ
ຜີຈັກ ຕາມໂກຫາ ຂ້າເສັຽຈິງແທ້
ຜີວ່າ ຕົກຕອງແທ້ ກໍຄືຊຽງເວົ້າວ່າ ຢູ່ແລ້ວ
ໂກຫາຫາຍ ຍ້ອນຄຶດໄດ້ ຊຽງແກ້ແມ່ນຄວາມ ແທ້ແລ້ວ

\>> ບັດນີ້ ຈັກກ່າວເຖິງຮາຊາທ້າວ ເມືອງຕານິນະຄອນຣາດ ພາຍພຸ້ນ
ເຈົ້າກໍຍັງ ຄຶດຄຽດເຂັ້ມ ຂົມໄວ້ບໍ່ຍອມ ງ່າຍແລ້ວ
ເພື່ອວ່າ ເສັຽຂອງຄ້າ ສິນພັນຄາວກ່ອນ ວັນນັ້ນ
ຍັງຈັກ ປຸນແຕ່ງແກ້ ທະວາຣີທ້າວຕອບມື ວ່າດາຍ

ຊາດທີ່ ເຊີງຜຍານີ້ ເມືອງທະວາຣີຊີດີລື່ນ ປານໃດນັ້ນ
ເຂົາກໍ ບໍ່ໄດ້ຮຽນແຕ່ຟ້າ ສເມີດ້ານດັ່ງເຮົາ ນີ້ແລ້ວ
ຍັງຈັກ ໃຫ້ເຂົາໄປພະລັນຊ້ຳ ເມືອງທະວາຣີດູກ່ອນ
ກູຈັກ ຂ້າຂາດໃຫ້ ຂືນຊ້ຳສິ່ງມື ກ່ອນແລ້ວ

*ຊາດທີ່ ຄົນກິນເຂົ້າ* *ສເມີກັນບໍ່ມີຍ່ອນ ໃຜແລ້ວ*
*ເອົາໃຫ້ ຕົກສະເພີ້* *ທູນນ້ອມສ່ວຍສິນ ແທ້ດາຍ*

ຄ້ອມວ່າ ເຈົ້າກ່າວແລ້ວ ທັນໝູ່ມະຫາສົງ
ເຊີນລົງ ໂຮມສນາມຫລວງ ຊູ່ຕົນພຽງພ້ອມ
ຄ້ອມວ່າ ຈຸບຮູບແລ້ວ ມາໂຮມໝົດໝູ່
ແຕ່ນັ້ນ ພຣະບາດເຈົ້າ ຖາມຜຽ້ງນຊູ່ຕົນ

*ໃຜຜູ້ ຍັງຮ່ຳຮູ້ ອັກຂຣາແທ່ງວິໄນ ນັ້ນເດ*
*ກັບທັງ ປາຣະຊິກກັນ ໝູ່ຄັມພີທັງຫ້າ*
*ກັບທັງ ສົມມະນາພ້ອມ ປາລີແປອອກ*
*ກັບທັງ ຈຸລະວັກອະພິທັມໝູ່ນັ້ນ ແປໃຊ້ຊູ່ອັນ ແດ່ລື*

ແຕ່ນັ້ນ ມະຫາສົງເຈົ້າ ທັງຫລາຍຂານຕອບ
ຮັບພາກຕ້ານ ພຣະເມືອງເຈົ້າຊູ່ອົງ
ຊາດທີ່ ເຊີງໜັງສືນີ້ ຄູບາຫາກສອນສັ່ງ ມາດາຍ
ອັນແຕ່ ຂອງໝູ່ນີ້ ກໍພໍຫລິ້ນຕໍ່ຄືນ ພຣະເອີຍ

ຍຽວວ່າ ເພື່ອນຫາກຮຽນໃນຫ້ອງ ເມືອງສວັນລົງໂຈດ ບໍ່ຮູ້
ເຮົາຈິ່ງ ຊີໄປນຳບໍ່ໄດ້ ຄາຄ້າງເບິ່ງດາຍ ດອກແລ້ວ
ແຕ່ນັ້ນ ຣາຊາເຈົ້າ ພຣະຍາຫລວງຊົມຊື່ນ
ຄອບທີ່ ສົມມະນະເຈົ້າ ຮຽນຮູ້ຊູ່ເຊີງ ຫັ້ນແລ້ວ

*ຕັ້ງວ່າ ຈົບເພດພົ້ງງ ລ້ຳຍິ່ງແສນທະບັດ ມາກແລ້ວ*
*ອັນວ່າ ສັງຄະເມືອງຕານີ ກໍບໍ່ລອນຊິກົວຢ້ານ*
*ຕັ້ງບໍ່ ເສັຽແຮງລ້ຽງ ໂພຊະນາເຊົ້າຄ່ຳ ຈິງນໍ*
*ຍຽວວ່າ ຮູ້ແຕ່ໄປອ່ານຫລິ້ນ ໂຄງຟ້າມ່າຍສາວ ນັ້ນດາຍ*

ບັດນີ້ ເຮົາຈັກປົງອາດໃຫ້ ສັງຄະຣາດທັງປວງ
ເຈົ້າຈິ່ງ ພາກັນໄປດູໜັງສື ໂຈດໃນເມືອງພຸ້ນ
ຊື່ວ່າ ທະວາຣີທ້າວ ສເວີຍເມືອງເປັນໃຫຍ່ ຈິງແລ້ວ
ຈິ່ງພາກັນ ໄປໂຈດສັງຄະເຈົ້າ ເມືອງນັ້ນຕໍ່ກັນ ແທ້ເນີ

*ຄັນວ່າ ເຮົາຫາກມີໄຊແພ້ ສິເອົາເມືອງມາສ່ວຍ ຈິງເຖີ້ນ*
*ໃຫ້ໄປ ພັນຕໍ່ດ້ານ ກັນພຸ້ນຢ່າຫີນ ເຈົ້າເອີຍ*

---

ຈຸບ (ລກ) = ຄົບ, ໝົດ / ອັກຂຣາ ອັກຂຣະ (ປລ, ສສ ອັກສຣ) = ຕົວໜັງສື, ຄຳ, ສຽງ

ຄັນວ່າ ເພິ່ນຫາກມີໄຊແພ້ ສິນສ້ອຍຢ່ານານ
ອັນວ່າ ຂອງຄາມມີ ຊູ່ອັນພໍໃຫ້
ເຮົາຈັກ ປຸນດາໃຫ້ ຄືນໄປພໍໝື່ນ
ສະເພົາຫ້າຮ້ອຍ ໄປພ້ອມຊູ່ລຳ

ອັນວ່າ ເງິນຄຳແກ້ວ ຂອງຄາມຂົນໃສ່
ໃຫ້ມັນ ເຕັມຊູ່ເຫລັ້ມ ສະເພົາແລ້ວຈິ່ງໄປ ພຣະເອີຍ
ຄັນວ່າ ບໍ່ເປັນການແພ້ ຍໍໃສ່ມວນມອບ ຈິງເຖີ້ນ
ໃຫ້ມັນ ໝົດຊູ່ເຫລັ້ມ ສະເພົາແລ້ວຈິ່ງມາ ພຣະເອີຍ

ແຕ່ນັ້ນ ຣາຊາເຈົ້າ ທັງປວງສັງຄະຣາດ
ເລີຍເລົ່າ ຂານຕອບຖ້ອຍ ພຣະຍາເຈົ້າວ່າໂດຍ ດອກແລ້ວ
ເຮົາຈັກ ໄປເມືອງພຸ້ນ ທະວາຣິຖາມໂຈດ ດູແລ້ວ
ຕາມດັ່ງ ຄວາມມະຫາຣາດເຈົ້າ ປົງໃຫ້ຊູ່ອັນ ນັ້ນແລ້ວ

*ຊາດທີ່ ຄອງພຣະສົງນີ້ ຮຽນມາສເມີພາກ ກັນແລ້ວ*
*ໃຜບໍ່ໄດ້ ຮຽນຈາກຫ້ອງ ມາເວົ້າດັ່ງພຸດໂທ ນັ້ນດາຍ*
ແຕ່ນັ້ນ ເລີຍເລົ່າຂົບປັງມ້ຽນ ຄຳສຸຊຸແລ້ວເລີກ
ໃຜກໍ ເມືອສູ່ຫ້ອງ ເຮືອນຢ້າວແຫ່ງຕົນ ນັ້ນແລ້ວ

ແຕ່ນັ້ນ ຣາຊາເຈົ້າ ປົງຄຳໂອວາດ
ສູຣົບ ຕົກແຕ່ງຫ້າງ ສະເພົາຖ້ອນທ່ງວເປືອງ
ເມື່ອນັ້ນ ສິນສິນຂ້າ ດາກັນທຸກສິ່ງ
ສະເພົາຫ້າຮ້ອຍ ປຸນຫ້າງແຕ່ງແປງ

ສັບພະສິ່ງພ້ອມ ທຸກເຍື່ອງບັນນາການ
ທັງເງິນຄຳ ເທບແພລຳກວ້າງ
ອັນວ່າ ຂອງຄາມລົ້ນ ໃນເຍັຽຂົນອອກ
ເຂົາກໍ ຂົນຄຽນເຂົ້າ ເຕັມແໜ້ນຊູ່ລຳ

ແຕ່ນັ້ນ ສົມມະນະເຈົ້າ ອອກຈາກອາຣາມ
ເລີຍເລົ່າ ໄປເຖິງສະເພົາ ຄ່ອຍເນົາໃນຫ້ອງ

| | |
|---|---|
| *ຜໍ່ດູ ຂັດຕະຣິກຟ້າ* | *ສູນເມກເມໂຄ ພຸ້ນເຍີ* |
| *ຫລິງເຫັນ ດາວອັງຄານໂຄຈອນ* | *ຮອດຮຽງດາວດັ້ງ* |
| *ດາວເສົາ ເຂົ້າໄປຝັ້ນ* | *ເຖິງກັນສະຖິດຢູ່* |
| *ດາວພຸດ ເລີຍດ່ວນເຂົ້າ* | *ຮຽງຊ້ອນແຈ່ມພະຈັນ* |
| *ອັນວ່າ ອາທິດຍ້າຍ* | *ສະເດັດໄປກວມເມກ* |
| *ດາວພະຫັດ ໄປພໍ່າພ້ອມ* | *ຕີນເຈົ້າບໍ່ວາງ* |
| *ອັນວ່າ ສຸກເສົາຍ້າຍ* | *ໄປສູ່ຣາສີ* |
| *ຝູງໝູ່ ດາວອາສາຜັນ* | *ເຜັ່ນນຳຖວາຍແກ້ວ* |
| *ອັນວ່າ ກຸນຊະໂຣຍ້າຍ* | *ຍໍຫົວຫາງແລ່ນ* |
| *ດາວຄາບແກ້ວ* | *ເນົາເງື້ອມເປັ່ງແສງ* |
| *ຝູງໝູ່ ດາວໄກ່ນ້ອຍ* | *ແຝງພ່າງໂຮມຮຽງ* |
| *ດາວຄາງລອຍ* | *ຕໍ່ກັນຄຽງໃກ້* |
| *ດາວສະເພົາເຫລື້ອມ* | *ຮັງສີໃສສ່ອງ* |
| *ດາວດອກໄມ້* | *ລຽນຕົ້ນກ່ອງງາມ* |
| *ດາວພິດານກັ້ງ* | *ພາຍບິນດູອາດ* |
| *ຊ້າງອ້າຍ ເນົາຢູ່ຫ້ອງ* | *ວັນນັ້ນກໍຍ່ອມຂວາງ ເຈົ້າເອີຍ* |
| ໝໍຈິ່ງ ແຕ່ງເຄື່ອງພ້ອມ | ມວນມອບພະລີກັມ |
| ເຮົາຈັກ ເອົາບູຊາຍໍຍັງເຂົາ | ຈາກເຮົາປາງນັ້ນ |
| ກໍຫາກ ລືຊາແທ້ | ປາງປະຖົມເຖົ້າເກົ່າ |
| ຕັ້ງວ່າ ຈົບເພດພ້ຽງ | ມົນແກ້ວ*ສາດຕະສິນ* ເຈົ້າເອີຍ |
| ເມື່ອນັ້ນ ເລື່ອນເລື່ອນຍ້າຍ | ສະເພົາເບີກຕາມລົມ ພຸ້ນເຍີ |
| ດີແຕ່ ແຊວແຊວສຽງ | ໂຫ່ໂຮຄຶນຮ້ອງ |
| ເນືອງນັນເທົ້າ | *ປັດຖະພີ* ໄຫວຫວັ່ນ |
| ສຽງລັ່ນຄ້ອງ | ລັງຄັງກ້ອງໂຍ່ງດັງ |
| ກັບທັງ ສຽງສັງພ້ອມ | ສວນໄລພິນພາດ |
| ອັນວ່າ ສັງຄະເຈົ້າ | ໄປພ້ອມພໍ່າມວນ |

---

ກຸນຊະໂຣ ກຸນຊອນ (ປລ ກຸນຊຣ) = ຊ້າງ, ດາວຊ້າງ / ພິດານ (ລກ) = ເພດານ / ສາດຕະ (ສສ ສາສຕຣ) = ແບບຮຽນ / ປັດຖະພີ (ປລ ປຖວີ, ສສ ປັຖຖວີ) = ແຜ່ນດິນ

| | |
|---|---|
| ອັນວ່າ ຄືນສລາດຮູ້ | ຄະນິງອ່ານແປທັນ |
| ກັບທັງ ອັດສັມໂມ | ໝູ່ວິໄນພ້ອມ |
| ເລື່ອນເລື່ອນ ມວນສະເພົາເປື້ອງ | ຕາມແຮງລົມເບີກ |
| ລົມຍວກ ໂຍງຟາດນ້ຳ | ຟອງຟົ້ງທົ່ວຊິນ |
| ຫລິງເຫັນ ສວຍລວຍໄມ້ | ລຽນລຳລຽບລ່ຳ |
| ແນມໄກ ຕົ້ນກ່າຍຕົ້ນ | ສູງລ້ຳຊູ່ລຳ |
| ຜໍ່ດູ ອະນັນອະເນກໄມ້ | ແສນສ່ຳສາຂາ ພຸ້ນເຢີ |
| ໃນດົງຫລວງ | ລຽບນຳແຄມນ້ຳ |
| ບໍ່ອາດ *ສັງຂຍາ*ໄດ້ | ດູຕະການຫລາຍຢ່າງ |
| ມີໝູ່ ປາດິດບ້ອນ | ຕາມນ້ຳຍິ່ງສະອອນ |
| ຜໍ່ດູ ບຸບຜາເຜີ້ງ | ບານງາມຈູມຈໍ່ |
| ຕັ້ງຫາກ ເດັ່ງຣະດາດລົ້ນ | ຍອຍພົ້ວເຮື່ອເຮືອງ |
| ຝູງໝູ່ *ພູມະຣິນ*ແສ້ວ | ເຊີຍຊິມດົມກິ່ນ |
| ດີແຕ່ ຫອມດອກໄມ້ | ຍາມເຊົາເມື່ອເຢັນ |
| ຜໍ່ດູ ທຸກສ່ຳໄມ້ | ຊ້ອງຊໍ່ແຄມຊິນ ພຸ້ນເຢີ |
| ດອນລຽນດອນ | ລັ່ນພູພະນັງຂັ້ນ |
| ແຕ່ນັ້ນ ຝູງໝູ່ບ່າວສ່ຳນ້ອຍ | ຊາວເທດປັດຕານີ |
| ເຂົາຕົກ ໜີໄກເມືອງ | ຫາກຮ່ຳໄຮຫາຊູ້ |
| ໂອນໍ ຄຶດເມື່ອຫອມກິ່ນແກ້ວ | ຊົມເສບຍາມຄຽງ ນັ້ນເດ |
| ເຫີນຫ່າງ ຮຽມໄກອວນ | ອ່າວຄະນິງເຖິງເຈົ້າ |
| ອັນວ່າ ແພງແສນສ້ອຍ | *ສຸດຊາດາ*ດວງຍອດ ຮຽມເອີຍ |
| ຕິແຕ່ ກົ້ນເຈົ້າແຫງ້ນ | ແຍງໜ້າເບິ່ງໂຕ ພີ່ນາ |
| ໂອນໍ ມາອີ່ດູ*ສັນສະນີ* ນ້ອຍ | ຜີວງາມສເມີແທ່ງ ທອງນັ້ນ |
| ຕິແຕ່ ພວງໝາກເວີ່ໂຕ້ນ | ຢາກພາຍຊ້າແລ່ນນຳ ພີ່ເດ |
| ໂອນໍ ມາອີ່ດູ*ແວວວັນ*ນ້ອງ | ຜີວງາມເນື້ອຊຸ່ມ ຮຽມເອີຍ |
| ຕິແຕ່ ຕີນຫາກເປັນແຢ່ງແຢ້ | ຄືຊິເດົ້າກະເດັ່ງໄປ ພີ່ນາ |

---

ສັງຂຍາ (ປລ, ສສ ສັງຂຍາ) = ນັບ / ພູມະຣິນ (ປລ ພະມະຣະ) = ແມງພູ່ ແມ່ເຜີ້ງ

ໂອນໍ　ມາອີ່ດູ *ພິມວິໄລ*ຫລ້າ　ສາຍສມອນຊູ້ພີ່ ຮຽມເອີຍ
ຕິແຕ່　ສິບມາເປັນແວ່ງຮ້າຍ　ຫູຫວິ້ນໜອກເສັງ ພີ່ເດ
ໂອນໍ　ມາອີ່ດູ *ທິດາຈັນ*ນ້ອຍ　ສາຍໃຈຊູ້ພີ່ ຮຽມເອີຍ
ຕິແຕ່　ດັງວີກເຈົ້າ　ສະດວງດັ້ນບຸ່ນກິນ ພີ່ເດ

ໂອນໍ　ມາອີ່ດູ *ບົວສວັນ*ນ້ອຍ　ສາຍສມອນຊູ້ມິ່ງ ກູເດ
ຕິແຕ່　ແຂນເຈົ້າງົງເງາະຮ້າຍ　ທັງກົ້ນແກວ່ງໄກວ ແລນໍ

ໂອນໍ　ຂໍໃຫ້ລົມພັດຍູ້　ສະເພົາເບີກຄືນເມືອ ທ່ຽວເຖິ້ນ
ຄອບວ່າ ພີ່ຄະນິງດອມນາງແພງ　ບໍ່ລ່າລືມຍາມນ້ອຍ
ນັບແຕ່ ໄກເມືອງໄດ້　ຫລາຍວັນທັດທ່ຽງ ຈິງແລ້ວ
ທໍ່ວ່າ　ຍັງຊິໄດ້ສີ່ມື້　ເມືອໜ້າຈຶ່ງຊິເຖິງ ນີ້ເດ

ອັນວ່າ　ເມືອງທະວາຣີພຸ້ນ　ຢູ່ກ້ຳແຫ່ງຫົນໃດ ບໍ່ຮູ້
ເປັນດັ່ງ ເຮົາກຳຕາ　ມືດມົນໃນມຸ້ງ
ແຕ່ນັ້ນ　ຝູງໝູ່ເຄີຍທຽວຄ້າ　ຖແລງຈາແຈ້ງບອກ
ຜິວ່າ　ລົມຫາກແຮງທັ່ງແທ້　ວັນໜ້າຫາກຊິເຖິງ ດອກແລ້ວ

ແຕ່ນັ້ນ　ສະເພົາຜາຍເຂົ້າ　ແດນທະວາຣີເຮວຮີບ
ແນມເຫັນ ບ້ານສືບບ້ານ　ເປັນຖ້ອງຖີ່ຖັນ ແທ້ດາຍ
ຫລິງເຫັນ ສວຍລວຍພ້າວ　ແກມຕານເດັ່ງຣະດາດ ພຸ້ນເຢີ
ອັນວ່າ　ສະເພົາຫ້າຮ້ອຍ　ກໍເຊົາຢັ້ງທ່າເມືອງ

ເມື່ອນັ້ນ ສວ່າສວ່າພ້ອມ　ສະເພົາຕ່າງແດນໄກ
ຝູງຄົນ　ເອົາກັນມາ　ຜໍ່ຄອຍແຄມນ້ຳ
ຊຸມໝູ່　ສາວຮາມເອີ້ນ　ຈາດອມສວຍສຽດ
*ອັນວ່າ　ບ່າວຕ່າງບ້ານ　ຄືງາມລື້ນເກົ່າອິນ ແທ້ນໍ*

*ຜິວ່າ　ຍັງບໍ່ມີເມັຽຊ້ອນ　ຢາກຂໍຊົມຈັກສນ່ອຍ ດູເດ*
*ຕາງໃຫ້ ໄດ້ສືບເຊື້ອ　ແນວເຈົ້າຕ່າງເມືອງ ອຸ່ນເອີຍ*
ແຕ່ນັ້ນ　ບ່າວສໍ່ານ້ອຍ　ຊາວເທດປັດຕານີ
ເຂົາກໍ　ຈາສຽງຫວານ　ຕອບສາວປະສິງອ້າງ

*ໂອນໍ  ຊາດທີ່ເປັນສົມບັດເພື່ອນນີ້ ທະລອນຈາຕັ້ງແຕ່ປາກ ຈິງນໍ*
*ເຊີນນ້ອງ ມາເຂົ້າຫ້ອງ   ສະເພົາຄ້າຮ່ວມຮຽງ ພີ່ແນ*
*ອ້າຍນີ້  ຕັ້ງບໍ່ມີເມັຽຊ້ອນ   ຈຶ່ງເດີນທາງມາເຖິງອຸ່ນ ພາຍພີ່*
*ທໍ່ວ່າ   ຢ່າໄດ້ນອງທີ່ຮ້າຍ   ຕານີກ້ຳຝ່າຍຮຽມ ແທ້ເນີ*

*ຜິວ່າ   ນ້ອງຫາກບໍລິສຸດແທ້   ຊິຂໍຊົມເທົ້າຮຸ່ງ ອວນເອີຍ*
*ຄັນວ່າ ແດດຫາກບໍ່ມາສວາຍສ່ອງແຈ້ງ   ຮຽມອ້າຍກໍບໍ່ໜີ ພີ່ແລ້ວ*
*ອັນວ່າ  ຄືນສາມຮ້ອຍ   ຊິຍອມປິ້ນຢ້ານໂພດ*
*ອັນໃຫ້  ເຖິງຖີບແທ້   ພັນພຸ້ນກໍຈຶ່ງສົມ ອຸ່ນເອີຍ*

*ທໍ່ວ່າ   ຜົວຂວັນເຈົ້າ   ກໍຍັງຄາຫຽມຢູ່ ບໍ່ນໍ*
*ຢ້ານວ່າ ເຈັບບາດຄ້ອນ   ຜົວເຈົ້າຊິໄລ່ຕີ ບໍ່ຮູ້*

ແຕ່ນັ້ນ  ສວ່າສວ່າພ້ອມ   ສາວເລົ່າເລີຍຫົວ
ສັງວ່າ  ມາພາໂລ   ໂອດຄຳສະຫາວແງ້ນ
ຜິວ່າ   ຍັງເປັນພື້ນ   ສເມີຄວາມອ້າຍວ່າ
ຂໍຈົ່ງ   ເມືອນຳໝູ່ຂ້ອຍ   ດູຖ້ອນຢ່ານານ
*ຢ້ານແຕ່  ເປັນດັ່ງປາຢູ່ນ້ຳ   ລະອາຍໜ້າແມ່ນອງ ບໍ່ຮູ້*

ແຕ່ນັ້ນ  ຊາວສະເພົາຄ້າ   ຕານີຕົກແຕ່ງ
ໃຫ້ໝູ່   ສັງຄະເຈົ້າ   ຂຶ້ນສູ່ອາຮາມຫລວງ
ບັດນີ້   ຣາຊາເຈົ້າ   ຕານີໃຊ້ຮອດ ຈິງແລ້ວ
ເພື່ອວ່າ ປະສົງຖາມຂ່າວເຈົ້າ   ສະຫາຍແກ້ວທ່ານພຣະຍາ ວ່າດາຍ

ຂໍຈົ່ງ   ນຳຄຳຂຶ້ນ   ເມືອຂາບທູນຖວາຍ ທ່ຽວເຖິ້ນ
ຄັນວ່າ  ພຣະຫາກກູນາເຮົາ   ຈົ່ງບອກມາພໍແຈ້ງ
ແຕ່ນັ້ນ ເຂົາຈຶ່ງນຳຄຳຂຶ້ນ   ເມືອເຖິງທູນພຣະບາດ
ກົ້ມຂາບໄຫວ້   ປະນົມນິ້ວກ່າວຈາ

ບັດນີ້   ນາຍເມືອງກ້ຳ   ຕານີສະຫາຍຣາດ ພາຍພຸ້ນ
ຕົກແຕ່ງ ໃຫ້ສົມມະນະເຈົ້າ   ມາພີ້ຮອດເຮົາ ພຣະເອີຍ

ວ່າຈັກ ເລົ່າພາກພື້ນ ຄອງແຫ່ງພຸດທະຄຸນ ວ່າດາຍ
ທັງວິໄນ ຊູ່ອັນຕົງແຈ້ງ
ເມື່ອນັ້ນ ຣາຊາທ້າວ ທະວາຣີຊົມຊື່ນ
ກໍຈຶ່ງ ປົງອາດໃຫ້ ຊຸນທ້າວແຕ່ງແປງ

ພໍເຖິງ ວັນລຸນເຊົ້າ ພໍງາຍແດດແກ່
ທ່ານຈິ່ງ ພາແຂກເຈົ້າລຸ່ມຟ້າ ມາເຝົ້າແທ່ງເຮົາ ທ່ຽວເຖີ້ນ
ແຕ່ນັ້ນ ເຂົາກໍລົງລາຫ້ອງ ທໍຄໍາພູວະນາດ
ແລ້ວເລົ່າ ເມືອສູ່ຢ້າວ ເຮືອນຫ້ອງແຫ່ງຕົນ

ຄັນວ່າ ເຖິງເມື່ອວັນລຸນແລ້ວ ເຣວພະລັນໄປບອກ
ບັດນີ້ ຊຸນແຂກເຈົ້າຢ່າຊ້າ ດາຫ້າງແຕ່ງແປງ ທ່ຽວເຖີ້ນ
ອັນວ່າ ຈອມຫົວເຈົ້າ ກູນາມີມາກ
ວ່າໃຫ້ ທັນແຂກເຈົ້າລຸ່ມຟ້າ ເມືອເຝົ້າຢ່ານານ ວ່າດາຍ
ກັບທັງ ສົມມະນາເຈົ້າ ເມືອມວນທຸກໝູ່
ພຣະກໍ ໃຄ່ຢາກຖາມຂ່າວເບື້ອງ ສະຫາຍແກ້ວເຫດການ ວ່າດາຍ

ແຕ່ນັ້ນ ນາຍສະເພົາພ້ອມ ສົມມະນາທຸກໝູ່
ເລີຍເລົ່າ ຕົກແຕ່ງຂອງຝາກພ້ອມ ເມືອໄຫວ້ແທ່ງພຣະຍາ

ເຂົາກໍ ຍາບຍາບຍ້າຍ ເຂົ້າສູ່ເມືອງຫລວງ
ດີແຕ່ ຊຸນເມືອງພາ ແຂກເມືອງເມືອເຝົ້າ
ເຂົາກໍ ເສີນເສີນຟ້າວ ໄປເຖິງຜາສາດ
ພາກັນ ລຸດລຸດຂຶ້ນ ໂຮງກວ້າງນັ່ງປະນົມ

ແລ້ວເລົ່າ ຖວາຍບັນນາການພ້ອມ ແຖມສົມພານພູວະນາດ
ເມື່ອນັ້ນ ພຣະບາດເຈົ້າ ຖແລງຖ້ອຍກ່າວຖາມ
ອັນວ່າ ສົມມະນາເຈົ້າ ເດີນທາງມາຮອດ ດີລື
ຍາມເມື່ອ ເຈົ້າພີ່ນ້ອງຈາກບ້ານ ສະຫາຍຂ້ອຍຄ່ອຍຢູ່ດີ ແດ່ລື

ແຕ່ນັ້ນ ສົມມະນາຕ້ານ ຮັບພາກຣາຊາ
ສະຫາຍຍັງຄ່ອຍ ຄົງຄວາມສຸກ ບໍ່ເຄືອງຄໍາຮ້ອນ

ເມື່ອນັ້ນ ຣາຊາເຈົ້າ ພຣະຍາຫລວງກອຍກ່າວ
ອັນວ່າ ພຣະສະຫາຍເຈົ້າຢູ່ແຫ່ງພຸ້ນ ປະສົງແທ້ເຍື່ອງໃດ ນັ້ນເດ

ກໍຈິ່ງ ໃຫ້ສົມມະນະເຈົ້າ ດັ້ນດຸ່ງທາງໄກ ດັ່ງນີ້
ມາເຖິງ ເມືອງທະວາຣີ ຮອດເຮົາພາຍພີ້
ເມື່ອນັ້ນ ສົມມະນາເຈົ້າ ຈາຂານຮັບພາກາ
ສະຫາຍພຣະ ຍັງຢູ່ສ້າງ ທົ່ງທັມແທ້ຊູ່ອັນ ວ່າດາຍ

ພຣະຈິ່ງ ໃຫ້ເຮົາເດີນມາໄຫວ້ ຣາຊະຄຣູເມືອງໃຫຍ່ ພາຍພີ້
ວ່າໃຫ້ ຈາພາກາຖ້ອຍ ໃນທັມເຈົ້າຊູ່ຄອງ ຈິງແທ້

ຄັນວ່າ ໃຜຜູ້ຍັງກ່າວຄ້າງ ໃນແຫ່ງຄອງທັມ ເມື່ອໃດ
ຈັກໄດ້ ເອົາເມືອງເປັນ ສ່ວຍໄຮຈິງແທ້
ຄ້ອມວ່າ ສົນທະນາແລ້ວ ສົມມະນາລາເລີກ
ລົງຈາກຫ້ອງ ໂຮງກວ້າງບໍ່ນານ

ກໍຈິ່ງ ລຸດລຸດຍ້າຍ ເມືອສູ່ສະເພົາທອງ
ເລີຍເລົ່າ ເອົາກັນເນົາ ນັ່ງນອນຄອງຖ້າ

ເມື່ອນັ້ນ ພຣະບາດເຈົ້າ ຕົນເອກທະວາຣີ
ກໍຈິ່ງ ມີຄໍາທັນ ໝູ່ສົງມາຕ້ານ
ແຕ່ນັ້ນ ເຂົາກໍຄວາຄີຟ້າວ ໄປທັນສົມມະນາດ
ໄຫວ້ຊູ່ດ້ານ ຣາຊະຄຣູເຈົ້າຊູ່ອັນ

ບັດນີ້ ເໜືອຫົວເຈົ້າ ຈອມເມືອງປົງອາດ
ວ່າໃຫ້ ສົມມະນາໄປພ່ໍາພ້ອມ ຊຸມນຸມທ້ອນທີ່ສນາມ ວ່າດາຍ
ເມື່ອນັ້ນ ສົມມະນະເຈົ້າ ໂດຍຄໍາມະຫາຣາດ
ເລີຍເລົ່າ ໄປບໍ່ຊ້າ ມວນພ້ອມຊູ່ຕົນ

ສົງກໍ ລຸດລຸດເຂົ້າ ເຕັມຂ່ວງສນາມຫລວງ
ມາມວນໝົດ ຊູ່ຕົນມວນພ້ອມ
ແຕ່ນັ້ນ ຣາຊາເຈົ້າ ຖາມດູສົມມະນາດ
ໃຜຜູ້ ຍັງຈັກຂັນຕໍ່ຕັ້ງ ສົມມະນາເຈົ້າຕ່າງເມືອງ ໄດ້ນັ້ນ

ຄັນວ່າ ຕົນໃດຍັງສລາດຮູ້ ໄຕເພດທັງສາມ
ໃນປາລີ ໝູ່ວິໄນພ້ອມ
ກັບທັງ ອະພິທັມເຈົ້າ ອັດສັມໂມແປອອກ
ສັບທັງຫລາຍ ເລົ່າບໍ່ຂ້ອງ ສເມີນ້ຳເປັ່ງຝາຍ ນັ້ນຖ້ອນ

ເຮົາຈັກ ປົງຄຳໃຫ້ ພໍພັນຕາຊັ່ງ
ແລ້ວຈັກ ຈຳໃຫ້ໂຈດຕໍ່ຕັ້ງ ສົມມະນາເຈົ້າຕ່າງເມືອງ ວ່າດາຍ

ບັດນີ້ ຍັງມີຣາຊາເຈົ້າ ຕານິນະຄອນຣາດ ພາຍພຸ້ນ
ພຣະກໍ ໃຫ້ສົມມະນະເຈົ້າ ມາພີ້ໂຈດກັນ ວ່າດາຍ
ຄັນວ່າ ໃຜຜູ້ຍັງຄາຄ້າງ ອະອາຕົວນຶ່ງ ກໍດີ
ຈັກໄດ້ ເອົານະຄະເຣດບ້ານ ເມືອງກວ້າງສ່ວຍໄຣ ວ່າດາຍ

ອັນວ່າ ສົມມະນາເຈົ້າ ກ້ຳຝ່າຍຕານີ ທີ່ພຸ້ນ
ຕັ້ງວ່າ ເງິນເຕັມຖົງ ກໍຈຶ່ງເດີນມາຄ້າ
*ອັນນຶ່ງ ເໝືອນດັ່ງນາຍພານເນື້ອ ສແວງຍິງສັບພະສິ່ງ ຈິງແລ້ວ*
*ຕັ້ງວ່າ ປືນຍັດໄວ້ ເຕັມແຫລ້ງກໍຈຶ່ງໄປ ເຈົ້າເອີຍ*

*ອັນວ່າ ຄົນດີເພິ່ນຈຶ່ງໃຊ້ ຄົນໃບ້ຈຶ່ງຕໍ່ແຍ ແທ້ດາຍ*
ອັນວ່າ ຄວາມບູຮານ ກ່າວມາເຮົາຮູ້

ແຕ່ນັ້ນ ສົມມະນາເຈົ້າ ທະວາຣີຢ້ານສັ່ນ
ກໍຫາກ ບໍ່ມີຕົນໂອດອ້າງ ຂານເຈົ້າໂຈດກັນ ສນ່ອຍນັ້ນ

ກໍບໍ່ ມີຜູ້ຂັນຕໍ່ສູ້ ສົມມະນາດຕານີ ໄດ້ແລ້ວ
ກໍທໍ່ ໂອຍໂອຍຄາງ ຊູ່ອົງໂຍມຢ້ານ
ເຮົານີ້ ຕັ້ງວ່າຮຽນບໍ່ເຖິງຖອງສູ້ ຄຳແປດອມເພື່ອນ
ຮູ້ທໍ່ ຮຽນສູດສ້ອຍ ຄຣູເຈົ້າສັ່ງສອນ ເຈົ້າເອີຍ

ຜິວ່າ ໄປໂຈດຕັ້ງ ຂັນຕໍ່ການພະນັນ ດັ່ງນັ້ນ
ເກາງທໍ່ ເສັຽເມືອງເຮົາ ສ່ວຍສິນເຂົາແທ້

ເຮົາຫາກ ໂຍມໂຍມແລ້ວ    ຂໍດອມມະຫາຣາດ ເສັ່ງຖ້ອນ
ເກງທໍ່ ທາງເພື່ອນແພ້    ຊິອາຍໜ້າເມື່ອລຸນ ເຈົ້າເອີຍ

ເມື່ອນັ້ນ ຣາຊາເຈົ້າ    ພອຍຄຽດ*ຂນັງ*ຊວງ
ເພື່ອວ່າ ມວນສົມມະນາ    ອ່ອນຂາມກົວຢ້ານ
ສູຈິ່ງ ໄປນຳນ້ອງ    ກະນິດຖາເຮວຮີບ
ມາຮ່ວມຕ້ານ    ຄຳທ້າຝ່າຍເຂົາ ທ່ຽວເຖິ້ມ

ເມື່ອນັ້ນ ເຂົາກໍໂດຍຄຳເຈົ້າ    ຈອມເມືອງຮີບແລ່ນ
ເຖິງທີ່ ຊຽງໝັ້ງແລ້ວ    ຖແລງຖ້ອຍກ່າວກອນ

ບັດນີ້ ເໜືອຫົວເຈົ້າ    ຈອມເມືອງທັນຮີບ ທ່ານເອີຍ
ໃຫ້ໄປ ພ້ອມຂ້ານ້ອຍ    ດຽວນີ້ຢ່ານານ ວ່າດາຍ

ແຕ່ນັ້ນ ຊຽງກໍໂດຍຄຳເຈົ້າ    ພຣະຍາຫລວງຟ້າວຟັ່ງ
ກໍເລົ່າ ເມືອຮອດເທົ້າ    ພຣະອົງອ້າຍຂາບທູນ
ບັດນີ້ ຣາຊາເຈົ້າ    ທັນອວນເຮວຮີບ
ຈັກວ່າ ເປັນເຫດຮ້ອນ    ການບ້ານເຍື່ອງໃດ ນັ້ນເດ

ຂ້າກໍ ມາຮອດແລ້ວ    ຜາຍໂຜດກູນາ ທ່ຽວເຖິ້ມ
ຍານານເປືອງ    ບອກມາພໍຮູ້
ແຕ່ນັ້ນ ຣາຊາເຈົ້າ    ຈອມເມືອງຖແລງຕໍ່ ຊຽງນັ້ນ
ອັນວ່າ ສັງຄະເຈົ້າ    ເຮົານີ້ອ່ອນໂຍມ ທ່ານເອີຍ

*ຕັ້ງວ່າ ເສັ່ງແຮງຍໍພາເຂົ້າ*    *ໄປເຄນ*ດາຍດອກ *ຊຽງເອີຍ*
*ເພື່ອນບໍ່ ຄຶດອາດຕູ້ມ*    *ເມືອງບ້ານຊ່ອຍເຮົາ ແທ້ດາຍ*
*ລອນທໍ່ ແຖຫົວເຂົ້າ*    *ເປັນສົງ*ດາຍດອກ
*ກໍບໍ່ ຄຶດຮ່ຳຮູ້*    *ຮຽນໄວ້ໃສ່ຕົວ ນັ້ນເດ*

*ເຫັນວ່າ ເປັນສົງແລ້ວ*    *ຊິນອນກິນ*ດາຍດອກ
*ທັນບໍ່ມີ ຄ້າງທ້ອງ*    *ທະລອນເອ້ໂອດເຊີງ ແທ້ນໍ*
*ກໍບໍ່ ມີປະສົງດອມແທ້*    *ໃນທັນລຳມະສູດ ອີ່ສັງນັ້ນ*
*ກໍທໍ່ ຮູ້ແຕ່ຫລີ້ນ*    *ໂຄງຟ້າອ່ານສານ ນັ້ນເດ*

---

ຂນັງ ຂລັງ = ອຸກອັ່ງ, ແຄ້ນ, ແໜ້ນໃນໃຈ

*ຍັງເລົ່າ ໂລພາລົ້ນ　　ວັດຖຸທານທຸກສິ່ງ ນັ້ນແລ້ວ*
*ເຫັນແກ່ ອາມິດຂອງລື່ນລົ້ນ　　ຊົມຈື້ນຢູ່ເລິງ ແທ້ນໍ*
*ຕັ້ງວ່າ ເສັຽແຮງທົດສິງໃຫ້　　ເປັນຄຣູດາຍດອກ*
*ບາດວ່າ ເຫດໃຫຍ່ມາຮອດບ້ານ　　ຄຳຣູ້ບໍ່ມີ ທ່ານເອີຍ*

ບັດນີ້ ເຮົາຈັກຫາໃຜໄດ້　　ມາແປໂຈດເພື່ອນ ນັ້ນເດ
ບໍ່ຊ່າງວ່າ ຈັກໃຫ້ເສັຽຍົດບ້ານ　　ເມືອງກວ້າງແຫ່ງເຮົາ ນັ້ນເດ

ແຕ່ນັ້ນ ກະນິດຖານ້ອງ　　ຖແລງຄຳກອຍກ່າວ
ໃຜກໍ ບໍ່ຫານຂັນຕໍ່ຕ້ອງ　　ຖແລງຖ້ອຍຊີໂຈດເຂົາ ແທ້ລື

ຄັນວ່າ ຫາກບໍ່ມີໃຜແທ້　　ໂຍມເຂົາໝົດຊູ່ບ່ອນ ເສັຽນັ້ນ
ຂ້ອຍກໍ ຍັງຈັກໄປບວດຄ້ຳ　　ຄຳແກ້ໂຈດເຂົາ ກ່ອນແລ້ວ

ເຮົາກໍ ບໍ່ໃຊ່ຮຽນຢູ່ຫ້ອງ　　ຕົນແມ່ມານດາ ມາດາຍ
ເຮົາກໍ ຮຽນຄຳຄຶດ　　ດັ່ງດຽວກັນແທ້
*ຊາດທີ່ ເກີດມາໃນກົງພື້ນ　　ທໍຣະນີເໜືອແຜ່ນ ດິນນີ້*
*ໃຜບໍ່ ມີສລາດຣູ້　　ປັນຍາລ້ຳລື່ນກັນ ດອກນາ*

ຊາດທີ່ ຄົນຊາຍນີ້　　ບໍ່ຫວັງຍອມໂດຍງ່າຍ ເປັນແລ້ວ
ຍຽວວ່າ ອິນຢູ່ຟ້າ　　ລົງອ້ອນຊ່ອຍເຂົາ ບໍ່ຣູ້
ຈຶ່ງຈັກ ເສັຽໄຊຫລຸ້ຍ　　ຊຽງເຮົາຊີຢຸດຢ່ອນ ເສັຽແລ້ວ
ຫລືວ່າ ສັບພັນຍູລົງເກີດກ້ຳ　　ເມືອງບ້ານແຫ່ງເຮົາ ບໍ່ຣູ້

*ຊາດທີ່ ທັມພຣະເຈົ້ານີ້　　ມີແປດໝື່ນສີ່ພັນຂັນ ແທ້ແລ້ວ*
*ໃຜອາດ ອົມເອົາໝົດ　　ຊູ່ຄວາມມາເວົ້າ*
*ໃຜທ່ອນ ອົມເອົາເຂົ້າ　　ໃນໃຈໝົດຊູ່ບ່ອນ ພຣະເອີຍ*
*ຍຽວວ່າ ເຂົາຫາກມີຣະມິດດັ່ງພຣະເຈົ້າ ປັນຍາແກ້ວສ່ອງເຫັນ ບໍ່ຣູ້*

*ຊາດທີ່ ເປັນຄົນແທ້　　ສເມີກັນບໍ່ຍ້ານຍ່ອນ ໃຜແລ້ວ*
ແມ່ນວ່າ ເຂົາຈັກງ້າງແຜ່ນຟ້າ　　ທໍຣະນີຂຶ້ນກໍບໍ່ກົວ ພຣະເອີຍ

ເຊີນພຣະ ສງັດຢູ່ຖ້ອນ　　ຢ່າໄດ້ອ່າວຄະນິງສັງ ເຈົ້າເອີຍ
ຂ້າຫາກ ຈັກຂັນອາສາຕາງ　　ບໍ່ໃຫ້ເຄືອງຈອມເຈົ້າ

| | |
|---|---|
| ແຕ່ນັ້ນ ຣາຊາເຈົ້າ | ພຣະຍາຫລວງຊິນຊື່ນ |
| ເພາະເພື່ອ ນ້ອງແກ່ນແກ້ວ | ອາສາຄ້ຳຊູ່ອັນ ທັ້ນແລ້ວ |
| ພຣະຈິ່ງ ປົງຄວາມໃຫ້ | ເສນາໝົດທຸກໝູ່ |
| ບັດນີ້ ສູຈົ່ງຕົກແຕ່ງຫ້າງ | ດາພ້ອມຊູ່ອັນ ທ່ຽວເຖີ້ນ |
| ເຮົາຈັກ ໃຫ້ກະນິດຖານ້ອງ | ແຖຫົວອອກບວດ ຈິງແລ້ວ |
| ພໍເພື່ອ ໄປຕໍ່ສູ້ | ຣາຊະຄຣູເຈົ້າຕ່າງເມືອງ ແທ້ແລ້ວ |
| >> ແຕ່ນັ້ນ ເສນາທ້າວ | ໂດຍພຣະຍາເຣວຣີບ |
| ເລີຍເລົ່າ ຕົກແຕ່ງຫ້າງ | ດາພ້ອມຊູ່ອັນ |
| ເຂົາຈິ່ງ ເອົາຊຽງໝັ້ງ | ແຖຫົວໄປບວດ |
| ອັນວ່າ ສັງຄະເຈົ້າ | ມາພ້ອມຊູ່ຕົນ ແທ້ແລ້ວ |
| *ຄັນວ່າ ເປັນເນນແລ້ວ* | *ເລີຍເອົາໄປບວດ* |
| *ເລື່ອນໃຫ້ ເປັນພຣະຊ້ຳ* | *ວັນໜ້າພາບດຽວ* |
| *ແລ້ວເລົ່າ ຫົດສົງໃຫ້* | *ສອງທີເປັນລາບ* |
| *ຍັງຈັກ ອຸບພິເສກໃຫ້* | *ເປັນຄຣູຄ້ຳສາສນາ ແທ້ແລ້ວ* |
| ເຂົາກໍ ແປງລົນແກ້ວ | ຮາງຄຳດູອາດ |
| ກັບທັງ ມຸກມາດກັ້ງ | ພິດານເຫລື້ອມແສ່ວສົນ |
| ອັນວ່າ ຫໍສົງນ້ຳ | ລົນຄຳຫລັງໃຫຍ່ |
| ເຂົາກໍ ແປງຜາສາດແກ້ວ | ເຫລືອງເຫລື້ອມຮຸ່ງເຮືອງ |
| ຕັ້ງຫາກ ມາບມາບເຫລື້ອມ | ຄືດັ່ງວິມານຄຳ |
| ສວັນພຽງງາມ | ຂ່ວງດາວດູກວ້າງ |
| ແລ້ວເລົ່າ ແຊມຜລາກ້ວຍ | ລຽນຖັນອ້ອຍຄູ່ |
| ທຸງໄຊ ປົວໂບກເປື້ອງ | ຕາມໄຕ້ປະທີບລຽນ |
| ອັນວ່າ ຫົນທາງກວ້າງ | ດູງາມພຽງຣາບ |
| ຊາຍແຮ່ພ້ອມ | ໂຮມໄວ້ຊູ່ພາຍ |
| ແລ້ວເລົ່າ ປູກກ້ວຍອ້ອຍ | ທັງຊໍ່ທຸງຢາຍ |
| ຕັ້ງຫາກ ເປັນແຖວຖັນ | ຊູ່ພາຍງາມສລ້າຍ |

---

ບວດມື້ດຽວເປັນຈົວ ກາຍເປັນພຣະ ຫົດໃຫ້ເປັນພຣະຄຣູເລີຍ, ວິຈານພຣະຍາເຮັດນອກຄອງກໍໄດ້

ອັນວ່າ ພິດານກັ້ງ ພາຍບິນດູອາດ
ຫຽນຫູບ ລຽນປະທີບໄຕ້ ສອງຂ້າງເຮື່ອງເຮືອງ

ເຂົາເລົ່າ ເອົາຕຽງຟ້າວ ຫາມແຫ່ກະນິດຖາ
ແຊວແຊວໄປ ສູ່ຫໍສົງນໍ້າ
ພາຍບິນກັ້ງ ສັບພະທົນດວງອາດ
ເສດຕະສັດ ຮົ່ມກັ້ງ ຄັນຈ້ອງຂູ່ພາຍ

ອັນວ່າ ແສງສໄວເຫລື້ອມ ວິມານຄຳໄກວແກວ່ງ
ສຽງລັ່ນຄ້ອງ ກອງພ້ອມສນັ່ນເນືອງ
ແຖເທີນກ້ອງ ສວນໄລແກມປີ່
ພິນພາດພ້ອມ ແຄນໃຄ້ຊຸ່ຍຊໍ
ອໍຣະແອພ້ອມ ຣະບຳເພງຂານຊ່ຽວ
ສຽງປີ່ຫລັ້ງ ຍິນແມ້ງມ່ວນໃຈ

ຜໍ່ດູ ຄົນມາກລົ້ນ ແຫນແຫ່ນຳຫລັງ ພຸ້ນເຢີ
ສົນສົນ ຖືຄັນທີ ໝູ່ໄອຂັນນໍ້າ
ລາງພ່ອງ ຖືດອກໄມ້ ຫຽນຫູບສອນລອນ
ລາງຄົນໂຮ ໂຫ່ນຳເຟືອນຟື້ນ
ແຕ່ນັ້ນ ຊຸມສາວຢ້ຽມ ຫລິງແນມນຳບ່າວ
ມວນໝູ່ ສາວສ່ຳຊູ້ ຫີວໄຫ້ຫອດນຳ

ໂອນໍ ບັດນີ້ພຣະພີ່ຕົ້ນ ເຮົາບວດເປັນສົງ ແລນໍ
ແມ່ນວ່າ ເຮົາຈັກໄປຊົມໃຜ ກໍບໍ່ປຸນປານເຈົ້າ
ອັນແຕ່ ເຊີງຊາຍນີ້ ໃຜຈັກປຸນປານປຽບ ໄດ້ນັ້ນ
ສຸດແຕ່ ພຣະພີ່ເຈົ້າ ຕົນລໍ້າໂລກລື ແທ້ແລ້ວ

ເມື່ອນັ້ນ ເຮົາຈັກຄອຍຢູ່ຖ້າ ກໍມີໃຊ່ອາການ ເຈົ້າເອີຍ
ຄັນຈັກ ຫາໃໝ່ມາຫຽມສອງ ຢ້ານບໍ່ປຸນປານເຈົ້າ
ຫລືວ່າ ເຮົາຈັກແຖຫົວເຂົ້າ ເປັນນາງຂາວດອມທ່ານ
ຢ້ານທໍ່ ທຳບໍ່ຊອບໄຫ້ ພຣະເມືອງເຈົ້າຊິຜູກາຕີ ບໍ່ຮູ້

ຄ້ອມວ່າແລ້ວ    ແລ້ວຢູ່ຊະເຈົາຈິດ
ເພື່ອວ່າ ຣົມມະນາຄຶດ    ຮອດເຖິງຊຽງໝັ້ງ
ຍິນສຽງ ແຊວແຊວກ້ອງ    ມວນຊົນແຫນແຫ່ ພຸ້ນເຢີ
ເຖິງທີ່  ເຊົາຈອດຢັ້ງ    ອາຣາມກວ້າງເຂດສົງ

ເມື່ອນັ້ນ ຣາຊາເຈົ້າ    ຈອມເມືອງສະເດັດຮອດ
ໄພ່ພົນ  ແຫນແຫ່ຫຸ້ມ    ລີລ້າຍອອກຕາມ

ເຖິງທີ່  ອາຣາມຫລວງກວ້າງ    ສະຖິດເຊົາເໜືອແທ່ນ
ເມື່ອນັ້ນ *ສັງຄະຣາດ*ຕ້ານ    ຊາພ້ອມຄູ່ຄຣູ
ແລ້ວເລົ່າ ເອີ້າກັນພ້ອມ    ມາໂຮມໝົດໝູ່
ລຸດລຸດເຂົ້າ    ອາຣາມກວ້າງຈອດເຊົາ

ເມື່ອນັ້ນ  ເສນາທ້າວ    ທັງຫລາຍເລີຍຮີບ
ມາພ່ຳພ້ອມ    ໂຮມຫັ້ນບ່ອນດຽວ
\>> ແຕ່ນັ້ນ  ທັງຫລາຍພ້ອມ    ຊຸມກັນແປງຫລາບ
ທັງເລົ່າ ໃສ່ຊື່ເຈົ້າ    ຄຣູແກ້ວແມ່ນນາມ

ຊື່ວ່າ *ຄຣູໄຊຍະສິດຕະກະແກ້ວ*    *ຄຳພີລັງອິງອາດ* ຈິງແລ້ວ
ໃຫ້ເປັນ ແຂງເຂື່ອນກວ້າງ    ທຸລີໄທ້ທີ່ນະຄອນ ແທ້ແລ້ວ
ເມື່ອນັ້ນ ເຂົາກໍລົງສັງຕ້ອງ    ຈຳຄັງຄັບໃຫຍ່
ເລີຍເລົ່າ  ແປງຫລາບແລ້ວ    ບໍຣະບວນພ້ອມຊູ່ອັນ

ແຕ່ນັ້ນ  ເຂົາກໍເລື່ອນເລື່ອນຍ້າຍ    *ສິວິກາ* ຊັດທໍ່
ກະນິດຖາ  ແຈ່ມເຈົ້າ    ເລີຍຂຶ້ນນັ່ງເທິງ
ຮົ່ມກົ່ງກັ້ງ    ເລີຍແຫ່ແຫນໄປ
ເຖິງທໍສົງ    ຫລັ່ງລົງລິນແກ້ວ
ອັນວ່າ  ຕຸຣິຍານົນຕຣີພ້ອມ    ສຽງນັນມວນມີ່
ເຂົາກໍ  ເສບແຈ່ມເຈົ້າ    ສົງນ້ຳຊູ່ພາຍ

ຟັງຍິນ  ຕຶງຕຶງກ້ອງ    ສະບູຫລວງລະມອກໃຫຍ່ ພຸ້ນເຢີ
ເຂົາເລົ່າ ຍິງຜາບໃຫ້    ປະຈົນແພ້ໝູ່ມານ

---

ສັງຄະຣາດ = ປະມຸກຂອງພະສົງພາຍໃນປະເທດ / ສິວິກາ (ປລ  ສິວິກາ) = ຕລ່ງງ, ຄານຫາມ

ເຂົາກໍ ລົງໄປເປື້ອງ ຄັນທີຍໍຫລັ່ງ
ລາງພ່ອງ ໂອໃສ່ນ້ຳ ຍໍຂຶ້ນຖອກລົງ

ຜໍ່ດູ ຝົນທ່າແກ້ວ ລົງໂຜດຜາຍຜາຍ ພຸ້ນເຍີ
ໃນຫັ້ນ ເງິນຄຳມີ ຫວ່ານໂຍນຕາມພື້ນ
ພ່ອງກໍ ສົນສົນເຕັ້ນ ປົບໄປຊີງຍາດ
ເຂົ້າຕອກ ທັງດອກໄມ້ ຜາຍຂຶ້ນຫວ່ານລົງ

ມວນໝູ່ ຜູ້ບ່າວນ້ອຍ ປະສົງບຽດຕຳສາວ
ຕັ້ງຢາກ ຊູນຊວງອິກ ໜ່ອຍໝາການາວຍັງແຂ້ນ
ລາງພ່ອງ ເຊຊວນລົ້ມ ຕຳກັນຂີນໄຂວ່
ລາງພ່ອງ ອ້າປາກຮ້ອງ ຕາຈ້ອງຜູ້ເພດງາມ

ຄ້ອມວ່າ ບໍຣະບວນແລ້ວ ທັງຫລາຍລາເລີກ
ອັນວ່າ ສຽງເສບນ້ອຍ ອວນເຈົ້າຊູ່ສະຖານ
ເຂົາຈຶ່ງ ຕົກແຕ່ງພ້ອມ ເຄື່ອງເບີກບາສີ
ອັນວ່າ ພາມມະນາເລີຍ ອ່ານພອນຖວາຍເຈົ້າ
ຂໍຈົ່ງ ສວັດດີໝັ້ນ ເທັຽຣະຄາຍືນຍິ່ງ ຈິງເຖີ້ນ
ສົມບັດ ສິນສ່ວຍນ້ອມ ຖວາຍເຈົ້າຊູ່ເມືອງ ແທ້ເນີ

ຄ້ອມວ່າ ພາມມະນາເຖົ້າ ຖວາຍພອນແລ້ວຢ່າ
ເຂົາເລົ່າ ຕີລັ່ນຄ້ອງ ເລີຍຮ້ອງວ່າຊາ ແທ້ແລ້ວ
ຄ້ອມວ່າ ບໍຣະບວນແລ້ວ ເຂົາເລີຍລາເລີກ
ໃຜກໍ ເມືອສູ່ຫ້ອງ ເຮືອນຢ້າວແຫ່ງຕົນ

ເຖິງເມື່ອ ຮ່ວນຮ່ວນຟ້າ ຝົນຫລັ່ງແຖມແຖວ ພຸ້ນເຍີ
ຣະດູ ຊຸມຊາວນາ ແຕ່ງຄວາຍໄຖກ້າ
ແຕ່ນັ້ນ ຣາຊາເຈົ້າ ຈອມເມືອງປົງອາດ
ບອກໃຫ້ ສົມມະນາດເຈົ້າ ຕານີພຸ້ນຊູ່ຕົນ

ອັນວ່າ ຣາຊະຄຣູຫລວງພ້ອມ ສັງຄະຊາຕົນໃຫຍ່ ກໍດີ
ກັບທັງ ສັງຄະຣາດຫ້າງ ດາໄວ້ຊູ່ຕົນ ທ່ຽວເຖີ້ນ

| | |
|---|---|
| ແລ້ວເລົ່າ ມີອາດໃຫ້ | ໃຊ້ຂ່າວຊາວສະເພີາ |
| ກັບທັງ ສິມມະນາເມືອງຕານີ | ບອກມາພໍແຈ້ງ |
| ອັນວ່າ ວັນພຸ່ງໜ້າ | ຍາມດິດຖືອະມຸດຕະໄຊກ |
| ເຮົາຈັກ ໂຮມພ່ຳພ້ອມ | ສນາມກວ້າງໂຈດກັນ ແທ້ດາຍ |
| | |
| ແຕ່ນັ້ນ ຊາວເມືອງກວ້າງ | ທະວາຣີຮູ້ຂ່າວ |
| ພາກັນ ຄອຍຕໍ່ຕັ້ງ | ຟັງທ້າໂຈດພັນ |
| ເມື່ອນັ້ນ *ຣາຊະຄຣູເຈົ້າ* | *ຄຳພີລັງ* ຕົກແຕ່ງ |
| ອັນວ່າ ຄົນແຫ່ພ້ອມ | ລີລ້າຍສູ່ສນາມ |
| | |
| ແຕ່ນັ້ນ ເຈົ້າກໍເລົ່າປູອາດຕັ້ງ | ສະໜາໃຫຍ່ແອວສູງ |
| ສາມບ່ອນຮັບ | ຣາຊະຄຣູຫລວງເຈົ້າ |
| ເມື່ອນັ້ນ ສັງຄະເຈົ້າ | ຕານີຍົວຣະຍາດ ມາແລ້ວ |
| ເລີຍເລົ່າ ອວນໝູ່ເຂົ້າ | ສນາມກວ້າງຈອດເຊົາ |
| | |
| ດີແຕ່ ສັງຄະເຈົ້າ | ສວ່າສວ່າໂຮມກັນ ພຸ້ນເຍີ |
| ສຽງຄົນນັນ | ຊູ່ພາຍຄອຍຢັ້ງມ |
| ແຕ່ນັ້ນ *ຣາຊະຄຣູເຈົ້າ* | *ຄຳພີລັງ* ກອຍກ່າວ |
| ເຮົາຄ່ອຍ ຢັ້ງຢູ່ຖ້າ | ຣາຊະຄຣູເຈົ້າໄປ່ລົງ |
| | |
| ຂ້ອຍກໍ ຢູ່ປະເທດກົ້າ | ຂັນຂອບທະ*ສີມາ* ທີ່ພຸ້ນ |
| ເນົາຄາເມ | ນອກນາພາຍພຸ້ນ |
| ທີ່ວ່າ ມີອາຍຸໄດ້ | ຊາວສາມປີທັດທ່ຽງ ຈິງແລ້ວ |
| ຣາຊາ ອຸບພິເສກໃຫ້ | ວານນີ້ຕື່ມນາມ ເຈົ້າເອີຍ |
| | |
| ທັງສາມ ຣາຊະຄຣູເຈົ້າ | ຕົນຢູ່ໃນເມືອງ |
| ທີ່ວ່າ ຈົບເພດພັ້ງງ | ໄຕຣແກ້ວຊູ່ອັນ ເຈົ້າເອີຍ |
| ແຕ່ນັ້ນ ຣາຊະຄຣູເຈົ້າ | ເມືອງຕານີຊົມຊື່ນ |
| ຂໍໃຫ້ ເຈົ້າກ່າວຕ້ານ | ບົນບອກຄຳຣະທັດ ແດ່ຖ້ອນ |
| ຍັງອີກ ດົນປານໃດ | ຈັກລົງມາຖາມໂຈດ ກັນນັ້ນ |
| ເຮົາກໍ ຄຶດຢາກໄດ້ | ຄວາມຮູ້ຕື່ມແຖມ ນັ້ນດາຍ |

---

ສີມາ (ປລ ສີຫາ) = ເຂດ, ແດນ

| | | |
|---|---|---|
| >> ເມື່ອນັ້ນ | *ຣາຊະຄຣູເຈົ້າ* | *ຄຳພີລັງ* ຮັບພາກ |
| ບັດນີ້ | ເຮົາຄ່ອຍລອງພາກເວົ້າ | ກັນຖ້າເພື່ອນມາ ກ່ອນຖ້ອນ |
| ເຮົາຈັກ | ຈາກັນຫລີ້ນ | ປາຍປາຍພໍສນ່ອຍ |
| | ຊາມຖ້າເຈົ້າ | ຄຣູເຄົ້າເພື່ອນລົງ ເຈົ້າເອີຍ |
| *ເມື່ອວ່າ* | *ເຮົາຈັກຈາກັນດ້ວຍ* | *ອະພິທັມຍັງກວ້າງຍິ່ງ ຈິງນາ* |
| *ອັນວ່າ* | *ຄອງພຣະພຸດທະເຈົ້າ* | *ເຮົານັ້ນກໍເລີກຂຳ ແທ້ດາຍ* |
| *ເຮົາຈັກ* | *ຈາຂານກັນໃນຫ້ອງ* | *ອາສົນໂມກໍແປຍາກ ແທ້ແລ້ວ* |
| *ອັນວ່າ* | *ພຸ້ນແລະພີ້* | *ເຮົາກໍຮູ້ຊູ່ຄົນ ເຈົ້າເອີຍ* |
| ບັດນີ້ | ຂ້ອຍຈັກຖາມທ່ານເຈົ້າ | ທັງປວງເປັນອັນຮຸ່ງ ຈິງດາຍ |
| ອັນວ່າ | ເຊື້ອສືບເຊື້ອ | ພຸດໂທເຈົ້າຕໍ່ກັນ ນັ້ນນາ |
| ອັນນີ້ | ຈາໃນຫ້ອງ | ມະຫາວົງພຸດທະບາດ ເຮົາແລ້ວ |
| ທີ່ວ່າ | ພຸ້ນແລະພີ້ | ເຮົາກໍຮູ້ຊູ່ຄົນ ຢູ່ແລ້ວ |
| ອັນວ່າ | ປິຕາໄທ້ | ພຸດໂທອົງປະເສີດ ເຮົານີ້ |
| ກັບທັງ | ແມ່ພຣະເຈົ້າ | ນາມແທ້ຊື່ໃດ ນັ້ນເດ |
| ແຕ່ນັ້ນ | ສັງຄະຕານີເຈົ້າ | ຂານຄຳບົນບອກ |
| ພຣະສີ | *ສຸດໂທທະນະ*ເຈົ້າ | ເປັນເຄົ້າພໍ່ພຣະອົງ ແທ້ດາຍ |
| ອັນວ່າ | ມານດາໄທ້ | ພຸດໂທອົງປະເສີດ ເຮົານີ້ |

*ນາງພິມພາ ມະຫາມະຍາ* ແກ່ນແກ້ວ ເປັນເຄົ້າແມ່ພຣະອົງ ເຈົ້າເອີຍ

| | | |
|---|---|---|
| ແຕ່ນັ້ນ | ຄຳພີລັງເຈົ້າ | ເລີຍຈາສືບຕໍ່ ໄປແລ້ວ |
| ບໍ່ໃຫ້ | ຂາດປາກໄດ້ | ສເມີນ້ຳຫລັ່ງໄຫລ ແທ້ແລ້ວ |
| ອັນວ່າ | ປູ່ພຣະເຈົ້າ | ຕົນພໍ່ສີສຸດໂທ ນັ້ນເດ |
| | ທັງມານດາ | ຍ່າພຣະອົງເປັນເຈົ້າ |
| ຈັກວ່າ | ແມ່ນພຣະຍາໃດແທ້ | ນາມມະກອນເປັນໃຫຍ່ |
| | ຜູ້ແກ່ນເຫງົ້າ | ນາມເຄົ້າຊື່ໃດ ນັ້ນເດ |

ເມື່ອນັ້ນ ພຣະມະຫາສັງຄະຣາດເຈົ້າ ເມືອງຕານີບົນບອກ

*ພຣະຍາ ສີຫາຫະນຸຣາດ* ເຈົ້າ ເປັນເຄົ້າປູ່ພຣະອົງ ເຈົ້າເອີຍ

ອັນວ່າ ຍ່າພຣະເຈົ້າ    ບໍ່ມີອາດຄັນນະນາ ໄດ້ແລ້ວ
ກໍບໍ່ ມີໃຜສອນ    ບອກນາມມະກອນແທ້
ແຕ່ນັ້ນ ຣາຊະຄຣູເຈົ້າ    ຄຳພີລັງຊ້ຳກ່າວ
ອັນວ່າ ພໍ່ພຣະຍາສີຫາຣາດນັ້ນ    ນາມທ້າວຊື່ໃດ ນັ້ນເດ
ກັບທັງ ມານດາແກ້ວ    ເທວີເປັນແມ່ ພຣະຍານັ້ນ
ເຈົ້າຈິ່ງ ບອກໃຫ້ແຈ້ງ    ນາມເຊື້ອຊື່ໃດ ນັ້ນເດ

ເມື່ອນັ້ນ ຣາຊະຄຣູເຈົ້າ    ຕານີເລີຍບອກ
ອັນວ່າ ພໍ່ພຣະຍາສີຫະຣາດນັ້ນ    ນາມເຈົ້າກໍຫາກມີ ແທ້ດາຍ

ຊື່ວ່າ *ພຣະຍາໄຊຍະເສນາ* ແທ້ ສເວີຍເມືອງເປັນພໍ່
ອັນວ່າ ແມ່ແຈ່ມເຈົ້າ    ໃຜບໍ່ຮູ້ຊື່ນາມ ເຈົ້າເອີຍ

ແຕ່ນັ້ນ *ຄຳພີລັງ*ເຈົ້າ    ພາງານຖາມສືບ ໄປແລ້ວ
ອັນວ່າ ພໍ່ໄຊຍະເສນາຜູ້ເຖົ້າ    ປາງນັ້ນແມ່ນໃຜ ເຈົ້າເອີຍ
ກັບທັງ ມານດາແກ້ວ    ເທວີເປັນແມ່ ພຣະຍານັ້ນ
ເຈົ້າຈິ່ງ ບອກໃຫ້ແຈ້ງ    ນາມເຊື້ອຊື່ພຣະຍາ ແດ່ຖ້ອນ
*ອັນວ່າ ເຊື່ອນແຂງເມືອງຫລວງພຸ້ນ ກັບທັງວົງສືບຕື່ມ ຄືນນັ້ນ*
*ກັບທັງ ແນວຊາດເຊື້ອ    ມານດາເຈົ້າຊູ່ອັນ*
*ກັບທັງ ປິຕາໄທ້    ລຸງອາເຊື້ອຊາດ*
*ອັນວ່າ ເຊື້ອສືບເຊື້ອ    ຖາມຊັ້ນຊູ່ອັນ*

ກໍຫາກ ບໍ່ພັກເຊົາຂາດຖ້ອຍ    ນ້ອຍນິ່ງພໍຄາວ ໄດ້ແລ້ວ
ປານຫ່າ ຝົນເດືອນສິບ    ເລັ່ງລົງບໍ່ມີເອື້ອນ
ເປັນທີ່ ເຫລືອອ່າວຣຸນແຮງແກ້    ພໍດູອິດອ່ອນ ເສັງແລ້ວ
ນັບມື້ ຖາມສືບເລື້ອຍ    ເມືອໜ້າບໍ່ເຊົາ ເຈົ້າເອີຍ
*ແຕ່ນັ້ນ ຣາຊະຄຣູຫລວງເຈົ້າ    ເມືອງຕານີຄຶດຢູ່*
*ເລີຍເລົ່າ ໄປບໍ່ໄດ້    ຄາຄ້າງລວາດສະເຈົາ ແທ້ແລ້ວ*

ແຕ່ນັ້ນ ຄຳພີລັງຂົ່ມເວົ້າ    ຈາຂື່ນຄຳຂົມ
ບໍ່ຊ່າວ່າ ຣາຊະຄຣູຫລວງ    ມິດຄາເຄືອງຂ້ອງ

ທັງສາມເຈົ້າ　　ສັງຮອມລໍໂທດ
ກໍບໍ່　ພັບພະເນດໄດ້　　ຕາຄ້າງເບິ່ງດາຍ ແທ້ແລ້ວ

ຄັນວ່າ　ເພື່ອນຫາກໄດ້ຈ່າຍເສັ້ນ　　ໃນແຫ່ງອະພິທັມ ເມື່ອໃດ
ກັບທັງ　ອາສັມໂມ　　ໝູ່ວິໄນພ້ອມ
ອີກທັງ　ອັດຖະຕັ້ງ　　ວາງແປຫລາຍວາດ
ກໍຫາກ　ໄຫລດັ່ງນ້ຳ　　ທັງຫ້າຖັ່ງແຖວ ນັ້ນແລ້ວ

ຫລ້າງຈັກ ຕຶກຄະມະແທ້　　ລືມເພດພໍສລຶບ ບໍ່ຢ່າແລ້ວ
*ອັນວ່າ　ຝູງແມງວັນຊຽວຕອມ　　ຂີ້ໄຂ່ຂາງຊິເຕັມແຂ້ວ*

ອັນນີ້　ທໍ່ຕັ້ງແຕ່ຂ້ອຍຜູ້ຊ້າ　　ບໍ່ຮູ້ແຫ່ງປັນຍາ ດອກນາ
ຈາແຕ່　ພໍເບົາບາງ　　ກໍເລົ່າຟັງຄາຄ້າງ
ແຕ່ນັ້ນ　ສັງຄະກ້ຳ　　ເມືອງຕານິຍຸດຍ່ອນ ເສັຽແລ້ວ
ອັນວ່າ ໜ້າລ່າເບື້ອ　　ຂາມຢ້ານອ່ອນໂຍມ

ກໍບໍ່　ມີໃຜພ້ອງ　　ພານຄວາມສງັດຢູ່ ແທ້ແລ້ວ
ໃຜກໍ　ຫາກຕຶກຄະມ່າຄ້າງ　　ລືມເວົ້ານັ່ງເຊົາ ແທ້ດາຍ
ກໍທໍ່　ໃຈທຸ່ນຊ້າ　　ໂຍມອ່ອນຍິນຂາມ ມາກແລ້ວ
ເພື່ອວ່າ ຄຳພີລັງຈາ　　ນາບຄວາມເຕັງໄວ້

ບາດນີ້　ເຮົາກໍຫາກມີໄຊແພ້　　ຈັດເອົາສິນສ່ວຍ ຈິງແລ້ວ
ແຕ່ນັ້ນ　ສັງຄະກ້ຳ　　ເມືອງຕານີເສົ້າໝົ່ນໝອງ ແທ້ແລ້ວ

ໃຜກໍບໍ່　ພັບພະເນດຍ້ຽມ　　ແລລ່ຳຄຳພີລັງ ໄດ້ແລ້ວ
ກໍບໍ່ໄຂ　ວາຈາສັງ　　ຕອບມາພໍນ້ອຍ
ແຕ່ນັ້ນ　ກະນິດຖາຄຳພີລັງເຈົ້າ　　ຈັດເອົາສິນສ່ວຍ
ເຂົາກໍ　ເລົ່າປາກບໍ່ໄດ້　　ໂດຍເຈົ້າຊູ່ຄືນ

ເຂົາກໍ　ບໍ່ໄດ້ຂືນຂັດຂ້ອງ　　ຄຳພີລັງສັກສິ່ງ
ອັນວ່າ　ສະເພົາຫ້າຮ້ອຍ　　ກໍຍໍມ້ວນມອບເຄນ
ບໍ່ໃຫ້　ເສັຽສັດຈະແທ້　　ຂັບເປັນອັນທ່ຽງ ຈິງດາຍ
ພຣະຫາກ ມີໄຊກແພ້　　ຊິຖວາຍເຈົ້າຊູ່ອັນ

*ແຕ່ນັ້ນ ຊາວສະເພີາກໍ້າ ເມືອງຕາມີຕືກຄະມ່າ*
*ເພື່ອວ່າ ເພື່ອນໂຈດແພ້ ເສັງຂອງແທ້ມາກຫລາຍ ແທ້ແລ້ວ*

ແຕ່ນັ້ນ ເຂົາກໍແຊວແຊວພ້ອມ ຂົນຂອງເທອອກ
ຈາກສະເພີາ ຫ້າຮ້ອຍ ກອງໄວ້ອະເນການອງ

ເມື່ອນັ້ນ ແສນສໍ່າຂ້າ ຊຸບໝື່ນທະວາຣີ
ເຂົາກໍ ມວນກັນໄປ ຫາບຫາມມາໄວ້
ເຂົາເລົ່າ ຂົນຂອງເຂົ້າ ເມືອໃນເມືອງໃຫຍ່
ເຖີງຂ່ວງຄຸ້ມ ໂຮມໄວ້ກ່າຍກອງ

ມີທັງ ກໍາມະຍີ່ເຫລື້ອມ ແຮລໍາທັງເທດ
ມີທັງ ເງີນມາກລົ້ນ ຄໍາແກ້ວໝື່ນຫາມ
ເຂົາກໍ ແຊວແຊວຍ້ອງ ຄໍາພີລັງສວ່າສວ່າ
ດູດັ່ງ ບຸນມາກລົ້ນ ສີມພານເຈົ້າເກົ່ງອີນ ແທ້ແລ້ວ

ຊາດທີ່ ເປັນຄົນໄດ້ ສິງສານພື້ນໂລກ ເຮົານີ້
ຫາຜູ້ ມາຜາບແພ້ ຜຍາເຈົ້າກໍບໍ່ມີ ແທ້ດາຍ
ຍງວວ່າ ໃຜຈັກພັນບໍ່ແພ້ ຍໍເມືອງມວນມອບ ເພື່ອນດາຍ
ບັດນີ້ ສີມພານພຣະຜາບແພ້ ເຂົາຍໍນ້ອມສ່ວຍສິນ ແທ້ແລ້ວ

ເມື່ອນັ້ນ ທະວາຣີທ້າວ ເລີຍຫົວຊົມຊື່ນ
ເພາະວ່າ ມີໄຊກຍ້ອນ ຄໍາພີລັງເຈົ້າມາກມູນ

ແຕ່ນັ້ນ ສຸຣີໂຍຄ້ອຍ ຄາລົງຟ້າຄໍ່າ
ມວນໝູ່ ສັງຄະເຈົ້າ ຕາມີຟ້າວເລີກລາ

ກໍເລົ່າ ລຸດລຸດຍ້າຍ ອອກຈາກສນາມຫລວງ
ເມືອສະເພີາທອງ ຄ່ອຍເຊົາທັງເຍື້ອນ
ຄັນວ່າ ເຖີງເມື່ອວັນລຸນແລ້ວ ຊາວສະເພີາຈັກລາເລີກ
ເຂົາຈຶ່ງ ຂຶ້ນຂາບໄຫວ້ ພຣະຍາເຈົ້າສັ່ງລາ

ບັດນີ້ ຝູງຂ້າລາບາດເຈົ້າ ຍັງຂມ່ອມເໜືອຫົວ ກ່ອນແລ້ວ
ຄືນເມືອເມືອງ ສູ່ສະຫາຍພາຍພຸ້ນ

ພຣະຈົ່ງ  ສວັດດີແທ້  ສເວີຍເມືອງພັນຂວບ ປີຖ້ອນ
ຢ່າໃຫ້  ມີພະຍາດຮ້າຍ  ອິນຕາຍຂ້ອນບຽດບຽນ ແດ່ເນີ

ຢ່າໃຫ້  ເຄືອງຄຳຮ້ອນ  ການໃດຈັກສິ່ງ ນັ້ນເນີ
ຮ້ອຍເອັດ ປະເທດທ້າວ  ມານ້ອມສ່ວຍໄຣ ແທ້ເນີ
*ຝູງຂ້າ  ກໍທາການຳຂອງເຈົ້າ  ຕານີສະຫາຍຣາດ ມາແລ້ວ*
*ບັດນີ້  ພັນບໍ່ແພ້  ຖວາຍໃຫ້ແກ່ພຣະອົງ ຊອບແລ້ວ*

ເມື່ອນັ້ນ ຣາຊາທ້າວ  ທະວາຣີກອຍກ່າວ
ຂານຕອບຖ້ອຍ  ຊາວຄ້າວ່າດີ ດອກແລ້ວ
*ເຮົາຝາກ ຖາມຂ່າວແກ້ວ  ສະຫາຍຣາດເມືອງໄກ ແດ່ເຖີ້ນ*
*ຢ່າໃຫ້ມີ ຄຳໂກທາ  ເຍື່ອງໃດດີຮ້າຍ*

\>> ແຕ່ນັ້ນ  ເຂົາກໍລາລົງຫ້ອງ  ຫໍປາງພູວະນາດ
ກໍເລົ່າ  ເມືອສູ່ຫ້ອງ  ສະເພົາແລ້ວເບີກໄປ
ສິນສິນຍ້າຍ  ເພຕາດັງສນັ່ນ
ສະເພົາຫ້າຮ້ອຍ  ໄປພ້ອມພ່ຳກັນ

ຜໍ່ດູ  ລົມປິ່ນເປື້ອງ  ເປື້ອງປິ່ນເສົາກະໂດງ ພຸ້ນເຍີ
ເຂົາກໍ  ເອົາກັນກັບ  ອວ່າຍສະເພົາເມືອບ້ານ
ຜໍ່ດູ  ທົມທົມນ້ຳ  ຕີຟອງເຟືອນຟາດ ພຸ້ນເຍີ
ດີແຕ່  ລົມປິ່ນເປື້ອງ  ປິວຍູ້ສິ່ງໄປ

ຜໍ່ດູ  ເສີນເສີນຍ້າຍ  ສະເພົາໄປເປັນໝູ່
ລຸດລຸດຜ້າຍ  ຕາມສົ້ນສືບສາຍ

ແຕ່ນັ້ນ  ຝູງໝູ່ສາວສ່ຳນ້ອຍ  ເຈົ້າພາບທະວາຣີ
ເຂົາກໍ  ເອີນເຫີນສຽງ  ສຽດຊາວສະເພົາຄ້າ
*ໂອນໍ  ຄຶດວ່າສຽມດວງກ້າ  ຕານີຄືນບາດ ອວນເອີຍ*
*ຄຶດວ່າ  ຄືນເຂັ້ນກ້າ  ປະສົງຫ້າງແບກມາ ແທ້ດາຍ*

*ວ່າຈັກ  ຊວ້ານເອົາຫີນແມ່ຊ້າງ  ເມືອງເທດທະວາຣີ ທີ່ພີ້*
*ຄັນວ່າ  ເອົາເມືອເຖິງຕານີ  ຊິບັ່ງຮອງຕາງໂຕ້ນ*

*ບັດນີ້ ສຽມຄົນກ້າ* *ທາງຕານີກໍເປັບ່ານ ເສັຽນໍ*
*ມັນກໍ ຫັກທົບບ້ຽວ* *ຄົນຫລຸ້ຍຊິແບກເມືອ ແລນໍ*

*ສັງບໍ່ ວາງໝໍໃຫ້* *ຮົມເຕົາຊ້ຳຕັດເຂັ່ນ ເສັຽນັ້ນ*
*ຕາງໃຫ້ ໄດ້ຮອຍມືຊ່າງເຖົ້າ* *ທາວະຣີນີ້ສ່ວນຊິດີ ບໍ່ຮູ້*

ແຕ່ນັ້ນ ຝູງໝູ່ບ່າວສ່ຳນ້ອຍ ເມືອງເທດຕານີ
ເຂົາກໍ ເຄືອງໃຈຈິດ ເພື່ອສາວຫຍັນຫຍໍ້
ກໍຈິ່ງ ຈາຈົ່ງຕ້ານ ດອມສາວຖແລງຕອບ
*ແມ່ນວ່າ ສຽມບ່ານເປ້* *ຄົນຫລຸ້ຍພີ່ບໍ່ແໜງ ນ້ອງເອີຍ*

*ທີ່ວ່າ ສຽມເຫລັກກອ້າຍ* *ເມືອງຕານີຫາກຊຸບອ່ອນ ອີ່ພີ່ແລ້ວ*
*ເຫລັກກໍ ຫາກກ້າບໍ່ແພ້ແຫລ້ວ* *ພະອວນອ້າຍຊ່າງບໍ່ເຄີຍ ນ້ອງເອີຍ*
*ອັນນີ້ ເຫລັກຊຸບແລ້ວ* *ກໍຫາກບ່ານບຳທາງ ນ້ອງເອີຍ*
*ຜີວ່າ ໄດ້ໂຕນເທິງ* *ຜອກແດງດົນຊິກ້າ*

*ຄ່ອຍຢູ່ດີເຍີ ສາວພີ່ນ້ອງ* *ເມືອງເທດທະວາຣີ ອີ່ພີ່ເອີຍ*
*ພີ່ຈັກ ເມືອເມືອງຕານີ* *ຊິຕ່າວຊົງຊົມຊ້ອນ*
*ເທື່ອນີ້ ການພາເວັ້ນ* *ຊິຮາມຊົມທົບພະກົ່ນ ຄຳແລ້ວ*
*ໃຫ້ອີ່ນ້ອງ ອົດຢູ່ຍັ້ງ* *ຊາມອ້າຍພີ່ຕ່າວມາ ກ່ອນເຖີ້ນ*
*ອັນນຶ່ງ ຢ່າໃຫ້ຜົວຂວັນຊູ້* *ກຸມຕີຮ້າຍດ່າ ນ້ອງເນີ*
*ແລ້ວເລົ່າ ໃຫ້ນ້ອງເອົາໝາກກະໂຕ້ນ ວາງໃຫ້ແກ່ເຂົາ ແທ້ເນີ*

ແຕ່ນັ້ນ ສະເພົາລ່ວງຍ້າຍ ອອກຈາກທະວາຣີ
ດີແຕ່ ແຊວແຊວເຂົາ ໂຫ່ໂຮແຮງຮ້ອງ
ເມື່ອນັ້ນ ຊາວສະເພົາຄ້າ ເມືອງຕານີເລີຍຈົ່ມ
ສວ່າສວ່າເວົ້າ ເຟືອນຟື້ນຂູ່ລຳ

ອັນວ່າ ທະວາຣີທ້າວ ມີຜຍາເຫລືອມາກ ຈິງແລ້ວ
ແມ່ນວ່າ ເຮົາຊິພັນຮ້ອຍປີ້ນ ເຂົາກໍແພ້ຊູ່ທີ ນັ້ນແລ້ວ
ພັດແຕ່ ມາພັນທ້າວ ທະວາຣີໄດ້ສອງເທື່ອ ນີ້ແລ້ວ
ເຂົາກໍ ຍັງຍ່ອມແພ້ ເສັຽຂອງແທ້ມາກຫລາຍ ເຈົ້າເອີຍ

ເສັ່ງທັງ ເງິນຄຳແກ້ວ | ຂອງດີອະນັນເນກາ
ເຕັມສະເພົາ ໃຫຍ່ກວ້າງ | ພັນເຫລັ້ມມອບມວນ ແທ້ດາຍ

*ໃຜຢ່າ ໄປລວນຖ້ອນ | ທະວາຣີຊິວາຍຄອບ ຈິງແລ້ວ*
*ຕັ້ງວ່າ ດັບບໍ່ມື້ | ຊິອາຍໜ້າເພື່ອນຫຍັນ ເຈົ້າເອີຍ*

ອັນວ່າ ສິມມະນາເຈົ້າ | ເມືອງຕານິຄະນິງຢູ່
ແຕ່ຫາກ ປາກບໍ່ໄດ້ | ລັກອາຍໜ້າດັ່ງຊິຕາຍ ນັ້ນແລ້ວ
*ເໝືອນດັ່ງ ຍາງຂາວນ້ອຍ | ກິນປາຕົວະລ່າຍ ປາງນັ້ນ*
*ຕົວກໍ ຫາກບໍ່ມີຜຍາມາກລົ້ນ | ຊິພັນສູ້ຕໍ່ກັນ ແທ້ດາຍ*

ກໍຫາກ ເປັນທີ່ເສັ່ງໜ້າແທ້ | ເໝືອນດຽວກັນຢູ່
ບໍ່ເປັນຕາ ອວດອ້າງ | ຈາເວົ້າກ່ອນໄປ ເຈົ້າເອີຍ

ແຕ່ນັ້ນ ເລື່ອນເລື່ອນຍ້າຍ | ສະເພົາເບີກຕາມລົມ ພຸ້ນເຢີ
ດີແຕ່ ສິນສິນກາຍ | ເຂດທະວາເມືອງກວ້າງ
ອັນວ່າ ເພຕາຜ້າຍ | ໄປພັນຄາວຖີບ
*ສາຍແລວ ລົມເປົ່າເບື້ອງ | ປານແຮ້ງເວີ່ນບິນ*

ກໍຫາກ ຫລາຍວັນໄດ້ | ຫລາຍຄືນມີມາກ
ຈິ່ງລ່ອງ ເມືອຮອດບ້ານ | ເມືອງໄທ້ທີ່ຕົນ
ເຂົາຈິ່ງ ຂຶ້ນຂາບໄຫວ້ | ພຣະຍາໃຫຍ່ຕານີຫລວງ
ນຳຄວາມເຖິງ | ຊູ່ອັນຈາຕ້ານ

ບັດນີ້ ສິມມະນາເຈົ້າ | ເມືອງເຮົາໄປໂຈດ ເຂົາພຸ້ນ
ກໍບໍ່ ມີຕໍ່ໄດ້ | ເຂົາແພ້ຊູ່ອັນ ເຈົ້າເອີຍ
ຕັ້ງວ່າ ເສັ່ງຂອງລົ້ນ | ເມືອງນອງໝົດອ່ອຍຫ່ອຍ
ໃນສະເພົາ ຫ້າຮ້ອຍ | ເຄນໃຫ້ມອບເຂົາ ພຣະເອີຍ

ເມື່ອນັ້ນ ພຣະຍາໃຫຍ່ເຈົ້າ | ຕານີຕຶກຄະມ່າ
ເຈົ້າເລົ່າ ຄຶດຍຸດໃຫ້ | ສິມມະນາເຈົ້າຊູ່ຕົນ ຫັ້ນແລ້ວ

| | |
|---|---|
| ພຣະເລົ່າ ຟັງຄຳເວົ້າ | ຈາເຂົາທັງຈົ່ມ |
| ມາວ່າ ຕົວະຍົວະໃຫ້ | ເສັຽແທ້ສິ່ງຂອງ ນີ້ເດ |
| ອັນວ່າ ເງິນຄຳແກ້ວ | ຂອງດີອັນປະເສີດ ເຮົານັ້ນ |
| ຕັ້ງວ່າ ເຕັມສະເພົາຫ້າຮ້ອຍ | ເສັຽສັ່ງບໍ່ຫລໍ ແທ້ນໍ |
| *ຕັ້ງວ່າ ພາກັນແຖຫົວໂລ້ນ* | *ເປັນສົງດາຍດອກ* |
| *ຮູ້ທໍ່ ກິນແຕ່ເຂົ້າ* | *ຄວາມເວົ້າອວດໂຕ ແທ້ນໍ* |
| ຢຽວວ່າ ຈັກໄປເປັນພື້ນ | ສົມຄວາມອັນປາກກ່າວ |
| ຄາວເມື່ອ ເວົ້າແຕ່ບ້ານ | ຄືແທ້ກໍຈິ່ງຈຳ ດອກນາ |
| ຄັນວ່າ ບໍ່ມີສົມຄວາມເວົ້າ | ອິດໂຍມຄຳຕັ້ງແຕ່ກ່ອນ ເສັຽແມ |
| ຢ່າໃຫ້ ເສັຽມາກລົ້ນ | ເຂົ້າຂອງແທ້ແຫ່ງເຮົາ ນັ້ນແມ |
| *ອັນນີ້ ທຽບດັ່ງເອົາຫີນກ້ອນ* | *ແຂວນຄໍເປັນປ່ອມ ທອຍນັ້ນ* |
| *ຍາມເມື່ອ ຖີ້ມໃສ່ນ້ຳ* | *ຈົມປິ້ງກໍບໍ່ເຫັນ ເຈົ້າເອີຍ* |
| ເປັນດັ່ງ ບາຍໂຍນຖິ້ມ | ລົງໃນນັດທີໃຫຍ່ ພາຍພຸ້ນ |
| ຕັ້ງວ່າ ບໍ່ມີເຫລືອເສດຄ້າງ | ບູງຊ້າຕ່າວຄືນ ນັ້ນແລ້ວ |
| >> ບັດນີ້ ຈັກກ່າວເຖິງຣາຊາເຈົ້າ | ປັນຈານະຄອນຣາດ ກ່ອນແລ້ວ |
| ພຣະກໍ ມັກໃຄ່ມາຜາບມ້າງ | ທະວາຣີໃຫ້ສ່ອຍສິນ ວ່າດາຍ |
| ບັດນີ້ ກູຈັກຕັດຫົວເຈົ້າ | ທະວາຣະດີມ້າງແປ່ ເສັຽແລ້ວ |
| ຝູງໝູ່ ເມືອງມິ່ງບ້ານ | ຊິຈຳໃຫ້ສ່ອຍໄຮ ແທ້ດາຍ |
| ເມື່ອນັ້ນ ພຣະຍາຈິ່ງບົນບອກໃຫ້ | ຂຸນໃຫຍ່ມາໂຮມ |
| ທັງເລົ່າ ເຕີນໂຍທາ | ຂູ່ພາຍມີຊ້າ |
| ເຂົາກໍ ໂດຍກະສັດໄທ້ | ມາໂຮມທຸກໝູ່ |
| ພຣະກໍ ບົນບອກໃຫ້ | ຈິ່ງແຈ້ງຂູ່ອັນ |
| ບັດນີ້ ສູຈິ່ງເຮວພະລັນຟ້າວ | ໂດຍກູປົງອາດ ຍາເຖິ້ນ |
| ແຕ່ນັ້ນ ຂຸນໃຫຍ່ຜູ້ | ທູນແລ້ວແຕ່ງດາ |

ອັນວ່າ ພົນເພັງລົ້ນ ມາມວນຄຸ້ມຄັ່ງ
ໄຫລຫລັ່ງລົ້ນ ໂຮມເຂົ້າສູ່ເມືອງ
ແລ້ວເລົ່າ ໄປບໍ່ຊ້າ ຫາໂຊກຍາມດີ
ປະຄືໄຊໄກວ ກ່ອນອວນພົນລ້ານ

ຜໍ່ດູ ພົນມາກລົ້ນ ຄັບທົ່ງສົນສົນ ພຸ້ນເຢີ
ກຸນຊະໂຣຜາຍ ກ່ອນນຳແນວໜ້າ
ຝູງໝູ່ ອາສະໄນມ້າ ນຳຫລັງຖັນຖີ່
ຮີ່ນຮີ່ນເຕັ້ນ ສຽງຮ້ອງສນັ່ນເມືອງ

ຜໍ່ເຫັນ ທຸງແດງຊ້ອງຊໍ່ຕັ້ງ ເປື້ອງປີ່ນລົມໄກວ
ນຳຂະບວນໄປ ກ່ອນຍອດເມືອງພຣະອົງເຈົ້າ
ທົມທົມເຂົ້າ ໄພຂວາງຫລາຍຍ່ານ
ມື້ສີບມື້ ຫລາຍດ້າວດ່ານດົງ

ຕັ້ງຫາກ ຫລາຍວັນໄດ້ ຫລາຍຄືນມີມາກ
ກໍຈິ່ງ ຮອດເທດທ້າວ ເມືອງກວ້າງແຫ່ງທະວາ
ເມື່ອນັ້ນ ໄທທະວາຣີຫ້ອງ ເຫັນຄົນຫລາກຕ່າງ
ຮູ້ວ່າ ລຸກແຕ່ແຄວ້ນ ແດນກວ້າງແຫ່ງໃດ ນີ້ເດ

ຮອຍວ່າ ເສິກຕ່າງດ້າວ ດູຫລາກບໍ່ເຄີຍເຫັນ
ຫລືວ່າ ເຂົາຫາກປອງສົງຄາມ ຍາດຊີງເມືອງບ້ານ
ຄວນທີ່ ເມືອທູນໄຫວ້ ພຣະຍາຫລວງເຮວຣີບ
ເກງວ່າ ມານຕ່າງບ້ານ ຫລອນເຂົ້າຍ່ຳຍີ ບໍ່ຢ່າແລ້ວ

ຄ້ອມວ່າ ເຂົາກ່າວແລ້ວ ເຮວຣີບພະລັນໄປ
ລີວລີວເຖິງ ຮອດໂຮງພາຍພຸ້ນ
ເຂົາກໍ ເມືອທູນໄຫວ້ ຣາຊາພຣະຍາໃຫຍ່
ກົ້ມຂາບນ້ອມ ຖວາຍເຈົ້າຊູ່ອັນ

ອັນນີ້ ຄືດັ່ງເສິກໃຫຍ່ກ້ຳ ເມືອງໃດມາຮອດ ເຮົານີ້
ຮອຍຈັກ ມາແປ່ມ້າງ ເມືອງບ້ານແຫ່ງເຮົາ ບໍ່ຢ່າແລ້ວ

ຕັ້ງຫາກ ຫລາຍເຫລືອລົ້ນ ພົນເກນນັບໂກດ
ຮອຍທີ່ ແມ່ນເສິກຈາກຕ່າງບ້ານ ຈິງແທ້ບໍ່ສົງ ພຣະເອີຍ

ເມື່ອນັ້ນ ພຣະຍາຫລວງເຈົ້າ ຕົກໃຈຟ້າວຟັ່ງ
ເກງຈັກ ເສັຽແຫ່ງຫ້ອງ ເມືອງບ້ານແຫ່ງຕົນ ທັ້ນແລ້ວ

ພຣະຈິ່ງ ເຕີນເຂົາຕີຍັງຄ້ອງ ຄູນເມືອງໜ່ວຍໃຫຍ່
ສຽງສນັ່ນພົ້ນ ຂຸນທ້າວຫລັ່ງມາ
ເມື່ອນັ້ນ ແສນເມືອງຜູ້ ວັນທາທູນບາດ
ຈັກວ່າ ເປັນເຫດຮ້ອນ ການບ້ານເຍື່ອງໃດ ພຣະເອີຍ

ແຕ່ນັ້ນ ພຣະບໍ່ຊ້າ ຈາຕໍ່ແສນເມືອງ
ບັດນີ້ ເສິກເມືອງໃດ ລ່ວງມາເຖິງພີ້
ຮອຍຈັກ ມາແປ່ມ້າງ ເມືອງເຮົາຊີງຍາດ
ຫລືຈັກ ມາຂາບກົ້ມ ເຮົາແທ້ສ່ວຍໄຮ ບໍ່ຮູ້

ແຕ່ນັ້ນ ຈອມເມືອງທ້າວ ປຸນແປງຕົກແຕ່ງ
ຢ່າໃຫ້ ໃຜລ່ວງເຂົ້າ ເມືອງບ້ານແຫ່ງເຮົາ ທ່ານເອີຍ
ເມື່ອນັ້ນ ຈອມເມືອງຕ້ານ ຄວາມແຂງສຸດທີ່ຍິ່ງ
ຂ້າກໍ ບໍ່ໃຫ້ຢຸດຢ່ອນຢ້ານ ສັງແທ້ທໍ່ໃຍ ພຣະເອີຍ

ແນມທໍ່ ພຣະໂຜດໃຫ້ ປົງອາດຍາຕັດ ທ່ຽວເຖີ້ນ
ຂ້າຈັກ ໄປສົງຄາມ ຕໍ່ເຂົາຕາມຖ້ອຍ
ແຕ່ນັ້ນ ຣາຊາໃຫ້ ດາດີຕົກແຕ່ງ
ອັນວ່າ ຝູງໄພ່ນ້ອຍ ຫລາຍບ້ານຮິບໂຮມ ເຮວເຖີ້ນ

ກັບທັງ ຊ້າງແລະມ້າ ມາມາກເຫລືອຫລາຍ
ຝູງໝູ່ ໄປທາງຕີນ ອະເນການອງພົນລ້ານ
ຝູງໝູ່ ຄົນຫານໃຫ້ ໄປຕາມຂູ່ເຄື່ອງ
ໃຫ້ຖື ຫອກດາບງ້າວ ປືນໜ້າຄົບຄົນ ທ່ຽວເຖີ້ນ

ແຕ່ນັ້ນ ພຣະກໍບົນບອກແຈ້ງ ໂດຍອາດຍາຕັດ
ຄັນວ່າ ໃຜຜູ້ຍັງແຂງຂັດ ຂ້າຕາຍມໍຣະມ້ຽນ

แต่นั้น แสนเมืองก้า ธาชาบินบอก
อันว่า ຊຽງໝັ້ງນັ້ນ ຈອມເຈົ້າຊິໃຫ້ໄປ ແທ້ລື

ຫລືວ່າ ຈັກໃຫ້ລໍຢູ່ບ້ານ ເຝົ້າບາດຕາມຕີນ ພຣະນັ້ນ
ຂໍຈົ່ງ ກູນາຕັດ ສັ່ງເຕືອນຄໍາແຈ້ງ
ເມື່ອນັ້ນ ທະວາຣີທ້າວ ຮັບເພິງຄະນຶງມາກາ
ອັນວ່າ ຊຽງໝັ້ງນີ້ ຜຍາກ້າລື່ນປະມານ ແທ້ດາຍ

ຄວນທີ່ ໃຫ້ທ່ານໄປພີປອງດ້ວຍ ຕາມຜຍາຄຶດອອກ
ຍັງຈັກ ມີໄຊຜາບແພ້ ສັດຕູຢ້ານພ່າຍພັງ ບໍ່ຮູ້

ແຕ່ນັ້ນ ພຣະບາດເຈົ້າ ຈາຕໍ່ແສນເມືອງ
*ຄວນທີ່ ເຊີນຊຽງໄປ ກ່ອນພົບອວນໜ້າ*
*ແມ່ນວ່າ ຊຽງໝັ້ງເວົ້າ ອັນໃດຢ່າໃຫ້ລື່ນ ນັ້ນເນີ*
ໃຫ້ສູ ຈໍາຈີ່ຜຽນ ຄໍາເວົ້າສັ່ງການ ກູເນີ

ແຕ່ນັ້ນ ແສນເມືອງທູນບາດໄທ້ ຮອງຮັບໂດຍດອມ
ໃຜທ່ອນ ກາຍຄໍາສອນ ພຣະບາດເມືອງເປັນເຈົ້າ
ເມື່ອນັ້ນ ແສນເມືອງນ້ອມ ລາລົງເຮວຮີບ
ເມືອສູ່ຫ້ອງ ເຖິງຢ້າວແຕ່ງດາ

ບັດນີ້

ຈັກກ່າວ ເຖິງກະນິດຖາທ້າວ ຜຍາດີນ້ອງພຣະບາດ ກ່ອນແລ້ວ
ພຣະຍາ ກໍທາກທົດບວດໃຫ້ ວັນນັ້ນເລົ່າຂານ
ໃສ່ຊື່ວ່າ ຄໍາພີລັງເຈົ້າ ຣາຊະຄຣູອົງອາດ
ກໍເລົ່າ ຈໍາໂຈດຕໍ່ສັງຄະເຈົ້າ ເມືອງຕານີແພ້ພ່າຍພັງ

ກັບວ່າ ມີໄຊແພ້ ຣາຊະຄຣູເມືອງເພື່ອນ ເມື່ອໃດ
ເຈົ້າກໍ ເລົ່າສິກອອກແລ້ວ ສິນແກ້ວກໍເລົ່າປົງ ເຈົ້າເອີຍ
*ກໍບໍ່ ມີໃຜເອີ້ນ ເປັນຈານປານບໍ່ບວດ ອີ່ສັງແລ້ວ*
*ເຂົາເລົ່າ ສວ່າສວ່າເອີ້ນ ຊຽງໝັ້ງດັ່ງແຕ່ຫລັງ ນັ້ນແລ້ວ*

ກໍທໍ່ ເນົາຢູ່ຫ້ອງ ເຮືອນຕົນຍູທ່າງທ່ຽວ
ຊົມສເນຫາ ຊື່ນຊ້ອຍ ເຝືອຝັ້ນຊູ່ວັນ ແທ້ແລ້ວ
ນັບແຕ່ ສເນຫາຊູ້ ສາວຮາມແມ່ຮ້າງຖ່າວ
ເຂົາກໍ ດັ່ນດັ່ນດົ້ນ ດອນເຈົ້າຊູ່ຄົນ ບໍ່ຢ່າແລ້ວ

ຕັ້ງຕໍ່ ຫວັງເປັນທີ່ຮັກເຈົ້າ ດອມຍອດຊາຍຊຽງ ແທ້ແລ້ວ
ຊູ່ຄົນ ໝາຍປອງເອົາເປັນຜົວຂວັນ ຮ່ວມນອນຮຽງຊ້ອນ
ເຂົາກໍ ລຽນລຽນກັ້ນ ໃຈກະສັນອົກສັ່ນ ຊິຕາຍແລ້ວ
ຈິງໃຈ ຫວັງຮ່ວມຫ້ອງ ດອນເຈົ້າອ້າຍບ່າວຊຽງ

*ຄືດັ່ງ ບຸນເປັນບ້າ ແລງງ່າຍປະເປົ່າ*
*ແມ່ນບໍ່ກິນ ເຂົ້ານ້ຳ ເຫັນໜ້າກໍອີ່ມເລີງ ເຈົ້າເອີຍ*

ນັບແຕ່ ສິກອອກແລ້ວ ກໍອ້ອຍອິ່ນດອນສາວ
ຍັງໄປ່ ທັນທຽວຫາ ພີ່ພຣະຍາອົງອ້າຍ
ນານແລ້ວ ຍັງບໍ່ເມືອທົນຫ້ອງ ທໍຄຳສັກເທື່ອ
ບັດນີ້ ການເຫດຮ້ອນ ພຣະຍາໃຊ້ທ່ຽວທັນ

ກໍເລົ່າ ໂດຍຄຳເຈົ້າ ເມືອພະລັນເຮວຮອດ
ກົ້ມຂາບໄຫວ້ ທູນແລ້ວເລົ່າຖາມ
ບັດນີ້ ເໜືອຫົວເຈົ້າ ທັນມາເຮບຮີບ
ຈັກວ່າ ເປັນເຫດຮ້ອນ ການເຈົ້າເຍື່ອງໃດ ພຣະເອີຍ

ແຕ່ນັ້ນ ພຣະກໍເລົ່າພາກໃຫ້ ເມືອງອື່ນແດນໄກ
ນຳທັບ ຄຸງເມືອງເຮົາ ໄພ່ພົນຫລາຍລົ້ນ
ອາດມາ ທຳສົງຄາມມ້າງ ເມືອງເຮົາມຸດມອດ ເສັຽແລ້ວ
*ບັດນີ້ ຊຽງຢ່າໄດ້ຢູ່ຊ້າ ໄປຖ້ອນກ່ອນພົນ ທ່ຽວເຖີ້ນ*

ແຕ່ນັ້ນ ຊຽງກໍໂດຍຄຳເຈົ້າ ເຮວຮີບລາລົງ
ໃນໃຈຄຶດ ຊິປາບມານມາມ້າງ
ຄາວນີ້ ບໍ່ແມ່ນການພັນທ້າ ຊິງຜຍາລາຍລ່ຽມ ຫຍັງແລ້ວ
ຕັ້ງແມ່ນ ໃຊ້ຫອກປືນດາບພ້າ ຊິງຂ້າຍາດເມືອງ

\>> ຊຽງກໍຈຶ່ງ ບາຍມີດພ້າ ໄປສູ່*ອະຣັນຍາ*
มันกํ แยງไพຂວາງ ຮີບຟັນເອົາໄມ້
ພໍປະມານໄດ້ ເຊົາແຮງມັດແບກ
ມັນກໍ ມາບໍ່ຊ້າ ເຖິງບ້ານຄ່ຳຈອນ

ຊຽງຈຶ່ງ ກິນເຂົ້ານ້ຳ ຕາມຮີດຄອງແລງ
ເຖິງເມື່ອ ຍາມກອງເດິກ ກໍເລົ່ານອນເຢັນປີ້ງ
ຝູງໝູ່ ຊາວເມືອງພ້ອມ ພາກັນນອນເນັ່ງ
ໃຜກໍ ບໍ່ອາດຮູ້ ດີຮ້າຍທີ່ໃຍ ແທ້ດາຍ

ຄັນວ່າ ເຖິງຍາມແລ້ວ ກອງງາຍຊຽງຕື່ນ
ມັນກໍ ລຸກສວ່າຍໜ້າ ອີງເທີ້ງຢູ່ສະບາຍ ແທ້ແລ້ວ

ແຕ່ນັ້ນ ຊຽງກໍຄວນຄຶດຖ້ອນ ຄຳອາດຍາປີງ ມານັ້ນ
ຄືວ່າ ວາງຄຳໃນ ຫລອກກູໄປຂ້າ
ບັດນີ້ ຣາຊາໄທ້ ພຣະຍາຫລວງອີງອາດ ທີ່ພຸ້ນ
ຢາກໃຫ້ ກູມິ່ງມ້ຽນ ຕາຍແທ້ມອດຊີວັງ ບໍ່ຢ່າແລ້ວ

*ຍັງວ່າ ເປັນນ້ອງແທ້ ສັງອອກສິງຄາມ ດັ່ງນີ້*
*ບໍ່ໃຊ່ ແນວບານໝາ ຊິບອກໄປຕາຍແທ້*
ຮອຍທີ່ ເຂົາຫາກຊັງກູແລ້ວ ຜຍາດີຢ້ານລື່ນ ຈິງດາຍ
ເຂົາຈຶ່ງ ຈຳໃຫ້ໄປມອດມ້ຽນ ຄາວນີ້ບໍ່ສົງ ແທ້ແລ້ວ

ບັດນີ້ ກູຈັກຜິແຕ່ງຕັ້ງ ຕາມແຫ່ງຄວາມຄຶດ ກ່ອນຖ້ອນ
ອັນວ່າ ຜຍາກູກໍຫາກຍັງເຕັມພູມ ກໍແຕ່ລືບັກຊຽງໝ້ຽງ

ເມື່ອນັ້ນ ຊຽງກໍອະທິບາຍຮູ້ ສານກວຍໜ່ວຍໃຫຍ່
ມັນເລົ່າ ຈັກຜ່າໄມ້ ເຫລົາແລ້ວເລົ່າສານ
ແຕ່ນັ້ນ ຊຽງກໍໝອບໝອບກົ້ມ ສານກວຍນັ້ນຢູ່
ພຣະຍາ ເຮວຮີບໃຊ້ ທັນທ້າວທ່ານຊຽງ

---

ອະຣັນຍາ (ປລ ອະຣັນຍະ) = ປ່າໄມ້ (ອະຣັນຍິກ = ນາຍພານ, ຜູ້ຖ່ຽວໃນປ່າ, ພຣະກຳມະຖານ)

แต่นั้น เຂົາກໍໂດຍກະສັດເຈົ້າ ເຣວພະລັນໄປຮອດ
ເຖິງທີ່ ຊຽງໝັ້ງແລ້ວ ຈາເວົ້າບອກບິນ
ບັດນີ້ ຈອມຫົວເຈົ້າ ທັນຊຽງເມືອຫ່ຽວ ຈິງດາຍ
ຢ້ານທີ່ ເສິກເພື່ອນພຸ້ນ ຊິຈິນເຂົ້າຮອດເມືອງ ບໍ່ຮູ້

ແຕ່ນັ້ນ ຊຽງໝັ້ງຕ້ານ ຈາຕໍ່ທູຕາ
ຂ້ອຍກໍ ຍັງສານກວຍ ໄປ່ມີທັນແລ້ວ
ຊາດທີ່ ຄືນຜຍາດີນີ້ ກວຍຍັງດາງໃຫຍ່ ຈິງດາຍ
ຕັ້ງຫາກ ພໍແປດອູ້ມ ຕົວຂ້ອຍຫ່ຽງຈິງ ເຈົ້າເອີຍ

ເຈົ້າຄ່ອຍ ຄືນເມືອໄຫວ້ ພຣະຍາໃຫຍ່ຈອມເມືອງ ກ່ອນຖ້ອນ
ຂໍໃຫ້ ອີງເໜືອຫົວ ໂຜດຜາຍຍາມນີ້
*ພໍແຕ່ ສານກວຍແລ້ວ ຊິເມືອທູນພຣະບາດ ກ້ຳພຸ້ນ*
*ຕາບໃດ ກວຍແປດອູ້ມບໍ່ແລ້ວ ຂໍເຍື້ອນຊົ່ວຍາມ ແດ່ຖ້ອນ*

ເມື່ອນັ້ນ ທູຕາໃຊ້ ຄືນເມືອທູນພຣະບາດ
ຊຽງວ່າ ກວຍບໍ່ແລ້ວ ຂໍເຈົ້າໂຜດຜາຍ ວ່າດາຍ

ເຈົ້າເລົ່າ ຟັງຄວາມຖ້ອຍ ທູຕາທູນຄອບ
ພຣະກໍ ຜາຍໂຜດໃຫ້ ມັນແທ້ຊູ່ອັນ ນັ້ນແລ້ວ
ຄັນວ່າ ເຫິງນານລ້ຳ ໄປທັນໃຊ້ຮອດ
ຊຽງໝັ້ງ ຜັດກ່າວຕ້ານ ຄືນໃຊ້ດັ່ງຫລັງ ນັ້ນແລ້ວ

ສູເລົ່າ ເລິງເລິງໃຊ້ ມາທັນເປັນອັນຮີບ ເຣວນໍ
ຍັງວ່າ ກວຍບໍ່ແລ້ວ ມາເວົ້າຜ່າຄວາມ ແທ້ນີ້
ແສນວ່າ ມີການຮ້ອນ ປານໃດກໍຕາມຊ່າງ
ຄັນວ່າ ກວຍຫາກແລ້ວ ກໍໂດຍເຈົ້າບໍ່ຂືນ ດອກນາ

*ຊື່ວ່າ ທັມມະດາໄດ້ ເປັນກະນິດຖານ້ອງພຣະຣາດ*
*ສານກວຍໃຫຍ່ ພໍແປດອູ້ມ ປານນີ້ກໍຈຶ່ງສິມ ແທ້ດາຍ*
*ເຮົານີ້ ທີ່ວ່າເປັນນາມມະກອນເຊື້ອ ພຣະຍາເມືອງຍົດໃຫຍ່ ຈິງດາຍ*
*ກໍຈຶ່ງໄດ້ ສານກວຍພໍແປດອູ້ມ ເອົາຫ້າງໃສ່ຜຍາ ທ່ານເອີຍ*

*ຜິວ່າ　ເຮົາຫາກເປັນຄົນນ້ອຍ　ຊາວເມືອງຊາດຕ່ຳ*
*ຜຍາບໍ່ດີດີ້ດີ້　ກໍກວຍນ້ອຍດັ່ງຊູ່ຄົນ ນັ້ນແລ້ວ*
*ອັນນີ້　ເຮົາຫາກເຮັດຕາມເຊື້ອ　ນານມະກອນຜູ້ໃຫຍ່ ເຈົ້າເອີຍ*
*ການໂຕ ກໍຫາການມາຮອດແລ້ວ　ສັງມາຫຍຸ້ງຍາກແກ່ເຂົາ ແທ້ນໍ*

ຜິວ່າ　ທຳຄືຝູງໄພ່ນ້ອຍ　ກວຍຫາກທັມມະດາ
ບໍ່ດົນ　ພໍພຽງຄາວ　ກໍສານກວຍແລ້ວ
ສູຈົ່ງ　ເມືອທູນໄທວ້　ຣາຊາແວນທ່ຽວ ຈິງເຖີ້ນ
ປານນີ້　ພຣະບາດເຈົ້າ　ຍັງຖ້າຢູ່ຄອງ ບໍ່ຮູ້

ເມື່ອນັ້ນ ທູຕາໃຊ້　ເຮວພະລັນເມືອຄອບ
ຊຽງວ່າ ກວຍໃຫຍ່ຍັງບໍ່ແລ້ວ　ຍາຟ້າວເພື່ອນໄປ *ວ່າອັນ*

ຂາຫາກ ຈັກໂດຍບາດເຈົ້າ　ຖ້າທີ່ທັນດຽວ ວ່າດາຍ
ບໍ່ໃຫ້　ເຄືອງຈອມທົວ　ຫາກຊິໄປຕົງໄດ້
*ມັນວ່າ　ທັມມະດາໄດ້　ເປັນກະບິດຖານ້ອງພຣະບາດ*
*ມັນຈິ່ງ　ສານກວຍໃຫຍ່ແປດອູ້ມ　ຜຍານັ້ນຈິ່ງໃສ່ເຕັມ ວ່າດາຍ*

ແລ້ວຈັກ ຄອຍໄປກ້ຳ　ສິງຄາມດອມເພື່ອນ
ຊຽງຫາກ ເວົ້າທີ່ນັ້ນ　ກວຍແລ້ວຈິ່ງຊິໂດຍ
ເມື່ອນັ້ນ　ຣາຊາເຈົ້າ　ໄດ້ຍິນຄວາມກວຍໃຫຍ່
ເຈົ້າກໍ　ຄຶດຄັ່ງແຄ້ນ　ແຄນແລ້ວກໍເລົ່າທົວ ແທ້ດາຍ

ແຕ່ນັ້ນ　ຣາຊາທ້າວ　ພຣະຍາເມືອງເລີຍຈົ່ມ
ພຣະກໍ　ຄຶດຄຽດໃຫ້　ຊຽງໝັ້ງບໍ່ວາຍ ນັ້ນແລ້ວ
ຍັງວ່າ　ສັດຕູເຂົ້າ　ມາຈົນໃກ້ເຂດ ຈິງດາຍ
ເຮັດສັງ ມາບໍ່ຮູ້ໃຫ້ແລ້ວ　ເທິງອ້າງຕັ້ງແຕ່ກວຍ ນັ້ນເດ

ນັບແຕ່　ກູທັນໃຊ້　ໄປມາມັນຫລາຍເລົ່າ ເລີງແລ້ວ
ມັນກໍ　ເວົ້າແຕ່ກວຍບໍ່ແລ້ວ　ເມືອໜ້າສືບໄປ ນີ້ເດ
*ໂອນໍ　ຮອຍວ່າທະວາຣິກວ້າງ　ເມືອງກູຈະເປັນສ່ວຍ ເສັຽນໍ*
*ມັນຈັກ　ດັບຄອບບັກຂີ້ຮ້າຍ　ຊິພອຍຊ້າຄອບກວຍ ນັ້ນແລ້ວ*

ມັນຕັ້ງ ເຮັດລີ່ນລົ້ນ　　ເຫລືອຮີດຄອງກວຍ ແທ້ດາຍ
ຈັກວ່າ ມັນຊິຄອນເອົາໄປ　　ໃສ່ອີ່ຫຍັງເປັນກະດໍ້
ກູຫາກ ໂຮມຄົນເຕົ້າ　　ເຕັມເມືອງເຄົ້າຄື່ນ
ເຂົາຢາກໄປ ກໍຫາກໄປບໍ່ໄດ້　　ຊິຄອຍຖ້າແຕ່ບັກຊຽງ ນັ້ນດາຍ

ແຕ່ນັ້ນ ຊຽງໝ້ຽງກົ້ນ　　ທັງຢືນແລ້ວນັ່ງ
ມັນກໍ ວຽນຄອບໄດ້　　ຫລາຍເສັ້ນໃຫຍ່ສູງ

ຈັກຕອກ ທັງກໍ່ກົ້ນ　　ແລ້ວເລົ່າທັງສານ ດັ່ງນັ້ນ
ຕັ້ງຫາກ ພໍສາມວັນ　　ກໍຈຶ່ງບໍຣະບວນແລ້ວ
ອັນວ່າ ຄານຍາວໄດ້　　ສາມວາປາຍສອກ
ລວງໃຫຍ່ດ້າມ　　ປະມານແທ້ທໍ່ຂາ

ຊຽງຈຶ່ງ ສິບແປງແລ້ວ　　ເຣວພະລັນຕັດອອກ
ແລ້ວກໍ ທໍ່ເຂົ້າທໍ່ກໍ່າປັ້ນ　　ວາງໄວ້ໃສ່ໃນ
*ບັດນີ້ ກູຈັກໄປເພນ້າງ*　　*ສົງຄາມຮົບຕໍ່ ກັນແລ້ວ*
*ຄັນວ່າ ເຂົ້າຖົງຫາກໝົດທໍ່ນີ້*　　*ກູທ້າວຊິຕ່າວຄືນ ດອກແລ້ວ*

ມາຮ່າວ ຟ້າວເພິງຍ້ານ　　ເສິກເສືອເມືອງເພື່ອນ ດັ່ງນີ້
ອິດພໍ ໃຫ້ເຂົາງ້າງແຜ່ນຟ້າ　　ດິນໄງ້ຫອບຜາ ເທາະນາ
ຄັນວ່າ ຫາກບໍ່ມີໃຜພ້ອມ　　ຄົນດຽວຊິສູ້ເບິ່ງ ກ່ອນແລ້ວ
ຄັນວ່າ ມັນຫາກໝົດຊູ່ພື້ນ　　ບັກຊຽງໝ້ຽງກໍຢ່າຫວັງ ເທາະເນີ

ຄ້ອມວ່າ ພໍຍາມແລ້ວ　　ຊຽງເປືອງຍ້າຍອອກ
ກວຍໃຫຍ່ພ້ອມ　　ຄອນໄດ້ກໍເລົ່າໄປ
ມັນກໍ ແຍງທາງເຄົ້າ　　ຕາມທາງໄວ່ໄວ່
ຊຽງກໍ ໄປຜ່ານບ້ານ　　ເຂົາຫ້ວງນີ້ນັນ

ກໍຫາກ ດູໃຫຍ່ລົ້ນ　　ກາຍຮີດຄອງກວຍ ແທ້ນໍ
ອັນນີ້ ບໍ່ໃຊ່ຄົນເມືອງເຮົາ　　ແມ່ນຜີອີ່ຕາກົ້ນ
ຊຽງກໍ ຍັງເລົ່າເດີນເມືອໜ້າ　　ໂຫລງຫລີ່ເຫລັງລີ່
ຝູງໝູ່ ເດັກໜຸ່ມນ້ອຍ　　ກົວຢ້ານພ່າຍພັງ

*ລາງພ່ອງລົ້ມ ລາງພ່ອງປົບໜີ*
*ລາງພ່ອງ ແຊວແຊວສຽງ ອີ່ແມ່ເອີຍເອົາຂ້ອຍ*
*ລາງພ່ອງໄຫ້ ລາງເລົ່າເລີຍຫົວ ກໍມີ*
*ລາງພ່ອງ ເຊຊວນປົບ ໃສ່ໜາມຄາຮົ້ວ*
*ລາງພ່ອງ ປົບຕາຍເຕັ້ນ ຕຳກັບໜ້າຜາກແຕກ ກໍມີ*
*ແຂ້ວກໍ ຫັກຫລ່ອນແທ້ ໂລຫິດຍ້ອຍຫລັ່ງໄຫລ ແທ້ແລ້ວ*

*ລາງພ່ອງ ບືນຂຶ້ນໄມ້ ກິນໝູ່ຜາລາ*
*ບໍ່ທັນ ລົງທາງກົກ ກໍເລົ່າໂຕນລົງແທ້*
*ລາງພ່ອງຂຶ້ນ ຄັນໄດເຮືອນຕາບໍ່ເບິ່ງ*
*ທັງເລົ່າ ຫລຽວເຫລືອດຢ້ຽມ ຊຽງໝັ້ງກໍເກືອກລົງ*

*ລາງພ່ອງ ແຊວແຊວຮ້ອງ ບິນນຳໄປເບິ່ງ ກໍມີ*
*ລາງພ່ອງ ໄປກ່າວເວົ້າ ໃຍຫລີ້ນວ່າແມ່ນໂລງ ແທ້ດາຍ*

ແຕ່ນັ້ນ ຊຽງໝັ້ງເຕັ້ນ ຄອນໄປທັງຕື່ນ
ຄືດັ່ງ ຄຸນ້ອຍນ້ອຍ ລອຍຫລີ້ນເກືອກຕົມ ນັ້ນແລ້ວ

ແມ່ນວ່າ ຝູງໝູ່ເຖົ້າ ນ້ອຍໜຸ່ມທັງຫລາຍ ກໍດີ
ກໍຫາກ ແຊວແຊວສຽງ ເບິ່ງຊຽງຄອນຊ້າ
ມັນເລົ່າ ອິດໃຈແທ້ ຄອນໄປອືງລື່ງ
ຄືດັ່ງ ຮົນໃຫຍ່ຕັ້ງ ຫລັງຊ້າງຈິ່ງຊິສົມ ເຈົ້າເອີຍ

ແຕ່ນັ້ນ ຊຽງກໍກາຍໄປໜ້າ ຈາຟູມທັງຈົ່ມ
ກະກຸນວ່າ ຜຍາທໍ່ນີ້ ກໍມາຊ້າຍາກທາງ ແທ້ນໍ
ຊາວ່າ ກູຫາກເອົາໄປຫລາຍກວຍແທ້ ຕົວຕາຍເສັ້ຽກ່ອນ ຈິງດາຍ
ອັນວ່າ ຜຍາຂີ້ຮ້າຍ ສັງມາລ້ຽວຂ້າໂຕ ນີ້ເດ

ແຕ່ນັ້ນ ຊຽງບໍ່ຊ້າ ເມືອຮອດແສນເມືອງ
ມັນຈິ່ງ ເຕີນພົນຫລວງ ປ່າວໄປທັງຟ້າວ
ສ່ວນວ່າ ຊຽງຫລວງເຈົ້າ ກໍຄອນກວຍໄປກ່ອນ
ເຖິງບ່ອນ ທາງຄັບນ້ອຍ ກວຍຂວ້າງຄັ່ງຕັນ

เผาะว่า กวยมันพ่อยใหย่ล้ิ้น ตันปองปักตูหวาน เจ้าเฮีย
ตั้งหาก ปูลูกวย ยู่กางตันไว้
อันว่า ฝูงหมู่คืนทังช้าง อํกันคับคั่ง
เขิากํ ไปบ่ได้ คาซ้าพ่อยหลวง นั้นแล้ว

ตั้งหาก มัวเมิากุ้ม จินกันยัดแยด
เขิาหาก มัวแอดล้อม สองข้างกะต่ากวย

ผ่ดู สะพั่งช้อง ช้องซั่เหลือหลาย พุ้นเยิ
เขิากํ หืมหืมมัน สว่าแชวทังร้อง
ยังว่า มีเหดร้อน มาปะจินเสิกเผื่อน นั้นลิ
สังบ่ ไปปาบเปื้อง ยังมาซ้าท่องหาง นี้เด

เมื่อนั้น ไทหลั่งเอิ้น จัดไปท่ยวท่ยว นี้เถิ้น
ยังว่า กานวยกร้อน ชิมาซ้ายู่สัง นี้เด

ลางพ่อง เอิ้นรยกร้อง ทังด่าจัดไป กํมี
ลางพ่อง เสินเสินลัด แล่นไปทังฟ้าว
บ่รู้ว่า เสิกเสือร้าย มาปะจินดิ้นรอด เมืองลิ
สังมา ลํเชื่องซ้า ไปพ้าบ่ยากเปือง นั้นเด

แต่นั้น หัวพึนเอิ้น ปะสิงหาสยงสิ่ง คืนนั้น
ยังว่า กวยเป่าเป้ บักชยงหม้ยงอั่งตัน นั้นเด
สูสัง มาดินถ้อย จัดไปว่าใหัท่ยว สันนี้
ตาสู บ่ล่ำยั้ยม กวยห้าวท่านชยง นี้เด

*แต่นั้น เขิากํแชวแชวพ้อม เอิากันโรมด่า ชยงนั้น*
*อันว่า บักขี้ร้าย กํเหลือล้ินแต่กวย แห้นํ*

อันว่า กวยมันใหย่เอ้าเป้า สังบ่ถ่อยสะแดงไป นั้นเด
อันนี้ ตั้งหากปูลูตัน อั่งหางหวานกว้าง
บัดนี้ เริาจั่งเอิากันพ้อม ฟันเส้ยกับบ่อน จิงถ้อน
ใหัมัน ดับซาดนี้ ตายซ้ำคอบกวย แห้ดาย

ເຂົາກໍ ນາບດ່າປ້ອຍ    ບອກແຍກສະແດງກວຍ ກໍມີ
ໃຫ້ມຶງ ຕາຍຄາຫວານ    ຢ່າໃຫ້ໄປດອມຖ້ອນ
ຜີວ່າ ບໍ່ແມ່ນຈອມຫົວເຈົ້າ    ປຶງຄວາມຊີ້ສັ່ງ ມຶງດາຍ
ກູຈັກ ຟັນມອດມ້ຽນ    ໃຫ້ຕາຍຊ້ຳຄອບກວຍ ບໍ່ຢ່າແລ້ວ

ລາງພ່ອງ ຈັບພຸ້ນພີ້    ທີ້ນແກ່ດຶງຄືນ ກໍມີ
ລາງພ່ອງ ຕີນທຳກວຍ    ຊຸກດັນໄປໜ້າ
ແຕ່ນັ້ນ ຊຽງກໍໂອຍໂອຍຮ້ອງ    ຊວນເຊລົ້ມທ່າວ ໄປແລ້ວ
*ສັງມາ ເຮັດດັ່ງນີ້*    *ດຶງໜ້າພັດຈ່ອງຫລັງ ນັ້ນເດ*

ເຂົາເລົ່າ ແຊວແຊວເວົ້າ    ຫົວຊົມທັງຄຽດ
ຊີກລຶກໜ້າ    ດຶງທີ້ນແບກກວຍ
ຮູ້ວ່າ ຄັບຄາແທ້    ໃຫ້ແວໄປທາງອື່ນ ຊຽງເອີຍ
ບັດນີ້ ມຶງຫາກຄາຢູ່ນີ້    ຜອງເທົ້າຊົ່ວຊີວັງ ທັ້ນຖ້ອນ

ເມື່ອນັ້ນ ຊຽງດຶງທີ້ນ    ເຂົາຊ້ຳເລົ່າດຶງຄືນ
ມັນຢາກຄືນ ກໍຍັງຄາ    ບໍ່ທ່ອນທັນໄປໜ້າ
ຄອບວ່າ ກວຍຫລວງຂວ້າງ    ຄາປັກຕູຕັນຢູ່ ຈິງແລ້ວ
ເຫລືອທີ່ ດັນຊຸກທີ້ນ    ດຶງຍູ້ກໍບໍ່ຖອງ ແທ້ດາຍ

ແຕ່ນັ້ນ ທັງຫລາຍທີ້ນ    ດຶງກວຍຍູ້ຊ່ອຍ
ກວຍຈິ່ງ ຫລຸດອອກມົ້ນ    ປັກຕູຕ້າຍ *ຈາກວຽງ* ແທ້ດາຍ
ເມື່ອນັ້ນ ເຂົາກໍເຊຊວນລົ້ມ    ເນືອງນອງຂົນໄຂວ່
ອັນວ່າ ຊຽງໝ້ຽງເຈົ້າ    ກໍເລີຍລົ້ມດັ່ງດຽວ

ເຂົາເລົ່າ ປຸກລຸກແລ້ວ    ຮ້ອງໂຫ່ນັນເນືອງ
ເຮົາກໍ ຈັກພາກັນມາຕາຍ    ຄອບກວຍບັກຊຽງໝ້ຽງ
ກໍບໍ່ ຫວັງເຫັນໜ້າ    ສິງຄາມດອມເພື່ອນ ເສັງແລ້ວ
ບາງພ່ອງ ໜ້າຜາກລ້ານ    ຫູດິນຊ້ຳເປີກໄປ

ລາງພ່ອງ ໂລຫິດຕັ້ງ    ແຂນຫັກເລືອດອອກ ກໍມີ
ລາງພ່ອງ ຕຳທັ່ງໄມ້    ຫົວໄຫ້ຍ່າວຍົມ

ລາງພ່ອງ ຊຸນສະດຸດຕ້ອງ ຫົວຕີນເລີຍແຕກ ກໍມີ
ລາງພ່ອງ ໜາມຖືກເນື້ອ ມີສຽ້ງສຽງບຄາ

ແຕ່ນັ້ນ ຊຽງກໍຜຸດລຸກແລ້ວ ຮ້ອງຢູ່ຄາງແຄມ
ແລ້ວເລົ່າ ຄອນກວຍໄປ ສູ່*ປັກຕູວຽງ*ກາວ້າງ
ເຂົາແຮ່ງ ຊຸກໃສ່ຊ້ຳ ທຳໄປຍູ້ແລ່ນ
ຊຽງກໍ ລຸກຍ່າງຍ້າຍ ພະລັນຟ້າວແລ່ນໄປ

ແລ້ວເລົ່າ ພະລາດລົ້ມ ກົ້ນຂີ້ທັ່ງທັງຢືນ
ກວາຍຊຽງ ສະເດັນໜີ ຈາກຕົວດູຮ້າຍ
ມັນກໍ ໂອຍໂອຍຮ້ອງ ທັງຄາງເຈັບປວດ
ຄືດັ່ງ ເປັນພະຍາດຮ້າຍ ຫົວຂວ້ຳໃສ່ດິນ

ຄຶດວ່າ ຈະໄປເຮວເສີກແທ້ ຕົວກູຈັກຕາຍກ່ອນ ເສັ່ຽນໍ
ໂອນໍ ສັງມາຟາງພະລາດລົ້ມ ແອວແທ້ງໂຄ່ນໂງ ນີ້ເດ

*ອັນວ່າ ວັດຖັງຜ້າ ຄຽນແອວຊຽງຫລຸດອອກ ເສັ່ຽແລ້ວ*
*ສອງມື ຄວາຈ່ອງໄວ້ ຜືນຜ້າກໍບໍ່ທັນ*
*ທັງເລົ່າ ປະປີດກົ້ນ ທັງຈ່າງມືບັງ*
*ສຽງແຊວແຊວ ສວ່າຂານຄືນທ້ອງ*
*ມັນກໍ ປະທຳເສັ່ຽຟ້າວ ໜີຄືນປີບພ່າຍ*
*ຊຽງບໍ່ມີແຜ່ນຕູ້ມ ມາຄຽນຫຸ້ມຫໍ່ໂຕ*

ແຕ່ນັ້ນ ທັງຫລາຍຫ້ວງ ທຳຊຽງຊີສວ່າ
ລາງພ່ອງ ຫົວຊື່ນຍ້ອງ ລາງຄືນຊ້ຳຄຽດເລີງ
ອັນວ່າ ໂຄ້ຍມັນນັ້ນ ຄືກັນກັບໜ້າຫັ່ງ
ຕັ້ງຫາກ ເປັນເພີ້ເຈີ້ ໂຄ້ຍແບ້ນຊວດປະມານ ແທ້ນໍ

ລາງພ່ອງ ຕົບກົ້ນໃຫ້ ທຳໂຄ້ຍໃຫ້ມ້ຽນແດ່ ຊຽງເອີຍ
ມັກຜອກ ຜາງໜ່າຍແທ້ ດູສົ້ມແສບຕາ ແທ້ແລ້ວ
ລາງພ່ອງ ຊີ້ຫອກໃຫ້ ຈາຍອກແທງທຳ ກໍມີ
ຊຽງກໍ ໂງເງຊັກ ຜ້າມາຮຳໄວ້

แต่นั้น ຊຽງຈຶ່ງເດົາດາມ້ງນ ທຳໂຄ້ຍໄວ້ແຈບ
ມັນກໍ ລຸກຂຶ້ນໄດ້ ຄອນກວຍແລ້ວເລົ່າໄປ
ຊຽງກໍ ອືອືຮ້ອງ ຄາງໄປທັງຈົ່ມ
ເໝືອນດັ່ງ ຄົນຂີ້ເຫລົ້າ ປາງນີ້ແມ່ນກູ ແລນໍ

ຄ້ອມວ່າ ພໍຄາວແລ້ວ ຊຽງເຖິງປັກຕູໃຫຍ່
ມັນເລົ່າ ເອົາກວຍໃຫຍ່ຂີ້ຮ້າຍ ຍໍຄ້າງໃສ່ຕັນ ນັ້ນແລ້ວ
ເມື່ອນັ້ນ ທັງຫລາຍຫ້ວງ ຈາກັນຊີສວ່າ
ບັດນີ້ ເຮົາຮີບມາແປ່ມ້າງ ກວຍຮ້າຍຍ່ຳໄປ ທ່ງວເຖີ້ນ

*ເມື່ອຈັກ ຄອງຢູ່ຖ້າ ກວຍຊຽງເໝືອນແຕ່ກ່ອນ ດັ່ງນັ້ນ*
*ຢ້ານວ່າ ເສິກລ່ວງເຂົ້າ ປະຈົບແພ້ບໍ່ທັນ ເຈົ້າເອີຍ*

ແຕ່ນັ້ນ ເຂົາກໍເອົາຫອກງ້າວ ຟັນຜ່າແຫງກວຍ
ລາງພ່ອງ ຍໍຕີນທຳ ດ່າຂວັນທັງປ້ອຍ
ຕັ້ງຫາກ ຮຸນແຮງແລ້ວ ເຮັດສັນໃດກໍຕັ້ງຢູ່
ເຫລືອທີ່ ເຂົາຫາກດຶງຍາດທີ້ນ ທໍໄດ້ກໍບໍ່ເໜັງ

*ກໍບໍ່ ຕິງຕິນແທ້ ສເມີຄືນຕາຍຢູ່ ຄານັ້ນ*
*ຊຽງກໍ ເອົາຫົວເມາະພື້ນ ກອງກົ້ນພາດກວຍ*
ແຕ່ນັ້ນ ແສນເມືອງຕ້ານ ຖແລງຄຳກອຍກ່າວ
ບັດນີ້ ຄວນທີ່ເຮົາຄືນເມືອໄຫວ້ທ້າວ ຈອມເຈົ້າພຣະຍອດເມືອງ

ເຫດວ່າ ຊຽງໝ້ຽງນີ້ ຍັງຂມ່ອມປິງຄວາມ ມັນແລ້ວ
ພຣະຫາກ ມີດວງແຂງ ໃສ່ຫົວມັນແທ້
*ເພື່ອວ່າ ເຮົາຈັກກາຍມັນໜີໄປໜ້າ ກໍກົວປຸນເປັນໂທດ*
*ຢ້ານວ່າ ພຣະບໍ່ລ້ຽງ ກໍຕາຍແທ້ຄອບມັນ ບໍ່ຮູ້*

ຄ້ອມວ່າ ຂຸນກ່າວແລ້ວ ເຣບຮີບພະລັນເມືອ
ເຖິງຣາຊາ ກ່າວກອນກອຍໄຫວ້
ບັດນີ້ ຄຳຝູງຂ້າ ທັງຫລາຍທູນບາດ ຈິງແລ້ວ
ແມ່ນວ່າ ຢາກໄປກໍໄປບໍ່ໄດ້ ຊຽງໝ້ຽງຢູ່ຕັນ ພຣະເອີຍ

ເພາະວ່າ ກວຍໃຫຍ່ລົ້ນ ເຫລືອຮີດຄອງເມືອງ
ມັນຫາກ ປູລູຄາ ປ່ອງປັກຕູຕັນໄວ້

ແມ່ນວ່າ ແສນສໍ່າທ້າວ ມ້າມິ່ງໂຍທາ ກໍດີ
ໃຜບໍ່ອາດ ຈັກກາຍປັກຕູຫລວງ ລ່ວງໄປບໍ່ມີໄດ້
ຂໍແກ່ ເໜືອຫົວເຈົ້າ ຄະນຶງໃຈຄຶດຮ່ໍາ ດູຖ້ອນ
ຢ້ານທີ່ ເສິກລ່ວງເຂົ້າ ມາໃກ້ຮອດເມືອງ ບໍ່ຮູ້

ແຕ່ນັ້ນ ທະວາຣີທ້າວ ຫົນຫວຍໃຈຈັກຂາດ
ເຈົ້າກໍ ຄຶດຄຽດຮ້າຍ ຂຶມໃຫ້ແກ່ຊຽງ
ບໍ່ຊ່າວ່າ ກູຈັກບາຍເອົາງ້າວ ຟັນຄໍສິນຂາດ ນັ້ນລີ
ແລ້ວຈຶ່ງ ເອົາຫົວມັນໄປສຽບໄວ້ ຫົນທາງກວ້າງແຫ່ງຄົນ ພຸ້ນຖ້ອນ

ໃຫ້ມັນ ຕາຍຄອບງ້າວ ດັບຊີ່ຊີວິດ ເສັ່ງນັ້ນ
ຜີຈັກ ຕາມໂກທາ ຟັກຍໍາສເມີກ້ອຍ
*ທີ່ວ່າ ປິຕາໄທ້ ພຣະຍາຫລວງສອນສັ່ງ ວັນນັ້ນ*
*ຄຶດເມື່ອ ພຣະພໍ່ເຈົ້າ ເອົາລ້ຽງພໍ່າກັນ ນັ້ນນາ*

ເມື່ອນັ້ນ ພຣະບາດເຈົ້າ ຕ້ານຕໍ່ແສນເມືອງ
ບັດນີ້ ທ່ານຈົ່ງໄປແວນເປືອງ ບອກມັນຄືນຖ້ອນ
ແຕ່ນັ້ນ ແສນເມືອງທ້າວ ວັນທາລາເລີກ
ເຣວຮີບ ໄປຮອດທ້າວ ຊຽງໝັ້ງບອກບົນ

ບັດນີ້ ຣາຊາໃຫ້ ມຶງຄືນໂດຍຮີບ ບັກຊຽງເອີຍ
ມຶງຢ່າ ໄດ້ຢູ່ຊ້າ ດຽວນີ້ທ່ຽວເປືອງ ວ່າດາຍ
ແຕ່ນັ້ນ ຊຽງກໍຟັງກອນຂໍ້ ແສນເມືອງບົນບອກ
ວ່າໃຫ້ ຄືນຄອບບ້ານ ດຽວນີ້ຢ່ານານ ວ່າອັນ

ຊຽງກໍ ຊິກລຶກໜ້າ ຍິນດີຊຶມຊື່ນ
ມັນຈຶ່ງ ຫົວຍຸ້ມເປີ້ຍ ເຫັນແຂ້ວໃຂ່ຂາວ ແທ້ແລ້ວ
ແຕ່ນັ້ນ ຊຽງຕອບຖ້ອຍ ຂານຂຸນໂດຍຮີບ
*ຍັງວ່າ ຂ້ອຍຊິໄປເສິກທ່ຽງແທ້ ສັງຊິໃຫ້ຕ່າວຄືນ ນີ້ເດ*

เพื่อว่า ตันบ่เอิาภานเจ้า ภำภัวถวามยังขม่อม เส้ยบา
ย้านท่ำ พระบ่ລ້ງງ ຊິຟັນຂ້າຂາດຄໍ ບໍ່ຮູ້

ກູຂໍ ໃຫ້ມຶງຄືນເສັ່ງຖ້ອນ ເຂົາທັງຫລາຍຊໍ້າໂຮມດ່າ
ມຶງນີ້ ມາຜອກພົ້ນ ເຫລືອບ້ານກວ່າເມືອງ ເພື່ອນເດ
*ຕູບໍ່ ເສັ່ງດາຍແທ້ ໄປຕາມໃສກໍຕາມຊ່າງ ມຶງຖ້ອນ*
*ເໝືອນດັ່ງ ໝາຕົວຖ້ອຍຮ້າຍ ໄປກິນຂີ້ຈຶ່ງຊິສົມ ດອກນາ*

ແຕ່ນັ້ນ ຊຽງກໍວາງກວຍຖິ້ມ ປະເສັ່ງອື່ງລື່ງ
ມັນກໍ ຕີຄຽດເຮັດຍູ້ຍີ້ ກະໂຍງເຕັ້ນແລ່ນຄືນ
*ກູຫາກ ເຫລືອໃຈແທ້ ຈໍາໄປແລ້ວພັດບອກ ຄືນນີ້*
ສັງບໍ່ ປະປ່ອຍໄວ້ ບັກຊຽງມັ້ງງຫາກຊິເຮວ ດອກນາ
ມາຮ່າວ ກົວເກງຢ້ານ ເສິກເສືອເມືອງເພື່ອນ ອີ່ສັງນີ້
ອັນແຕ່ ສາມປາຍໝື່ນຫ້າຮ້ອຍ ກູຊິສູ້ຜູ້ດຽວ ດອກນາ

*ບັດນີ້ ກູຄືນແລ້ວ ສູຈຶ່ງໄປລອງ ເບິ່ງຖ້ອນ*
*ຕັນບໍ່ ເປັນກະບວນຮົບ ຈຶ່ງຕ່າວຄືນມາໄຫວ້ ກູເນີ*
*ກູຄຶດ ວ່າຢາກໄປເຮວສູ້ ຝູງເຂົາໃຫ້ຢ້ານຢ່ອນ ດູນັ້ນ*
*ເສັ່ງແຕ່ ພຣະບາດເຈົ້າ ຈໍາໃຫ້ຕ່າວຄືນ ດັ່ງນີ້*

ເມື່ອຊິ ຝືນຄວາມເຈົ້າ ກໍກົວຕາຍຜິດອາດ ຍາແລ້ວ
ໃຜຫ່ອນ ຂັດແຂ່ງຂໍ້ ຂີນເຈົ້າບໍ່ດີ ທ່ານເອີຍ
ເມື່ອນັ້ນ ຊຽງກໍກອຍກອຍຕ້ານ ຄໍາສະຫາວອ້າງໂອດ ໂຕນັ້ນ
ອັນແຕ່ ໃຕ້ລຸ່ມຟ້າ ບໍ່ມີຢ້ານຢ່ອນໃຜ ແທ້ແລ້ວ

ຄ້ອມວ່າ ຊຽງກ່າວແລ້ວ ເລີຍເມືອຕີຈົ່ມ
ມັນກໍ ຮີບຟັ່ງຟ້າວ ຄືນເຂົ້າສູ່ເມືອງ
ແລ້ວເລົ່າ ເມືອເຮືອນຢ້າວ ເຖິງຊະນອນເຊົານັ່ງ
ພັກຜ່ອນ ກິນເຂົ້ານໍ້າ ນອນຫລິ້ນຢູ່ສະບາຍ

*ຢູທ່າງ ພັກຜ່ອນເບື້ອງ ດູດອກມາລາ*
*ຢູທ່າງ ນອນເບີຍລົມ ອ່ານສານໂຄງຟ້າ*

ຍັງເລົ່າ ຫວີທົວກ້ຽງ ທານໍ້າມັນເປື້ອງປິ່ນ
ແລ້ວເລົ່າ ຄ້ຽວໝາກເຈັ້ຍ ທົວຍຸ້ມເພດຊຸນ ແທ້ແລ້ວ

ແຕ່ນັ້ນ ພົນຫລວງເຈົ້າ ເມືອງທະວາຣີຫລາຍໝື່ນ
ເຂົາກໍ ປະດັບໝູ່ຊ້າງ ທັງມ້າອອກໄປ
ເລີຍລ່ວງເຂົ້າ ເຖິງປ່າໄພສົນ
ເຂົາເລົ່າ ນອງພົນໄປ ບໍ່ເຊົາມີຊ້າ
*ແຕ່ນັ້ນ ພົນຫລວງກໍ້າ ເມືອງປັນຈາຮູ້ຂ່າວ*
*ເຂົາກໍ ຍຸດຍ່ອນຍ້ານ ຂາມເຈົ້າພ່າຍຄືນ*

ເຂົາຈິ່ງ ຮີບຟັ່ງຟ້າວ ດັ້ນດຸ່ງຄືນເມືອ
ເຖິງເຂດ ປັນຈານະຄອນ ຢູ່ເຢັນຫາຍຮ້ອນ
ແຕ່ນັ້ນ ພົນຫລວງດ້ານ ເມືອງທະວາຣີຮູ້ຂ່າວ
ອັນວ່າ ເສິກໂຄບຍ້ານ ໜີແລ້ວພັດຕ່າວຄືນ

ເຂົາກໍ ນອງພົນຂ້າມ ອະຣັນຍາຫລາຍລັ່ນ ມາແລ້ວ
ຄັນວ່າ ເດີນທັບຫລາຍຂວບມື້ ກໍຄືນເຂົ້າສູ່ເມືອງ
ແມ່ນວ່າ ຝູງໝູ່ແສນສໍ່າທ້າວ ນ້ອຍໃຫຍ່ຊາວເມືອງ ກໍດີ
ເຂົາກໍ ເອົາກັນເມືອເຮືອນຊານ ຊູ່ຄົນເຊົາຢັ້ງ

ຄັນວ່າ ມາເຖິງແລ້ວ ເນົາຢູ່ເຢັນໃຈ
ກໍບໍ່ ມີອິນຕາຍ ບຽດບຽນພານຕ້ອງ
ກໍຫາກ ເປັນແຕ່ເຕໂຊເຈົ້າ ເມືອງທະວາຣີມີນາກ
ຝູງໝູ່ ສັດຕູຂາມຍ່ອນຍ້ານ ໂຍມເຈົ້າພ່າຍພັງ ຈິງແລ້ວ

ກໍບໍ່ມີ ເມືອງໃດເຂົ້າ ມາປະຈົນບັງບຽດ ໄດ້ແລ້ວ
ພຣະກໍ ສຸກຍິ່ງລໍ້າ ສເມີດ້ານດັ່ງອິນ ແທ້ດາຍ
ກໍຫາກ ລືຊາທ້າວ ເມືອງໄກປະເທດຕ່າງ
ບໍ່ອາດ ມາຜ່າມ້າງ ຍິນຢ້ານແຕ່ໄກ ເຈົ້າເອີຍ

>> ເມື່ອນັ້ນ ພຣະບາດເຈົ້າ ຈາຕໍ່ພາຍໃນ
สูจิ่ງ ເມືອເຮືອນຊຽງ ບອກມັນມາແທ້
ຢ່າໃຫ້ ມັນມາຊ້າ ມາພະລັນມື້ອື່ນ ຈິງເນີ
*ກ່ອນໄກ່ແທ້ ຢ່າຊ້າຮີບມາ ທ່ຽວເຖີ້ນ*

ແຕ່ນັ້ນ ເສນານ້ອຍ ໂດຍອາດຍາເມືອງ
ເຂົາກໍ ໄປພະລັນເຖິງ ຮອດເຮືອນຊຽງໝັ້ງ
ຖແລງຄຳຕ້ານ ຈາຣະຈາບົນບອກ
ບັດນີ້ ພຣະບາດໄທ້ ທັນທ້າວທ່ານຊຽງ ແທ້ດາຍ

ຄັນວ່າ ເຖິງເມື່ອວັນລຸນເຊົ້າ ໃຫ້ຊຽງໄປກ່ອນໄກ່ ຈິງດາຍ
ທ່ານຢ່າ ໄດ້ຢູ່ຊ້າ ເຫິງລ້ຳໂທດຊິເຕັງ ແທ້ແລ້ວ
ຄວາມກໍ ມີມາເທົ້າ ເໜືອຫົວປິງອາດ
ພຣະຫາກ ຕັດຂາດມຸ້ງນ ປິງໃຫ້ທ່ານຊຽງ ແທ້ດາຍ

ແຕ່ນັ້ນ ຊຽງໝັ້ງຕ້ານ ຈາຕໍ່ທູຕາ
ບັດນີ້ ຂ້ອຍກໍໂດຍຄຳຕາມ ພຣະອາດຍາເປັນເຈົ້າ
ກໍບໍ່ ຂັດຂວາງຂ້ອງ ຄຳພຣະຍາສັກສິ່ງ ອີ່ສັງແລ້ວ
ທູຕາ ຍິນວາດຖ້ອຍ ຊຽງເວົ້າກ່າວຖແລງ

ເຂົາກໍ ເຣວຮີບຟ້າວ ເມືອກາບທູນພຣະຍາ
ຕາມຄວາມມີ ເລົ່າຂານຕາມພື້ນ
ຊຽງຫາກ ໂດຍຈອມເຈົ້າ ຂານຄຳປິງອາດ
ເຖິງເມື່ອ ມື້ອື່ນເຊົ້າ ຊິມາເຝົ້າບໍ່ຂືນ ພຣະເອີຍ

ແຕ່ນັ້ນ ສຸຣິໂຍຄ້ອຍ ເສັ້ຽແສງແລ້ວຄ່ຳ
ຕາເວັນ ລົງລັບຟ້າ ແສງເສົ້າມືດມົວ

ແຕ່ນັ້ນ ສວ່າສວ່າພ້ອມ ເຂົາແຕ່ງກະທໍ່ແລງ
ຟັງຍິນ ກອງຍາມເຕີນ ຊູ່ພາຍດັງກ້ອງ
ເມື່ອນັ້ນ ເລີຍເລົ່າເຖິງຍາມລ້ຳ ພໍແຖໃກ້ທ່ຽງ
ອັນວ່າ ເໜືອຍໝອກຍ້ອຍ ດາວຍ້າຍຊູ່ພາຍ

ຜໍ່ເຫັນ ວັນສ່ອງແຈ້ງ ດາວດາດໂຍທິກາ ພຸ້ນເຢີ
ເລົ່າລື ໃນນິທານ ຊື່ດາວສະເພົາຄ້າ

ດີແຕ່ ຮົງຮົງເຫລື້ອມ ເຮືອງແສງໃສສ່ອງ
ຝູງໝູ່ ດາວໄກ່ນ້ອຍ ແຝງພ້ອມພ່າງພາ

ດີແຕ່ ດາວຄາງຕັ້ງ ຊ້າງໃຫຍ່ເງີຍງາ ພຸ້ນເຢີ
ດີແຕ່ ດາວພິດານ ທ່ຽງຊັນພຽງເຄົ້າ
ແຕ່ນັ້ນ ເມືອງຫລວງກວ້າງ ຄືນນອນສງັດຢູ່
ເລີຍເລົ່າ ເຖິງຕູດຊ້າຍ ກອງເຄົ້າຮອດຄົວ

ເມື່ອນັ້ນ ໄກ່ຕື່ນພ້ອມ ຕົບປີກຂານຂັນ ພຸ້ນເຢີ
ຂົງເຂດ ແຊວແຊວນັນ ສົ່ງສຽງຂັນທ້າ
ເມື່ອນັ້ນ ຊຽງກໍຍອງຍອງເຂົ້າ ເມື່ອໃນໃຕ້ລ່າງ
ມັນຈຶ່ງ ຈັບໄກ່ໄດ້ ຂັງໄວ້ໃສ່ຍາງ

ແຕ່ນັ້ນ ຕາເວັນຍ້າຍຈາກຫ້ອງ ຫີນຫລ່ຽມເຂົາສເມນ ພຸ້ນເຢີ
ຂົງເຂດ ຊຸມພູເຮືອງ ທິບແສງເລີຍແຈ້ງ

ອັນນີ້ ໂລກກ່າວໄວ້ ຍາມຮຸ່ງມາເຖິງ ແທ້ແລ້ວ
ຊຽງກໍ ຍິນດີຄຶດ ວ່າຊິເມືອທູນເຈົ້າ
*ຄັນວ່າ ເຖິງເມື່ອຍາມກິນເຂົ້າ ຊຽງກໍກິນເຕັມອີ່ມ*
*ແລ້ວເລີຍ ຄຽ້ວໝາກເຈັ້ຍ ນອນເທົ້ງໄຂວ່ຂາ ແທ້ແລ້ວ*

ເມື່ອນັ້ນ ມັນກໍບໍ່ເດືອດຮ້ອນ ສນຸກຢູ່ຕາມໃຈ
ບໍ່ຄຶດ ວ່າຣາຊາທັນ ບອກເມືອການຮ້ອນ
ຄັນວ່າ ເຖິງເມື່ອຕາເວັນຄ້ອຍ ພໍແລງໃກ້ຄ່ຳ
ຊຽງຈຶ່ງ ເມືອຂາບໄຫວ້ ທູນເຈົ້າພຣະຍອດເມືອງ

ແຕ່ນັ້ນ ຊຽງໝັ້ງບໍ່ຊັກຊ້າ ຜູກໄກ່ແກ່ນຳຫລັງ
ອັນວ່າ ມືມັນຖື ເຊືອກດຶງເມືອໜ້າ
ແຕ່ນັ້ນ ກຸດໂຕຮ້ອງ ນຳຫລັງຈອກຈອກ
ອັນວ່າ ໄກ້ແຮ່ງຮ້ອງ ບັກຊຽງໝັ້ງພັດຍ່າງເປືອງ

ເມື່ອນັ້ນ ຊຽງນາບປ້ອຍ    ດ່າໄກ່ສຽງແຂງ
ບັກເຫງັນກິນ ຫົວມຶງເອີຍ    ສິ່ງໃດຊິມາຮ້ອງ

*ບັດນີ້ ຣາຊາໃຫ້*    *ກູໄປວຽນທ່ຽວ ຈິງດາຍ*
*ກູຈຶ່ງ ໄປຮີບຮ້ອນ*    *ໄປຟ້າວກ່ອນມຶງ ໄກ່ເອີຍ*

*ພຣະກໍ ບົນບອກໃຫ້*    *ມຶງຄ່ອຍນຳຫລັງ ແທ້ດາຍ*
*ມຶງຢ່າ ໄດ້ໄປອວນທາງ*    *ກ່ອນກູເມືອໜ້າ*
ຄັນວ່າ ກາຍຄວາມເຈົ້າ    ເໜືອຫົວຊິຜິດອາດ ຍາແລ້ວ
ກູຫາກ ຢ້ານແທ້ແທ້    ພຣະຍາເຈົ້າຊິໂກດເຄັ່ມ ບໍ່ຮູ້

ບັດນີ້ ມຶງສັງມາດົນຮ້ອງ    ບໍ່ເຫັນເຊົາສັກເທື່ອ ສັນນີ້
ກະກຸນວ່າ ໄກ່ຂີ້ຮ້າຍ    ກູຊິປີ້ງອ່ອມຫົວ ແທ້ດາຍ
ມຶງຫາກ ບໍ່ຟັງຄວາມກູແທ້    ຄືນເຮືອນຊິຂ້າອ່ອມ ກິນແລ້ວ
ກູຈັກ ຈີກຊຸບຊົ້ວ    ກິນແທ້ກໍຫາການົວ ໄກ່ເອີຍ

ເມື່ອນັ້ນ ທັງຫລາຍທ້ອງ    ເຫັນຊຽງແກ່ໄກ່ ເຮົາເອີຍ
ມາເບິ່ງ ຊຽງໝັ້ງນີ້    ຊິເປັນບ້າຄົ່ວໄປ ແລນໍ
ເຂົາກໍ ແຊວແຊວທ້ອງ    ຫົວມັນຊິສວ່າ
ເຮົາກໍ ບໍ່ຫ່ອນຮູ້    ຊຽງນີ້ຊ່າງເປັນ ນີ້ເດ
ຊຽງສັງ ມາລາກາທີ້ນ    ແກ່ໄກ່ນຳຫລັງ ນີ້ນໍ
ແໜງສູ້ ບິດຄຳເສັ່ງ    ອ່ອມກິນລາງແລ້ວ
ແຕ່ນັ້ນ ຊຽງຕອບຕ້ານ    ຈາຕໍ່ທັງຫລາຍ
ເປັນສັງ ສູຈຶ່ງຫົວຂວັນກູ    ສິ່ງໃດເດເຈົ້າ

*ອັນວ່າ ຣາຊາໃຫ້*    *ກູໄປກ່ອນໄກ່ ຈິງດາຍ*
*ກູກໍຈຶ່ງ ໄດ້ຍ່າງຟ້າວ*    *ໄປໜ້າກ່ອນມັນ ນີ້ແລ້ວ*

ອັນວ່າ ໄກ່ແຮ່ງຮ້ອງ    ຊຽງແຮ່ງດຶງແຮງ
ເຮວພະລັນເຖິງ    ຮອດໂຮງພຣະຍາເຈົ້າ
ມັນຈຶ່ງ ເມືອທູນໄທ້    ພຣະຍາຫລວງກົ້ມຂາບ
ພໍໃຫ້ ຮູ້ຂ່າວຂໍ້    ດີຮ້າຍຊູ່ອັນ

ຂ້າກໍ ອອກຈາກບ້ານ ເດີນທາງຈູງໄກ່
ບັດນີ້ ກໍຫາກມາຮອດແລ້ວ ຈອມເຈົ້າຊິວ່າສັງ ນີ້ເດ

ຂ້າກໍ ໂດຍອາດເຈົ້າ ຍັງຂມ່ອມມາເປືອງ ພຣະເອີຍ
ໄກ່ກໍ ມານໍາຫລັງ ຂ້າຈຶ່ງມາດຽວນີ້
ແຕ່ນັ້ນ ຕຶງລຶງໜ້າ ຕົນພຣະຍາຄຶດຄຽດ
ແລ້ວເລົ່າ ຕິກ່າວຕ້ານ ພະລັນເວົ້າອັນອື່ນເຕັງ

ເມື່ອວ່າ ພຣະຈັກອອກປາກຕ້ານ ສັນສິ່ງໂກທາ ດັ່ງນັ້ນ
ເກາງທໍ່ ຊຽງຈັກລົງຄວາມຕັດ ແມ່ນຈິງຊູ່ອັນແທ້
ເມື່ອນັ້ນ ພຣະຈຶ່ງສເວີຍຍັງເຂົ້າ ກິນອາຫານຫລາຍສິ່ງ
ມີທັງ ສົ້ມແຊບຊ້ອຍ ໝົກປີ້ງລາບແກງ

>> ແຕ່ນັ້ນ ພຣະກໍຄຶດຮອດຮູ້ ຂອງສິ່ງແນວເຜັດ
ຈັກໄດ້ ເອົາມາກິນ ສນ່ອຍດູແກມສົ້ມ
ພຣະຈຶ່ງ ຈາຈິງຕ້ານ ດອມຊຽງບົນບອກ
*ມຶງຈົ່ງໄປ ເກັບເອົາໝາກພິກດິບຢູ່ໜ້າຄຸ້ມ ມາໃຫ້ແກ່ກູ ທ່ຽວເຖີ້ນ*

ກູຈັກ ກິນກັບສົ້ມ ໃຫ້ມັນນົວກິນແຊບ ຊຽງເອີຍ
ມຶງຢ່າ ໄດ້ຢູ່ຊ້າ ດຽວນີ້ທ່ຽວເປືອງ ແທ້ເນີ

ແຕ່ນັ້ນ ຊຽງໝັ້ງມັນບໍ່ຊ້າ ເຣວຮີບໄປເປືອງ
ພອຍເລົ່າ ເຖິງສາຂາ ໝາກພິກເປັນເຕັມຕົ້ນ
ຊຽງກໍບໍ່ ໄດ້ປິດເອົາແທ້ ພະລັນຫາແຕ່ໜ່ອຍຫລິ່ນ
ມັນທໍ່ ຊອກແຊກໄງ້ ທາງພື້ນປີດຫາ
*ແລ້ວເລົ່າ ປັດກວດແຜ້ວ ຂ່ວງເຂດໃນກົກ*
*ແມ່ນວ່າ ວຽນໄປມາ ຮອດບໍ່ເຫັນດາຍແທ້*
*ຕັ້ງບໍ່ ເຫັນໝາກພິກແທ້ ໃນດິນສັກໜ່ອຍ*
*ແມ່ນວ່າ ລົມພັດຕ້ອງ ກໍດາຍແລ້ວບໍ່ຫລິ່ນລົງ*

ເຫັນແຕ່ ຍັງຄາຕົ້ນ ມີເຕັມຄາງ່າ
ຕັ້ງວ່າ ດິກລື່ນລົ້ນ ເຕັມຕົ້ນບໍ່ຫລົ່ນລົງ ນີ້ເດ

ຊຽງກໍ ເລີຍບໍ່ໄດ້ເມືອຖວາຍໃຫ້ ພຣະຍາຫລວງສັກໜ່ອຍ ຈິງແລ້ວ
ເຫລືອທີ່ ອຶດອ່ອນຮ້າຍ ຫາໄດ້ກໍບໍ່ເຫັນ ແທ້ດາຍ

ກໍຫາກ ຣຸນແຮງແທ້ ຊຽງເຊົານັ່ງຈົ່ມ
ຍັງວ່າ ເປັນບໍ່ແພ້ ເຕັມຕົ້ນບໍ່ຫລົ່ນລົງ ດັ່ງນີ້
ຕັ້ງຫາກ ເຫລືອແຮງຖ້າ ມາບໍ່ເຫັນສັກໜ່ອຍ
ເຫັນແຕ່ ໃບບໍ່ແພ້ ເຫລືອຮ້າຍຫລົ່ນລົງ ເຈົ້າເອີຍ

*ເມື່ອຈັກ ປິດເອົາລີ ກໍກາຍຄວາມພຣະຍາບອກ*
*ກູຄ່ອຍ ນອນທອດທະເບີ້ງ ອີງຕົ້ນຖ້າຫລົ່ນລົງ ກ່ອນແລ້ວ*

*ແຕ່ນັ້ນ ຊຽງນອນເທີ້ງ ຖີວດັງຫວອດຫວອດ*
*ລໍໃຫ້ ລົມມາພັດຟາດຕ້ອງ ເຟືອນຂ້ວນໃຫ້ຫລົ່ນລົງ ວ່າດາຍ*
ເມື່ອນັ້ນ ພຣະຍາເຫວີຍເຂົ້າ ຄອງຫາໝາກພິກຢູ່
ຖ້າທ່ານເຈົ້າ ຊຽງໝັ້ງງກໍບໍ່ເຫັນ ແທ້ດາຍ

ພຣະຍາ ກໍເລີຍຈົ່ມໃຫ້ ທັງຄຽດຟູມຟາຍ
ຈັກວ່າ ມັນໄປທຳການໃດ ຢູ່ເທິງເປັນກະດໍ້
ຮອຍວ່າ ເປັນເຫດຮ້າຍ ສັງຕອດຄຸມຂຶບ ບໍ່ຢ່າແລ້ວ
ສູຈົ່ງ ໄປນຳຊຽງ ເບິ່ງດູມັນຖ້ອນ

ແຕ່ນັ້ນ ໄທເດັກນ້ອຍ ເຣວຮີບໄປເປືອງ
ເຣວພະລັນເຖິງ ຮອດໂຕຊຽງໝັ້ງງ
ມັນກໍ ຍັງນອນເທີ້ງ ຖີວດັງຫວອດຫວອດ
ແຕ່ນັ້ນ ໄທເດັກນ້ອຍ ຄືນໃຊ້ນາບຊຽງ

ຍັງວ່າ ພຣະບາດໃຫ້ ຊຽງຫ່ຽວກັບເມືອ ວ່າດາຍ
ມຶງສັງ ມານອນຖີວ ຢູ່ດາຍອີງຕົ້ນ
ເພື່ອນກໍ ຈຳຊຽງໃຫ້ ມານອນຖີວຢູ່ ຈິງລີ
ມຶງຫາກ ຄວ່າເຮັດຄືດັ່ງນີ້ ເມືອໜ້າບໍ່ດີ ແທ້ດາຍ

ເມື່ອນັ້ນ ຊຽງຕອບຕ້ານ ຮັບພາກຄືນໃນ
ພຣະກໍ ຫາກຈຳມາເກັບ ຂ້ອຍຫາກຫາບໍ່ທັນໄດ້

ຕັ້ງຫາກ ເຫລືອແຮງຂ້ອຍ ວຽນມາຫລາຍເທື່ອ ເລີງແລ້ວ
ສຸດທີ່ ຂ້ອຍຫາກຄວັດເຂັ່ນໄງ້ ທາງພື້ນກໍບໍ່ເຫັນ ເຈົ້າເອີຍ

ອັນວ່າ ໝາກພິກກໍຫາກເປັນບໍ່ແພ້ແລ້ວ ພໍງາດາຫັກ ພຸ້ນແລ້ວ
ສັງເລົ່າ ມາແຂງຂັດ ບໍ່ຫລົ່ນລົງມາພື້ນ
ແຂງວ່າ ປິດເອົາແທ້ ຊິທັນຖວາຍສາມເທື່ອ ເປັນສັງ
ອັນນີ້ ກໍບອກໃຫ້ເກັບທ່ຽງແທ້ ຄວາມເຈົ້າສັ່ງເຮົາ ທ່ານເອີຍ

*ເມື່ອວ່າ ຂ້ອຍຈັກປິດເອົາແທ້ ກໍກາຍຄວາມພຣະຊິໂກດ ເຄັນແລ້ວ*
*ຢ້ານທໍ່ຜິດ ບໍ່ຊອບແທ້ ຊິຈໍາໃຫ້ຜູກຕີ ບໍ່ຮູ້*

ເທື່ອນີ້ ພຣະໂກດໃຫ້ ດູຊອບຄອງເມືອງ ນັ້ນແລ້ວ
ເຫດວ່າ ຂ້ອຍຫາກມານອນຖ້າ ຖ້າເອົາບໍ່ທັນໄດ້
*ຄັນວ່າ ລົມພານຕ້ອງ ສາຂາໝາກພິກຫລົ່ນ ເມື່ອໃດ*
*ຂ້ອຍຈັກ ເກັບກອບໄດ້ ເມືອໃຫ້ທ່ຽງຖວາຍ ດອກແລ້ວ*
ແຕ່ນັ້ນ ທູຕາໃຊ້ ໄດ້ຍິນຄໍາຊຽງກ່າວ
ມັນກໍ ປິດເອົາໝາກພິກໄດ້ ພໍແລ້ວຮີບເມືອ

ເຂົາກໍ ເຖິງແທ່ງຫ້ອງ ຜາສາດຫໍຄໍາ
ກໍຈຶ່ງ ນໍາໄປຖວາຍ ໃຫ້ພຣະຍາກິນແກ້ມ
ແຕ່ນັ້ນ ພຣະຍາຫລວງເຈົ້າ ເຫວີຍພາແລ້ວຢ່າ
ເມື່ອນັ້ນ ຄົນຂ້າໃຊ້ ກໍເລີຍໄຫວ້ຮໍ່າຮຽນ

ບັດນີ້ ຂ້າໄຫວ້ເຈົ້າ ຍັງຂມ່ອມເໜືອຫົວ
ອັນວ່າ ຊຽງໝ້ຽງຍັງນອນຖ້າ ໄປ່ມາປານນີ້
ມັນຫາກ ຖ້າໃຫ້ລົມພານຕ້ອງ ສາຂາໝາກພິກຫລົ່ນ ວ່າດາຍ
ຄັນວ່າ ມັນຫາກເກັບໄດ້ແລ້ວ ຊຽງໝ້ຽງຈຶ່ງຊິມາ ພຣະເອີຍ

ແຕ່ນັ້ນ ທະວາຣີທ້າວ ກິນນໍາຜຍາຜ່ອນ ຊຽງນັ້ນ
ກໍຫາກ ດູແມ່ນແທ້ ເລີຍຊໍ້າເລົ່າຫົວ ນັ້ນແລ້ວ
ກູຫາກ ຄຶດບໍ່ຜ້ຽນ ບິນບອກຊຽງສັບ ນີ້ນໍ
ມັນກໍ ສັງມາຜິຈິງເອົາ ຊູ່ຄວາມລັງຂໍ້

ພໍເມື່ອ  ວັນຄ່ຳຄ້ອຍ    ລັບຫລ່ງມເຂົາສເມນ ພຸ້ນເຢີ
ຊຽງເລົ່າ  ມາໂຮງຄຳ    ຂາບທູນພຣະຍາເຈົ້າ
*ເຫລືອທີ່  ຂ້າຫາກຣຸນແຮງຖ້າ    ລົມຕີມາບໍ່ຫລິ່ນ  ພຣະເອີຍ*
ຕັ້ງຫາກ  ບໍ່ໄດ້ເກັບດີ້ດີ້    ຖວາຍເຈົ້າຢູ່ຫົວ  ແທ້ນາ

ແມ່ນຈັກ  ໂກຫາຂ້າ    ກໍຕາຍເສັ້ງດາຍດອກ
ມັນຫາກ  ຄ່ຳຜອກພົ້ນ    ກົວຢ້ານກໍຈິ່ງມາ ພຣະເອີຍ

ແຕ່ນັ້ນ  ຣາຊາເຈົ້າ    ເລີຍຫົວທັງຄຽດ
ເຈົ້າຫາກ  ເຮັດດັ່ງຫູບໍ່ຮູ້    ຄວາມເວົ້າອັນອື່ນເຕັງ
ເມື່ອຈັກ  ຈຳນຳຫລີ້    ກໍກົວຊຽງຈະຜິດ່າ  ດັ່ງນັ້ນ
ຢ້ານແຕ່  ຝູງໄພ່ນ້ອຍ    ຊຸນທ້າວຊີບໍ່ຢຳ

\>> ຄັນວ່າ  ຫລາຍວັນແລ້ວ    ພຣະຍາຖາມກັບໂຈດ ຊຽງເອີຍ
ມຶງນີ້    ສັງມາດີເປັນກະດັດກະດໍ້    ຜຍາລ້ຳລື່ນກູ  ແທ້ນໍ

ຮູ້ວ່າ    ຜຍາມຶງເກີດແຕ່ທ້ອງ    ເປັນແມ່ບິນມາ  ນັ້ນລື
ຊຽງຈິ່ງ  ໄຂວາຈາ    ຕໍ່ກູຄຳຜັ້ງນ
ເມື່ອນັ້ນ ຊຽງໝັ້ງງເລີຍຮຽນໄຫວ້    ຣາຊາກັບຫລອກ  ລວງນັ້ນ
ອັນວ່າ  ແມ່ຜຍາຂ້ານ້ອຍ    ໃນທ້ອງກໍບໍ່ຫລາຍ  ພຣະເອີຍ

ທີ່ວ່າ    ຍັງຢູ່ເນົາໃນບັ້ງ    ຄາເຮືອນອັບແຈບ
ຂ້ານ້ອຍ  ລ້ຽງຊູ່ມື້    ຜຍານັ້ນກໍຫາກມີ  ພຣະເອີຍ
ແຕ່ນັ້ນ  ຣາຊາຕ້ານ    ຈາຊຽງໂດຍຮີບ
ມຶງໄປ  ເອົາມາໃຫ້ເບິ່ງຖ້ອນ    ກູນີ້ກໍຢາກເຫັນ  ແທ້ດາຍ

ກູຈັກ    ທັນເຂົາໃຫ້    ມາດູໝົດໝູ່
ແລ້ວຈິ່ງ  ປັນພຸ້ນພີ້    ໃຫ້ເຂົາລ້ຽງຊູ່ຄົນ  ແທ້ດາຍ

ໃຫ້ເຂົາ  ດີຂນາດກ້າ    ສເມີດັ່ງຜຍາຊຽງ  ນັ້ນແລ້ວ
ມຶງຈິ່ງ    ເອົາມາຖວາຍ    ຢ່າຂີນກູແທ້
ຮູ້ວ່າ    ມີຜຍາເຫລືອລົ້ນ    ເຕັມເຮືອນຢ່າຂີ້ຖີ່  ຊຽງເອີຍ
ທຳທານ  ລົນແບ່ງໃຫ້    ເໝືອນນ້ຳບໍ່ໃສ  ນັ້ນດາຍ

ເມື່ອນັ້ນ ຊຽງກ່າວຕ້ານ ຂານຕອບຣາຊາ
ຊາດທີ່ ຂອງແພງໃຜ ບໍ່ທ່ອນປັນໃຜໄດ້
ນອກກວ່າ ເໜືອຫົວເຈົ້າ ບໍ່ມີບອກຄົນໃດ ໄດ້ແລ້ວ
ອັນນີ້ ຕັ້ງວ່າຂືນບໍ່ໄດ້ ຊິປັນໃຫ້ສນ່ອຍດູ ດອກນາ

ຂ້າກໍ ຈັກຖວາຍຈອມເຈົ້າ ເໜືອຫົວພຣະພີ່ ຈິງແລ້ວ
ພໍໃຫ້ ໄດ້ສືບເຊື້ອ ເມືອໜ້າຕໍ່ໄປ ແທ້ດາຍ

ຄ້ອມວ່າ ຊຽງກ່າວແລ້ວ ລາຈາກພູທອນ
ມັນເລົ່າ ເມືອເຮືອນຕົນ ນັ່ງນອນຖືວຫລິ້ນ

*ຊຽງຈຶ່ງ ຄຶດສລາດຮູ້ ເອົາຕໍ່ເປັນຜຍາ ແທ້ແລ້ວ*
*ມັນກໍ ເດີນສແວງຫາ ຊູ່ວັນເລີຍໄດ້*
*ກໍຈຶ່ງ ແປງໂກນບັ້ງ ເອົາມາຂັງໃສ່*
*ທັງແມ່ມີ້ນ ແກມເຜີ້ງຕໍ່ແຕນ*

ມັນກໍ ໄດ້ມາກລິ້ນ ລໍ້າຍິ່ງອະນັນຕັງ ແທ້ດາຍ
ຊຽງຫາກ ທຽວໄປເອົາ ເຖິງຫ້າວັນເລີຍໄດ້
ຄັນວ່າ ຊຽງຫາໄດ້ ພໍໃຈນອນຢູ່
ບໍ່ໄດ້ ຄຶດເດືອດຮ້ອນ ສັງແທ້ທໍ່ໃຍ

ເມື່ອນັ້ນ ທະວາຣີເຈົ້າ ຄອງຊຽງເຊົ້າຄໍ່າ
ເພື່ອວ່າ ຄຶດຢາກໄດ້ ຜຍາກ້າຈາກຊຽງ ນັ້ນແລ້ວ

ແຕ່ນັ້ນ ພຣະຈຶ່ງມີອາດໃຊ້ ທັນໝູ່ສາວສນົມ
ບອກໃຫ້ ໄປເອົາຕົວ ແມ່ຜຍາຊຽງໝັ້ງງ
ບັດນີ້ ກູຈັກມີຄໍາໃຊ້ ໃຫ້ສູໄປເອົາແມ່ ຜຍາດາຍ
ດອມທີ່ ຊຽງໝັ້ງງພຸ້ນ ມັນຊິໃຫ້ແກ່ກູ ວ່າອັນ

ນັບແຕ່ ກູຄອງຖ້າ ຫາມັນໄດ້ສາມສີ່ ຄືນແລ້ວ
ບໍ່ເຫັນ ມາຂາບໄຫວ້ ທູນໄທ້ແຫ່ງກູ ນັ້ນດາຍ
ເມື່ອນັ້ນ ສາວສນົມໄດ້ ຍິນຄໍາພຣະຍາບອກ
ເຂົາກໍ ສວ່າສວ່າພ້ອມ ຂໍເຈົ້າຊູ່ຄົນ

ຂໍແກ່ ເໜືອຫົວເຈົ້າ ຜາຍໂຜດກູນາ
ປັນຜຍາຂອງຊຽງ ແກ່ຝູງຊູມຂ້າ
ຂ້າຈັກ ຄອຍພຽນລ້ຽງ ຜຍາດີແສນສລາດ
ໄດ້ເປັນ ສາວສລາດຮູ້ ໃຫ້ເຂົາເຮື້ອງຊ່າລື ພຣະເອີຍ

ແຕ່ນັ້ນ ພຣະຍາກ່າວຕ້ານ ບອກໝູ່ສາວສນົມ
ບັດນີ້ ສູຈົ່ງພາກັນໄປ ຊູ່ຄົນພຽງພ້ອມ
ຂໍເອົາ ແມ່ຜຍາດອມເຈົ້າ ນຳຊຽງຜຍາເດັ່ນ
ດອມທ່ານເຈົ້າ ຊຽງໝັ້ງງຊູ່ຄົນ ຫັ້ນຖ້ອນ

ຕາມແຕ່ ມັນຫາກອີ່ດູແທ້ ປັນສູຄົນສນ່ອຍ ບໍ່ຮູ້
ເມື່ອນັ້ນ ເຂົາເລົ່າຕຶກແຕ່ງຫ້າງ ດາເນື້ອຮີບໄປ
ຍາບຍາບຍ້າຍ ເຕັ້ນໄຕ່ນຳທາງ
ເຖິງເຮືອນຊຽງ ນັ່ງເປືອງຖາມຖ້ອຍ
ບັດນີ້ ຈອມຫົວໃຊ້ ຕູມາເອົາແມ່ ຜຍາແລ້ວ
ຊຽງຢ່າ ໄດ້ຢູ່ຊ້າ ເອົາໃຫ້ແກ່ຕູ ນີ້ເຖີ້ນ
ຕູກໍ ຈັກເອົາເມືອໃຫ້ ຖວາຍພຣະຍາແວນທ່ຽວ ຈິງດາຍ
ເພື່ອນຫາກ ຄອງຫາຊຽງຊູ່ມື້ ເຢັນປີ້ງກໍບໍ່ເຫັນ ແທ້ດາຍ

ກໍເພື່ອ ຄຶດຢາກໄດ້ ຜຍາແມ່ດອມຊຽງ ນີ້ແລ້ວ
ພຣະຈິ່ງ ມີຄຳຈັດ ບອກຕູມາແທ້
ບັດນີ້ ຕູຂ້າຂໍດອມເຈົ້າ ຄົນຕົວຈັກສນ່ອຍ ດູຖ້ອນ
ຕູຈັກ ເອົາໃສ່ບັ້ງ ພຽນລ້ຽງດັ່ງຊຽງ ນັ້ນແລ້ວ

ແຕ່ນັ້ນ ຊຽງຕອບຕ້ານ ຈາຕໍ່ສາວສນົມ
ຂ້ອຍຈັກ ໃຫ້ເປັນຄົນຕົວ ບໍ່ຫລາຍນາເຈົ້າ
ຊຽງກໍ ບາຍເອົາບັ້ງ ແມ່ຜຍາມາໃຫ້ເບິ່ງ ດູນັ້ນ
ຕັ້ງຫາກແມ່ນ ໄມ້ໂຂ້ໂຫລ້ ຊັນໄວ້ສີ່ແຈ ແທ້ແລ້ວ

ເຂົາກໍ ເລີຍເລົ່າແບມືເຂົ້າ ຫລາຍຄົນຊີສວ່າ
ເພື່ອວ່າ ເຂົາຢາກໄດ້ ຜຍາກ້າແຫ່ງຊຽງ

ຊູ່ຄືນ ຊູ່ຊໍແຊຊິງເຂົ້າ ຫາຊຽງຢາກເບິ່ງແມ່ ຜຍານັ້ນ
ແມ່ນວ່າ ຊຽງໝັ້ງງນາບພຸ້ນພີ້ ກໍດາຍແລ້ວບໍ່ຟັງ

ຊຽງເອີຍ ຄັນຫາກຍັງຫລາຍແທ້ ຊໍ້າປັນກູອີກກ່ອນ
ກູຍັງ ຢາກໃຫ້ມັນແກ່ກ້າ ຜຍາລໍ້າລື່ນຊຽງ ນັ້ນດາຍ

ແຕ່ນັ້ນ ຊຽງກໍຕິຽດພຸ້ນພີ້ ກອຍກ່າວເລີຍຈາ
*ດູລາ ສາວສນົມຄືນງາມ ຫາກມີຜຍາໜ້ອຍ*
*ຂ້ອຍຈັກ ປັນຜຍາໃຫ້ ສາວສນົມຢ່າມັກມາກ*
ອັນວ່າ ແມ່ຜຍາຂ້ອຍນີ້ ດີແທ້ຄ່າກໍແພງ ແທ້ດາຍ

ໃຫ້ສູ ເອົາເປັນເຊື້ອ ຄືນໂຕເສັ້ຽກ່ອນ ສາວເອີຍ
ໃຫ້ຄ່ອຍ ພຽນພໍ່າລ້ຽງ ແພງໄວ້ຫາກແຜ່ຫລາຍ ດອກນາ

ສ່ວນວ່າ ຕົວຂອງພຣະຍາເຈົ້າ ຈັກເມືອຖວາຍເທື່ອນຶ່ງ ເອົາດອກ
ບໍ່ໃຫ້ ເຄືອງແຈ່ມເຈົ້າ ສາວໃຊ້ໝູ່ມາ ດອກນາ
ຄັນວ່າ ສູຈັກເອົາແມ່ຜຍາແທ້ ໃຫ້ເອົາມືແບອອກ ມາເຖີ້ນ
ຂ້ອຍຈັກ ປັນແບ່ງໃຫ້ ເສັ້ຽແລ້ວຮີບເມືອ

ຫລອນວ່າ ເໜືອຫົວເຈົ້າ ມີໃຈກື້ວໂກດ ບໍ່ຮູ້
ເພື່ອນຈັກວ່າ ພວກນາງມາແອ່ວຊູ້ ປະສົງເອົ້ນ່າຍຊາຍ ແທ້ດາຍ

ແຕ່ນັ້ນ ສາວສນົມພໍ່າພ້ອມ ແບມືເອົາແມ່ ຜຍານັ້ນ
ຊຽງຈຶ່ງ ໄຂປາກບັ້ງ ຜຍາອີ້ງອອກມາ

ມັນເລົ່າ ຕອດພຸ້ນພີ້ ຕາມໝູ່ຫູຕາ
ທັງເລົາຄີງ ແຂນຂາ ຊູ່ຄືນເຂົາແທ້
ແຕ່ນັ້ນ ສາວສນົມດີ້ນ ຕຶງຕາງຟ້າວຟັ່ງ
ເຂົາເລົ່າ ຈິດແຈດຮ້ອງ ສົນແສ້ວທົ່ວເຮືອນ

*ລາງພ່ອງ ກະໂຍງກະແຍງເຕັ້ນ ລາງຄືນກີ້ງເກືອກ ກໍມີ*
*ລາງພ່ອງ ປົບປ່ວງຟ້າວ ໂຕນຢ້າວແລ່ນເປືອງ*

ອັນວ່າ  ຄືນອັ່ງລົ້ນ        ຄັບຄັ່ງຄາປັກຕູ
ລາງພ່ອງ ຫົວຊູນກັນ        ສະງາບເງີຍທັງປີ້ນ
ລາງພ່ອງ ຊິບຝາມ້າງ        ໂຕນເຮືອນທາງອື່ນ ກໍມີ
ລາງຜ່ອງ ລືນໂຕ່ງສິ້ນ        ຫລົງຮື້ສະຫງາກຫງາຍ

ລາງພ່ອງລົ້ມ        ລາງພ່ອງຍັງຍືນ
ລາງພ່ອງ ແກວແກວສຽງ        ຂ້ອຍຊິຕາຍເສັ່ງແລ້ວ
ລາງພ່ອງ ປີນໄປໃຕ້        ລາງພ່ອງໄປທາງເໜືອ ກໍມີ
ລາງພ່ອງ ເມືອທົບຂວາ        ລາງພ່ອງເມືອທົບຊ້າຍ ກໍມີ

ລາງພ່ອງ ຊິບຝາດັ້ນ        ທັງແລ່ນເສີນເສີນ ກໍມີ
ແມ່ຜຍາ ກໍຫາກທົມທົມບິນ        ໄລ່ນຳຕາມກົ້ນ
ມັນບໍ່  ປະສົງວາງແທ້        ຊູຊີນຳໄລ່ ໄປນັ້ນ
ເຂົາກໍ  ຜຸນປ່ວງເຂົ້າ        ທາງກະດົ້ນຕອດຕອມ

ລາງພ່ອງ ໂກກໂກກຮ້ອງ        ໄຫ້ຢູ່ເຄັ່ງເຄັ່ງ ກໍມີ
ປີຕາ  ມານດາເອີຍ        ຂ້ອຍຊິຕາຍຄາວນີ້
ລາງພ່ອງ ປະສະໄບຜ້າ        ຜືນແພງປົບແລ່ນ ໄປແລ້ວ
ລາງພ່ອງ ສິ້ນຂວີ່ແລ້ວ        ໂຕນເຕັ້ນແລ່ນແຕ່ໂຕ

ອັນວ່າ  ແມ່ຜຍານີ້        ຂົບຄືນສັງມາປວດ ເຮົາເອີຍ
ຕັ້ງວ່າ  ບໍ່ທ່ອນຮູ້        ຜຍານີ້ຜອກເຫລືອ ແທ້ນໍ

ລາງພ່ອງ ມວຍຜົມເກົ້າ        ຫລຸດລົງກົ້ວກິ່ນ ກໍມີ
ປົກເກືອກກົ້ວ        ເປັນຮ້າຍເກືອກດິນ
ລາງພ່ອງ ອອງເຕົ່າປີ້ນ        ເມືອເຫິງຕາກແດດ ກໍມີ
ຕັ້ງຫາກ ເປັນໜ່າຍແທ້        ອາຍໜ້າໝູ່ເຂົາ ແທ້ນໍ

ລາງພ່ອງ ທາວຊອກສິ້ນ        ຫລຸດຂວີ່ແຕ່ຍາມໃດ
ຕັ້ງຫາກ ແບຂອງແພງ        ອີ່ແມ່ປຸນປັນໃຫ້
ລາງພ່ອງ ຈຸນຈູໜ້າ        ຟາຍນ້ຳຕາທັງແລ່ນ ໄປນັ້ນ
ປະປ່ອຍ ເອີກຕົ່ງໂຕ້ນ        ຜາງຮ້າຍແກວ່ງໄກວ ເຈົ້າເອີຍ

แต่นั้น ຊຽງໝ້ຽງມັນກໍອຶດອຶດໄຫ້ ໃນເຮືອນຄາງຈິ່ມ
ບັດນີ້ ແມ່ຜຍາແກ່ກ້າ ກຸມຂ້າຄອບເຂົາ ແລນໍ

ຊຽງໝ້ຽງ ຈາຈິ່ມໄຫ້ ປ້ອຍດ່າຢູ່ນຳນຳ
ສັງມາ ກຸມຂິບກູ ຜູ້ເອົາມາລ້ຽງ
ຕັ້ງຫາກ ເຫລືອແຮງແທ້ ເຂົາມາເຮັດບາບ ກູນີ້
ຫາກວ່າ ມາໃຫ້ເປັນເຫດຮ້ອນ ເສັຽໜ້າຄອບເຂົາ ນີ້ເດ

ແຂງວ່າ ຍັງຢູ່ເນົາໃນບັ້ງ ບໍ່ເປັນສັງກໍດີຢູ່ ຈິງນໍ
ກໍຫາກ ມາໄດ້ຖືກຖອດໄງ້ ໄຂໃຫ້ແກ່ເຂົາ ດັ່ງນີ້
ກູກໍ ຈັກໃຫ້ຂິບແທ້ແທ້ ທັງມວນໝົດໝູ່ ຈິງດາຍ
ບັດນີ້ ກໍຫາກຂິບພຸ້ນພີ້ ກູນີ້ກໍດັ່ງດຽວ ແລນໍ

*ຕັ້ງວ່າ ເສັຽແຮງກູເດີນດັ້ນ ໄປຫາເອົາກໍແສນຍາກ ແລນາ*
*ຢຽວວ່າ ຊິຂິບແຕ່ເຂົາໝູ່ນັ້ນ ຜັນມາກ້ຽວຕອດໂຕ ນີ້ເດ*
ຕັ້ງບໍ່ ມີຄຸນແທ້ ພາສາສັດຖ່ອຍ ຝູງນີ້
ອັນວ່າ ແຕນຕໍ່ເຜີ້ງຂີ້ຮ້າຍ ກໍຍໍຍ້ອງວ່າດີ ດອກນາ

ຄັນວ່າ ກູຫາກເຫັນຮັງສູແທ້ ໃນດົງຈັບຢູ່
ກູຈັກ ເອົາໄຟລົນຈູດຊ້ຳ ໃຫ້ຕາຍມ້ຽນຊູ່ຕົວ ນັ້ນແລ້ວ
ກໍມາ ຂືນໃຈແທ້ ຝູງແຕນທັງຕໍ່
ກະກຸນວ່າ ສັດຂີ້ຮ້າຍ ສັງມາອ້າງອວດສະຫາວ ແທ້ນໍ

ອັນວ່າ ຕໍ່ເຜີ້ງມີ້ມ ແຕນໄລ່ກຸມຂິບ ທ່ານັ້ນ
ຊຽງກໍຫາກ ອືອືຄາງ ຈິ່ມເລີງທັງໄຫ້
ຝູງໝູ່ ສາວສນົມໄຫ້ ປົບເມືອສວ່າສວ່າ
ເຂົາກໍ ຮອດແຫ່ງຫ້ອງ ທໍແກ້ວຊູ່ຄົນ

ແຕ່ນັ້ນ ທັງຫລາຍພ້ອມ ພາກັນຄາງເຈັບປວດ
ທັງເລົ່າ ອິດຍາກເຍື້ອນ ເມືອໄຫວ້ແຫ່ງພຣະຍາ
ເຂົາກໍ ປະນົມມືໄຫວ້ ເອັ້ງຊຸລີຖວາຍບາດ
ທານໂທດຖ້ອນ ກູນາຂ້າໝູ່ສນົມ ແດ່ຖ້ອນ

พระกํ หากจําผูงข้า ທັງຫລາຍໄປເອົາແມ່ ຜຍານັ້ນ
ດອມທີ່ ຊຽງໝັ້ງພຸ້ນ ບໍ່ມີໄດ້ດັ່ງໃຈ ພຣະເອີຍ
ອັນວ່າ ແມ່ຜຍາມັນຫາກຂຶບຝູງຂ້າ ທັງຫລາຍຊ້ຳຍັງໄລ່ ນຳນັ້ນ
ແຂງບໍ່ ບຸນພຣະຍັງເຫລື່ອມເກົ້າ ຝູງຂ້າກໍສ່ວນຕາຍ ພຣະເອີຍ

ເມື່ອນັ້ນ ພຣະກໍຫລຽວເຫັນໜ້າ ສາວສນົມໂສມຕ່າງ ຊູ່ຄົນນັ້ນ
ພຣະເລີຍ ຫົວຍຸ້ມຍຸ້ມ ຈາຕ້ານກ່າວຖາມ
ອັນວ່າ ໜ້າເຈົ້າເປັນສັງແທ້ ສັງມາເປືອນບິດເຫລ່ວ ສັນນີ້
ຮູ້ວ່າ ເປັນພະຍາດຮ້າຍ ປະດົງຂ້ອນເຍື່ອງໃດ ນັ້ນເດ

ແຕ່ນັ້ນ ເຂົາບໍ່ມີຂານຖ້ອຍ ຖວາຍພຣະຍາທູນບອກ
ຊູ່ຄົນ ຊູ່ຫລຽວເບິ່ງໜ້າ ກັນແລ້ວກໍເລົ່າຫົວ ແທ້ດາຍ

*ລາງພ່ອງ ມູ້ລູ້ໜ້າ ຕາຕີ່ທັງສອງ ກໍມີ*
*ເໝືອນດັ່ງ ຕາໝູພາຍ ຫອກຫລວງບອນມຸ້ງ*
*ລາງພ່ອງ ດັງແລະໜ້າ ບິດດັ່ງພະນຽງໄຖ ກໍມີ*
*ເໝືອນດັ່ງ ເຮົາຫລຽວຫລັງ ບໍ່ງາມໂສມຮ້າຍ*

*ລາງພ່ອງ ແກ້ມຕື່ມໂຕ້ນ ສວດອອກປານຜີ ກໍມີ*
*ເໝືອນດັ່ງ ຄົນສາມຊາວ ເອົາບອນອົມໝ້ຽງ*
*ລາງຄົນ ຜີສິບບ້ຽວ ຕາເປືອນບິດເຫລ່ວ ກໍມີ*
*ຕັ້ງຫາກ ເປັນເຂ້ວເຫລ້ວ ໂສມຮ້າຍກວ່າຊູ່ຄົນ ແທ້ດາຍ*

ເມື່ອນັ້ນ ສາວສນົມຕ້ານ ຂານຄຳພູວະນາດ
ຝູງຂ້າ ບໍ່ອາດຈັກອົດຍາກເຍື້ອນ ດອມໄດ້ແຫ່ງຊຽງ ພຣະເອີຍ
ອັນວ່າ ທັງຫລາຍຂ້າ ບໍ່ໄດ້ເປັນເພັງອື່ນ ອີ່ສັງນາ
ຕັ້ງວ່າ ແມ່ຜຍາຂີ້ຮ້າຍ ຊຽງໝັ້ງຕອດຕອມ ພຣະເອີຍ

ມັນຫາກ ກຸມຂຶບຝູງຕູຂ້າ ທັງຫລາຍໝົດໝູ່ ຈິງແລ້ວ
ຜີວ່າ ຝູງຂ້າບໍ່ຮີບເຕັ້ນ ໜີແທ້ກໍສ່ວນຕາຍ ພຣະເອີຍ
ອັນວ່າ ມັນກະທຳກັມຂ້າ ຝູງສນົມຫລາຍເທື່ອ ເລີງແລ້ວ
ຝູງຂ້າ ບໍ່ອາດອົດຍາກເຍື້ອນ ຄວາມຮ້າຍແຫ່ງມັນ ພຣະເອີຍ

ຂໍໃຫ້ ເໜືອຫົວເຈົ້າ ເອົາມັນໄປໂຜດ ເສັຽຖ້ອນ
ຊຽງນີ້ ຫາກຜອກພົ້ນ ປະມານແທ້ແຕ່ໃດ ພຣະເອີຍ

ເມື່ອນັ້ນ ພຣະກ່າວຕ້ານ ຈາຕໍ່ສາວສນົມ
ສູກໍ ຫາກພາກັນໄປເອົາ ບໍ່ເບິ່ງແຍງດູຜັ້ງນ
ຮູ້ວ່າ ແມ່ຜຍາມັນຮ້າຍ ສູສັງບໍ່ບາຍເບິ່ງ ດູນັ້ນ
ສູຫາກ ບໍ່ໄຂແຕ່ພໍສນ່ອຍໃຫ້ ເຫັນພື້ນແມ່ຜຍາ ນັ້ນດາຍ

ແຕ່ນັ້ນ ຝູງໝູ່ສາວສນົມຟ້າວ ຂານຕອບຣາຊາ
ຊຽງຫາກ ບາຍເອົາມາ ປ່ອນໃສ່ມືຕູຂ້າ
ອັນວ່າ ແມ່ຜຍາມັນໄວ້ ໃນໂກນບັ້ງໄມ້ໃຜ່ ຈິງແລ້ວ
ຊຽງກໍ ບໍ່ໃຫ້ໃຜຮູ້ຮ່າງກົ້ນ ຝູງຂ້າກໍບໍ່ເຫັນ ພຣະເອີຍ

ບາດວ່າ ຊຽງໄຂບັ້ງ ແມ່ຜຍາຕູມແຕກ ມານັ້ນ
ຫລຽວເຫັນ ແຕ່ພໍມັບມູ້ມັບມ້າຍ ຊິຄືເຜີ້ງຕໍ່ແຕນ ພຣະເອີຍ
ຕັ້ງຫາກ ຫລາຍສະບັບແທ້ ຜຍາມັນນ້ອຍໃຫຍ່ ກໍມີ
ລາງພ່ອງ ເຫລືອງສັ້ນປ້ອງ ແດງສ້ວຍບໍ່ທໍ່ກັນ ພຣະເອີຍ

ແຕ່ນັ້ນ ຣາຊາເຈົ້າ ຖາມຫາຝູງແມ່ ຜຍານັ້ນ
ຄັນວ່າ ມັນຫາກມີຕ່າງເຊື້ອ ໃຫ້ສູເຈົ້າບອກມາ ແທ້ເນີ

ໃຫ້ມັນ ໝົດຊູ່ເຊື້ອ ຊັ້ນຊື່ແນວເຂົາ ແທ້ດາຍ
ຢ່າໃຫ້ ມັນຫລົງຫລໍ ບອກມາຜອງຖ້ວນ
ແຕ່ນັ້ນ ສາວສນົມຟ້າວ ຂານຄຳໂດຍອາດ
ຕາມແຕ່ ຝູງຂ້ານ້ອຍຈື່ໄດ້ ທໍ່ໃດແທ້ຊິບອກພະລັນ ພຣະເອີຍ

ອັນວ່າ ແມ່ຜຍາມັນນັ້ນ ກົ້ນກ່ານລາຍລາຍ ກໍມີ
ມັນແຮ່ງ ບິນມາຂົບ ຂາດໄປທັງຊີ້ນ
ອັນວ່າ ຜຍາລາງແມ່ນັ້ນ ເຫລືອງແດງຄ່ອງແຄ່ງ ກໍມີ
ເຂົາແຮ່ງ ຂົບພຸ້ນພີ້ ກໍໃຈແທ້ອີ່ຫລີ່ ພຣະເອີຍ

ແມ່ຜຍາ ແນວນຶ່ງນັ້ນ ຄືຮູບແມງວັນ ນີ້ແລ້ວ
ມັນແຮ່ງ ດົນນຳຂົບ ບໍ່ຢາກໜີ ດູຊ້າ

ອັນວ່າ  ແມ່ຜຍາແນວນຶ່ງນັ້ນ    ຍັງດູນ້ອຍເຫລືອງດຳພໍສນ່ອຍ
ມັນນັ້ນ  ຍັງບໍ່ຮ້າຍ    ພໍເປື້ອງປ່າຍເສັ້ງ ພຣະເອີຍ

ແມ່ຜຍາ ແນວນຶ່ງນັ້ນ    ແດງແດງໜ້ອຍນຶ່ງ ກໍມີ
ຝູງນັ້ນ  ຕັ້ງວ່າກ້າຂນາດຮ້າຍ    ປະສົງດັ້ນຕອດໃນ ພຣະເອີຍ
ອັນວ່າ  ແມ່ຜຍາແນວນຶ່ງນັ້ນ    ປ້ອງກົ່ວກາງຕົວ ກໍມີ
ເຂົານັ້ນ ບິນມາແປະ    ຕອດເຊຊວນລົ້ມ

ຕັ້ງຫາກ ຫລາຍສະບັບແທ້    ແມ່ຜຍາດູຫລາກ ຈິງນາ
ແມ່ຜຍາ ມັນຫາກໝົດທໍ່ເວົ້າ    ເຫລືອນັ້ນແມ່ນບໍ່ມີ ພຣະເອີຍ
ບໍ່ກວ່າ  ສໍຣະຍານເຈົ້າ    ຫລິງເຫັນໃຫ້ຄຶດຮ່ຳ ດູຖ້ອນ
ຄັນວ່າ  ແມ່ຜຍາເລິງທໍ່ນີ້    ມັນຕັ້ງຢາກໃຫ້ຕາຍ ດອກນາ

ນັບແຕ່  ມັນຕີຂ້າ    ຍັງຕູຫລາຍເທື່ອ ເສັ້ງແລ້ວ
ຂໍແກ່  ມະຫາຣາດເຈົ້າ    ກໍຢ່າລ້ຽງແຫ່ງມັນ ເທາະນາ

ອັນວ່າ  ຊູ່ເທື່ອນັ້ນ    ກໍຍັງຄ່ອຍອົດອອມ ພຣະເອີຍ
ເທື່ອນີ້  ຕັ້ງວ່າເຫລືອແຮງຫລາຍ    ສແມ່ງຕາຍນໍຣະມ້ຽນ
ຕັ້ງຫາກ ເປັນທີ່ເຫລືອໃຈແທ້    ພໍຕາຍເຈັບປວດ ຈິງນາ
ແມ່ຜຍາ  ມັນສັງມາຂີ້ຮ້າຍ    ເຫລືອລົ້ນບໍ່ຄື ພຣະເອີຍ

ອັນວ່າ  ຝູງຢູ່ໃກ້ພຸ້ນພີ້    ມີແຕ່ແມ່ຜຍາຂົບ ພຣະເອີຍ
ມັນຫາກ ເປັນທີ່ເຫລືອກຳລັງເສັ້ງ    ຊູ່ຄືນຝູງຂ້າ
ຜີວ່າ  ມັນບໍ່ຈຽມຕົວຂ້າ    ກໍຄວນຈຽມພຣະບາດ ແດ່ແມ
*ຍັງວ່າ  ຕູເປັນຂ້ອຍພຣະເຈົ້າ    ຊິແຝງເຝົ້າຊ່ວງຕີນ ພຣະດາຍ*

ນັບແຕ່  ມາເປັນຂ້ອຍ    ເໝືອຫົວກໍຫລາຍຂວບ ປີແລ້ວ
ພຣະຫາກ ຍັງຍ່ອມລ້ຽງ    ບໍ່ຕີຂ້າດັ່ງມັນ ແທ້ດາຍ

*ອັນນີ້  ທຽບດັ່ງໄຟເຜົາໄໝ້    ຍັງພືນກາອງໃຫຍ່ ນັ້ນແລ້ວ*
*ມັນຫາກ  ເຮືອງຮຸ່ງແຈ້ງ    ພອຍຊ້ຳພັດຕື່ມແຖມ ນີ້ດາຍ*

ເມື່ອນັ້ນ ທະວາຣີທ້າວ ຂານສນົມສາວໜຸ່ມ
ມັນຫາກ ເປັນດັ່ງສູວ່າແລ້ວ ກູຊິຂ້າໃຫ້ຕາຍ ແທ້ດາຍ
ເຈົ້າເລົ່າ ຟັງຄຳແທ້ ສາວສນົມສັບສົ່ງ
ຕັ້ງບໍ່ ຄຶດຮອດຄຳພໍ່ເຈົ້າ ຈາຂ້າແຫ່ງຊຽງ ນັ້ນດາຍ

ບັດນີ້ ກູຈັກທັນມັນໃຫ້ ມາເລົ່າຄວາມຈິງ
ຫາກຄຳ ມັນຂານໄຂ ລ່າຍລວງບິດບ້ຽວ
ກູຈັກ ລົງທັນແທ້ ຕາຍເສັ້ຽກັບບ່ອນ ຈິງແລ້ວ
ຈັກເອົາ ໃຫ້ມັນດັບບາດນີ້ ຊິຕາຍຊ້າຊາກຕາວ ແທ້ດາຍ

ແຕ່ນັ້ນ ສາມສນົມພ້ອມ ຄວາມດຽວກອຍກ່າວ
ອັນວ່າ ພຣະໂຜດໃຫ້ ກໍສິນແທ້ໂທດມັນ ຢູ່ແລ້ວ
ຕັ້ງຫາກ ສິນຄວນຂ້າ ຟັນເສັ້ຽໃຫ້ມັນສ່ວງ ຄວນແລ້ວ
*ບໍ່ໃຊ່ວ່າ ຈັກໃຫ້ມັນຂົ່ມຂີ່ແພ້ ພຣະຍາເຈົ້າບໍ່ໃສ່ຄືນ ນັ້ນລື*

ຄ້ອນວ່າ ເຂົາກ່າວແລ້ວ ລາຈາກພູທອນ
ເມືອທໍປາງ ນັ່ງນອນຄາງໄຫ້
ເມື່ອນັ້ນ ພຣະກະສັດໄທ້ ທະວາຣີອົງອາດ
ເຈົ້າກໍ ຄຶດໂກດກ້າ ຂົມໃຫ້ແກ່ຊຽງ ມາກແລ້ວ

ພຣະກໍ ບົນບອກໃຫ້ ຂ້າມະຫາດພາຍໃນ
ສູຈົ່ງ ໄປທັນຊຽງ ຮີບມາດຽວນີ້
ແຕ່ນັ້ນ ເຂົາຝູງຂ້າ ໂດຍຄຳເລີຍແລ່ນ
ຮອດທີ່ ຊຽງໝັ້ຽງແລ້ວ ຈາຕ້ານບອກມັນ

ບັດນີ້ ຣາຊາໃຫ້ ທັນຊຽງເມືອຮີບ ຈິງດາຍ
ທ່ານຢ່າ ໄດ້ຢູ່ຊ້າ ເມືອພ້ອມພໍ່າຕູ ນີ້ຖ້ອນ

ແຕ່ນັ້ນ ຊຽງກ່າວຕ້ານ ຖາມໝູ່ມາທັນ
ຈັກວ່າ ເປັນປະການໃດ ບອກມາພໍແຈ້ງ
ບໍ່ຮ່າງວ່າ ຕົນຕົວຂ້ອຍ ຄືນດີຜິດອາດ ຍາລື
ຂໍແກ່ ເຈົ້າພີ່ນ້ອງ ຄືນໃຊ້ບອກຮຽມ ແດ່ຖ້ອນ

ແຕ່ນັ້ນ ເຂົາຕອບຖ້ອຍ　　ບົນບອກຕາມຄຳ
ອັນວ່າ ສາວສນົມທູນຣາຊາ　　ວ່າຊຽງພາງານແທ້
ພອຍວ່າ ເອົາແມ່ຜຍາຮ້າຍ　　ຂັບເຂົາໝົດໝູ່ ຈິງດາຍ
ເກືອບສແມ່ງ ຈອນມອດມ້ຽນ　　ຕາຍສ້ຽງຊູ່ຄົນ ວ່າດາຍ

ແຕ່ນັ້ນ ຊຽງຕອບຖ້ອຍ　　ຮັບພາກຝູງເຂົາ
ຂ້ອຍກໍ ບໍ່ໄດ້ພາງານເຂົາ　　ໝູ່ສາວສນົມແທ້
ເພື່ອນຫາກ ເຮັດບາບຂ້ອຍ　　ແມ່ຜຍາຊ້ຳປ່ອຍ ເສັຽນາ
ແຕ່ນັ້ນ ທູຕາຈັດຮີບຮ້ອນ　　ດອມເຈົ້າດ່ວນໄປ ກ່ອນເຖີ້ນ

ເຈົ້າຈິ່ງ ເມືອກ່ອນຖ້ອນ　　ທູນຕໍ່ພຣະຍາເມືອງ ຊອບດາຍ
ຄັນຫາກ ເກີນຄວາມຈິງ　　ຈິ່ງຫາຕາແກ້ ຊຽງເອີຍ
*ຊາດທີ່ ປາໃນນ້ຳ*　　*ລອຍລຳເຕັ້ນດີດ*
*ອາດຈັກ ຫວິດວ່າງຮ້າຍ*　　*ແຫກວ້າງວ່ານກວາມ ແທ້ດາຍ*

ຕູຂໍ　*ອາຣາດທະນາ*ເຈົ້າ　　ຊຽງເມືອເສັຽກ່ອນ
ຫລອນວ່າ *ພຣະຍ່ຳເກົ້າ*　　ພາຍພຸ້ນຢູ່ຄອງ ບໍ່ຮູ້

ເມື່ອນັ້ນ ຊຽງກໍອອກປາກຕ້ານ　　ຂານວ່າໂດຍໂດຍ
ຂ້ານ້ອຍ ກໍບໍ່ຂືນຈອມຫົວ　　ຊິຄອຍເມືອດອມເຈົ້າ

ສົມວ່າ ເປັນນ້ອງແກ້ວ　　ພຣະຍາໃຫຍ່ທະວາຣີ ແທ້ດາຍ
ຂ້ອຍບໍ່ໄດ້ ມີຄຳຂືນຂັດ　　ຊິຄ່ອຍທູນຕາມເລື້ອງ
ຊຽງກໍ ບາຍເອົາຜ້າ　　ຜືນດີມານຸ່ງ
ແລ້ວເລົ່າ ສູບສອດເສື້ອ　　ແພລົ້ວຄາດຄຽນ

ຕັ້ງຫາກ ປ່ອຍລ່ອຍໜ້າ　　ຍົວຣະຍາດລົງເຮືອນ
ໄປພະລັນເປືອງ　　ພ່ຳດອມຄົນໃຊ້
ຄັນວ່າ ພໍປະມານໄດ້　　ຊຽງເຖິງຜາສາດ
ມັນຈິ່ງ ຂຶ້ນຂາບໄຫວ້　　ປະນົມນິ້ວຄ່ອຍຖແລງ

---

ອາຣາດທະນາ (ປລ ອາຣາທນາ) = ໄຫວ້ວອນ, ເຊີນ / ພຣະຍ່ຳເກົ້າ (ລກ) ໃນທີ່ນີ້ ພຣະຍາ

ຂໍກ່າວ ທານໂທດຖ້ອນ　　ຍັງຂມ່ອມໂທສັງ ຂ້ານ້ອຍດາຍ
ຂ້າພຣະບາດ ກໍຫາກໂດຍຄຳພຣະຍາ ທ່ຽວພະລັນມາແລ້ວ
ເມື່ອນັ້ນ ທາວະຣິທ້າວ　　ໂກຫາຄຽດຢູ່
ກໍເລົ່າ ອອກປາກຕ້ານ　　ຂານຖ້ອຍຕອບຊຽງ

ແຕ່ນັ້ນ ຊຽງເລົ່າຍັງດົນຕ້ານ　　ທູນຖແລງຕາມເຫດ ຈິງແລ້ວ
ມັນກໍ ເລົ່າແຕ່ເຄົ້າ　　ເຖິງເທົ້າຮອດປາຍ ແທ້ດາຍ
ຂ້າກໍ ວ່າຢາກເອົາມາໃຫ້　　ແມ່ຜຍາຖວາຍບາດ ຈິງນາ
ບັດນີ້ ພອຍເລົ່າເປັນເຫດຮ້າຍ　　ເສັ້ງສ້ຽງແມ່ຜຍາ ເຈົ້າເອີຍ

ຕັ້ງຫາກ ກ້າຂບາດແທ້　　ຜຍາແມ່ບິນເປັນ ເຈົ້າເອີຍ
ອັນວ່າ ສາວສນົມໄປ　　ຍາດໄຂຍັງບັ້ງ
ອັນວ່າ ແມ່ຜຍາດີແທ້　　ເລີຍຕູມແຕກອອກ ຈິງແລ້ວ
ຕັ້ງບໍ່ ຄາຄ້າງບັ້ງ　　ເສັ້ງສ້ຽງຂູ່ຕົວ ພຣະເອີຍ

ເຂົາກໍ ຂົບເອົາແທ້　　ສາວສນົມໝົດໝູ່ ຈິງແລ້ວ
ທັງເລົ່າ ໄລ່ຂົບເຈົ້າຜູ້ລ້ຽງ　　ຕົວຂ້າກໍດັ່ງດຽວ ພຣະເອີຍ
ແຕ່ນັ້ນ ທະວາຣິທ້າວ　　ຟັງຄຳຊຽງກ່າວ
ພຣະເລີຍ ຖອດດາບງ້າວ　　ກຳໄວ້ວ່າຊິຟັນ

ກູຈັກ ເອົາມັນມຸດມອດມ້ຽນ　　ລົດຊົ່ວປາງດຽວ ນີ້ດາຍ
ຕັ້ງໃຫ້ ລືຊາຕົກ　　ຕ່າງເມືອງແດນດ້າວ
ເພື່ອວ່າ ໂກຫາກ້າ　　ຟັງຄຳສນົມສໍ່
ແລ້ວເລົ່າ ໃຈອູ່ຮ້ອນ　　ຄາວນ້ອຍນຶ່ງຫາຍ

*ແຕ່ນັ້ນ ຣາຊາເຈົ້າ　　ຮົມເພິງຄະນຶງມາກ*
*ຄຶດເພື່ອ ພໍ່ສັ່ງໄວ້　　ປາງນັ້ນສແມ່ງມົວ ແທ້ບໍ*

*ເຈົ້າກໍ ວ່າໃຫ້ກູນາລ້ຽງ　　ຍັງຊຽງຜອງໝົດຄາບ ຈິງນາ*
*ຢ່າໄດ້ ທຳໂທດຮ້າຍ　　ພໍຂ້າຂາດຊີວັງ ວ່າດາຍ*
*ແມ່ນວ່າ ຊຽງກະທຳຜິດແທ້　　ປານໃດກໍດົນໂຜດ ວ່າດາຍ*
*ເຫດວ່າ ພໍ່ຫາກໄດ້ຂອດຄຸ້ມແກ້ວ ຊິເອົາລ້ຽງພໍ່າກັນ ແທ້ນາ*

ພຣະກໍ ຍັງສອນສັ່ງໄວ້ ທຸກເຍື່ອງຄວາມໝົດ ຢູ່ແລ້ວ
*ບໍ່ໃຊ່ ວ່າຈັກຟັນມັນເສັຽ ກໍສ່ວນກາຍຄຳເຈົ້າ*
*ເກາງທໍ່ ເສັຽສັດແທ້ ຄຳບິດາສອນສັ່ງ ດັ່ງນັ້ນ*
ຢ້ານທໍ່ ຂຳເຂືອກຮ້ອນ ເມືອງບ້ານບໍ່ກະເສີມ ນັ້ນດາຍ

ເຈົ້າເລົ່າ ພິຈານແລ້ວ ຫາຍຄຳຄຶດຄຽດ
ກໍຈຶ່ງ ປະດາບງ້າວ ວາງໄວ້ບໍ່ບາຍ ແທ້ດາຍ
ເມື່ອນັ້ນ ທະວາຣີທ້າວ ຈາຊຽງສົມຄຽດ
ບັດນີ້ ມຶງຢ່າມາຂາບໄຫວ້ ທູນໄທ້ແຫ່ງກູ ເທາະເນີ

*ກູກໍ ບໍ່ຢາກເຫັນໜ້າ ຕົວມຶງສັກເທື່ອ ເສັຽແລ້ວ*
*ຕາບທໍ່ເທົ້າ ດິນປີ້ນກໍຈຶ່ງມາ ແທ້ເນີ*

ອັນນຶ່ງ ມຶງຢ່າໄດ້ລ່ວງເຂົ້າ ຄຸ້ມຂ່ວງຣາດຊະວັງ ນັ້ນເນີ
ຄັນວ່າ ມຶງຫາກຍັງດົນຄວາມ ສ່ວນຊີຕາຍມໍຣະມ້ຽນ
ກູກໍ ຈັກຈຳເຂົາໃຫ້ ເອົາໜັງແປງຜູກ ເສັຽແລ້ວ
ຈຶ່ງຈັກ ຕັດດ້ວຍງ້າວ ຟັນຂ້າຂາດຄໍ ແທ້ແລ້ວ

ແຕ່ນັ້ນ ຊຽງຈຶ່ງວັນທາໄຫວ້ ຣາຊາລາເລີກ
ທັງເລົ່າ ຕ້ານຊັ່ງຊ້ຳ ຄຳຜຽນຊູ່ອັນ

*ໂອນໍ ເໜືອຫົວເຈົ້າ ຣາຊາກິ້ວໂກດ ຈິງແລ້ວ*
*ຖືວ່າ ກູນີ້ເປັນຂ້ອຍຊັ້ນ ສເນີດ້ານໄພ່ພົນ ແລນໍ*
ຂ້າກໍ ບໍ່ຢາກເຫັນໜ້າ ຣາຊາເທີງເຕີບ ເສັຽແລ້ວ
ເພາະເພື່ອ ພຣະພີ່ເຈົ້າ ຊວງຮ້ອນໂກດເຄັມ ທັ້ນແລ້ວ

ຂ້າກໍ ໄດ້ແຕ່ຄຶດຮອດເຈົ້າ ຍັງຂມ່ອມຈອມຫົວ ມາກແລ້ວ
ບໍ່ຊ່າ ຈັກແທງຄໍຕາຍ ກໍໂລດເປັນເວນຊ້ຳ
ບັດນີ້ ຕາມກັມຖ້ອນ ຕາມບຸນຕາມບາບ ເສັຽແລ້ວ
ຕົວຫາກ ໄດ້ຜິດຕໍ່ອາດເຈົ້າ ເວນຊິຢູ້ສິ່ງໄກ ແລນໍ

ຄອບວ່າ ຊຽງຖແລງແລ້ວ ລົງໜີເຮວຮີບ
ເລີຍເລົ່າ ເຕີະປາກອ້າ ຂົມໄວ້ຄຽດເລິງ
ແມ່ນວ່າ ຣາຊາເຈົ້າ ຊັງກູກໍຕາມຊ່າງ
ປະໄວ້ ທັ້ນກອ່ນຖ້ອນ ຍັງຊິແກ້ບາດລຸນ ດອກນາ

ແຕ່ນັ້ນ ຊຽງເລົ່າເມືອເຖິງຫ້ອງ ເຮືອນຕົນລີ້ຢູ່
ບໍ່ໄດ້ ຄຶດເດືອດຮ້ອນ ສັງແທ້ເຍື່ອງໃດ

ອັນວ່າ ຮຸ່ງຄ່ຳເຊົ້າ ກໍທຳວຽກການເຮືອນ
ສິ່ງໃດ ຄວນປົວແປງ ຄ່ອຍຖນອມພຽນສ້າງ
ຄອນຄອນ ຍັງຄະນິງພໍ້ ເມືອງຕານິເສັງທ່າ
ຄຶດເຖິງ ຄາວຊ່ວງໃຊ້ ເມືອງບ້ານຊ່ອຍພຣະຍາ

\>> ຄັນວ່າ ເຖິງເມື່ອຄືນນານໄດ້ ເຈັດວັນມາຮອດ
ກໍຫາກ ເປັນເຫດນີ້ ພຣະຍາເຈົ້າ*ລຽບວຽງ* ແທ້ດາຍ

ຕັ້ງຫາກ ເປັນແຕ່ຈາຮີດແທ້ ມາແຕ່ບູຮານ
ພຣະກໍ ສະເດັດທົ່ງຄໍສານ ລຽບເມືອງວຽນລ້ອມ
ເມື່ອນັ້ນ ທະວາຣິທ້າວ ຣາຊາຍົວຣະຍາດ
ພຣະກໍ ຂຶ້ນຂີ່ຊ້າງ ຍົວຣະຍ້າຍອອກໄປ

ອັນວ່າ ຝູງໝູ່ຄົນອວນໜ້າ ພາຍຫລັງເຫລືອມາກ
ທັງເລົ່າ ດາບຫອກງ້າວ ລຽນຊະລ້າຍແຫ່ແຫນ ແທ້ແລ້ວ

ແຕ່ນັ້ນ ຊຽງໜັ້ງງໄດ້ ຍິນຂ່າວພຣະຍາມາ
ມັນຈຶ່ງ ແຍງຫົນທາງ *ນອກວຽງ*ຕັນໜ້າ
*ຊຽງຈຶ່ງ ຂຸດຂຸມແລ້ວ* *ເອົາຫົວຝັງຢູ່*
*ເລີຍເລົ່າ ປິ່ນກົ້ນຂຶ້ນ* *ເມືອຟ້າເງີກເງີຍ*

ຕັ້ງຫາກ ກຸດຈຸດກົ້ນ ປານດ່າງດຳແດງ ກໍມີ
ທັງຂາວຊຽວ ເຂດໄຂງຂວງກົ້ນ

ອັນວ່າ ທຳມັນປີ້ນ ເມືອເທິງຕາບຊາບ
ອັນວ່າ ໂຄັຍແບ້ນປີ້ນ ເມືອຟ້າໂງກໂງ

ອັນວ່າ ຝູງຄົນທຽວເມືອໃຕ້ ເມືອເໜືອເຂົາກໍເບິ່ງ
ຕັ້ງວ່າ ເປັນທີ່ສັງເວດແທ້ ຜາງຮ້າຍຊວດປະມານ
ອັນວ່າ ຝູງໝູ່ສາວຮາມຮ້າງ ຫົວຊຶມຊີສວ່າ
ສັງມາ ເປັນແຂ້ມແຫລ້ມ ໂຄັຍແບ້ນກໍຫາກຊັນ

ສັງມາ ເປັນຂີ້ຫລີ້ ຊ້ຳພັດຕື່ມເປັນບັກ ດັ່ງນີ້
ເຂົາເລົ່າ ແຊວແຊວຫົວ ເປີບໃຈຊຶມສະອື້ນ
ລາງຄົນ ຍອງຍອງເຂົ້າ ບາຍເອົາໄມ້ເຊັ່ງ ກໍມີ
ຊຽງເລົ່າ ນາບດ່າປ້ອຍ ສຽງຮ້າຍແກ່ເຂົາ ທັ້ນແລ້ວ

ແຕ່ນັ້ນ ທົມທົມພື້ນ ພຣະຍາຫລວງເລີຍຮອດ
ເຈົ້າກໍ ຫລຽວພຸ້ນພີ້ ເຫັນກົ້ນແຫ່ງຊຽງ
ເມື່ອນັ້ນ ພຣະຍາກໍຈຶ່ງຖາມດູແທ້ ດອມເຂົາຂ້າມະຫາດ
ອັນວ່າ ຜ່ານໜ້ານັ້ນ ພາຍພຸ້ນແມ່ນອີຫຍັງ ນັ້ນເດ

ຈັກວ່າ ແມ່ນຄົນດີຫລີ້ ຫລືຄົນຕາຍກໍບໍ່ໃຊ່ ເຮົາເອີຍ
ຮູ້ວ່າ ຄົນຫາກຕາຍຊາກແລ້ວ ເຂົາມ້ຽນບໍ່ດີ ແທ້ດາຍ
ສັງມາ ເປັນໂກ້ງໂຈ້ງ ຕັ້ງຢູ່ໂຈນໂຈ ດັ່ງນັ້ນ
ໃນແຫ່ງ ທົນທາງທຽວ ທີ່ຈັກໄປພາຍໜ້າ

ແຕ່ນັ້ນ ຝູງໝູ່ຄົນເຊັ່ງຊັ້ນ ເລີຍທູນເທວະຣາດ
ອັນນັ້ນ ຕັ້ງຫາກແມ່ນງ່າມກົ້ນ ບັກຊຽງໝັ້ງອີ່ຫລີ ພຣະເອີຍ
*ເພື່ອວ່າ ພຣະຍາບໍ່ຢາກເຫັນໜ້າ ຕົວຊຽງສັກເທື່ອ ຈິງແລ້ວ*
*ບັດນີ້ ມັນກໍຊຸກເຊື່ອງໜ້າ ແບນກົ້ນໃຫ້ເຫັນ ພຣະເອີຍ*

ແຕ່ນັ້ນ ເຈົ້າກໍຕິກຄະມ່າໜ້າ ລືມເພດປີຕິ
ອັນວ່າ ບຸນເຮືອງພຣະ ຄຽດເລີງບໍ່ມີແລ້ວ
ກໍຈຶ່ງ ໃຫ້ເຂົາອວ່າຍໜ້າຊ້າງ ຄືນສູ່ໂຮງຄຳ
ພຣະກໍ ຫາກພາກັນກັບຄືນເສັຽ ບໍ່ຢາກເຫັນຍັງກົ້ນ

ເພື່ອວ່າ ຊຽງແຕ່ງທ້າງ　　ແກ້ຕອບພຣະຍາເມືອງ ນັ້ນແລ້ວ
ພຣະເລີຍ ຫັນຄືນຫລັງ　　ບໍ່ກາຍໄປໃກ້
ແລ້ວຈຶ່ງ ເຕືອນພົນຍ້າຍ　　ຄືນໜີໃຫ້ສວ່າງ
*ຕັ້ງວ່າ ເປັນທີ່ສັງເວດກັ້ນ　　ຊຽງໝັ້ງງລັດທາງ ແທ້ດາຍ*

ຕັ້ງຫາກ ປ່າງງ່າງກັ້ນ　　ຄືສິ່ງຄົນຕາຍ ນັ້ນແລ້ວ
ອັນວ່າ ຝູງໝູ່ແມງວັນຊຽວ　　ເວີ່ນຕອມພີພື້ນ
ຄັນວ່າ ພຣະຫາກອວຍໜ້າຊ້າງ　　ຄືນສູ່ໂຮງຄໍາ ເມື່ອໃດ
ຊຽງກໍ ຄືນເມືອເຮືອນ　　ດັ່ງດຽວພຣະຍາເຈົ້າ

\>> ຜໍ່ເຫັນ ຄື່ນຄື່ນກ້ອງ　　ຟັງຮ່ວມລົມພານ ພຸ້ນເຢີ
ພໍເມື່ອ ເຖິງດີຖີ　　ປີໃໝ່ມາແຊມຊ້ອນ
ເຖິງຂວບ ເດືອນຣະດູກ້ຽວ　　ເພັງແຮມດັບຖ່າຍ
ເດືອນຫົກ ມາຮອດແລ້ວ　　ເດືອດເຈັດເຂົ້າລ່ວງເຖິງ

ດີແຕ່ ຝົນຢາດຍ້ອຍ　　ຮໍາຊຸ່ມແດນນາ ແລນໍ
ຝູງໝູ່ ຊາວນາຕຽມ　　ຄາດໄຖທັງກ້າ
ຝົນລົງ ດິນນາໂຫ້ງ　　ຊິປັກດໍາກ້າໃໝ່
ມ່ວນຊື່ນ ຝູງໄພ່ນ້ອຍ　　ກະທໍາສ້າງຊ່ອຍວານ

ເຖິງຄາວ ຊາວນາຕົກແຕ່ງທ້າງ　　ຕຽມຄາດແປງໄຖ
*ຍາມນັ້ນ ນາຕົມຫລວງ　　ໂງ່ນດິນໄຖປີ້ນ*
ແຕ່ນັ້ນ ຊຽງໝັ້ງງຢັ້ງມ　　ເຂົາໄຖຕາມທົ່ງ
ກ້ອນຂີ້ໄຖ ກັບຕ່າວປີ້ນ　　ເຕັມທ້ອງທົ່ງຫລວງ ແທ້ແລ້ວ

ບັດນີ້ ຄວນທີ່ກູເມືອໄຫວ້　　ຈອມເມືອງຕົນພໍ່ ຈິງແລ້ວ
ເຫດວ່າ ແຜ່ນດິນມັນຫາກປີ້ນ　　ເສັຽແທ້ຊູ່ພາຍ ແລ້ວເດ
ແຕ່ນັ້ນ ຊຽງກໍເມືອທູນໄຫວ້　　ຣາຊາເຮວຮີບ
ຂຶ້ນສູ່ຫ້ອງ　　ໂຮງກວ້າງຂາບປະນົມ

ເມື່ອນັ້ນ ທະວາຣິທ້າວ　　ເຫັນຊຽງກົ້ມຂາບ ລົງນັ້ນ
ເຈົ້າກໍເລີຍ ມີອາດທ້ວງ　　ພໍສະດຸ້ງຕື່ນຕົນ

ບັດນີ້ ບັກຂີ້ຮ້າຍ ມາເຫດສັນໃດ
ມຶງກໍ ຜອກມາລວນ ລື່ນຄວາມກູແທ້

ກູກໍ ຍັງກ່າວໄວ້ ເປັນສາກສີເທິງ ແທ້ດາຍ
ເມື່ອໃດ ທໍຣະນີຫລວງ ແປ່ໄປດິນປີ້ນ
ມຶງກໍຈຶ່ງ ມາທູນໄຫວ້ ເຖິງກູແຄວນຊອບ ຈິງດາຍ
*ບັດນີ້ ດິນບໍ່ທັນແປ່ປີ້ນ ມຶງສັງຟ້າວຮີບມາ ນີ້ເດ*

ບັດນີ້ ໂທເຣຮ້າຍ ຕົວມຶງຈັກເປັນໂທດ ເສັຽແລ້ວ
ເຫດວ່າ ມຶງລ່ວງເຂົ້າ ກາຍຄຸ້ມຮອດກູ ແທ້ດາຍ

ແຕ່ນັ້ນ ຊຽງຕອບຖ້ອຍ ຮັບພາກພູບານ
ແມ່ນວ່າ ທໍຣະນີຫລວງ ແຫ່ງພຣະຍາກໍດາປີ້ນ
ຂ້າຈຶ່ງ ມາທູນໄຫວ້ ຈອມຫົວບຸນມາກ ຈິງແລ້ວ
ຜີບໍ່ ມີດັ່ງນັ້ນ ກໍລອງຢ້ຽມເບິ່ງດູ ຫັ້ນຖ້ອນ

ອັນວ່າ ພາຍນອກຄຸ້ມ ໂຂງເຂດທະວາຣີ ທີ່ພຸ້ນ
ມັນຫາກ ເປັນແຕ່ບຸບເພມາ ຮອດຍາມເຄີຍປີ້ນ
ເມື່ອນັ້ນ ທະວາຣີທ້າວ ຈຳເຂົ້າຂ້າມະຫາດ
ບັດນີ້ ສູຈິ່ງໄປເບິ່ງຖ້ອນ ພາຍພຸ້ນ*ນອກວຽງ*

ຄັນວ່າ ເຫັນດິນປີ້ນ ທາງເທິງລົງລຸ້ມ
ແມ່ນດັ່ງ ຊຽງວ່ານັ້ນ ສູຟ້າວຮີບມາ ທ່ຽວເຖີ້ນ
ເມື່ອນັ້ນ ຄົນເຊັງໃຊ້ ເລີຍໄປພາຍນອກ *ວຽງ*ພຸ້ນ
ເຂົາເລີຍ ເບິ່ງພຸ້ນພີ້ ເຫັນແລ້ວຮີບຄືນ

ເຂົາກໍ ມາຮອດແລ້ວ ກົ້ມຂາບທູນຖວາຍ
ຝູງຂ້າ ໄປແວນເບືອງ ເບິ່ງດູທັງຄ້າຍ
*ກໍທໍ່ ເຫັນແຕ່ຂີ້ໄຖປີ້ນ ເຕັມນາຄັບຄັ່ງ ຈິງແລ້ວ*
*ອັນວ່າ ດິນຫາກຂໍາເຂືອກປີ້ນ ເອງນັ້ນກໍບໍ່ມີ ພຣະເອີຍ*

ເມື່ອນັ້ນ ທະວາຣີທ້າວ ຮົມເພິງຄະນຶງມາກ
*ກູຈັກວ່າ ບໍ່ແມ່ນຫລີ້ ດິນກໍປິ້ນອີ່ຫລີ ນັ້ນດາຍ*
*ເມື່ອວ່າ ກູຈັກຊ້ຳໂກດໃຫ້ ວ່າບໍ່ແມ່ນຄວາມຊຽງ ດັ່ງນັ້ນ*
*ດິນກໍ ຫາກເອົາທາງເທິງ ປິ່ນລົງທາງພື້ນ*
ແຕ່ນັ້ນ ພຣະກໍຖແລງຄຳຕ້ານ ລົມຊຽງໂດຍຮີບ
ນຶງນີ້ ບໍ່ເສັ້ງແຮງກູລ້ຽງໄວ້ ເສັ້ງເຂົ້າແຫ່ງກູ ແທ້ນໍ

ເມື່ອນັ້ນ ຣາຊາເຈົ້າ ເລີຍຫົວຊົມຊື່ນ
ຊຽງໝ້ຽງ ເວົ້າທໍ່ນັ້ນ ລາເຈົ້າເລີກເມືອ
ຄັນວ່າ ເມືອເຖິງຫ້ອງ ເຮືອນຕົນນອນຢູ່
ບໍ່ໄດ້ ຄຶດເດືອດຮ້ອນ ເຄືອງແຄ້ນເຍື່ອງໃດ ແທ້ດາຍ

>> ບັດນີ້

ຈັກກ່າວເຖິງ ສາມມະເນນນ້ອຍ ເມືອງທາວະຣີຕົນນຶ່ງ ກ່ອນແລ້ວ
ເຈົ້າກໍ ຢູ່ຝ່າຍໃຕ້ ພາຍພຸ້ນວັດໃນ
ນັບແຕ່ ອາຍຸໄດ້ ເຈັດປີເລີຍບວດ
ກໍທໍ່ ເດີນດຸ່ງດັ້ນ ນຳເຈົ້າພໍ່ຄຣູ

ອັນວ່າ ປິຕາໄທ້ ມານດາພໍ່ແມ່ ຈົວນັ້ນ
ເຈົ້າກໍ ຢູ່ຝ່າຍເບື້ອງ ພາຍພຸ້ນຝາກນັດທີ ແທ້ດາຍ

ຈົວກໍ ເນົາສືບສ້າງ ຮຽນຮ່ຳຄອງທັມ
ຄຶດຢາກ ໃຫ້ເປັນບຸນຄຸນ ແຜ່ຜີນຜາຍກວ້າງ
ຂວບເມື່ອ ຫລາຍປີໄດ້ ຫລາຍເດືອນແຖມຖ່າຍ ມານັ້ນ
ເຈົ້າເລົ່າ ຄຶດຮອດຮູ້ ມານດາໄທ້ອອກຕົນ

ເມື່ອນັ້ນ ຈົວໃຄ່ຈັກໄປຢາມບ້ານ ລົງເຮືອຟ້າວຮີບ
ແລ້ວຈຶ່ງ ແດບແດບຍ້າຍ ຕົນດຽວຜ້າຍຈາກໄປ
ຈົວກໍ ເຮວພະລັນຟ້າວ ພາຍໄປໂດຍຮີບ
ເລີຍເລົ່າ ເຖິງທ່າກວ້າງ ຊຽງໝ້ຽງບໍ່ນານ

แต่นั้น ຊຸງກໍປີປາຍຕ້ານ ຖາມດູຫາເຫດ
ຫລອນວ່າ ຈິວອ່ອນນ້ອຍ ກູນາໃຫ້ຂີ່ເຮືອ ບໍ່ຮູ້
ດູລາເຈົ້າ ສາມມະເນນອິງອາດ ຂ້ອຍເອີຍ
ບັດນີ້ ເຈົ້າຈັກເດີນດຸ່ງດັ້ນ ໄປແທ້ທີ່ໃດ ນັ້ນເດ

ແຕ່ນັ້ນ ສາມມະເນນນ້ອຍ ເລີຍຂານຖແລງຕອບ
ເຮົາຈັກ ໄປແຫ່ງຫ້ອງ ພາຍພຸ້ນຟາກໃນ ແທ້ດາຍ

ເພື່ອວ່າ ຄຶດຮອດເຈົ້າ ຕີນແມ່ມານດາ
ທັງປີຕາ ຢູ່ຄອງພາຍພຸ້ນ
ເຮົາຈັກ ໄປຖາມຖ້ອຍ ໃຫ້ເຫັນກັນພໍສນ່ອຍ
ຈັກວ່າ ດີແລະຮ້າຍ ກໍຕາງຢື້ຢ່ອງຢາມ ດອກນາ

ແຕ່ນັ້ນ ຊຸງກໍວອນວານໄຫວ້ ຂ້ອຍຂໍໄປດອມແດ່ ອ້າຍຈິວເອີຍ
ຂ້ອຍກໍ ຄຶດຢາກໄປຟາກພຸ້ນ ຖາມຫລິ້ນຢູ່ດອມ ເພື່ອນດາຍ
ຕາງໃຫ້ ເປັນເພື່ອນເຈົ້າ ເວົ້າປາກຈາດອມ ພີ່ຖ້ອນ
*ຂ້ອຍຂໍ ໄປດອມຈິວ* *ນັ່ງພາຍຈິງແທ້*
ເຈົ້າຊິ ເມດຕາຂ້ອຍ ຂໍໄປດອມຊິໄດ້ບໍ່ ອ້າຍຈິວເອີຍ
ອັນໃຫ້ ຄຶດຖີ່ແທ້ ກໍຄວນເຈົ້າໂຜດຜາຍ ພີ່ແມ

ແຕ່ນັ້ນ ສາມມະເນນນ້ອຍ ໃສ່ໃຈເປັນອັນຊື່
ຄຶດດັ່ງ ຊຸງໝັ້ງນີ້ ໄປແທ້ຊິຊ່ອຍພາຍ ບໍ່ຮູ້
ເຈົ້າຊິໄປ ກໍໄປຖ້ອນ ອ້າຍຊຸງເອີຍຮີບມາທ່ຽວ
ຕັ້ງໃຫ້ ຮອດຝັ່ງນ້ຳ ພາຍພຸ້ນເມື່ອເຢັນ ແທ້ດາຍ

ແຕ່ນັ້ນ ຊຸງກໍກະໂຍງກະເຍງເຕັ້ນ ເມືອເຮືອນແວນທ່ຽວ
*ບັດນີ້ ກູຈັກໄປພ່ຳພ້ອມ* *ຈິວນ້ອຍນັ່ງພາຍ ແລນໍ*

ເພື່ອວ່າ ກູຈັກໄດ້ໄປນຳເຈົ້າ ຈິວເນນຫວິດຫວິດ ຈິງແລ້ວ
ຊຸງໝັ້ງ ເລີຍເລົ່າໄດ້ ໄມ້ພາຍນ້ອຍແລ່ນມາ
ແລ້ວເລົ່າ ເຂົ້າສູ່ຫ້ອງ ເຮືອນັ່ງດອມຈິວ
ຊຸງຈຶ່ງ ແປງກະບວນເຮັດ ເພດຄືຄວນແທ້

ເອົາໄມ້ພາຍນ້ອຍ ຍໍມາຄືຊິຊ່ອຍ
ອັນວ່າ ຈົວຂີ່ທ້າຍ ຊຽງໝັ້ງຂີ່ຫົວ

ພໍເມື່ອ ເຮືອລ່ອງນ້ຳ ອອກສູ່ວັງເວີນ
*ຊຽງເລົ່າ ບາຍເອົາພາຍ ນັ່ງຮອງເຕັງໄວ້*
ກໍບໍ່ ເອົາພາຍນ້ຳ ນຳຈົວຈັກບາດ
ມີທໍ່ ນັ່ງເອີ້ຍເປີ້ຍ ໂສມໜ້າເພດຊຸນ ແທ້ດາຍ

ອັນວ່າ ນາວາຍ້າຍ ຈົວພາຍແດບແດບ
ແຕ່ນັ້ນ ເຮືອບໍ່ຊ້າ ຜັນຜ້າຍຮອດແປວ
ເມື່ອນັ້ນ ຊຽງກໍພາທີຕ້ານ ເຕີນຈົວເຮບຮີບ ຈິງເຖີ້ນ
ຢ້ານທໍ່ ລົມຟາດນ້ຳ ຟອງຊິຟົ້ງເຂົ້າໃສ່ເຮືອ

ແຕ່ນັ້ນ ຈົວກ່າວຕ້ານ ຂານຕອບຄຳຊຽງ
ເຈົ້າສັງ ບໍ່ກູນາດິກ ຊ່ອຍພາຍດອມຂ້ອຍ ຊຽງເອີຍ
ຮູ້ວ່າ ເຮືອລຳນ້ອຍ ຕາຫາກຍັງເຫັນຢູ່
*ຊຽງສັງ ມານັ່ງສະເມີຍເຄີ້ຍ ບໍ່ມີຊວ້ານຊ່ອຍພາຍ*

ເຂີງແຂງ ມາເຮັດດັ່ງນີ້ ສົມສິ່ງເປັນຄຣູ ແທ້ນໍ
ມາບໍ່ມີ ຄວາມຄຶດ ເຊິ່ງກັນອີ່ສັງແທ້
ອັນວ່າ ສາມມະເນນນ້ອຍ ທັງພາຍທັງຈົ່ມ ໄປນັ້ນ
ແມ່ນວ່າ ດ່າໃຈ້ໃຈ້ ກໍດາຍແລ້ວຫາກຮຸນ ແທ້ດາຍ

ຊຽງກໍ ບໍ່ຫົວຊາຟັງຖ້ອຍ ຄຳຈົວສັກຢາດ
ພຽງທໍ່ ຫລຽວລ່ຳໃຕ້ ເໜືອແລ້ວເບິ່ງຈົວ
ມັນກໍ ເຮັດເພດໜ້າ ສອງຫູບໍ່ຮູ້ເມື່ອ ແທ້ດາຍ
ຈົວກໍ ຍັງດົນຄວາມຈົ່ມໄຫ້ ພາຍຈ້າວຜ່ານຟອງ

ມຶງສັງ ມາເຮັດເພດໜ້າ ສອງຫູໜວກເປັນກະດັດ ດັ່ງນີ້
ບໍ່ຊ່າວ່າ ກູຈັກບາຍເອົາພາຍ ທັ່ງຖູລົງນ້ຳ
ປະໃຫ້ ມັນຈົມນ້ຳ ນັດທີຫລວງເສັ່ງສວ່າງ ເທາະລີ
ຕາມຊ່າງ ຝູງໝູ່ແຂ້ເງືອກຮ້າຍ ຊິກິນຊີ້ນຊາກມັນ ທັ້ນຖ້ອນ

ຈົວກໍ ຍັງຈົ່ມໄຫ້ ມີເລົ່າພາຍເຮືອ
ອັນວ່າ ເສໂຫທັງເມໂຫ ເຫື່ອໄຫລໄຄຍ້ອຍ
ແຕ່ນັ້ນ ຈົວກໍນ່ຳນ່ຳຕ້ານ ເປັນເວດທະນາຈິດ
ສຸຣິໂຍເລີຍ ອວ່າຍລົງຍາມຄ້ອຍ

ໂອນໍ ບັດນີ້ຫາກແມ່ນກັມກູແທ້ ພາຍເຮືອແຂນຈະຂາດ ຕາຍແລ້ວ
ຊ້ຳພັດ ແຮ່ງໜັກບັກຊຽງໝັ້ງຂີ້ຮ້າຍ ມາເຂົ້າຂໍ່ດອມ ນີ້ນາ

ແຕ່ນັ້ນ ລົມພານຕ້ອງ ອາໂປຟອງຟາດ ພຸ້ນເຍີ
ຈົວກໍ ແຮ່ງຊ້ຳຢຸດຢ່ອນຢ້ານ ເຮືອຫລົ້ມເງືອກຊິກິນ ທັ້ນແລ້ວ
ໂອນໍ ບັດນີ້ກູຈັກມໍຣະນາມ້ຽນ ກາງວັງບໍ່ເຫັນແມ່ ກູແລ້ວ
ອັນວ່າ ເຮືອແຮ່ງຊ້ຳເຫລັ້ມນ້ອຍ ຟອງພັດຖ້ວມຕື່ມເຕັງ ນີ້ເດ

ບັດນີ້ ກູຈັກຕາຍປະເຈົ້າ ປິຕາພໍ່ແມ່ ເສັຽນໍ
ກັບທັງ ຝູງໂຄດເຊື້ອ ວົງສາເຈົ້າພໍ່ກູ ເດນໍ

ເພາະວ່າ ຊຽງມັນເຮັດຖ່ອຍຮ້າຍ ຂັດແຂ່ງພາງານ
ບໍ່ຊ່າວ່າ ຈັກເອົາພາຍຕີຫົວ ກິ່ງລົງບັດທີກວ້າງ
ແຕ່ນັ້ນ ຊຽງຈຶ່ງວາຈາຕ້ານ ຄວາມຫລັງເວົ້າຕໍ່ ຈົວນັ້ນ
*ຂ້ອຍກໍ ຍັງໄດ້ຂໍຕໍ່ເຈົ້າ ມາແທ້ນັ່ງພາຍ ດອກນາ*

ເປັນສັງ ເຈົ້າຊິມາຈົ່ມໄຫ້ ປ້ອຍດ່າມູມມູມ ດັ່ງນີ້
ຂ້ອຍກໍ ຂໍດອມຈົວ ໃຫ້ຄ່ອຍພາຍເຮືອຖ້ອນ
ເຈົ້າກໍ ບໍ່ໄດ້ຍິນຄຳຂ້ອຍ ຂໍດອມແຕ່ລົງທ່າ ພຸ້ນລື
ເຈົ້າຫາກ ຜາຍໂຜດອ້າຍ ຄຳຣະຫ້ອຍກໍຈຶ່ງມາ ດອກນາ

ເມື່ອນັ້ນ ສາມມະເນນນ້ອຍ ຖແລງຊຽງຈອດຈອດ
ເຮົາກໍ ຢຽວວ່າເປັນດັ່ງຈາຣີດດ້ານ ຄືນແທ້ລອບເຮືອ ນັ້ນດາຍ
ບໍ່ຮູ້ວ່າ ຈັກມາຫາລັງຂໍ້ ແຫງະງອນມັກງ່າຍ ສັນນີ້
*ຜັດແຕ່ ທະວາເຣດດ້າວ ເມືອງນີ້ບໍ່ຫ່ອນມີ ແທ້ດາຍ*

ເມື່ອນັ້ນ ສາມມະເນນເຈົ້າ ຄະນຶງໃນບໍ່ປາກ
ກໍທໍ່ ຄຶດຕໍ່ຕັ້ງ ກັມສ້າງແຕ່ຫລັງ ທັ້ນແລ້ວ

ທັງເລົ່າ ຍໍມືໄຫວ້ ບຸນຄຸນຫລາຍແທ່ງ
ຈິ່ງກໍ ຄຶດຕໍ່ຕັ້ງ ຕົ້ນໄດ້ບວດຮຽນ

*ບັດນີ້ ກູຫາກອັບຜຍາແທ້ ປັນຍາເລີຍຜ່ອນ ເສັງແລ້ວ*
*ເທື່ອນີ້ ຊຽງໝັ້ງໄດ້ ບາຍກະໂດ້ນງ່າຍດາຍ ແລນໍ*

ແຕ່ນັ້ນ ຈິ່ງກໍຈຶ່ງແປງປາກຕ້ານ ຄຳມ່ວນຈາຊຽງ
ກໍຫາກ ອໍຣະຊອນສຽງ ມ່ວນຫູຄືຄ້ອຍ
ບັດນີ້ ເຮົາຫາກກາຍວັງນໍ້າ ແປວຫລວງຫລາຍຍ່ານ ມາແລ້ວ
ມັນກໍ ຈັກເຖິງຝັ່ງຟາກກໍ້າພຸ້ນ ພາຍໜ້າບໍ່ນານ ແທ້ດາຍ

ເຈົ້າຢ່າ ໄດ້ເຄືອງຄຳຮ້ອນ ຊິໄປເຖິງບໍ່ທັນຄໍ່າ ອ້າຍຊຽງເອີຍ
ຮອຍວ່າ ບຸນສົ່ງໃຫ້ ນຳຄໍ້າຊ່ອຍເຮົາ ແທ້ດາຍ
ເມື່ອນັ້ນ ຈິ່ງເລົ່າຕິຖແລງຖ້ອຍ ຖາມດູຫາເຫດ
ບາດວ່າ ຮອດຝັ່ງແລ້ວ ຊຽງຊິຂຶ້ນບ່ອນໃດ ນັ້ນເດ

ບັດນີ້ ເຮົາຫາກຖາມຫາຂໍ້ ດອມຊຽງຈິ່ງເວົ້າຊື່ ມາຖ້ອນ
ເຫດວ່າ ເຮົາຢາກແຈ້ງ ດອມເຈົ້າຊູ່ອັນ ແທ້ດາຍ
ຄາວນີ້ ສຸຣິໂຍຄ້ອຍ ຄາລົງລັບຫລ່ຽມ
ຫລອນວ່າ ເມືອຮອດບ້ານ ຮາເຈົ້າຊິພາກກັນ ບໍ່ຮູ້

ຄັນເມື່ອ ເຖິງເມື່ອວັນລຸນແລ້ວ ພັດຄືນເມືອເຮວຮີບ
ຮາກໍຈຶ່ງ ເຂົ້າຂີ່ຫ້ອງ ເຮືອນ້ອຍດັ່ງຫລັງ ເທາະນາ
ເມື່ອນັ້ນ ຊຽງໝັ້ງຕ້ານ ເວົ້າຕໍ່ສາມມະເນນ
ກໍຫາກ ເປັນຄຳຈິ່ງ ຊູ່ອັນຄຳຣະຫ້ອຍ
*ຄັນວ່າ ເຮືອຫາກໄປຮອດແລ້ວ ເຖິງຝັ່ງພຽງໃດ ກໍດີ*
*ຂ້ອຍຈັກ ລາຈອມທົວ ອອກໄປທັນນັ້ນ*
ມັນກໍ ບໍ່ພິຈານແທ້ ພາຍຫລັງເຮັດບາບ ຈິ່ງນັ້ນ
ບັດນີ້ ເວນຄອບແພ້ ຊິນຳໃຫ້ແກ່ມັນ ແລນໍ

ແຕ່ນັ້ນ ສາມມະເນນເຈົ້າ ຟັງຄຳມັນກ່າວ
ຈິ່ງກໍ ເລົ່າມັກໃຄ່ແກ້ ຜຍາລ້ຽວແທ່ງມັນ ແທ້ດາຍ

ອັນວ່າ ເທບພະເຈົ້າ ສມຸດຫລວງຊູຊ່ອຍ ຈົວແລ້ວ
ເຫດວ່າ ບັກຂີ້ຮ້າຍ ມັນອ້າງອວດຜຍາ ແທ້ດາຍ

ແຕ່ນັ້ນ ຍ່ອງຍ່ອງຍ້າຍ ເຮືອຈອດແຄມຊິນ ພຸ້ນເຢີ
*ທີ່ນັ້ນ ເປັນໜາມໜາ ຝັ່ງຊັນສູງລ້ຳ*
ເມື່ອນັ້ນ ຈົວເລົ່າຜາຍຄຳຕ້ານ ດອມຊຽງກອຍກ່າວ
ບັດນີ້ ເຮືອຫາກຮອດຝັ່ງແລ້ວ ອ້າຍຊຽງເອີ້ຍຮີບອອກໄປ ຫັ້ນຖ້ອນ

ແຕ່ນັ້ນ ຊຽງກໍຈິ່ງຫລຽວລ່ຳຢ້ຽມ ເຫັນປ່າໜາມໜາ
ມັນຈິ່ງ ສິງລິງຄຶດ ຢູ່ຄືຄົນບ້າ
ຊຽງກໍ ພາທີຕ້ານ ໄປເຊົາບ່ອນອື່ນ ອ້າຍຈົວເອີຍ
ສັງຊິມາ ຈອດບ່ອນນີ້ ໜາມຮ້າຍຝັ່ງຊັນ ແທ້ນາ

ຄັນວ່າ ຮອດບ່ອນໜ້າ ຊິເຕັ້ນອອກປານລົມ ດອກແລ້ວ
ອັນວ່າ ສາມມະເນນເອີຍ ຮີບເປືອງໄປຖ້ອນ
ແຕ່ນັ້ນ ຈົວຈິ່ງວາຈາຕ້ານ ຂານຄຳຊຽງຖ່ອຍ
ກູກໍ ບໍ່ພາໄປບ່ອນອື່ນແລ້ວ ມຶງຊິປີ້ນເລົ່າລືມ ແທ້ລື

ກູຫາກ ພາຍເຮືອຂ້າມ ນັດທີຫລວງມາຮອດ
ເຂົ້າຈອດໄດ້ ພຽງນີ້ກໍອອກໄປ ເທາະແມ
*ຍາມເມື່ອ ສັດຈະຕັ້ງ ຄວາມມຶງເວົ້າຕໍ່ ກູນັ້ນ*
*ອິດທະແນມ ວ່າໄດ້ເຂົ້າຈອດໃຫ້ ບ່ອນໃດແທ້ຊິອອກໄປ ວ່າດາຍ*

ບັດນີ້ ເຮົາກໍມາຈອດໃຫ້ ເຖິງຝັ່ງຊິນລະທີ ແທ້ດາຍ
ຕາມຄຳຊຽງ ບອກເຮົາພາຍພຸ້ນ

ມຶງຢ່າ ໄດ້ມຸສາຫລິ້ນ ຕົວະລ່າຍເປັນຄວາມ ກູດາຍ
ຄຳທີ່ ມຶງເຄີຍຈາ ກໍຊ່າງເມີນລືມໄດ້
ເຮືອຈອດ ແຄມຊິນແລ້ວ ຊິວາງເຮືອຂຶ້ນທ່າ ວ່າດາຍ
ມຶງຊິອອກ ກໍອອກຖ້ອນ ພາຍຊິເນັ້ນເຂັ່ນຫົວ ແທ້ດາຍ

ເມື່ອນັ້ນ ຊຽງກໍຮັບຄຳເຈົ້າ　　　ສາມມະເນນເລີຍບອກ
ຫາຖ້ອຍຄວາມ ໃໝ່ເວົ້າ　　　ພໍມານ້ອມກ່ອມໃຈ

*ຈິວເອີຍ ຂ້ອຍນີ້ເປັນນ້ອງເຈົ້າ　　　ພຣະຍາໃຫຍ່ທະວາຣີ ແທ້ດາຍ*
*ໃຫ້ຂ້ອຍ ຂໍພອນດອນອ້າຍຈິວ　　　ຈັ່ງຕີທາງເປີ້ນ*
*ອັນວ່າ ທາງແຄງນັ້ນ　　　ບໍ່ມີສິນຍົດໃຫຍ່ ບັກຊຽງດາຍ*
*ແຕ່ນັ້ນ ຈິວບໍ່ຊ້າ　　　ຍໍພາຍງ້ຳເງືອດຕີ*

ກູວ່າ　ກູມີຜຍາແກ່ກ້າ　　　ລ້ຳລື່ນຝູງຄົນ ແທ້ແລ້ວ
　　ຫລາຍເມືອງມາ　　　ແຂ່ງພະນັນກໍຍັງແພ້
ຄຶດວ່າ　ຄົງບໍ່ມີໃຜພ້ຽງ　　　ພໍພຽງສເມີພາບ ກູນີ້
ບັດວ່າ　ຈິວນ້ອຍນ້ອຍ　　　ຕົນນີ້ຊ້ຳຜອກເຫລືອ ແທ້ດາຍ

ກູກໍ　ມາບໍ່ຈັກຖີ່ຖ້ວນ　　　ເວົ້າປາກດອນຈິວ ນັ້ນເດ
　　ວ່າຜຍາຕົນເສັຽ　　　ທໍ່ແຕ່ຍັງຄວາມຮູ້
ຊຽງໝ້ຽງ ເລີຍຈົ່ມໄຫ້　　　ມໍາມໍາປ້ອຍດ່າ
ວັນຄືນ　ກໍບໍ່ມີວ່າງເວັ້ນ　　　ຮົມໄຫ້ບໍ່ເຊົາ ນັ້ນແລ້ວ

ແຕ່ນັ້ນ　ຍັງມີນາວາຂຶ້ນ　　　ມາພຽງມັນຢູ່
ຊຽງຈຶ່ງ　ຂໍໜ່ຽວໄຫວ້　　　ຊາວຄ້າລອບເຮືອ

ມັນກໍ　ເລີຍເວົ້າອິ່ນອ້ອຍ　　　ສຽງອ່ອນອໍຣະຊອນ
ເປັນທີ່　ເອັນດູສັດ　　　ອ່ອນໂຍນຄືຄ້ອຍ
ມັນກໍ　ຈາຂານເວົ້າ　　　ການກະທຳພົ້ນຜ່ານ
ເລົ່າລົ້ມ ມາແຕ່ເຄົ້າ　　　ຈົນເທົ່າຮອດປາຍ ແທ້ແລ້ວ

ຂ້ອຍໄດ້ ຂໍລ່ອງຂ້າມ　　　ຟາກຝັ່ງນຳຈິວ
ນັ່ງພາຍ　ມານຳຈິວ　　　ແຕ່ເທີງຫລາຍມື້
ເລີຍເລົ່າ ຖຽງຜິດຂ້ອງ　　　ຍັງກັນຮ້າຍດ່າ
ຈິວກໍ　ເລີຍເລົ່າປະຂ້ອຍໄວ້　　　ທາງພີ້ຜູ້ດຽວ ເຈົ້າເອີຍ

ຂ້ອຍກໍ ທຸກຍາກແທ້      ອຶດຢາກໂຮຍແຮງ ມາກແລ້ວ
ອຶດອີ່ດູ ສິງສານສັດ      ໂຜດປານີຂ້ອຍ
ຂໍໃຫ້ ເອົາໄປມົ້ມ      ມັດທີຫລວງວັງໃຫຍ່
ຄັນວ່າ ມົ້ມຝັ່ງພຸ້ນ      ບຸນຊູຄ້ຳຊູ່ຄົນ ດອກນາ

ແຕ່ນັ້ນ ເຂົາກໍຟັງຄຳອ້ອນ      ເລີຍເອົາໄປສົ່ງ
ຈຳໃຫ້ ຂຶ້ນຂີ່ຫ້ອງ      ເຮືອແລ້ວຮີບພາຍ
ພໍປະມານແລ້ວ      ເຖິງຊິນແຄມທ່າ
ຊຽງໝ້ຽງ ອອກຈາກນ້ຳ      ເລີຍຕ້ານສັ່ງເຂົາ

ຄ່ອຍຢູ່ດີເຍີ ຝູງຊາວຄ້າ      ບຸນຄຸນຄ້ຳຊ່ອຍ
ຂໍໃຫ້ ລຸໂຊກໄດ້      ລວຍລ້ຳລື່ນຫລັງ ແດ່ຖ້ອນ

ຄ້ອມວ່າ ຊຽງສັ່ງແລ້ວ      ເຮວຮີບເມືອເຮືອນ
ເຖິງເຄຫັງ      ນັ່ງນອນກິນເຂົ້າ
ຜົນກັມ ເຄີຍທຳໄວ້      ຊຽງບໍ່ໄລຍັງຈຳຈີ່
ຊາວເມືອງທະວາຣີ ຍັງເລົ່າພື້ນ      ຊຽງໝ້ຽງຮອດຊູ່ວັນ ແທ້ແລ້ວ

*ບັດນີ້ ຢຸດຕິສ້ຽງ      ນິທານທາຍເສັ່ຽກ່ອນ ເຈົ້າເອີຍ*
*ພື້ນຊຽງໝ້ຽງ ກໍຫາກຍັງບໍ່ແພ້      ອວນຂ້ອຍຊອກບໍ່ເຫັນ*

ຄັນວ່າ ໃຜຜູ້ຍັງຫາໄດ້      ຈົ່ງເອົາໄຟເຍືອງຕໍ່ ກັນຖ້ອນ
ຕາງໃຫ້ ໄດ້ສັ່ງສອນລູກເຕົ້າ      ຫລານຫລ້ອນໝູ່ເຫລັນ ເຈົ້າເອີຍ




*ເຊີນອ່ານຜົນງານຊຸດອື່ນໆ ຂອງ ໄຊສຸວັນ ແພງພົງ*

1. ໂຮມກະວີລາວຊຸດ (1) : **ແຕ້ມໂລກດ້ວຍອັກສອນ**
2. ໂຮມກະວີລາວຊຸດ (2) : **ຫ້ວຍນ້ອຍເທິງພູ**
3. ໂຮມກະວີລາວຊຸດ (3) : **ໜີເງົາ**
4. ໂຮມກະວີລາວຊຸດ (4) : **ຮູບແຕ້ມທີ່ຍັງບໍ່ແລ້ວ**
5. ໂຮມກະວີລາວຊຸດ (5) : **ໃບໄມ້ໃນສາຍລົມ**
6. ໂຮມກະວີຊຸດນິທານລາວລ້ານຊ້າງ: **ສຽວສວາດ**
7. ໂຮມກອນອ່ານແພງພົງ-ຜົນງານລວມໝູ່: **ຢູ່ໄດ້ດ້ວຍຮັກ**
8. ນິຍາຍອີງຊີວິດຈິງຂອງນັກບິນສອງຟ້າ: **ນົກສິບຝົນ**
9. ໂຮມກະວີພາສາອະເມຣິກັນ **(1) Unique Moon**
10. ໂຮມກະວີພາສາອະເມຣິກັນ **(2) Dancing Flame**
11. ໂຮມກະວີພາສາອະເມຣິກັນ **(3) White Cloud**
12. ຮຽບຮຽງ **ສັງສິນໄຊ -** ຕຳນານວັນນະຄະດີຂອງລາວ

**ສະບັບປີ 2020**

*ຢູ່ໃນແຜນການຈະຮຽບຮຽງ:*

- **ໜັງສືສຽວສວາດ** ແຕ່ງໃໝ່ເປັນ*ກອນອ່ານປາງຄຳ*
- ບັນທຶກຂອງກັບຕັນຍົນໂດຍສານ: **ຟ້າຊ່ອຍ**
- ບັນທຶກ: **30 ປີ ໃນມະຫາວິທະຍາໄລຊີວິດອະເມຣິກາ**
- ບັນທຶກ: **ກະວີຕ່າງບ້ານ-ເປັນຫວ້ານຕ່າງສວນ**
- **ຈຳປາສີ່ຕົ້ນ** ແຕ່ງໃໝ່ເປັນ*ກອນອ່ານປາງຄຳ*



## ຮູ້ຈັກກັບ ໄຊສຸວັນ ແພງພົງ

ນັກບິນ-ນັກຂຽນ-ນັກກະວີສອງພາສາ

ເກີດ 17 ຕຸລາ 1950 ແຄມນ້ຳງື່ມ, ບ້ານທ່າງ່ອນ ໄຊທານີ, ນະຄອນຫລວງວຽງຈັນ. ພໍ່ເປັນຄຣູສອນ ເຄີຍເລົ່າ"ສັງສິນໄຊ"ໃຫ້ຟັງຕັ້ງແຕ່ເປັນນັກຮຽນຊັ້ນ ປະຖົມ. ສຽງຂັບງື່ມຊຶມແຊກໃນຫົວມາຕັ້ງແຕ່ນ້ອຍ. ເລີ່ມແຕ່ງກອນເມື່ອອາຍຸ 15 ປີ ຕອນເປັນນັກຮຽນ ມັດທະຍົມຕົ້ນທີ່ວິທະຍາໄລວຽງຈັນ ບ່ອນທີ່ມອບ ໂອກາດໃຫ້ຮຽນນຳຄຣູພາສາລາວຜູ້ເປັນກະວີເຖິງ ສາມຄົນ. ລູກສິດຂອງ *ຄຣູສົມຈິນ ປ. ງິນ* ສອງປີ ສຸດທ້າຍ ຊຸມປີດຽວກັນກໍໄດ້ຮຽນວັນນະຄະດີຝຣັ່ງເສດສະຕະວັດທີ 16 17 ແລະ 18.

ຕິດປີກນັກບິນຂົນສົ່ງຈາກ "*ກອງທັບອາກາດສະຫະຣັດອະເມຣິກາ*" ໃນສໄມສົງຄາມ ອິນດູຈີນ (1971-73). ຮຽນຈົບຈາກ"*ສະຖາບັນການບິນພົນລະເຮືອນຊັ້ນສູງ*" ສ.ໂຊວຽດ ປີ 1976. ເປັນຫົວໜ້າກອງບິນ Antonov-24 "*ການບິນລາວ*", ເປັນນັກບິນຄຣູສອນ, ນັກບິນທົດລອງ. ເປັນນັກບິນຊ່ອຍເຮືອບິນພຣະທີ່ນັ່ງ ແລະກັບຕັນເຮືອບິນຂອງປະທານ ປະເທດ. ບິນຮັບໃຊ້ບຸນຄຸນແຜ່ນດິນໄດ້ 16 ປີ ໄຊສຸວັນບຳນານຈາກທ້ອງຟ້າປີ 1986. ອອກຈາກບ້ານເກີດເມືອງນອນມາພຳນັກຢູ່ອະເມຣິກາປີ 1991. ຈົບວິຊາຄອມພິວເຕີ-ໂປຣແກຣມເມີ ປີ 1994, ຖືກຮັບເຂົ້າເປັນພົນລະເມືອງສະຫະຣັດປີ 1997.

ຜົນງານວັນນະກັມໃນ ລາວ, ໄທ, ເລື່ອງສັ້ນນຶ່ງພິມທີ່ຝຣັ່ງເສດ, ກະວີບົດນຶ່ງພິມທີ່ ບຸນກາຣີ. ທີ່ອະເມຣິກາເລື່ອງສັ້ນແລະກະວີຈຳນວນນຶ່ງພິມໃນ *"ສຽງແຄນ"*. ບົດກະວີນຶ່ງ ຖືກຮັບພິມໃນປຶ້ມ "*ນັກກະວີແລະບົດກະວີດີເດັ່ນແຫ່ງສະຕະວັດທີ 20 ຂອງອະເມຣິກາ*" ຈາກນັ້ນມາບົດກະວີພາສາອະເມຣິກັນໄດ້ຖືກລົງພິມນຳໝູ່ຫລາຍຊຸດ.

ປຶ້ມກະວີ: ແຕ້ມໂລກດ້ວຍອັກສອນ / ຫ້ອຍນ້ອຍເທິງພູ / ໝີເງົາ / ຮູບແຕ້ມທີ່ຍັງ ບໍ່ແລ້ວ / ໃບໄມ້ໃນສາຍລົມ / ສຽວສວາດ / ນິຍາຍນົກສິບຝົນ / Unique Moon / Dancing Flame / White Cloud / ຮຽບຮຽງ "ສັງສິນໄຊ" ສະບັບປີ 2020

ຮາງວັນ:ໃບຍ້ອງຍໍຂອງບກ.ຫລາຍໃບ / ນັກກະວີຜູ້ຍິ່ງໃຫຍ່ທົ່ວອະເມຣິກາ 2013/ ຫລຽນຄຳກະວີນິພົນຍອດຢ້ຽມ 2013 / ນັກກະວີດີເດັ່ນປະຈຳປີ2015 2016 /ນັກກະວີ ຍອດຢ້ຽມປີ 2015 2017 ຂອງສຳນັກກະວີທີ່ສັງກັດ.

ສະມາຊິກຕລອດຊີວິດ Famous Poets Society / PoetrySoup ບ່ອນວາງສະແດງ ບົດກະວີທາງອ໋ອນລາຍຂອງບັນດາ International Poets.

ພາຍຫລັງເດີນທາງໄປ 20 ກວ່າປະເທດ, ໄຊສຸວັນ ກໍມາດຳລົງຊີວິດຢູ່ນະຄອນ Salt Lake City, ເມືອງຫລວງຂອງຣັດຢູທາ Utah, ສະຫະຣັດອະເມຣິກາ.